

# ມາດຕະຖານການດຳເນີນງານ ດ້ານຄວາມຍືນຍົງ ທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງອົງການການເງິນສາກົນ

ມີຜົນບັງຄັບໃຊ້ໃນວັນທີ 1 ມັງກອນ ປີ 2012

International Finance Corporation
WORLD BANK GROUP

Cover Page Photo Credit: Tessa Bunney 2016

# ສາລະບານ


| | |
|---|---|
| ພາບລວມ | 2 |
| ມາດຕະຖານການດຳເນີນງານທີ 1: ການປະເມີນ ແລະ ການຄຸ້ມຄອງຄວາມສ່ຽງ ແລະ ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ | 5 |
| ມາດຕະຖານການດຳເນີນງານທີ 2: ແຮງງານ ແລະ ສະພາບເງື່ອນໄຂຂອງ ການເຮັດວຽກ | 16 |
| ມາດຕະຖານການດຳເນີນງານທີ 3: ປະສິດທິພາບຂອງຊັບພະຍາກອນ ແລະ ການປ້ອງກັນມົນລະພິດ | 22 |
| ມາດຕະຖານການດຳເນີນງານທີ 4: ສຸຂະພາບ, ຄວາມປອດໄພ ແລະ ການປ້ອງກັນ ຄວາມສະຫງົບຂອງຊຸມຊົນ | 27 |
| ມາດຕະຖານການດຳເນີນງານທີ 5: ການໄດ້ມາຂອງທີ່ດິນ ແລະ ການຍົກຍ້າຍ ປະຊາຊົນແບບບໍ່ສະໝັກໃຈ | 31 |
| ມາດຕະຖານການດຳເນີນງານທີ 6: ການອະນຸລັກຊີວະນາໆພັນ ແລະ ການຄຸ້ມຄອງ ຊັບພະຍາກອນທຳມະຊາດທີ່ມີຊີວິດແບບຍືນຍົງ | 40 |
| ມາດຕະຖານການດຳເນີນງານທີ 7: ຊົນເຜົ່າພື້ນເມືອງ | 47 |
| ມາດຕະຖານການດຳເນີນງານທີ 8: ມໍລະດົກທາງວັດທະນະທຳ | 53 |

# ຕົວອັກສອນຫຍໍ້

| | |
|---|---|
| **EHS Guidelines** | World Bank Group Environmental, Health, and Safety Guidelines<br>ບົດແນະນຳທາງດ້ານສິ່ງແວດລ້ອມ, ສຸຂະພາບ ແລະ ຄວາມປອດໄພຂອງ ກຸ່ມທະນາຄານໂລກ |
| **ESMS** | Environmental and Social Management System<br>ລະບົບການຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ |
| **FPIC** | Free, Prior, and Informed Consent<br>ການເຫັນດີເຫັນພ້ອມດ້ວຍຄວາມສະໝັກໃຈ ໂດຍໄດ້ຮັບຂໍ້ມູນລ່ວງໜ້າ ແລະ ພຽງພໍ |
| **GHG** | Greenhouse gases<br>ທາດອາຍພິດເຮືອນແກ້ວ |
| **GIIP** | Good international industry practice<br>ບົດຮຽນຂອງສາກົນທີ່ດີກ່ຽວກັບວຽກງານອຸດສະຫະກຳ |
| **ICP** | Informed Consultation and Participation<br>ການປຶກສາຫາລື ທີ່ໃຫ້ຂໍ້ມູນຄົບຖ້ວນ ແລະ ການມີສ່ວນຮ່ວມ |
| **ILO** | International Labour Organisation<br>ອົງການແຮງງານສາກົນ |
| **IPM** | Integrated pest management<br>ການຄຸ້ມຄອງສັດຕູພືດແບບປະສົມປະສານ |
| **IUCN** | International Union for Conservation of Nature<br>ອົງການສາກົນເພື່ອການອະນຸລັກທຳມະຊາດ |
| **IVM** | Integrated vector management<br>ການຄຸ້ມຄອງພາຫະນຳເຊື້ອແບບປະສົມປະສານ |
| **UN** | United Nations<br>ອົງການສະຫະປະຊາຊາດ |



© Sayan Chuenudomsavad 2015



© Sayan Chuenudomsavad 2015



© Tessa Bunney 2016



© Sayan Chuenudomsavad 2015

# ສະພາບລວມ

1. ກອບຄວາມຍືນຍົງຂອງອົງການການເງິນສາກົນ (International Finance Corperation, IFC ) ໄດ້ສະແດງໃຫ້ເຫັນເຖິງຄວາມມຸ່ງໝັ້ນ ທາງຍຸດທະສາດຕໍ່ການພັດທະນາແບບຍືນຍົງຂອງອົງການ ແລະ ຍັງປະກອບເປັນສ່ວນໜຶ່ງທີ່ສຳຄັນຂອງວິທີການຄຸ້ມຄອງຄວາມສ່ຽງຂອງອົງການ. ກອບຄວາມຍືນຍົງດັ່ງກ່າວ ປະກອບມີນະໂຍບາຍ ແລະ ມາດຕະຖານການດຳເນີນງານດ້ານຄວາມຍືນຍົງທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ແລະນະໂຍບາຍການເຂົ້າເຖິງຂໍ້ມູນຂ່າວສານຂອງອົງການ.
ນະໂຍບາຍວ່າດ້ວຍຄວາມຍືນຍົງດ້ານສິ່ງແວດລ້ອມ ແລະ ສັງຄົມໄດ້ອະທິບາຍເຖິງຄວາມມຸ່ງໝັ້ນ, ບົດບາດ ແລະ ຄວາມຮັບຜິດຊອບຂອງອົງການທີ່ກ່ຽວພັນກັບຄວາມຍືນຍົງທາງດ້ານສິ່ງແວດລ້ອມ ແລະ ສັງຄົມ. ນະໂຍບາຍການເຂົ້າເຖິງຂໍ້ມູນຂ່າວສານຂອງອົງການສະທ້ອນໃຫ້ເຫັນເຖິງຄວາມມຸ່ງໝັ້ນຂອງອົງການຕໍ່ຄວາມໂປ່ງໃສ ແລະ ການຄຸ້ມຄອງບໍລິຫານທີ່ດີຕໍ່ກັບການເຄື່ອນໄຫວວຽກຕ່າງໆ ເຊິ່ງນະໂຍບາຍດັ່ງກ່າວຍັງໄດ້ອະທິບາຍພັນທະໃນການເປີດເຜີຍຂໍ້ມູນໃນລະດັບສະຖາບັນກ່ຽວກັບການລົງທຶນ ແລະ ການບໍລິການໃຫ້ຄຳປຶກສາຂອງອົງການ. ມາດຕະຖານການດຳເນີນງານຕ່າງໆ ແມ່ນມີເປົ້າໝາຍແນໃສ່ລູກຄ້າຂອງອົງການການເງິນສາກົນ (ຜູ້ພັດທະນາໂຄງການທີ່ໄດ້ຮັບການຊ່ວຍເຫຼືອຈາກອົງການການເງິນສາກົນ), ໂດຍສະໜອງທິດທາງໃນການລະບຸຄວາມສ່ຽງ ແລະ ຜົນກະທົບ, ແລະໄດ້ຖືກອອກແບບມາເພື່ອຊ່ວຍຫຼີກເວັ້ນ, ຫຼຸດຜ່ອນ, ແລະຄຸ້ມຄອງຄວາມສ່ຽງ ແລະ ຜົນກະທົບ ເຊິ່ງເປັນວິທີທາງໃນການດຳເນີນທຸລະກິດໃຫ້ມີຄວາມຍືນຍົງ ໂດຍລວມທັງພັນທະ ໃນການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ ແລະ ການເປີດເຜີຍຂໍ້ມູນຂ່າວສານຂອງລູກຄ້າ ທີ່ພົວພັນກັບບັນດາກິດຈະກຳຕ່າງໆໃນລະດັບໂຄງການ. ໃນກໍລະນີທີ່ເປັນການລົງທຶນໂດຍກົງ (ລວມທັງຮູບການສະໜອງທຶນໃຫ້ໂຄງການ ແລະ ການສະໜອງທຶນໃຫ້ວິສາຫະກິດ ໂດຍຜ່ານສື່ກາງທາງການເງິນ ຫຼືຫົວໜ່ວຍທີ່ໃຫ້ກູ້ຢືມ), ອົງການການເງິນສາກົນ ຈະຮຽກຮ້ອງໃຫ້ລູກຄ້າຂອງຕົນຕ້ອງນຳໃຊ້ມາດຕະຖານການດຳເນີນງານຂອງອົງການເພື່ອຄຸ້ມຄອງຄວາມສ່ຽງທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ແລະ ຜົນກະທົບຕ່າງໆ ເພື່ອເຮັດແນວໃດໃຫ້ໂອກາດໃນການພັດທະນາໄດ້ຮັບການເສີມຂະຫຍາຍຍິ່ງຂຶ້ນ. ອົງການການເງິນສາກົນນຳໃຊ້ກອບຄວາມຍືນຍົງຄຽງຄູ່ກັນກັບຍຸດທະສາດ, ນະໂຍບາຍ ແລະ ຂໍ້ລິເລີ່ມຕ່າງໆເພື່ອຊີ້ນຳບັນດາກິດຈະກຳທາງທຸລະກິດຂອງອົງການເພື່ອໃຫ້ບັນລຸໄດ້ຕາມບັນດາຈຸດປະສົງດ້ານການພັດທະນາໂດຍລວມຂອງອົງການການເງິນສາກົນ. ບັນດາສະຖາບັນການເງິນສາກົນອື່ນໆ ກໍ່ສາມາດນຳໃຊ້ມາດຕະຖານດ້ານການດຳເນີນງານດັ່ງກ່າວຂອງອົງການການເງິນສາກົນໄດ້.

2. ມາດຕະຖານການດຳເນີນງານທັງແປດດັ່ງກ່າວແມ່ນກຳນົດບັນດາມາດຕະຖານຕ່າງໆຕໍ່ລູກຄ້າ[1] ໃຫ້ຕ້ອງປະຕິບັດຕາມຕະຫຼອດໄລຍະຂອງການລົງທຶນໂດຍອົງການການເງິນສາກົນ:

**ມາດຕະຖານການດຳເນີນງານທີ 1:** ການປະເມີນ ແລະ ການຄຸ້ມຄອງຄວາມສ່ຽງ ແລະ ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ

**ມາດຕະຖານການດຳເນີນງານທີ 2:** ແຮງງານ ແລະ ສະພາບເງື່ອນໄຂຂອງການເຮັດວຽກ

**ມາດຕະຖານການດຳເນີນງານທີ 3:** ປະສິດທິພາບຂອງຊັບພະຍາກອນ ແລະ ການປ້ອງກັນມົນລະພິດ

**ມາດຕະຖານການດຳເນີນງານທີ 4:** ສຸຂະພາບ, ຄວາມປອດໄພ ແລະ ການປ້ອງກັນຄວາມສະຫງົບຂອງຊຸມຊົນ

**ມາດຕະຖານການດຳເນີນງານທີ 5:** ການໄດ້ມາຂອງທີ່ດິນ ແລະ ການຍົກຍ້າຍປະຊາຊົນແບບບໍ່ສະໝັກໃຈ

**ມາດຕະຖານການດຳເນີນງານທີ 6:** ການອະນຸລັກຊີວະນາໆພັນ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດ ທີ່ມີຊີວິດແບບຍືນຍົງ

**ມາດຕະຖານການດຳເນີນງານທີ 7:** ຊົນເຜົ່າພື້ນເມືອງ

**ມາດຕະຖານການດຳເນີນງານທີ 8:** ມໍລະດົກທາງວັດທະນະທຳ

[1] ຄຳວ່າ "ລູກຄ້າ" ຖືກນຳໃຊ້ໃນມາດຕະຖານການດຳເນີນງານສະບັບນີ້ ເຊິ່ງໂດຍລວມ ໝາຍເຖິງຝ່າຍທີ່ມີໜ້າທີ່ຮັບຜິດຊອບການຈັດຕັ້ງປະຕິບັດ ແລະ ດຳເນີນໂຄງການທີ່ໄດ້ຮັບທຶນ ຫຼື ຂຶ້ນກັບໂຄງສ້າງຂອງ ໂຄງການ ແລະ ປະເພດຂອງການສະໜອງທຶນ. ນິຍາມຂອງຄຳວ່າ "ໂຄງການ" ໄດ້ກຳນົດໃນມາດຕະຖານການດຳເນີນງານທີ 1.

3. ມາດຕະຖານການດຳເນີນງານທີ 1 ກຳນົດຄວາມສຳຄັນຂອງ (i) ການປະເມີນຜົນແບບປະສົມປະສານເພື່ອລະບຸໂອກາດ, ຄວາມສ່ຽງ ແລະ ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການ; (ii) ການມີສ່ວນຮ່ວມຂອງຊຸມຊົນຢ່າງ ມີປະສິດທິຜົນໂດຍ ຜ່ານການເປີດເຜີຍຂໍ້ມູນຂ່າວສານຕ່າງໆກ່ຽວກັບໂຄງການ ແລະ ການປຶກສາຫາລືກັບຊຸມຊົນທ້ອງຖິ່ນກ່ຽວກັບປະເດັນຕ່າງໆທີ່ສົ່ງຜົນກະທົບຕໍ່ເຂົາເຈົ້າ ໂດຍກົງ; ແລະ (iii) ການຄຸ້ມຄອງການດຳເນີນງານທາງດ້ານສິ່ງແວດລ້ອມ ແລະ ສັງຄົມຂອງລູກຄ້າ ຕະຫຼອດໄລຍະຂອງ ໂຄງການ. ມາດຕະຖານການດຳເນີນງານທີ 2 ຫາ 8 ກຳນົດວັດຖຸປະສົງ ແລະ ເງື່ອນໄຂຕ່າງໆເພື່ອຫຼີກເວັ້ນ, ຫຼຸດຜ່ອນ ແລະ ໃນກໍລະນີທີ່ຍັງມີຜົນກະທົບຄົງຄ້າງ,ຈະຕ້ອງໄດ້ມີການຊົດເຊີຍ/ສ້າງສົມດຸນຄືນສຳລັບຄວາມສ່ຽງ ແລະ ຜົນກະທົບທີ່ມີຕໍ່ຜູ້ອອກແຮງງານ, ບັນດາຊຸມຊົນທີ່ໄດ້ຮັບຜົນກະທົບ ແລະ ສິ່ງແວດລ້ອມ. ໃນຂະນະທີ່ຕ້ອງໄດ້ພິຈາລະນາຄວາມສ່ຽງ ແລະ ທ່າແຮງຜົນກະທົບທຸກຢ່າງທີ່ກ່ຽວຂ້ອງໃນຖານະເປັນສ່ວນໜຶ່ງຂອງການປະເມີນດັ່ງກ່າວ, ມາດຕະຖານການດຳເນີນງານທີ 2 ຫາ 8 ອະທິບາຍຄວາມສ່ຽງ ແລະ ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ທີ່ອາດຈະເກີດຂຶ້ນ ແລະ ຕ້ອງໄດ້ເອົາໃຈໃສ່ເປັນພິເສດ. ສຳລັບຄວາມສ່ຽງ ແລະ ຜົນກະທົບທາງດ້ານສິ່ງແວດລ້ອມ ຫຼື ສັງຄົມທີ່ໄດ້ລະບຸແລ້ວ, ລູກຄ້າຕ້ອງໄດ້ມີການຄຸ້ມຄອງຄວາມສ່ຽງ ແລະ ຜົນກະທົບເຫຼົ່ານັ້ນ ຜ່ານລະບົບຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມຂອງຕົນໂດຍສອດຄ່ອງກັບມາດຕະຖານການດຳເນີນງານທີ 1.

4. ມາດຕະຖານການດຳເນີນງານທີ 1 ແມ່ນຖືກນຳໃຊ້ກັບທຸກໆໂຄງການທີ່ມີຄວາມສ່ຽງ ແລະ ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ. ມາດຕະຖານການດຳເນີນງານອື່ນໆ ອາດຈະມີການນຳໃຊ້ເຊັ່ນດຽວກັນ ໂດຍຂຶ້ນກັບສະພາບເງື່ອນໄຂຂອງແຕ່ລະໂຄງການ ແລະຄວນຖືກນຳໃຊ້ ແລະ ອ້າງອີງ ຄວບຄູ່ກັນໄປ. ພາກເງື່ອນໄຂຂອງແຕ່ລະມາດຕະຖານການດຳເນີນງານ ແມ່ນນຳໃຊ້ກັບທຸກໆກິດຈະກຳທີ່ໄດ້ຮັບທຶນສະໜັບສະໜູນຈາກໂຄງການ ເວັ້ນເສຍແຕ່ວ່າຈະຖືກກຳນົດຕ່າງຫາກເປັນຂໍ້ຈຳກັດ ສະເພາະທີ່ໄດ້ອະທິບາຍໄວ້ຢູ່ແຕ່ລະວັກ. ລູກຄ້າຄວນນຳໃຊ້ລະບົບຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ ທີ່ຖືກສ້າງຂຶ້ນພາຍໃຕ້ມາດຕະຖານການດຳເນີນງານທີ 1 ກັບທຸກໆກິດຈະກຳຂອງໂຄງການ ໂດຍບໍ່ຕ້ອງຄຳນຶງວ່າແຫຼ່ງທຶນຈະມາຈາກໃສ. ໃນເອກະສານສະບັບນີ້, ຫຼາຍມາດຕະຖານການດຳເນີນງານ ແມ່ນໄດ້ກ່າວເຖິງຫົວຂໍ້ທີ່ເປັນບັນຫາຮ່ວມຂອງຫຼາຍຂະແໜງການ ເຊັ່ນ: ການປ່ຽນແປງຂອງສະພາບດິນຟ້າອາກາດ, ບົດບາດຍິງ-ຊາຍ, ສິດທິມະນຸດ ແລະ ນ້ຳ.

5. ນອກຈາກການປະຕິບັດໃຫ້ບັນລຸຕາມເງື່ອນໄຂພາຍໃຕ້ມາດຕະຖານການດຳເນີນງານແລ້ວ, ລູກຄ້າຕ້ອງປະຕິບັດຕາມກົດໝາຍທີ່ມີຜົນ ບັງຄັບໃຊ້ພາຍໃນປະເທດເຊິ່ງລວມທັງບັນດາກົດໝາຍທີ່ປະຕິບັດພັນທະຕ່າງໆຂອງປະເທດເຈົ້າພາບພາຍໃຕ້ກົດໝາຍສາກົນ.

6. ບົດແນະນຳທາງດ້ານສິ່ງແວດລ້ອມ, ສຸຂະພາບ ແລະຄວາມປອດໄພຂອງກຸ່ມທະນາຄານໂລກແມ່ນເອກະສານອ້າງອີງທາງວິຊາການ ທີ່ຮວບຮວມເອົາຕົວຢ່າງລວມ ແລະ ສະເພາະຂອງບົດຮຽນທີ່ດີຂອງສາກົນກ່ຽວກັບວຽກງານອຸດສາຫະກຳ. ອົງການການເງິນສາກົນນຳໃຊ້ບົດແນະນຳດັ່ງກ່າວເພື່ອເປັນແຫຼ່ງຂໍ້ມູນວິຊາການໃນລະຫວ່າງການປະເມີນໂຄງການ. ບົດແນະນຳທາງດ້ານສິ່ງແວດລ້ອມ, ສຸຂະພາບ ແລະຄວາມປອດໄພຂອງກຸ່ມທະນາຄານໂລກ ປະກອບມີລະດັບ ແລະ ມາດຕະການໃນການຈັດຕັ້ງປະຕິບັດອັນເປັນທີ່ຍອມຮັບຂອງອົງການການເງິນສາກົນ ແລະ ໂດຍລວມເຫັນວ່າ: ບັນດາໂຄງການໃໝ່ ສາມາດປະຕິບັດຕາມໄດ້ໃນລະດັບຕົ້ນທຶນທີ່ສົມເຫດສົມຜົນແລະດ້ວຍເຕັກໂນໂລຊີທີ່ມີໃນປະຈຸບັນ. ສຳລັບໂຄງການທີ່ໄດ້ຮັບທຶນຈາກອົງການການເງິນສາກົນ, ການນຳໃຊ້ບົດແນະນຳທາງດ້ານສິ່ງແວດລ້ອມ, ສຸຂະພາບ ແລະຄວາມປອດໄພຂອງກຸ່ມທະນາຄານໂລກກັບໂຄງການທີ່ມີຢູ່ແລ້ວ ອາດຈະຕ້ອງໄດ້ກຳນົດເປົ້າໝາຍສະເພາະຕໍ່ເຂດໂຄງການ ແລະ ມີຕາຕະລາງເວລາທີ່ເໝາະສົມໃນການບັນລຸໃຫ້ໄດ້ຕາມເປົ້າໝາຍເຫຼົ່ານັ້ນ. ຂະບວນການປະເມີນສິ່ງແວດລ້ອມ ອາດຈະແນະນຳລະດັບ ຫຼື ມາດຕະການທາງເລືອກອື່ນ (ທີ່ສູງກ່ວາ ຫຼື ຕ່ຳກ່ວາ) ອັນເປັນທີ່ຍອມຮັບໄດ້ຕໍ່ອົງການການເງິນສາກົນ ເຊິ່ງຈະກາຍເປັນເງື່ອນໄຂສະເພາະໂຄງການ/ຂອງເຂດໂຄງການ. ບົດແນະນຳດັ່ງກ່າວໂດຍລວມແລ້ວ ປະກອບມີຂໍ້ມູນກ່ຽວກັບບັນຫາຮ່ວມລະຫວ່າງຂະແໜງການທີ່ກ່ຽວຂ້ອງກັບສິ່ງແວດລ້ອມ, ສຸຂະພາບ ແລະຄວາມປອດໄພ ທີ່ສາມາດນຳໃຊ້ໄດ້ກັບທຸກໆຂະແໜງການ. ແນະນຳໃຫ້ນຳໃຊ້ເອກະສານສະບັບນີ້ຮ່ວມກັນກັບບົດແນະນຳຕ່າງໆຂອງຂະແໜງການທີ່ກ່ຽວຂ້ອງ. ບົດແນະນຳທາງດ້ານສິ່ງແວດລ້ອມ, ສຸຂະພາບ ແລະ ຄວາມປອດໄພຂອງກຸ່ມທະນາຄານໂລກອາດຈະມີການປັບປຸງເປັນເປັນແຕ່ລະ ໄລຍະ.

7. ໃນກໍລະນະທີ່ລະບຽບການຂອງປະເທດເຈົ້າພາບແຕກຕ່າງຈາກລະດັບແລະມາດຕະການໃນບົດແນະນຳທາງດ້ານສິ່ງແວດລ້ອມ, ສຸຂະພາບ ແລະຄວາມປອດໄພຂອງກຸ່ມທະນາຄານໂລກ, ໂຄງການຄວນປະຕິບັດຕາມລະບຽບການ ຫຼື ມາດຕະການທີ່ເຄັ່ງຄັດກ່ວາ. ຖ້າການນຳໃຊ້ລະດັບ ແລະ ມາດຕະການທີ່ເຄັ່ງຄັດໜ້ອຍກ່ວາຫາກເຫັນວ່າ: ມີຄວາມເໝາະສົມ

ຕາມເງື່ອນໄຂໂຄງການຫຼາຍກວ່າ, ໂຄງການ ຈະຕ້ອງຮ່າງເຫດຜົນລາຍລະອຽດຄົບຖ້ວນສໍາລັບທຸກທາງເລືອກທີ່ສະເໜີ ໃນຖານະເປັນສ່ວນໜຶ່ງຂອງການປະເມີນຜົນທາງດ້ານສິ່ງແວດລ້ອມສະເພາະເຂດໂຄງການ. ເຫດຜົນດັ່ງກ່າວຄວນສະແດງໃຫ້ເຫັນວ່າ: ທຸກທາງເລືອກລະດັບການດໍາເນີນແມ່ນໄດ້ຄໍານຶງເຖິງການປົກປ້ອງສຸຂະພາບຂອງຄົນ ແລະ ສິ່ງແວດລ້ອມ.

8. ຊຸດບົດແນະນໍາທັງແປດທີ່ສອດຄ່ອງຕໍ່ກັບມາດຕະຖານການດໍາເນີນງານແຕ່ລະອັນ ແລະ ບົດການຕີຄວາມໝາຍເພີ່ມເຕີມກ່ຽວກັບສີ່ການ ທາງການເງິນ ຫຼື ຜູ້ສະໜອງທຶນ ໄດ້ສະໜອງທິດນໍາກ່ຽວກັບເງື່ອນໄຂຕ່າງໆທີ່ມີຢູ່ໃນມາດຕະຖານການດໍາເນີນງານ ເຊິ່ງລວມທັງເອກະສານອ້າງອີງ, ແລະ ຍັງໄດ້ໃຫ້ທິດນໍາກ່ຽວກັບວິທີປະຕິບັດທີ່ດີ ດ້ານຄວາມແບບຍືນຍົງເພື່ອຊ່ວຍລູກຄ້າປັບປຸງ ການຈັດຕັ້ງປະຕິບັດໂຄງການຂອງເຂົາເຈົ້າ. ເອກະສານບົດແນະນໍາແລະເອກະສານຕີຄວາມໝາຍ ເພີ່ມເຕີມ ອາດຈະມີການປັບປຸງເປັນແຕ່ລະໄລຍະ.

## ມາດຕະຖານການດໍາເນີນງານທີ 1

# ການປະເມີນ ແລະ ການຄຸ້ມຄອງຄວາມສ່ຽງ ແລະ ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ

### ພາກສະເໜີ

1. ມາດຕະຖານການດໍາເນີນງານທີ 1 ເນັ້ນໜັກຄວາມສໍາຄັນຂອງການຄຸ້ມຄອງການດໍາເນີນງານທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ຕະຫຼອດໄລຍະອາຍຸຂອງໂຄງການ. ລະບົບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ທີ່ມີປະສິດທິຜົນແມ່ນຂະບວນການທີ່ບໍ່ຢຸດນິ້ງ ແລະ ຕໍ່ເນື່ອງທີ່ໄດ້ລິເລີ່ມ ແລະ ໄດ້ຮັບການສະໜັບສະໜູນຈາກຄະນະຜູ້ບໍລິຫານ ແລະ ຍັງລວມເອົາການມີສ່ວນຮ່ວມຂອງລູກຄ້າ, ຜູ້ອອກແຮງງານຂອງຕົນ, ຊຸມຊົນທ້ອງຖິ່ນທີ່ໄດ້ຮັບຜົນກະທົບໂດຍກົງຈາກໂຄງການ (ຊຸມຊົນທີ່ໄດ້ຮັບຜົນກະທົບ) ແລະ ໃນກໍລະນີທີ່ ສົມເຫດສົມຜົນຍັງລວມເອົາພາກສ່ວນກ່ຽວຂ້ອງອື່ນໆ.[1] ໂດຍການຖອດຖອນບົດຮຽນຈາກອົງປະກອບຕ່າງໆຂອງຂະບວນການຄຸ້ມຄອງການເຮັດວຽກຄື "ວາງແຜນ, ຈັດຕັ້ງປະຕິບັດ, ກວດກາ ແລະ ດໍາເນີນການແກ້ໄຂ ປັບປຸງ", ລະບົບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ລວມເອົາວິທີການວິທະຍາໃນການຄຸ້ມຄອງຄວາມສ່ຽງ[2] ແລະ ຜົນກະທົບ[3]ທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ໃນລັກສະນະທີ່ມີໂຄງສ້າງບົນພື້ນຖານຂອງຄວາມຕໍ່ເນື່ອງ. ລະບົບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມທີ່ດີ, ເໝາະສົມຕໍ່ລັກສະນະ ແລະ ຂະໜາດຂອງໂຄງການ ຈະສົ່ງເສີມຜົນການດໍາເນີນງານທາງດ້ານສິ່ງແວດລ້ອມ ແລະ ສັງຄົມໃຫ້ເຂັ້ມແຂງ ແລະ ຍືນຍົງ, ແລະ ສາມາດນໍາໄປສູ່ການປັບປຸງຜົນໄດ້ຮັບທາງດ້ານການເງິນ, ສັງຄົມ ແລະ ສິ່ງແວດລ້ອມ.

2. ໃນບາງຄັ້ງຄາວການປະເມີນຜົນ ແລະ ການຄຸ້ມຄອງຄວາມສ່ຽງ ແລະ ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ແນ່ນອນບາງຢ່າງອາດຈະເປັນໜ້າທີ່ຮັບຜິດຊອບຂອງລັດຖະບານ ຫຼື ຝ່າຍທີສາມ ເຊິ່ງລູກຄ້າບໍ່ສາມາດຄວບຄຸມ ຫຼື ມີອິດທິພົນຕໍ່ເຂົາເຈົ້າໄດ້[4] ເຊັ່ນ: (i) ເວລາທີ່ລັດຖະບານ ຫຼື ຝ່າຍທີສາມຕັດສິນໃຈກ່ຽວກັບການວາງແຜນໃດໜຶ່ງແຕ່ຫົວທີອັນສົ່ງຜົນກະທົບຕໍ່ກັບການເລືອກເຂດໂຄງການ ແລະ/ຫຼື ການອອກແບບໂຄງການ; ແລະ/ຫຼື (ii) ໃນເວລາທີ່ກິດຈະກໍາສະເພາະໃດໜຶ່ງເຊິ່ງພົວພັນໂດຍກົງກັບໂຄງການ ຖືກຈັດຕັ້ງປະຕິບັດໂດຍລັດຖະບານ ຫຼື ຝ່າຍ ທີສາມ ເຊັ່ນການສະໜອງທີ່ດິນໃຫ້ໂຄງການທີ່ມີສ່ວນຮ່ວມໃນການຍົກຍ້າຍຈັດສັນຊຸມຊົນ ຫຼື ບຸກຄົນ ແລະ/ຫຼື ອາດນໍາໄປສູ່ການສູນເສຍຊີວະນາໆພັນ. ເຖິງວ່າລູກຄ້າຈະບໍ່ສາມາດຄວບຄຸມກິດຈະກໍາດັ່ງກ່າວຂອງລັດຖະບານ ຫຼື ຝ່າຍທີສາມໄດ້, ລະບົບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ທີ່ມີປະສິດທິພາບຄວນສາມາດລະບຸບັນດາອົງການຕ່າງໆທີ່ກ່ຽວຂ້ອງ ແລະ ບົດບາດຂອງເຂົາເຈົ້າ, ຄວາມສ່ຽງກ່ຽວຂ້ອງທີ່ມີຕໍ່ລູກຄ້າ ແລະ ໂອກາດໃນການປະສານສົມທົບກັບຝ່າຍທີສາມ ຫຼື ບຸກຄົນທີສາມ ເພື່ອຊ່ວຍບັນລຸໃຫ້ໄດ້ຕາມຜົນໄດ້ຮັບທາງດ້ານສິ່ງແວດລ້ອມ ແລະ ສັງຄົມທີ່ສອດຄ່ອງກັບມາດຕະຖານການດໍາເນີນງານ.

1 ພາກສ່ວນກ່ຽວຂ້ອງອື່ນໆ ແມ່ນ ຜູ້ທີ່ບໍ່ໄດ້ຮັບຜົນກະທົບໂດຍກົງຈາກໂຄງການແຕ່ມີສ່ວນກ່ຽວຂ້ອງກັບໂຄງການ. ກຸ່ມຄົນດັ່ງກ່າວລວມມີ ອໍານາດການປົກຄອງຂັ້ນສູນກາງ ແລະ ທ້ອງຖິ່ນ, ໂຄງການທີ່ຢູ່ໃກ້ຄຽງ ແລະ/ຫຼື ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ.

2 ຄວາມສ່ຽງທາງດ້ານສິ່ງແວດລ້ອມ ແລະ ສັງຄົມແມ່ນການປະສົມປະສານຂອງຄວາມເປັນໄປໄດ້ທີ່ໄພອັນຕະລາຍໃດໜຶ່ງອາດຈະເກີດຂຶ້ນ ແລະ ຄວາມຮຸນແຮງຂອງຜົນກະທົບທີ່ເກີດຈາກເຫດການດັ່ງກ່າວ.

3 ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມໝາຍເຖິງການປ່ຽນແປງໃດໜຶ່ງທີ່ອາດເກີດຂຶ້ນ ຫຼື ໄດ້ເກີດຂຶ້ນໃນຕົວຈິງຕໍ່ກັບ (i) ສະພາບແວດລ້ອມທາງກາຍະພາບ, ທໍາມະຊາດ ຫຼື ວັດທະນະທໍາ ແລະ (ii) ຜົນກະທົບຕໍ່ກັບຊຸມຊົນ ແລະ ຜູ້ອອກແຮງງານທີ່ຢູ່ອ້ອມຂ້າງອັນເນື່ອງມາຈາກ ກິດຈະການຂອງທຸລະກິດທີ່ໄດ້ຮັບການສະໜັບສະໜູນ.

4 ຜູ້ຮັບເໝົາໃຫ້ລູກຄ້າ ຫຼື ເຮັດໜ້າທີ່ຕາງໜ້າໃຫ້ລູກຄ້າກໍຖືວ່າຢູ່ພາຍໃຕ້ການຄວບຄຸມໂດຍກົງຂອງລູກຄ້າ ແລະ ບໍ່ຖືວ່າເປັນຝ່າຍທີສາມໃນເອກະສານມາດຕະຖານການດໍາເນີນງານສະບັບນີ້.

ນອກຈາກນີ້, ມາດຕະຖານການດຳເນີນງານ ຍັງສະໜັບສະໜູນການນຳໃຊ້ກົນໄກການຮ້ອງທຸກອັນມີປະສິດທິຜົນ ທີ່ສາມາດອຳນວຍຄວາມສະດວກໃຫ້ການກຳນົດ ແລະ ຊອກຫາວິທີແກ້ໄຂໃຫ້ຜູ້ທີ່ເຊື່ອວ່າຕົນໄດ້ຮັບຜົນກະທົບທາງລົບຈາກກິດຈະກຳຕ່າງໆຂອງຂອງລູກຄ້າ.

3. ທຸລະກິດ ຄວນຈະເຄົາລົບສິດທິມະນຸດເຊິ່ງໝາຍຄວາມວ່າຈະຕ້ອງຫລີກເວັ້ນການລະເມີດສິດທິມະນຸດຂອງຜູ້ອື່ນ ແລະ ແກ້ໄຂຜົນກະ ທົບທາງລົບຕໍ່ສິດທິມະນຸດທີ່ທຸລະກິດອາດຈະປະກອບສ່ວນ ຫຼື ກໍ່ໃຫ້ເກີດ. ມາດຕະຖານການດຳເນີນງານແຕ່ລະມາດຕະຖານ ມີອົງປະກອບທີ່ກ່ຽວຂ້ອງກັບສິດທິມະນຸດ ເຊິ່ງໂຄງການອາດຈະປະເຊີນໃນໄລຍະເຄື່ອນໄຫວໂຄງການ. ການປະຕິບັດຕາມມາດຕະຖານການດຳເນີນງານຈະຊ່ວຍໃຫ້ລູກຄ້າແກ້ໄຂບັນຫາທາງດ້ານສິດທິມະນຸດໃນໂຄງການຂອງຕົນໄດ້.

## ວັດຖຸປະສົງ

- ເພື່ອກຳນົດ ແລະ ປະເມີນຄວາມສ່ຽງ ແລະ ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການ.
- ເພື່ອທີ່ຈະນຳໃຊ້ລຳດັບການຫຼຸດຜ່ອນຜົນກະທົບໃນການຄາດການ ແລະ ຫຼີກເວັ້ນ ຫຼື ໃນກໍລະນີທີ່ບໍ່ສາມາດຫຼີກເວັ້ນໄດ້ ໃຫ້ຫຼຸດຜ່ອນ[5] ແລະ ໃນກໍລະນີທີ່ຍັງມີຜົນກະທົບຕົກຄ້າງແມ່ນໃຫ້ຊົດເຊີຍຕໍ່ກັບຄວາມສ່ຽງ ແລະ ຜົນກະທົບຕໍ່ກັບຜູ້ອອກແຮງງານ, ຊຸມຊົນທີ່ໄດ້ຮັບຜົນກະທົບ ແລະ ສິ່ງແວດລ້ອມ.
- ເພື່ອສົ່ງເສີມການຈັດຕັ້ງປະຕິບັດທາງສິ່ງແວດລ້ອມ ແລະ ສັງຄົມຂອງລູກຄ້າໂດຍຜ່ານການນຳໃຊ້ລະບົບຄຸ້ມຄອງຢ່າງມີປະສິດທິຜົນ.
- ເພື່ອຮັບປະກັນໃຫ້ມີການຕອບສະໜອງຕໍ່ກັບການຮ້ອງທຸກຂອງຊຸມຊົນທີ່ໄດ້ຮັບຜົນກະທົບ ແລະ ມີການສະໜອງຂໍ້ມູນໃຫ້ພາຍນອກ ແລະ ມີການຄຸ້ມຄອງຢ່າງເໝາະສົມ.
- ເພື່ອສົ່ງເສີມໃຫ້ມີຊ່ອງທາງການມີສ່ວນຮ່ວມຢ່າງພຽງພໍຂອງຊຸມຊົນທີ່ໄດ້ຮັບຜົນກະທົບໃນຕະຫຼອດໄລຍະອາຍຸຂອງໂຄງການຕໍ່ກັບບັນຫາທີ່ມີທ່າແຮງສົ່ງຜົນກະທົບຕໍ່ກັບເຂົາເຈົ້າ ແລະ ເພື່ອຮັບປະກັນໃຫ້ມີການເປີດເຜີຍ ແລະ ເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບສິ່ງແວດລ້ອມ ແລະ ສັງຄົມທີ່ກ່ຽວຂ້ອງ.

## ຂອບເຂດການນຳໃຊ້

4. ມາດຕະຖານການດຳເນີນງານດັ່ງກ່າວນີ້ແມ່ນຖືກນຳໃຊ້ກັບກິດຈະການທີ່ມີຄວາມສ່ຽງ ແລະ/ຫຼື ຜົນກະທົບດ້ານສິ່ງແວດລ້ອມ ແລະ/ຫຼື ສັງຄົມ. ໃນມາດຕະຖານການດຳເນີນງານດັ່ງກ່າວນີ້, ຄຳວ່າ "ໂຄງການ" ໝາຍເຖິງຊຸດກິດຈະກຳທີ່ໄດ້ກຳນົດໄວ້ ເຊິ່ງລວມເອົາກິດຈະກຳຕ່າງໆທີ່ຍັງບໍ່ໄດ້ກຳນົດອົງປະກອບທາງກາຍຍະພາກ, ທິດທາງ ແລະ ສິ່ງອຳນວຍຄວາມສະດວກ ທີ່ໜ້າຈະສ້າງຄວາມສ່ຽງ ແລະ ຜົນກະທົບຕ່າງໆ[6]. ໃນຂອດທີ່ສາມາດນຳໃຊ້ໄດ້, ສິ່ງດັ່ງກ່າວອາດລວມເອົາດ້ານຕ່າງໆຈາກໄລຍະເລີ່ມພັດທະນາໂຄງການໄປຕະຫຼອດໄລຍະຮອບວຽນຊີວິດຂອງໂຄງການ (ການອອກແບບ, ການກໍ່ສ້າງ, ການຈ້າງວິຊາການສະເພາະ, ການຈັດຕັ້ງປະຕິບັດ, ການຢຸດເຊົາສັນຍາຈ້າງວິຊາການສະເພາະ, ການປິດໂຄງການ ຫຼື ໄລຍະຫຼັງການປິດໂຄງການຕາມຄວາມເໝາະສົມ)[7] , ເງື່ອນໄຂຂອງມາດຕະຖານການດຳເນີນງານດັ່ງກ່າວນີ້ ແມ່ນນຳໃຊ້ ກັບທຸກກິດຈະການເວັ້ນເສຍແຕ່ວ່າໄດ້ກຳນົດສະເພາະຕ່າງຫາກໃນແຕ່ລະວັກຂ້າງລຸ່ມນີ້.

## ເງື່ອນໄຂ

### ລະບົບຄຸ້ມຄອງ ແລະ ການປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ

5. ໂດຍປະສານງານກັບອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ຽວຂ້ອງ ແລະ ຝ່າຍທີສາມຕາມຄວາມເໝາະສົມ[8], ລູກຄ້າຈະດຳເນີນຂະບວນການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ,ສ້າງ ແລະ ຮັກສາລະບົບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມທີ່ແທດເໝາະກັບລັກສະນະຕົວຈິງ ແລະ ຂະໜາດຂອງໂຄງການ ແລະ ສອດຄ່ອງກັບລະດັບຄວາມສ່ຽງ ແລະ ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ. ລະບົບດັ່ງກ່າວຈະກວມເອົາອົງປະກອບເຫຼົ່ານີ້ຄື: (i) ນະໂຍບາຍ; (ii) ການກຳນົດຄວາມສ່ຽງ ແລະ ຜົນກະທົບ; (iii) ການຄຸ້ມຄອງແຜນ

[5] ທາງເລືອກທີ່ເປັນທີ່ຍອມຮັບເພື່ອຫຼຸດຜ່ອນນັ້ນຈະແຕກຕ່າງກັນ ແລະ ປະກອບມີ: ບັນເທົາ, ແກ້ໄຂ, ປັບແປງ ແລະ/ຫຼື ຟື້ນຟູຜົນກະທົບຕາມຄວາມເໝາະສົມ. ມີການອະທິບາຍ ລຳດັບຂັ້ນຂອງການຫຼຸດຜ່ອນຄວາມສ່ຽງ ແລະ ຜົນກະທົບຕື່ມຢູ່ພາກມາດຕະຖານການດຳເນີນງານທີ 2 ຫາ 8 ຕາມຄວາມສອດຄ່ອງ.

[6] ຕົວຢ່າງ, ຫົວໜ່ວຍທຸລະກິດທີ່ມີບັນຊີຊັບສິນທາງກາຍຍະພາກ ແລະ/ຫຼື ເຈດຕະນາທີ່ຈະສ້າງ ຫຼື ຊື້ສິ່ງອຳນວຍຄວາມສະດວກອັນໃໝ່ ແລະ ກອງທຶນເພື່ອການລົງທຶນ ຫຼື ສະຖາບັນ ທີ່ສະໜອງທຶນກູ້ຢືມທີ່ມີບັນຊີຊັບສິນ ແລະ/ຫຼື ທີ່ມີເຈດຕະນາລົງທຶນໃນສິ່ງອຳນວຍຄວາມສະດວກໃໝ່.

[7] ຜູ້ນຳໃຊ້ມາດຕະຖານການດຳເນີນງານດັ່ງກ່າວນີ້ຄວນຈະແຍກກິດຈະການທຸລະກິດທີ່ຄວນມີການນຳໃຊ້ມາດຕະຖານດັ່ງກ່າວນີ້ອອກຕ່າງຫາກຍ້ອນມີສະຖາບັນການເງິນ, ນັກລົງທຶນ, ບໍລິສັດປະກັນໄພ ແລະ ເຈົ້າຂອງ/ຜູ້ດຳເນີນໂຄງການຫຼາກຫຼາຍຫົວໜ່ວຍແຕກຕ່າງກັນທີ່ນຳໃຊ້ມາດຕະຖານການດຳເນີນງານດັ່ງກ່າວນີ້.

[8] ໝາຍເຖິງຝ່າຍຕ່າງໆທີ່ມີພັນທະ ແລະ ໜ້າທີ່ຮັບຜິດຊອບຕາມກົດໝາຍໃນການປະເມີນ ແລະ ຄຸ້ມຄອງຄວາມສ່ຽງ ແລະ ຜົນກະທົບສະເພາະໃດໜຶ່ງ (ເຊັ່ນ: ການຍົກຍ້າຍຈັດສັນທີ່ ລັດຖະບານເປັນເຈົ້າການດຳເນີນ).



ງານ; (iv) ຄວາມສາມາດ ແລະ ສັກກະຍະພາບຂອງອົງການຈັດຕັ້ງ; (v) ການກຽມພ້ອມ ແລະ ຕອບໂຕ້ເຫດສຸກເສີນ; (vi) ການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ; ແລະ (vii) ການຕິດຕາມກວດກາ ກໍຄືການທົບທວນຄືນ.

### ນະໂຍບາຍ

6. ລູກຄ້າ ຈະກຳນົດນະໂຍບາຍໂດຍລວມທີ່ມີລາຍລະອຽດກ່ຽວກັບວັດຖຸປະສົງ ແລະ ຫຼັກການທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ເພື່ອເປັນບ່ອນອີງໃຫ້ກັບໂຄງການໃນການບັນລຸການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມທີ່ດີ.[9] ນະໂຍບາຍດັ່ງກ່າວກຳນົດກອບຂອງຂະບວນການ ການປະເມີນຜົນ ແລະ ຄຸ້ມຄອງທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ແລະ ເຈາະຈົງວ່າໂຄງການ (ຫຼື ກິດຈະການຕາມ ຄວາມເໝາະສົມ) ຈະປະຕິບັດຕາມລະບຽບກົດໝາຍທ້ອງຖິ່ນທີ່ກ່ຽວຂ້ອງຂອງປະເທດທີ່ມີການຈັດຕັ້ງປະຕິບັດໂຄງການຢູ່ ລວມທັງກົດໝາຍຕ່າງໆທີ່ຈັດຕັ້ງປະຕິບັດພັນທະຂອງປະເທດເຈົ້າພາບພາຍໃຕ້ກົດໝາຍສາກົນ. ນະໂຍບາຍດັ່ງກ່າວຄວນຈະສອດຄ່ອງກັບຫຼັກການຕ່າງໆຂອງມາດຕະຖານການການດຳເນີນງານ. ໃນບາງສະຖານະການ, ລູກຄ້າອາດຈະປະຕິບັດຕາມມາດຕະຖານອື່ນໆເຊັ່ນ: ລະບົບອອກໃບຢັ້ງຢືນ ຫຼື ລະບຽບຫຼັກປະຕິບັດທີ່ຮັບຮູ້ໃນລະດັບສາກົນ ເຊິ່ງສິ່ງເຫຼົ່ານີ້ ກໍ່ຄວນຖືກລວມເຂົ້າໃນນະໂຍບາຍຂອງລູກຄ້າ. ນະໂຍບາຍດັ່ງກ່າວຈະກຳນົດວ່າຜູ້ໃດພາຍໃນອົງການຈັດຕັ້ງຂອງລູກຄ້າທີ່ຈະເປັນຜູ້ຮັບປະກັນການປະຕິບັດໃຫ້ສອດຄ່ອງກັບນະໂຍບາຍດັ່ງກ່າວ ແລະ ຮັບຜິດຊອບຕໍ່ກັບການປະຕິບັດດັ່ງກ່າວ (ໂດຍປະສານງານກັບອົງການຈັດຕັ້ງລັດຖະບານທີ່ມີໜ້າທີ່ຮັບຜິດຊອບ ຫຼື ຝ່າຍທີສາມ ຕາມຄວາມຈຳເປັນ). ລູກຄ້າຈະເຜີຍແຜ່ນະໂຍບາຍໃຫ້ທຸກຂັ້ນພາຍໃນອົງການຈັດຕັ້ງຂອງລູກຄ້າໄດ້ຮັບຮູ້ນະໂຍບາຍດັ່ງກ່າວ.

### ການກຳນົດຄວາມສ່ຽງ ແລະ ຜົນກະທົບ

7. ລູກຄ້າ ຈະສ້າງ ແລະ ຮັກສາຂະບວນການໃນການກຳນົດຄວາມສ່ຽງ ແລະ ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການ (ໃຫ້ເບິ່ງວັກທີ 18 ສຳລັບເງື່ອນໄຂທາງດ້ານສັກກະຍະພາບ). ປະເພດ, ຂະໜາດ ແລະ ທີ່ຕັ້ງຂອງໂຄງການ ຈະເປັນປັດໄຈ ກຳນົດຂອບເຂດ ແລະ ລະດັບຄວາມພະຍາຍາມທີ່ອຸທິດໃຫ້ຂະບວນການກຳນົດຄວາມສ່ຽງ ແລະ ຜົນກະທົບ. ຂະບວນການກຳນົດຄວາມສ່ຽງ ແລະ ຜົນກະທົບຈະຕ້ອງສອດຄ່ອງກັບວິທີປະຕິບັດສາກົນທີ່ດີຂອງວຽກງານອຸດສາຫະກຳ[10] ແລະ ຈະເປັນຕົວກຳນົດວິທີການ ແລະ ເຄື່ອງມືການປະເມີນທີ່ເໝາະສົມ ແລະ ສອດຄ່ອງ. ຂະບວນການດັ່ງກ່າວອາດຈະປະກອບມີການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມແບບຄົບຊຸດ, ການປະເມີນຜົນທາງດ້ານສິ່ງແວດລ້ອມ ແລະ ສັງຄົມໃນວົງແຄບ ຫຼື ແບບມີຈຸດສຸມ ຫຼື ການນຳໃຊ້ໂດຍກົງຕໍ່ກັບມາດຕະຖານການກຳນົດສະຖານທີ່ຕັ້ງທີ່ຮັບປະກັນດ້ານສິ່ງແວດລ້ອມ, ມາດຕະຖານດ້ານມົນລະພິດ, ມາດຕະຖານເງື່ອນໄຂການອອກແບບ, ຫຼື ມາດຕະຖານການກໍ່ສ້າງ[11]. ໃນກໍລະນີໂຄງການຫາກກ່ຽວຂ້ອງກັບຊັບສິນທີ່ມີຢູ່ກ່ອນແລ້ວ, ການກວດສອບທາງດ້ານສິ່ງແວດລ້ອມ ແລະ/ຫຼື ສັງຄົມ ຫຼື ການປະເມີນຜົນຄວາມສ່ຽງ/ໄພອັນຕະລາຍ ອາດຈະເໝາະສົມ ແລະ ພຽງພໍຕໍ່ການກຳນົດຄວາມສ່ຽງແລະຜົນກະທົບ. ຖ້າຍັງບໍ່ໄດ້ກຳນົດບັນດາຊັບສິນທີ່ຕ້ອງສ້າງ, ທີ່ຕ້ອງໃຫ້ໄດ້ມາ ຫຼື ທີ່ຕ້ອງຊື້ຜ່ານຮູບການກູ້ຢືມ, ການສ້າງຂະບວນຮັບປະກັນທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ຈະຊ່ວຍກຳນົດບັນດາຄວາມສ່ຽງ ແລະ ຜົນກະທົບໃນຈຸດເວລາໃດໜຶ່ງໃນອະນາຄົດເມື່ອມີຄວາມເຂົ້າໃຈໃນລະດັບທີ່ສົມເຫດສົມຜົນຕໍ່ກັບອົງປະກອບທາງກາຍະພາກ, ຊັບສິນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ. ຂະບວນການກຳນົດຄວາມສ່ຽງ ແລະຜົນກະທົບດັ່ງກ່າວຈະອີງໃສ່ຂໍ້ມູນພື້ນຖານທາງດ້ານສິ່ງແວດລ້ອມ ແລະ ສັງຄົມທີ່ມີໃນລະດັບລາຍລະອຽດເໝາະສົມ. ຂະບວນການດັ່ງກ່າວຈະພິຈາລະນາຄວາມສ່ຽງ ແລະ ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມທຸກຢ່າງຂອງໂຄງການລວມທັງບັນຫາທີ່ໄດ້ກຳນົດໃນມາດຕະຖານການດຳເນີນງານທີ 2 ຫາ 8 ແລະ ຜູ້ຄົນທີ່ມີທ່າອ່ຽງຖືກກະທົບຈາກຄວາມສ່ຽງ ແລະ ຜົນກະທົບເຫຼົ່ານັ້ນ.[12] ຂະບວນການກຳນົດຄວາມສ່ຽງ ແລະ ຜົນກະທົບດັ່ງກ່າວ ຈະພິຈາລະນາການປ່ອຍທາດອາຍພິດເຮືອນແກ້ວ, ຄວາມສ່ຽງຕ່າງໆທີ່ກ່ຽວ

[9] ເງື່ອນໄຂດັ່ງກ່າວນີ້ແມ່ນນະໂຍບາຍແຍກຕ່າງຫາກທີ່ມີຄວາມສະເພາະເຈາະຈົງຕາມໂຄງການ ແລະ ບໍ່ມີເຈດຕະນາສິ່ງຜົນກະທົບ (ຫຼື ກຳນົດໃຫ້ມີການປ່ຽນແປງ) ນະໂຍບາຍທີ່ມີຢູ່ແລ້ວທີ່ລູກຄ້າອາດຈະໄດ້ກຳນົດໄວ້ສຳລັບໂຄງການ, ກິດຈະການທຸລະກິດ ຫຼື ກິດຈະການທາງການບໍລິຫານວິສາຫະກິດຂັ້ນສູງຕ່າງໆທີ່ບໍ່ກ່ຽວຂ້ອງ.

[10] ມີນິຍາມວ່າການນຳໃຊ້ສີມືແຮງງານ, ຄວາມດຸໝັ່ນ, ຄວາມຮອບຄອບ ແລະ ການເບິ່ງການໄກທີ່ຄາດການໃຫ້ບັນດາພະນັກງານວິຊາຊີບທີ່ມີທັກສະ ແລະ ປະສົບການຄວນມີເຊິ່ງເປັນຜູ້ທີ່ເຮັດວຽກປະເພດດຽວກັນພາຍໃຕ້ສະພາບເງື່ອນໄຂຄ້າຍຄືກັນຢູ່ທົ່ວໂລກ ຫຼື ໃນພາກພື້ນ.

[11] ສຳລັບການພັດທະນາດິນທີ່ຍັງບໍ່ໄດ້ມີການພັດທະນາ ຫຼື ການຂະຫຍາຍຂະໜາດໃຫຍ່ທີ່ມີອົງປະກອບທາງກາຍະພາກ, ດ້ານຕ່າງໆ ແລະ ສິ່ງອຳນວຍຄວາມສະດວກທີ່ອາດມີຜົນກະທົບຫຼາຍຕໍ່ສິ່ງແວດລ້ອມ ແລະສັງຄົມນັ້ນລູກຄ້າຈະດຳເນີນການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມແລະສັງຄົມແບບຄົບຊຸດເຊິ່ງລວມທັງການສຳຫຼວດຫາທາງເລືອກ ຕ່າງໆຕາມຄວາມເໝາະສົມ.

[12] ໃນສະພາບເງື່ອນໄຂທີ່ມີຄວາມສ່ຽງສູງແບບຈຳກັດອາດຈະແທດເໝາະກ່ວາໃນການໃຫ້ລູກຄ້າດຳເນີນການປະເມີນທີ່ກ່ຽວຂ້ອງກັບສິດທິມະນຸດສະເພາະໃດໜຶ່ງທີ່ສອດຄ່ອງ ກັບ ທຸລະກິດຈຳເພາະໃດໜຶ່ງ ເພື່ອເປັນການເສີມຕື່ມໃຫ້ຂະບວນການກຳນົດຄວາມສ່ຽງ ແລະ ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ.

ຂ້ອງກັບການປ່ຽນແປງຂອງສະພາບດິນຟ້າອາກາດ ແລະ ໂອກາດໃນການປັບຕົວ, ຕະຫຼອດເຖິງຜົນກະທົບຂ້າມປະເທດທີ່ອາດເກີດຂຶ້ນເຊັ່ນ: ມົນລະພິດທາງອາກາດ ຫຼື ການນຳໃຊ້ ຫຼື ມົນລະພິດການທາງເດີນເຮືອລະຫວ່າງປະເທດ.

8. ໃນກໍລະນີເປັນໂຄງການກ່ຽວຂ້ອງໂດຍກົງກັບອົງປະກອບທາງກາຍະພາກ, ປັດໄຈ ແລະ ສິ່ງອຳນວຍຄວາມສະດວກຕ່າງໆທີ່ສາມາດສ້າງ ຜົນກະທົບແມ່ນຈະຕ້ອງໄດ້ກຳນົດຄວາມສ່ຽງ ແລະ ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມອີງຕາມສະພາບເງື່ອນໄຂຂອງຂົງເຂດທີ່ໂຄງການສົ່ງອິດທິພົນກະທົບ. ຂົງເຂດທີ່ໂຄງການສົ່ງອິດທິຜົນກະທົບກວມເອົາຂົງເຂດດັ່ງລຸ່ມນີ້ຕາມຄວາມເໝາະສົມ:

- ຂົງເຂດທີ່ມີທ່າອ່ຽງໄດ້ຮັບຜົນກະທົບຈາກ: (i) ໂຄງການດັ່ງກ່າວ[13] ແລະ ກິດຈະກຳຂອງລູກຄ້າ ແລະ ສິ່ງອຳນວຍຄວາມສະດວກທີ່ເປັນອົງປະກອບ ໜຶ່ງຂອງໂຄງການ ທີ່ໂຄງການ (ລວມທັງຜູ້ຮັບເໝົາ) ເປັນເຈົ້າຂອງ,ເປັນຜູ້ນຳໃຊ້ ຫຼື ເປັນຜູ້ຄຸ້ມຄອງ;[14] (ii) ຜົນກະທົບຈາກການພັດທະນາທີ່ບໍ່ໄດ້ວາງແຜນໄວ້ ແຕ່ສາມາດຄາດຄະເນໄດ້ ທີ່ອາດຈະເກີດຂຶ້ນໃນພາຍຫຼັງ ຫຼື ເກີດຂຶ້ນຢູ່ບ່ອນອື່ນ; ຫຼື (iii) ຜົນກະທົບທາງອ້ອມຈາກໂຄງການຕໍ່ກັບຊີວະນາໆພັນ ຫຼື ຕໍ່ກັບການບໍລິການຂອງລະບົບນິເວດທີ່ເປັນທີ່ເພິ່ງພາອາໄສຕໍ່ການດຳລົງຊີວິດຂອງຊຸມຊົນທີ່ຖືກຜົນກະທົບ.

- ບັນດາສິ່ງອຳນວຍຄວາມສະດວກທີ່ກ່ຽວຂ້ອງເຊິ່ງເປັນສິ່ງອຳນວຍຄວາມສະດວກທີ່ບໍ່ໄດ້ເປັນພາກສ່ວນໜຶ່ງຂອງທຶນງົບປະມານຈາກໂຄງການ ແລະ ຈະບໍ່ໄດ້ຮັບການກໍ່ສ້າງ ຫຼື ຂະຫຍາຍຖ້າຫາກວ່າບໍ່ມີໂຄງການ ຫຼື ຖ້າປາສະຈາກໂຄງການລ້ວນແລ້ວຈະບໍ່ສາມາດນຳໃຊ້ໄດ້.[15]

- ຜົນກະທົບສະສົມ ອັນເນື່ອງມາຈາກຜົນກະທົບທີ່ເພີ່ມທະວີຂຶ້ນເທື່ອລະໜ້ອຍ – ໃນເຂດ ຫຼື ຊັບພະຍາກອນທີ່ຖືກນຳໃຊ້ ຫຼືໄດ້ຮັບຜົນກະທົບຈາກ ໂຄງການໂດຍກົງ –ຈາກການພັດທະນາອື່ນໆທີ່ມີຢູ່ແລ້ວ, ທີ່ມີໃນແຜນ ຫຼື ໄດ້ກຳນົດໄວ້ໃນເວລາທີ່ມີການ ດຳເນີນຂະບວນການກຳນົດຄວາມສ່ຽງແລະຜົນກະທົບ.[16]

9. ໃນກໍລະນີທີ່ຄວາມສ່ຽງ ແລະ ຜົນກະທົບໃນຂົງເຂດໂຄງການທີ່ເກີດຈາກການກະທຳຂອງຝ່າຍທີສາມນັ້ນ, ລູກຄ້າ ຈະແກ້ໄຂຄວາມສ່ຽງ ແລະ ຜົນກະທົບເຫຼົ່ານັ້ນໃນລັກສະນະສົມສ່ວນກັບລະດັບການຄວບຄຸມ ແລະ ບົດບາດອິດທິພົນຂອງລູກຄ້າທີ່ມີຕໍ່ຝ່າຍທີສາມ ໂດຍມີການພິຈາລະນາເບິ່ງບັນຫາຜົນປະໂຫຍດທັບຊ້ອນ.

10. ໃນກໍລະນີທີ່ລູກຄ້າສາມາດປະຕິບັດການຄວບຄຸມໄດ້ຢ່າງສົມເຫດສົມຜົນ, ຂະບວນການກຳນົດຄວາມສ່ຽງ ແລະ ຜົນກະທົບ ຈະພິຈາລະນາຄວາມສ່ຽງ ແລະ ຜົນກະທົບເຫຼົ່ານັ້ນທີ່ກ່ຽວຂ້ອງກັບຕ່ອງໂສ້ການສະໜອງຕົ້ນຕໍດັ່ງທີ່ໄດ້ກຳນົດໄວ້ໃນມາດຕະຖານດຳເນີນງານທີ 2 (ວັກທີ 27–29) ແລະ ມາດຕະຖານການດຳເນີນງານທີ 6 (ວັກທີ 30).

11. ໃນກໍລະນີທີ່ໂຄງການກ່ຽວຂ້ອງກັບອົງປະກອບທາງກາຍະພາກ, ດ້ານຕ່າງໆ ແລະ ສິ່ງອຳນວຍຄວາມສະດວກທີ່ໄດ້ກຳນົດໄວ້ຢ່າງສະເພາະເຈາະຈົງທີ່ອາດສ້າງຜົນກະທົບທາງດ້ານສິ່ງແວດລ້ອມແລະສັງຄົມນັ້ນ, ການກຳນົດຄວາມສ່ຽງ ແລະ ຜົນກະທົບດັ່ງກ່າວນັ້ນ ຈະພິຈາລະນາເບິ່ງສິ່ງຄົ້ນພົບແລະຂໍ້ສະຫຼຸບຈາກແຜນ, ບົດຄົ້ນຄ້ວາ ຫຼື ການປະເມີນຜົນກ່ຽວຂ້ອງທີ່ຈັດຕັ້ງປະຕິບັດໂດຍອົງການກ່ຽວຂ້ອງຂອງລັດ ຫຼື ຝ່າຍອື່ນໆທີ່ກ່ຽວຂ້ອງໂດຍກົງກັບໂຄງການ ຫຼື ເຂດທີ່ໂຄງການສົ່ງອິດທິພົນ.[17] ສິ່ງເຫຼົ່ານີ້ ລວມເອົາແຜນແມ່ບົດການພັດທະນາເສດຖະກິດ, ແຜນປະເທດ ຫຼື ພາກພື້ນ, ບົດວິພາກເສດຖະກິດ, ການວິເຄາະທາງເລືອກຕ່າງໆ ແລະ ການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມແບບສະສົມ, ໃນລະດັບພາກພື້ນ, ຂະແໜງການ ຫຼື ແບບຍຸດທະສາດທີ່ເຫັນວ່າສອດຄ່ອງ. ການກຳນົດ

13 ຕົວຢ່າງລວມມີເຂດໂຄງການ, ເຂດ airshed (ຂອບເຂດຈຳກັດການກະຈາຍມົນລະພິດທາງອາກາດ) ແລະ ອ່າງໂຕ່ງ ແລະ ແລວຄົມມະນາຄົມຂົນສົ່ງ.

14 ຕົວຢ່າງມີຄື: ແລວສາຍສົ່ງ, ທໍ່ສົ່ງ, ຄອງນໍ້າ, ອຸໂມງ, ການຍົກຍ້າຍ ແລະ ເສັ້ນທາງເຂົ້າເຖິງ, ເຂດບໍ່ດິນ ແລະ ເຂດຖິ້ມດິນເສດ/ສິ່ງເສດເຫຼືອ, ແຄ້ມກໍ່ສ້າງ ແລະ ທີ່ພັກພາກສະໜາມ ແລະ ດິນທີ່ມີການປົນເປື້ອນ (ເຊັ່ນ: ໜ້າດິນ, ນໍ້າໃຕ້ດິນ, ນໍ້າໜ້າດິນ ແລະ ຕະກອນ).

15 ສິ່ງອຳນວຍຄວາມສະດວກທີ່ກ່ຽວຂ້ອງອາດລວມມີ ທາງລົດໄຟ, ທົນທາງ, ໂຮງພະລັງງານ ຫຼື ສາຍສົ່ງໄຟຟ້າທີ່ສະໜອງໃຫ້ໂຄງການສະເພາະ, ທໍ່ສົ່ງ, ສາທາລະນຸປະໂພກ, ສາງ ເກັບເຄື່ອງ ແລະ ທ່າຂົນສົ່ງສິນຄ້າ.

16 ຜົນກະທົບສະສົມຈຳກັດຢູ່ທີ່ບັນດາຜົນກະທົບທີ່ໂດຍລວມແລ້ວເຫັນວ່າມີຄວາມສຳຄັນຕາມພື້ນຖານຜົນກະທົບທາງວິທະຍາສາດ ແລະ/ຫຼື ຜົນກະທົບຕໍ່ຊຸມຊົນຜູ້ໄດ້ຮັບຜົນກະ ທົບ. ຕົວຢ່າງຂອງຜົນກະທົບສະສົມປະກອບມີ: ການປ່ອຍອາຍໃນເຂດ airshed (ຂອບເຂດຈຳກັດການກະຈາຍມົນລະພິດທາງອາກາດ); ການຫຼຸດຜ່ອນປະລິມານນໍ້າໄຫຼໃນອ່າງ ໂຕ່ງຍ້ອນການດູດນໍ້າອອກຫຼາຍຄັ້ງ; ການເພີ່ມຂຶ້ນຂອງປະລິມານຕະກອນໃນອ່າງໂຕ່ງ; ການລົບກວນແລວຍົກຍ້າຍຂອງສັດນໍ້າ ຫຼື ການເຄື່ອນຍ້າຍຂອງສັດປ່າ; ຫຼື ມີລົດຕິດ ຫຼື ອຸບັດຕິເຫດຈາກການສັນຈອນຍ້ອນມີພາຫະນະສັນຈອນຕາມຖະໜົນຂອງຊຸມຊົນຫຼາຍຂຶ້ນ.

17 ລູກຄ້າສາມາດພິຈາລະນາສິ່ງດັ່ງກ່າວໂດຍການສຸມໃສ່ການປະກອບສ່ວນທີ່ເພີ່ມທະວີຂຶ້ນເທື່ອລະໜ້ອຍຕໍ່ກັບຜົນກະທົບບາງຢ່າງທີ່ໂດຍລວມແລ້ວ ເຫັນວ່າມີຄວາມສຳຄັນບົນພື້ນຖານຜົນກະທົບທາງວິທະຍາສາດ ຫຼື ຜົນກະທົບ ຕໍ່ຊຸມຊົນທີ່ໄດ້ຮັບຜົນກະທົບພາຍໃນຂົງເຂດທີ່ໄດ້ກວມລວມເອົາໃນບົດສຶກສາຄົ້ນຄ້ວາ ຫຼື ການປະເມີນຜົນສະສົມໃນຂອບເຂດ ພາກພື້ນທີ່ກ້ວາງຂວາງຂຶ້ນ.



ຄວາມສ່ຽງ ແລະ ຜົນກະທົບຈະພິຈາລະນາເອົາຜົນໄດ້ຮັບຈາກຂະບວນການມີສ່ວນຮ່ວມຂອງຊຸມຊົນຜູ້ໄດ້ຮັບຜົນກະທົບຕາມຄວາມເໝາະສົມ.

12. ໃນກໍລະນີທີ່ໂຄງການກ່ຽວຂ້ອງກັບອົງປະກອບທາງກາຍະພາກ, ດ້ານຕ່າງໆ ແລະ ສິ່ງອຳນວຍຄວາມສະດວກທີ່ໄດ້ກຳນົດໄວ້ຢ່າງສະເພາະເຈາະຈົງເຊິ່ງມີທ່າອ່ຽງທີ່ຈະສ້າງຜົນກະທົບ ແລະ ເປັນພາກສ່ວນໜຶ່ງຂອງຂະບວນການກຳນົດຄວາມສ່ຽງ ແລະ ຜົນກະທົບ, ລູກຄ້າຈະລະບຸສ່ວນບຸກຄົນ ຫຼື ກຸ່ມຄົນ ທີ່ອາດຈະໄດ້ຮັບຜົນກະທົບຈາກໂຄງການໂດຍກົງ ແລະ ຖືກກະທົບຕ່າງ ກັນ ຫຼື ບໍ່ເທົ່າກັນອັນເນື່ອງມາຈາກວ່າເຂົາເຈົ້າມີສະຖານະເປັນບຸກຄົນ ຫຼື ກຸ່ມຄົນທີ່ດ້ອຍໂອກາດ ຫຼື ບໍ່ສາມາດປົກປ້ອງຕົນເອງໄດ້. ໃນກໍລະນີທີ່ໄດ້ລະບຸວ່າສ່ວນບຸກຄົນ ຫຼື ກຸ່ມຄົນດັ່ງກ່າວເປັນກຸ່ມຄົນທີ່ດ້ອຍໂອກາດ ຫຼື ບໍ່ສາມາດປົກປ້ອງຕົນເອງໄດ້ [18], ລູກຄ້າຈະສະເໜີ ແລະ ຈັດຕັ້ງປະຕິບັດມາດຕະການຕ່າງໆ ເພື່ອທີ່ວ່າຜົນກະທົບດ້ານລົບຈະບໍ່ກະທົບກຸ່ມຄົນດັ່ງກ່າວແບບບໍ່ເທົ່າກັນ ແລະ ເຂົາເຈົ້າຈະບໍ່ດ້ອຍກ່ວາກຸ່ມອື່ນໃນການໄດ້ຮັບການແບ່ງປັນຜົນປະໂຫຍດຕ່າງໆ ແລະ ໂອກາດຕ່າງໆ.

## ແຜນງານການຄຸ້ມຄອງ

13. ໂດຍປະຕິບັດໃຫ້ສອດຄ່ອງກັບນະໂຍບາຍ, ວັດຖຸປະສົງ, ແລະ ຫຼັກການຂອງລູກຄ້າທີ່ກຳນົດໄວ້, ລູກຄ້າຈະສ້າງບັນດາແຜນງານການຄຸ້ມຄອງ(ເມື່ອລວມເຂົ້າກັນທັງໝົດແລ້ວ) ຈະອະທິບາຍມາດຕະການ ແລະ ກິດຈະກຳຫຼຸດຜ່ອນ ແລະ ປັບປຸງຜົນການດຳເນີນງານ ພ້ອມທັງແກ້ໄຂຄວາມສ່ຽງ ແລະ ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມທີ່ຖືກລະບຸໄວ້ຂອງໂຄງການ.

14. ອີງໃສ່ລັກສະນະຕົວຈິງ ແລະ ຂະໜາດຂອງໂຄງການ, ແຜນງານເຫຼົ່ານີ້ ອາດຈະປະກອບດ້ວຍບັນດາລະບຽບມາດຕະຖານ, ວິທີການ, ແຜນ ແລະ ເອກະສານຕ່າງໆທີ່ກ່ຽວຂ້ອງ (ລວມທັງສັນຍາທາງກົດໝາຍຕ່າງໆ) ໂດຍໄດ້ຮັບການຄຸ້ມຄອງຢ່າງເປັນລະບົບ.[19] ແຜນງານອາດຈະນຳໃຊ້ໃນວົງກ້ວາງທົ່ວອົງການຈັດຕັ້ງຂອງລູກຄ້າ ເຊິ່ງລວມທັງຜູ້ຮັບເໝົາ ແລະ ຜູ້ສະໜອງຫຼັກທີ່ອົງການຈັດຕັ້ງຂອງລູກຄ້າມີອຳນາດໃນການຄວບຄຸມ ຫຼື ມີອິດທິພົນ ຫຼື ຕໍ່ກັບບັນດາເຂດສະໜາມຂອງໂຄງການ, ສິ່ງອຳນວຍຄວາມສະດວກ ຫຼື ກິດຈະກຳສະເພາະຕ່າງໆ. ລຳດັບຂັ້ນຂອງການຫຼຸດຜ່ອນຄວາມສ່ຽງ ແລະ ຜົນກະທົບທີ່ໄດ້ມີການກຳນົດໄວ້ນັ້ນຈະຕ້ອງຖືເອົາການຫຼີກເວັ້ນຜົນກະທົບເປັນບູລິມະສິດກ່ອນການຫຼຸດຜ່ອນຜົນກະທົບ; ໃນກໍລະນີຜົນກະທົບທີ່ຄົງຄ້າງ, ແມ່ນຕ້ອງມີການຊົດເຊີຍ/ສ້າງສົມດຸນ ຄືນຫາກມີຄວາມເປັນໄປໄດ້ທາງເຕັກນິກ[20] ແລະ ການເງິນ.[21]

15. ໃນກໍລະນີທີ່ບໍ່ສາມາດຫຼີກເວັ້ນຄວາມສ່ຽງ ແລະ ຜົນກະທົບທີ່ໄດ້ມີການກຳນົດໄວ້ນັ້ນ ລູກຄ້າຈະກຳນົດມາດຕະການຫຼຸດຜ່ອນແລະການດຳເນີນງານ, ພ້ອມທັງສ້າງກິດຈະກຳຕ່າງໆທີ່ສອດຄ່ອງ ເພື່ອຮັບປະກັນວ່າໂຄງການຈະດຳເນີນງານໂດຍປະຕິບັດຕາມລະບຽບກົດໝາຍກ່ຽວຂ້ອງ ແລະ ຕອບສະໜອງໄດ້ຕາມເງື່ອນໄຂຕ່າງໆໃນມາດຕະຖານການດຳເນີນງານທີ 1 ຫາ 8. ລະດັບຂອງລາຍລະອຽດ ແລະ ຄວາມສະຫຼັບຊັບຊ້ອນຂອງຊຸດແຜນງານການຄຸ້ມຄອງດັ່ງກ່າວບວກກັບບູລິມະສິດຂອງມາດຕະການ ແລະ ກິດຈະກຳຕ່າງໆທີ່ໄດ້ກຳນົດນັ້ນຈະສົມສ່ວນກັບລະດັບຄວາມສ່ຽງ ແລະ ຜົນກະທົບຂອງໂຄງການ, ພ້ອມທັງພິຈາລະນາລວມເອົາຜົນໄດ້ຮັບຈາກ ຂະບວນການມີສ່ວນຮ່ວມຂອງຊຸມຊົນທີ່ໄດ້ຮັບຜົນກະທົບຕາມຄວາມເໝາະສົມ.

16. ແຜນງານການຄຸ້ມຄອງຈະກຳນົດແຜນດຳເນີນງານທາງດ້ານສິ່ງແວດລ້ອມ ແລະ ສັງຄົມ[22] ທີ່ຈະກຳນົດ

18 ສະຖານະເປັນຄົນດ້ອຍໂອກາດ ແລະ ມີຄວາມບໍ່ສາມາດປົກປ້ອງຕົນເອງໄດ້ອາດຈະກຳນົດຕາມສະຖານະທາງດ້ານເຊື້ອຊາດ, ສີຜິວ, ເພດ, ພາສາ, ສາສະໜາ, ທັດສະນະດ້ານການ ເມືອງ ຫຼື ດ້ານອື່ນໆ, ຊົນຊາດ, ຊັບສິນ, ການເກີດ ຫຼື ສະຖານະທາງດ້ານອື່ນ. ລູກຄ້າຄວນຈະພິຈາລະນາປັດໄຈຕ່າງໆເຊັ່ນ: ບົດບາດຍິງ–ຊາຍ, ອາຍຸ, ຊົນເຜົ່າ, ວັດທະນະທຳ, ຄວາມຮູ້ ໜັງສື, ພະຍາດ, ຄວາມພິການທາງຮ່າງກາຍ ຫຼື ມັນສະໝອງ, ຄວາມທຸກຍາກ ຫຼື ຄວາມດ້ອຍໂອກາດທາງເສດຖະກິດ ແລະ ການເອື່ອຍອີງຕໍ່ຊັບພະຍາກອນທຳມະຊາດທີ່ເປັນເອກະລັກສະເພາະໃດໜຶ່ງ.

19 ຂໍ້ຕົກລົງທາງກົດໝາຍລະຫວ່າງລູກຄ້າ ແລະ ຝ່າຍທີສາມທີ່ກຳນົດກິດຈະກຳການຫຼຸດຜ່ອນຕໍ່ກັບຜົນກະທົບສະເພາະໃດໜຶ່ງປະກອບເປັນພາກສ່ວນໜຶ່ງຂອງແຜນງານ; ຕົວຢ່າງ ເຊັ່ນ: ໜ້າທີ່ຮັບຜິດຊອບໃນການດຳເນີນການຍົກຍ້າຍຈັດສັນທີ່ຄຸ້ມຄອງໂດຍລັດຖະບານທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງ.

20 ຄວາມເປັນໄປໄດ້ (ການວິພາກ) ທາງດ້ານເຕັກນິກແມ່ນອີງໃສ່ວ່າມາດຕະການ ແລະ ກິດຈະກຳທີ່ໄດ້ສະເໜີນັ້ນສາມາດຈັດຕັ້ງປະຕິບັດໄດ້ໂດຍທີ່ມີສີມືແຮງງານ, ອຸປະກອນ ແລະ ວັດສະດຸທີ່ຫາຊື້ໄດ້ ໂດຍພິຈາລະນາປັດໄຈທີ່ເກີດຂຶ້ນໃນທ້ອງຖິ່ນເຊັ່ນ ດິນຟ້າອາກາດ, ພູມສາດ, ປະຊາກອນ, ໂຄງລ່າງພື້ນຖານ, ການຮັກສາຄວາມປອດໄພ, ການຄຸ້ມຄອງບໍລິຫານ, ຄວາມສາມາດ, ແລະ ຄວາມໜ້າເຊື່ອຖືຂອງການດຳເນີນວຽກງານ.

21 ຄວາມເປັນໄປໄດ້ (ການວິພາກ) ທາງດ້ານການເງິນແມ່ນອີງໃສ່ການພິຈາລະນາທາງດ້ານທຸລະກິດລວມທັງຜົນກະທົບຂອງຕົ້ນທຶນທີ່ເພີ່ມຂຶ້ນສຳລັບການນຳໃຊ້ມາດຕະການ ແລະ ກິດຈະກຳຕ່າງໆໂດຍສົມທຽບກັບການລົງທຶນໃນໂຄງການ, ການບໍລິຫານ, ແລະ ຕົ້ນທຶນໃນການບຳລຸງຮັກສາ ແລະ ຕໍ່ກັບວ່າຕົ້ນທຶນທີ່ເພີ່ມຂຶ້ນນັ້ນໄດ້ເຮັດໃຫ້ລູກຄ້າເຫັນວ່າໂຄງການບໍ່ສາມາດດຳເນີນຕໍ່ໄປໄດ້ ຫຼື ບໍ່.

22 ແຜນດຳເນີນງານອາດຈະລວມເອົາແຜນດຳເນີນງານທາງດ້ານສິ່ງແວດລ້ອມແລະສັງຄົມໂດຍລວມທີ່ຈຳເປັນໃນການຈັດຕັ້ງປະຕິບັດຊຸດມາດຕະການຫຼຸດຜ່ອນ ຫຼື ແຜນດຳເນີນງານສະເພາະຫົວຂໍ້ເຊັ່ນ: ແຜນດຳເນີນງານວ່າດ້ວຍການຍົກຍ້າຍຈັດສັນ ຫຼື ແຜນດຳເນີນງານວ່າດ້ວຍຊີວະນາໆພັນ. ແຜນດຳເນີນງານອາດຈະເປັນແຜນທີ່ຖືກອອກແບບມາເພື່ອອັດຊ່ອງຫວ່າງທີ່ປະກົດໃນແຜນງານການຄຸ້ມຄອງເພື່ອຮັບປະກັນໃຫ້ມີຄວາມສອດຄ່ອງກັບມາດຕະຖານການດຳເນີນງານ ຫຼື ອາດຈະເປັນແຜນແຍກສະເພາະ ທີ່ກຳນົດລາຍລະອຽດຍຸດທະສາດໃນການຫຼຸດຜ່ອນ. ບາງຂະແໜງການເຂົ້າໃຈຄຳວ່າ "ແຜນດຳເນີນ ງານ" ແມ່ນແຜນຄຸ້ມຄອງ ຫຼື ແຜນພັດທະນາ. ໃນກໍລະນີດັ່ງກ່າວ ຕົວຢ່າງມີ ຫຼວງຫຼາຍ ແລະ ກວມເອົາ ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມທີ່ມີຫຼາກຫຼາຍປະເພດ.

ລາຍລະອຽດຜົນໄດ້ຮັບ ແລະ ການດຳເນີນງານຕ່າງໆ ເພື່ອແກ້ໄຂບັນຫາທີ່ໄດ້ຍົກໃຫ້ເຫັນໃນຂະບວນການກຳນົດຄວາມສ່ຽງ ແລະ ຜົນກະທົບ ໂດຍແບ່ງເປັນ ໄລຍະເວລາທີ່ສາມາດວັດແທກໄດ້ໃຫ້ໄດ້ຫຼາຍທີ່ສຸດເທົ່າທີ່ຈະເປັນໄປໄດ້ ແລະ ມີອົງປະກອບເຊັ່ນ ຕົວຊີ້ວັດການຈັດຕັ້ງປະຕິບັດ, ເປົ້າໝາຍ, ຫຼື ເງື່ອນໄຂສຳລັບການຍອມຮັບທີ່ສາມາດຕິດຕາມຄືນໄດ້ເປັນແຕ່ລະໄລຍະ ແລະ ມີການຄາດຄະເນຊັບພະຍາກອນ ແລະ ໜ້າທີ່ຮັບຜິດຊອບຕ່າງໆສຳລັບການຈັດຕັ້ງປະຕິບັດ. ໂດຍອີງຕາມຄວາມເໝາະສົມແຜນງານການຄຸ້ມຄອງດັ່ງກ່າວຈະຮັບຮູ້ ແລະ ລວມເອົາບົດບາດຂອງກິດຈະກຳຕ່າງໆ ແລະ ເຫດການຕ່າງໆທີ່ກ່ຽວຂ້ອງທີ່ຄວບຄຸມໂດຍຝ່າຍທີສາມເພື່ອແກ້ໄຂຄວາມສ່ຽງ ແລະ ຜົນກະທົບທີ່ກຳນົດໄວ້. ຍ້ອນຮັບຮູ້ວ່າໂຄງການມີລັກສະນະທີ່ສາມາດປ່ຽນແປງໄດ້ຕະຫຼອດເວລາ, ແຜນງານການຄຸ້ມຄອງຈະຕອບສະໜອງຕໍ່ການປ່ຽນແປງຕ່າງໆໃນແຕ່ ລະສະຖານະການ, ໃນເຫດສຸດວິໄສ ແລະ ຜົນໄດ້ຮັບຂອງການຕິດຕາມກວດກາ ແລະ ການທົບທວນ.

## ຄວາມສາມາດ ແລະ ສັກກະຍະພາບຂອງອົງການຈັດຕັ້ງ

17. ໂດຍການປະສານສົມທົບກັບຝ່າຍທີສາມຕາມຄວາມເໝາະສົມ ແລະ ສອດຄ່ອງ, ລູກຄ້າ ຈະສ້າງ, ຮັກສາ ແລະ ເສີມສ້າງຄວາມເຂັ້ມແຂງ ໃຫ້ໂຄງຮ່າງການຈັດຕັ້ງຕາມຄວາມຈຳເປັນໂດຍມີການກຳນົດລາຍລະອຽດຂອງບົດບາດ, ໜ້າທີ່ຮັບຜິດຊອບ ແລະ ສິດອຳນາດໃນການຈັດຕັ້ງປະຕິບັດລະບົບຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ. ລູກຄ້າຄວນມີການມອບໝາຍສາຍງານໜ້າທີ່ຮັບຜິດຊອບທີ່ຊັດເຈນໃຫ້ບຸກຄະລາກອນແຕ່ລະຄົນລວມທັງຜູ້ຕາງໜ້າຈາກຄະນະຜູ້ບໍລິຫານ. ພ້ອມດຽວກັນນັ້ນ, ກໍ່ຄວນມີການກຳນົດໜ້າທີ່ຮັບຜິດຊອບທາງດ້ານສິ່ງແວດລ້ອມ ແລະ ສັງຄົມຕົ້ນຕໍຕ່າງໆຢ່າງຊັດເຈນ ແລະ ເຜີຍແຜ່ໃຫ້ບຸກຄະລາກອນທີ່ກ່ຽວຂ້ອງໄດ້ຮັບຮູ້ທົ່ວທັງອົງການຈັດຕັ້ງຂອງລູກຄ້າ. ການນຳຂອງລູກຄ້າຄວນໃຫ້ການສະໜັບສະໜູນ, ສະໜອງຊັບພະຍາກອນມະນຸດ ແລະ ການເງິນຢ່າງພຽງພໍ ແລະ ຕໍ່ເນື່ອງ ເພື່ອໃຫ້ບັນລຸໄດ້ຜົນງານທາງດ້ານສິ່ງແວດລ້ອມ ແລະ ສັງຄົມທີ່ມີປະສິດທິຜົນ ແລະ ມີຄວາມຕໍ່ເນື່ອງ.

18. ບຸກຄະລາກອນພາຍໃນອົງການຈັດຕັ້ງຂອງລູກຄ້າທີ່ມີໜ້າທີ່ຮັບຜິດຊອບໂດຍກົງສຳລັບການດຳເນີນງານທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ຈະຕ້ອງມີຄວາມຮູ້, ທັກສະ ແລະ ປະສົບການທີ່ຈຳເປັນໃນການປະຕິບັດວຽກງານຂອງເຂົາເຈົ້າລວມທັງຄວາມຮູ້ຕໍ່ກັບເງື່ອນໄຂທາງດ້ານລະບຽບກົດໝາຍຂອງປະເທດເຈົ້າພາບ ແລະ ເງື່ອນໄຂຂອງມາດຕະຖານການດຳເນີນງານທີ 1 ຫາ 8 ທີ່ກ່ຽວຂ້ອງ. ບຸກຄະລາກອນທີ່ຮັບຜິດຊອບຍັງຕ້ອງມີຄວາມຮູ້, ທັກສະສີມື ແລະ ປະສົບການໃນການຈັດຕັ້ງປະຕິບັດມາດຕະການແລະກິດຈະກຳສະເພາະທີ່ຕ້ອງປະຕິບັດຕາມພາຍໃຕ້ລະບົບຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ, ແລະ ຕໍ່ກັບວິທີການຈຳເປັນໃນການປະຕິບັດວຽກງານໃນລັກສະນະທີ່ມີຄວາມສາມາດແລະມີປະສິດທິພາບ.

19. ຂະບວນການໃນການກຳນົດຄວາມສ່ຽງ ແລະ ຜົນກະທົບຈະປະກອບມີການປະເມີນຜົນ ແລະ ນຳສະເໜີຜົນໃນລັກສະນະທີ່ພຽງພໍ, ຖືກຕ້ອງ ແລະ ມີລັກສະນະພາວະວິໄສທີ່ກະກຽມໂດຍວິຊາການທີ່ມີຄວາມສາມາດ. ສຳລັບໂຄງການທີ່ມີທ່າອ່ຽງວ່າອາດສ້າງຜົນກະທົບທາງລົບຫຼາຍ ຫຼື ໃນກໍລະນີທີ່ມີບັນຫາທີ່ສະຫຼັບຊັບຊ້ອນມາກ່ຽວຂ້ອງ ຫຼາຍລູກຄ້າອາດຈະຈຳເປັນຕ້ອງໄດ້ຫາຜູ້ຊ່ຽວຊານຈາກພາຍນອກມາຊ່ວຍໃນຂະບວນການກຳນົດຄວາມສ່ຽງ ແລະ ຜົນກະທົບ.

## ການກຽມພ້ອມ ແລະ ຕອບໂຕ້ສຸກເສີນ

20. ໃນກໍລະນີທີ່ໂຄງການກ່ຽວຂ້ອງຢ່າງສະເພາະເຈາະຈົງກັບອົງປະກອບທາງກາຍະພາກ, ດ້ານຕ່າງໆ ແລະ ສິ່ງອຳນວຍຄວາມສະດວກຕ່າງໆທີ່ມີທ່າອ່ຽງຈະສ້າງຜົນກະທົບ, ລະບົບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມຈະສ້າງ ແລະ ຮັກສາລະບົບການກຽມພ້ອມ ແລະ ຕອບໂຕ້ ເຫດສຸກເສີນເພື່ອເຮັດໃຫ້ລູກຄ້າ – ໂດຍການປະສານສົມທົບກັນກັບຝ່າຍທີສາມທີ່ເຫັນວ່າເໝາະສົມ ແລະ ສອດຄ່ອງ – ມີຄວາມພ້ອມໃນການຕອບໂຕ້ສະຖານະການທີ່ເປັນອຸບັດຕິເຫດ ຫຼື ເປັນເຫດສຸກເສີນທີ່ກ່ຽວຂ້ອງກັບໂຄງການໃນລັກສະນະທີ່ເໝາະສົມເພື່ອສະກັດກັ້ນ ແລະ ຫຼຸດຜ່ອນໄພອັນຕະລາຍຕໍ່ຜູ້ຄົນ ແລະ/ຫຼື ສິ່ງແວດລ້ອມ. ການກະກຽມດັ່ງກ່າວຈະປະກອບມີການກຳນົດຂົງເຂດທີ່ອາດຈະເກີດອຸບັດຕິເຫດ ແລະ ເຫດການສຸກເສີນຂຶ້ນ, ຊຸມຊົນ ຫຼື ບຸກຄົນທີ່ອາດຈະໄດ້ຮັບຜົນກະທົບ, ຂັ້ນຕອນໃນການຕອບໂຕ້, ການສະໜອງອຸປະກອນ ແລະ ຊັບພະຍາກອນຕ່າງໆ, ການມອບໝາຍໜ້າທີ່ຮັບຜິດຊອບ, ການສື່ສານ, ລວມທັງຊຸມຊົນທີ່ ທີ່ໄດ້ຮັບຜົນກະທົບ ແລະ ມີການຝຶກອົບຮົມເປັນແຕ່ລະໄລຍະ ເພື່ອຮັບປະກັນການຕອບໂຕ້ທີ່ມີປະສິດທິຜົນ. ກິດຈະກຳການກຽມພ້ອມ ແລະ ຕອບໂຕ້ເຫດສຸກເສີນຈະຕ້ອງໄດ້ຮັບການທົບທວນຄືນ ແລະ ປັບປຸງດັດແກ້ເປັນແຕ່ລະໄລຍະຕາມຄວາມຈຳເປັນເພື່ອໃຫ້ສອດຄ່ອງ ກັບເງື່ອນໄຂທີ່ມີການປ່ຽນແປງ.

21. ຖ້າມີຄວາມສອດຄ່ອງ, ລູກຄ້າຍັງຈະຊ່ວຍເຫຼືອ ແລະ ປະສານສົມທົບກັບຊຸມຊົນທີ່ອາດຈະໄດ້ຮັບຜົນກະທົບ (ໃຫ້ອ້າງອີງຫາມາດຕະຖານການດຳເນີນງານທີ 4) ແລະ ອຳນາດການປົກຄອງທ້ອງຖິ່ນໃນການກຽມພ້ອມເພື່ອຕອບໂຕ້ເຫດສຸກເສີນຢ່າງມີປະສິດທິຜົນ ໂດຍສະເພາະໃນເວລາທີ່ການມີສ່ວນຮ່ວມ ແລະ ການຮ່ວມມືຂອງເຂົາເຈົ້ານັ້ນເປັນສິ່ງຈຳເປັນໃນການຮັບປະກັນໃຫ້ມີການຕອບໂຕ້ທີ່ມີປະສິດທິຜົນ. ຖ້າຫາກອຳນາດການປົກຄ້ອງທ້ອງຖິ່ນມີຄວາມສາມາດທີ່ຈຳກັດ ຫຼື ບໍ່ມີຄວາມສາມາດໃນການຕອບໂຕ້ຢ່າງມີປະສິດທິຜົນ ລູກຄ້າຈະຕ້ອງເຮັດບົດບາດທີ່ຫ້າວຫັນໃນການກຽມພ້ອມ ແລະ ຕອບໂຕ້ເຫດສຸກເສີນທີ່ກ່ຽວຂ້ອງກັບໂຄງການ. ລູກຄ້າຈະບັນທຶກກິດຈະກຳ, ຊັບພະຍາກອນ, ແລະ ໜ້າທີ່ຮັບຜິດຊອບຕໍ່ການກຽມພ້ອມ ແລະ ການຕອບໂຕ້ເຫດສຸກເສີນຂອງເຂົາເຈົ້າ ແລະ ຈະສະໜອງຂໍ້ມູນຂ່າວສານທີ່ແທດເໝາະໃຫ້ກັບຊຸມຊົນທີ່ມີທ່າອ່ຽງທີ່ຈະໄດ້ຮັບຜົນກະທົບ ແລະ ອົງກອນຂອງລັດຖະບານຕ່າງໆທີ່ກ່ຽວຂ້ອງ.

## ການຕິດຕາມກວດກາ ແລະ ການທົບທວນ

22. ລູກຄ້າຈະສ້າງຂັ້ນຕອນໃນການຕິດຕາມກວດກາ ແລະ ວັດແທກປະສິດທິຜົນຂອງແຜນງານການຄຸ້ມຄອງພ້ອມທັງຄວາມສອດຄ່ອງຕາມພັນທະໜ້າທີ່ ແລະ ເງື່ອນໄຂທາງກົດໝາຍ ຫຼື ຕາມຂໍ້ຜູກພັນທາງສັນຍາຕ່າງໆທີ່ກ່ຽວຂ້ອງ. ໃນກໍລະນີທີ່ລັດຖະບານ ຫຼື ຝ່າຍທີສາມອື່ນໆມີໜ້າທີ່ຮັບຜິດຊອບໃນການຄຸ້ມຄອງຄວາມສ່ຽງ ແລະ ຜົນກະທົບສະເພາະໃດໜຶ່ງ ແລະ ຕໍ່ກັບມາດຕະການໃນການຫຼຸດຜ່ອນທີ່ກ່ຽວຂ້ອງລູກຄ້າຈະປະສານສົມທົບໃນການສ້າງ ແລະ ຕິດຕາມກວດກາມາດຕະຖານໃນການຫຼຸດຜ່ອນເຫຼົ່ານັ້ນ. ໃນກໍລະນີທີ່ເຫັນວ່າເໝາະສົມລູກຄ້າຈະພິຈາລະນາໃຫ້ມີສ່ວນຮ່ວມຂອງຕົວແທນຊຸມຊົນທີ່ໄດ້ຮັບຜົນກະທົບເພື່ອໃຫ້ມີສ່ວນຮ່ວມໃນກິດຈະກຳການຕິດຕາມກວດກາ.[23] ແຜນງານການຕິດຕາມກວດກາຂອງລູກຄ້າຄວນຈະຕ້ອງໄດ້ຮັບການກວດສອບໂດຍຜູ້ທີ່ດຳລົງຕຳແໜ່ງໃນລະດັບທີ່ເຫັນວ່າເໝາະສົມໃນອົງການຈັດຕັ້ງ. ສຳລັບໂຄງການທີ່ມີຜົນກະທົບຫຼາຍລູກຄ້າຈະຕ້ອງຮັກສາຜູ້ຊ່ຽວຊານ ຈາກພາຍນອກເພື່ອຢືນຢັນຂໍ້ມູນຂອງການຕິດຕາມກວດກາຂອງເຂົາເຈົ້າ. ລະດັບຂອງການຕິດຕາມກວດກາຄວນສອດຄ່ອງກັບຄວາມສ່ຽງ ແລະ ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ແລະ ປະຕິບັດສອດຄ່ອງກັບເງື່ອນໄຂຕ່າງໆ.

23. ນອກຈາກການບັນທຶກຂໍ້ມູນຂ່າວສານເພື່ອຕິດຕາມຄືນຜົນການຈັດຕັ້ງປະຕິບັດ ແລະ ສ້າງມາດຕະການຄວບຄຸມການເຮັດວຽກທີ່ສອດຄ່ອງແລ້ວ ລູກຄ້າຄວນໃຊ້ກົນໄກທີ່ຫຼາກຫຼາຍເຊັ່ນການກວດກາ ແລະ ກວດສອບພາຍໃນ ຖ້າເຫັນວ່າສອດຄ່ອງ ເພື່ອຢືນຢັນການປະຕິບັດຕາມຂໍ້ກຳນົດ ແລະ ຢືນຢັນຄວາມຄືບໜ້າຕາມຜົນໄດ້ຮັບທີ່ຕ້ອງການ. ໂດຍປົກກະຕິແລ້ວ ການຕິດຕາມກວດກາລວມເອົາການບັນທຶກຂໍ້ມູນຂ່າວສານເພື່ອຕິດຕາມຄືນຜົນການຈັດຕັ້ງປະຕິບັດ ແລະ ສົມທຽບກັບຂໍ້ມູນດັ່ງກ່າວກັບມາດຕະຖານ ແລະ ເງື່ອນໄຂທີ່ໄດ້ ກຳນົດໄວ້ກ່ອນໜ້ານີ້ໃນແຜນງານການຄຸ້ມຄອງດັ່ງກ່າວ. ຄວນມີການດັດປັບການຕິດຕາມກວດກາຕາມປະສົບການການຈັດຕັ້ງປະຕິບັດ ແລະ ກິດຈະກຳທີ່ອຳນາດການປົກຄອງທີ່ເປັນຜູ້ອອກລະບຽບການຮຽກຮ້ອງໃຫ້ປະຕິບັດຕາມ. ລູກຄ້າຈະບັນທຶກຜົນການຕິດຕາມກວດກາ ແລະ ກຳນົດ ແລະ ສະທ້ອນການດຳເນີນການແກ້ໄຂ ແລະ ສະກັດກັ້ນບັນຫາທີ່ຈຳເປັນໃນແຜນງານ ແລະ ແຜນການຄຸ້ມຄອງທີ່ໄດ້ດັດປັບ. ໂດຍປະສານສົມທົບກັບຝ່າຍທີສາມທີ່ເຫັນວ່າເໝາະສົມແລະກ່ຽວຂ້ອງ ລູກຄ້າຈະຈັດຕັ້ງປະຕິບັດການແກ້ໄຂ ແລະ ການສະກັດກັ້ນບັນຫາ, ຕິດຕາມການແກ້ໄຂ ແລະ ສະກັດກັ້ນບັນຫາເຫຼົ່ານັ້ນໃນຮອບວຽນຂອງການຕິດຕາມກວດກາໃນຮອບຕໍ່ໄປເພື່ອຮັບປະກັນປະສິດທິຜົນ.

24. ການນຳຂັ້ນອາວຸໂສໃນອົງການຈັດຕັ້ງຂອງລູກຄ້າຈະໄດ້ຮັບບົດການປະເມີນຜົນງານກ່ຽວກັບປະສິດທິພາບຂອງລະບົບຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ເປັນແຕ່ລະໄລຍະໂດຍອີງໃສ່ການເກັບກຳ ແລະ ການວິເຄາະຂໍ້ມູນທີ່ເປັນລະບົບ. ຂອບເຂດ ແລະ ຄວາມຖີ່ຂອງການລາຍງານດັ່ງກ່າວຈະຂຶ້ນກັບລັກສະນະຕົວຈິງ ແລະ ຂອບເຂດຂອງກິດຈະກຳຕ່າງໆທີ່ໄດ້ກຳນົດ ແລະ ໄດ້ດຳເນີນໂດຍອີງຕາມລະບົບດັ່ງກ່າວ ແລະ ເງື່ອນໄຂອື່ນໆທີ່ກ່ຽວຂ້ອງຂອງລູກຄ້າ. ອີງໃສ່ຜົນໄດ້ຮັບຈາກບົດການປະເມີນຜົນງານເຫຼົ່ານີ້, ຄະນະຜູ້ບໍລິຫານຂັ້ນອາວຸໂສຈະສ້າງບາດກ້າວທີ່ຈຳເປັນ ແລະ ເໝາະສົມ ເພື່ອຮັບປະກັນວ່າຈະສາມາດບັນລຸໄດ້ຕາມຄວາມຕັ້ງໃຈທີ່ໄດ້ລະບຸໄວ້ໃນນະໂຍບາຍຂອງລູກຄ້າ ແລະ ຂະບວນການ, ວິທີການປະຕິບັດ ແລະ ແຜນການຕ່າງໆນັ້ນໄດ້ຮັບການຈັດຕັ້ງປະຕິບັດ ແລະ ເຫັນວ່າມີປະສິດທິຜົນ.

---

[23] ຕົວຢ່າງ: ການຕິດຕາມກວດການ້ຳແບບມີສ່ວນຮ່ວມ.

## ການມີສ່ວນຮ່ວມຂອງຜູ້ທີ່ກ່ຽວຂ້ອງ

25. ການມີສ່ວນຮ່ວມຂອງຜູ້ທີ່ກ່ຽວຂ້ອງແມ່ນພື້ນຖານຂອງການສ້າງສາຍພົວພັນທີ່ຮັດແໜ້ນ, ມີລັກສະນະສ້າງສັນ ແລະ ມີລັກສະນະທີ່ຕອບສະໜອງດີອັນຈຳເປັນສຳລັບການຄຸ້ມຄອງຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການຢ່າງມີຜົນສຳເລັດ.[24] ການມີສ່ວນຮ່ວມຂອງຜູ້ທີ່ກ່ຽວຂ້ອງແມ່ນເປັນຂະບວນການທີ່ປະຕິບັດຢ່າງຕໍ່ເນື່ອງ ແລະ ອາດຈະປະກອບມີອົງປະກອບເຫຼົ່ານີ້ ໃນລະດັບທີ່ແຕກຕ່າງກັນໄປຄື: ການວິເຄາະ ແລະ ການວາງແຜນພາກສ່ວນກ່ຽວຂ້ອງ, ການເປີດເຜີຍ ແລະ ເຜີຍແຜ່ຂໍ້ມູນຂ່າວສານ, ການປຶກສາຫາລື ແລະ ການມີສ່ວນຮ່ວມ, ກົນໄກການຮ້ອງທຸກ ແລະ ການລາຍງານຢ່າງຕໍ່ເນື່ອງໃຫ້ກັບຊຸມຊົນທີ່ໄດ້ຮັບຜົນກະທົບ. ລັກສະນະຕົວຈິງ, ຄວາມຖີ່ ແລະ ລະດັບຂອງການມີສ່ວນຮ່ວມຂອງຜູ້ທີ່ກ່ຽວຂ້ອງອາດຈະແຕກຕ່າງກັນໄປຫຼາຍໂດຍອີງໃສ່ລະດັບຄວາມສ່ຽງ ແລະ ຜົນກະທົບທາງລົບຂອງໂຄງການ ຕາມໄລຍະຂອງການພັດທະນາໂຄງການ.

### *ການວິເຄາະພາກສ່ວນກ່ຽວຂ້ອງ ແລະ ການວາງແຜນການມີສ່ວນຮ່ວມ*

26. ລູກຄ້າຄວນກຳນົດພາກສ່ວນກ່ຽວຂ້ອງທັງຫຼາຍທີ່ອາດຈະມີຄວາມສົນໃຈໃນການດຳເນີນງານຂອງເຂົາເຈົ້າ ແລະ ພິຈາລະນາວ່າຄວນມີວິທີການສື່ສານ ຂໍ້ມູນຂ່າວສານສຳລັບພາກສ່ວນພາຍນອກນັ້ນແນວໃດເພື່ອອຳນວຍຄວາມສະດວກໃນການສົນທະນາ ກັບພາກສ່ວນກ່ຽວຂ້ອງທັງໝົດ (ເບິ່ງວັກທີ 34 ດ້ານລຸ່ມນີ້). ໃນກໍລະນີທີ່ໂຄງການມີຄວາມກ່ຽວຂ້ອງໂດຍກົງກັບອົງປະກອບທາງກາຍະພາກ, ດ້ານຕ່າງໆ ແລະ ສິ່ງອຳນວຍຄວາມສະດວກຕ່າງໆທີ່ມີທ່າອ່ຽງຈະສ້າງຜົນກະທົບດ້ານລົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມຕໍ່ກັບຊຸມຊົນທີ່ໄດ້ຮັບຜົນກະທົບ, ລູກຄ້າຈະກຳນົດບັນດາຊຸມຊົນທີ່ໄດ້ຮັບຜົນກະທົບເຫຼົ່ານັ້ນ ແລະ ຈະຕ້ອງໄດ້ບັນລຸຕາມເງື່ອນໄຂທີ່ໄດ້ອະທິບາຍໄວ້ຂ້າງລຸ່ມນີ້.

27. ລູກຄ້າຈະພັດທະນາ ແລະ ຈັດຕັ້ງປະຕິບັດແຜນການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງທີ່ມີລະດັບແທດເໝາະກັບຄວາມສ່ຽງ ແລະ ຜົນກະທົບຂອງໂຄງການ ແລະ ແທດເໝາະກັບຂັ້ນຂອງການພັດທະນາພ້ອມທັງອອກແບບໃຫ້ແທດເໝາະຕາມຄຸນລັກສະນະ ແລະ ຜົນປະໂຫຍດຂອງຊຸມຊົນທີ່ໄດ້ຮັບຜົນກະທົບ. ໃນກໍລະນີທີ່ສອດຄ່ອງ, ແຜນການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ ຈະລວມເອົາບັນດາມາດຕະການຕ່າງໆເພື່ອຮັບປະກັນວ່າ ຄົນທີ່ດ້ອຍໂອກາດ ແລະ ບໍ່ສາມາດປົກປ້ອງຕົນເອງໄດ້ກໍ່ໄດ້ມີສ່ວນຮ່ວມຢ່າງມີປະສິດທິຜົນ. ໃນເວລາທີ່ຂະບວນການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງນັ້ນຂຶ້ນກັບຜູ້ຕາງໜ້າຂອງຊຸມຊົນເປັນຫຼັກ[25], ລູກຄ້າຈະຕ້ອງເຮັດທຸກວິທີທາງຕາມຄວາມເໝາະສົມເພື່ອຢືນຢັນວ່າພວກກ່ຽວນັ້ນຕົວຈິງແລ້ວແມ່ນເປັນກະບອກສຽງຂອງຊຸມຊົນທີ່ໄດ້ຮັບຜົນກະທົບຢ່າງແທ້ຈິງ ແລະ ສາມາດອາໄສໃຫ້ເຂົາເຈົ້າຊ່ວຍເຜີຍແຜ່ຜົນໄດ້ຮັບຂອງການປຶກສາຫາລືໃຫ້ຊຸມຊົນຂອງເຂົາເຈົ້າໄດ້ຮັບຮູ້ຢ່າງຊື່ສັດໄດ້.

28. ໃນກໍລະນີທີ່ບໍ່ຮູ້ທີ່ຕັ້ງຕົວຈິງຂອງໂຄງການແຕ່ຄາດການວ່າໂຄງການຈະສົ່ງຜົນກະທົບຫຼາຍຕໍ່ກັບຊຸມຊົນໃນທ້ອງຖິ່ນ ລູກຄ້າຈະຕ້ອງກະກຽມຂອບການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງເຊິ່ງເປັນພາກສ່ວນໜຶ່ງຂອງແຜນງານການຄຸ້ມຄອງຂອງລູກຄ້າທີ່ມີລາຍລະອຽດກ່ຽວກັບຫຼັກການໂດຍລວມ ແລະ ຍຸດທະສາດໃນການກຳນົດຊຸມຊົນທີ່ໄດ້ຮັບຜົນກະທົບ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ແລະ ແຜນສຳລັບຂະບວນການມີສ່ວນຮ່ວມທີ່ສອດຄ່ອງກັບມາດຕະຖານການດຳເນີນງານທີ່ຈະຈັດຕັ້ງປະຕິບັດຫຼັງຈາກທີ່ຮູ້ທີ່ຕັ້ງຂອງໂຄງການແລ້ວ.

### *ການເປີດເຜີຍຂໍ້ມູນຂ່າວສານ*

29. ການເປີດເຜີຍຂໍ້ມູນຂ່າວສານທີ່ກ່ຽວຂ້ອງຂອງໂຄງການຊ່ວຍໃຫ້ຊຸມຊົນທີ່ໄດ້ຮັບຜົນກະທົບ ແລະ ພາກສ່ວນກ່ຽວຂ້ອງອື່ນໆເຂົ້າໃຈຄວາມສ່ຽງ, ຜົນກະທົບ ແລະ ໂອກາດຕ່າງໆຂອງໂຄງການ. ລູກຄ້າຈະໃຫ້ຊຸມຊົນທີ່ໄດ້ຮັບຜົນກະທົບເຂົ້າເຖິງຂໍ້ມູນຂ່າວສານທີ່ກ່ຽວຂ້ອງ[26] ກ່ຽວກັບ: (i) ຈຸດປະສົງ, ລັກສະນະຕົວຈິງ ແລະ ຂະໜາດຂອງໂຄງການ; (ii) ກຳນົດເວລາຂອງກິດຈະກຳຂອງໂຄງການທີ່ໄດ້ສະເໜີ; (iii) ຄວາມສ່ຽງ ແລະ ທ່າແຮງຜົນກະທົບຕໍ່ກັບຊຸມຊົນດັ່ງກ່າວ ແລະ ມາດຕະການໃນການຫຼຸດຜ່ອນທີ່ກ່ຽວຂ້ອງ; (iv) ຂະບວນການມີສ່ວນຮ່ວມຂອງຜູ້ທີ່ມີສ່ວນກ່ຽວຂ້ອງທີ່ໄດ້ວາງແຜນໄວ້; ແລະ (v) ກົນໄກການຮ້ອງທຸກ.

### *ການປຶກສາຫາລື*

30. ໃນເວລາທີ່ຊຸມຊົນໄດ້ຮັບຜົນກະທົບຈະປະເຊີນກັບຄວາມສ່ຽງ ແລະ ຜົນກະທົບທາງລົບຈາກໂຄງການທີ່ໄດ້ກຳນົດໄວ້ນັ້ນ ລູກຄ້າຈະຕ້ອງດຳເນີນຂະບວນການຂໍຄຳປຶກສາໃນລັກສະນະທີ່ໃຫ້ໂອກາດຕໍ່ຊຸມຊົນທີ່ໄດ້ຮັບຜົນກະທົບໃນການສະແດງຄວາມຄິດເຫັນຂອງເຂົາເຈົ້າຕໍ່ກັບຄວາມສ່ຽງ, ຜົນກະທົບ ແລະ ມາດຕະການຫຼຸດຜ່ອນຂອງໂຄງການ ແລະ ເພື່ອໃຫ້ລູກຄ້າພິຈາລະນາ ແລະ ຕອບສະໜອງຕໍ່ຄຳຄິດຄຳເຫັນຂອງເຂົາເຈົ້າ. ລະດັບ ແລະ ເນື້ອໃນຂອງການມີສ່ວນຮ່ວມທີ່ຕ້ອງການໃນຂະບວນການປຶກສາຫາລືຄວນມີລະດັບທີ່ສົມເຫດສົມຜົນກັບຄວາມສ່ຽງ ແລະ ຜົນກະທົບທາງລົບຂອງໂຄງການ ແລະ ຄວາມກັງວົນຂອງຊຸມຊົນທີ່ໄດ້ຮັບຜົນກະທົບ. ການປຶກສາຫາລືທີ່ມີປະສິດທິຜົນແມ່ນຂະບວນການປຶກສາຫາລືສອງສົ້ນທີ່ຄວນຈະ: (i) ມີຂະບວນການກຳນົດຄວາມສ່ຽງ ແລະ ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ຕັ້ງແຕ່ຫົວທີ ແລະ ສືບຕໍ່ຢ່າງຕໍ່ເນື່ອງຕາມຄວາມສ່ຽງ ແລະ ຜົນກະທົບທີ່ເກີດຂຶ້ນ; (ii) ອີງໃສ່ການເປີດເຜີຍ ແລະ ເຜີຍແຜ່ຂໍ້ມູນຂ່າວສານທີ່ສອດຄ່ອງ, ໂປ່ງໃສ, ມີພາວະວິໄສ, ມີຄວາມໝາຍ ແລະ ເຂົ້າເຖິງໄດ້ງ່າຍດາຍທີ່ເປັນພາສາທ້ອງຖິ່ນ ແລະ ມີຮູບການອັນແທດເໝາະກັບວັດທະນະທຳທ້ອງຖິ່ນ ແລະ ລັກສະນະທີ່ຊຸມຊົນ ທີ່ໄດ້ຮັບຜົນກະທົບສາມາດເຂົ້າໃຈໄດ້ງ່າຍ; (iii) ສຸມໃສ່ການມີສ່ວນຮ່ວມທີ່ກວມເອົາທຸກຄົນ[27] ໃນກຸ່ມທີ່ໄດ້ຮັບຜົນກະທົບໂດຍກົງແທນທີ່ຈະເອົາແຕ່ຜູ້ທີ່ບໍ່ໄດ້ຮັບຜົນກະທົບໂດຍກົງ; (iv) ປາສະຈາກການບິດເບືອນ, ແຊກແຊງ, ບັງຄັບ ຫຼື ຂົ່ມຂູ່ຈາກພາຍນອກ; (v) ເອື້ອອຳນວຍໃຫ້ມີສ່ວນຮ່ວມແບບມີຄວາມໝາຍຕາມຄວາມສອດຄ່ອງ; ແລະ (vi) ມີການບັນທຶກ. ລູກຄ້າຈະອອກແບບຂະບວນ ການມີສ່ວນຮ່ວມໂດຍໃຊ້ພາສາທີ່ຊຸມຊົນໄດ້ຮັບຜົນກະທົບຕ້ອງການໃຊ້, ຕາມຂະບວນການຕັດສິນໃຈຂອງເຂົາເຈົ້າ ແລະ ຕາມຄວາມຈຳເປັນຂອງກຸ່ມທີ່ດ້ອຍໂອກາດ ແລະ ບໍ່ສາມາດປົກປ້ອງຕົນເອງໄດ້. ຖ້າຫາກລູກຄ້າໄດ້ດຳເນີນຂະບວນການດັ່ງກ່າວແລ້ວ ເຂົາເຈົ້າຕ້ອງສາມາດສະໜອງຫຼັກຖານທີ່ໄດ້ບັນທຶກການມີສ່ວນຮ່ວມດັ່ງກ່າວ.

### *ການປຶກສາຫາລື ແລະ ການມີສ່ວນຮ່ວມທີ່ມີຂໍ້ມູນຄົບຖ້ວນ*

31. ສຳລັບໂຄງການທີ່ມີທ່າອ່ຽງວ່າຈະເກີດຜົນກະທົບທາງລົບຫຼາຍຕໍ່ກັບຊຸມຊົນທີ່ໄດ້ຮັບຜົນກະທົບລູກຄ້າຈະຕ້ອງດຳເນີນຂະບວນການປຶກສາຫາລື ແລະ ມີສ່ວນຮ່ວມທີ່ມີຂໍ້ມູນຄົບຖ້ວນ (Informed Consultation and Participation ຫຼື ICP) ທີ່ຈະເສີມຂະຫຍາຍຕໍ່ຈາກບາດກ້າວຕ່າງໆທີ່ໄດ້ກຳນົດໄວ້ຂ້າງເທິງໃນພາກການປຶກສາຫາລື ແລະ ຈະສ້າງໃຫ້ເກີດມີການມີສ່ວນຮ່ວມທີ່ໄດ້ຮັບຂໍ້ມູນຄົບຖ້ວນຂອງຊຸມຊົນທີ່ໄດ້ຮັບຜົນກະທົບ. ICP ລວມເອົາ ການແລກປ່ຽນຄວາມຄິດເຫັນ ແລະ ຂໍ້ມູນຂ່າວສານແບບລົງເລິກ ແລະ ເປັນການປຶກສາຫາລືທີ່ມີການຈັດສັນ ແລະ ເນັ້ນຢໍ້າຄັກແນ່ ເຊິ່ງນຳໄປສູ່ຂະບວນການໆຕັດສິນໃຈທີ່ລູກຄ້າພິຈາລະນາຮັບເອົາຄວາມຄິດເຫັນຂອງຊຸມຊົນທີ່ໄດ້ຮັບຜົນກະທົບຕໍ່ກັບປະເດັນທີ່ສົ່ງຜົນກະທົບໂດຍກົງຕໍ່ເຂົາເຈົ້າ ເຊັ່ນ ມາດຕະການໃນການຫຼຸດຜ່ອນທີ່ໄດ້ສະເໜີໄວ້, ການແບ່ງປັນຜົນປະໂຫຍດ ແລະ ໂອກາດໃນການພັດທະນາ ແລະ ບັນຫາໃນການຈັດຕັ້ງປະຕິບັດ. ຂະບວນການໃນການປຶກສາຫາລືຄວນຈະ (i) ກວມເອົາຄຳຄິດເຫັນຂອງທັງຊາຍ ແລະ ຍິງ ຖ້າຈຳເປັນກໍໃຫ້ດຳເນີນໃນກອງປະຊຸມ ຫຼື ການມີສ່ວນຮ່ວມທີ່ແຍກທັງສອງເພດ, ແລະ (ii) ສະທ້ອນໃຫ້ເຫັນຂໍ້ກັງວົນ ແລະ ບູລິມະສິດຂອງທັງຜູ້ຊາຍ ແລະ ແມ່ຍິງຕໍ່ກັບຜົນກະທົບ, ກົນໄກການຫຼຸດຜ່ອນ ແລະ ຜົນປະໂຫຍດຕ່າງໆຕາມຄວາມເໝາະສົມ. ລູກຄ້າຈະບັນທຶກຂະບວນການດັ່ງກ່າວໂດຍສະເພາະແມ່ນມາດຕະການຕ່າງໆທີ່ໄດ້ດຳເນີນເພື່ອຫຼີກເວັ້ນ ແລະ ຫຼຸດຜ່ອນຄວາມສ່ຽງ ແລະ ຜົນກະທົບທາງລົບຕໍ່ກັບຊຸມຊົນທີ່ໄດ້ຮັບຜົນກະທົບ ແລະ ຈະແຈ້ງຂໍ້ມູນໃຫ້ຊຸມຊົນທີ່ໄດ້ຮັບຜົນກະທົບຮັບຮູ້ວ່າໄດ້ມີການພິຈາລະນາຂໍ້ກັງວົນຂອງເຂົາເຈົ້າແນວໃດແດ່.

### *ຊົນເຜົ່າພື້ນເມືອງ*

32. ສຳລັບໂຄງການທີ່ສົ່ງຜົນກະທົບທາງລົບຕໍ່ຊົນເຜົ່າພື້ນເມືອງລູກຄ້າຈຳຕ້ອງໄດ້ໃຫ້ເຂົາເຈົ້າມີສ່ວນຮ່ວມໃນຂະບວນການປຶກສາຫາລື ແລະ ມີສ່ວນຮ່ວມທີ່ມີຂໍ້ມູນຄົບຖ້ວນ (ICP) ແລະ ໃນບາງກໍລະນີລູກຄ້າຈຳຕ້ອງໄດ້ຮັບການເຫັນດີເຫັນພ້ອມດ້ວຍຄວາມສະໝັກໃຈໂດຍໄດ້ຮັບຂໍ້ມູນລ່ວງໜ້າ ແລະ ພຽງພໍຈາກເຂົາເຈົ້າເສຍກ່ອນ. ເງື່ອນໄຂກ່ຽວກັບຊົນເຜົ່າພື້ນເມືອງ ແລະ ນິຍາມຂອງເງື່ອນໄຂພິເສດທີ່ຕ້ອງໄດ້ມີການເຫັນດີເຫັນພ້ອມແມ່ນໄດ້ອະທິບາຍຢູ່ໃນມາດຕະຖານການດຳເນີນງານທີ 7.

---

24 ມາດຕະຖານການດຳເນີນງານທີ 2 ມີລາຍລະອຽດຂອງເງື່ອນໄຂກ່ຽວກັບການມີສ່ວນຮ່ວມຂອງຜູ້ອອກແຮງງານ ແລະ ຂັ້ນຕອນຂອງກົນໄກການຮ້ອງທຸກຕ່າງໆທີ່ກ່ຽວຂ້ອງ.

25 ຕົວຢ່າງ: ຜູ້ນຳຊຸມຊົນ ແລະ ຜູ້ນຳທາງສາສະໜາ, ຜູ້ຕາງໜ້າອຳນາດການປົກຄອງທ້ອງຖິ່ນ, ຜູ້ຕາງໜ້າອົງການຈັດຕັ້ງທາງສັງຄົມ, ນັກການເມືອງ, ຄູສອນ, ແລະ/ຫຼື ຜູ້ອື່ນທີ່ເປັນຜູ້ ຕາງໜ້າຂອງກຸ່ມພາກສ່ວນກ່ຽວຂ້ອງທີ່ໄດ້ຮັບຜົນກະທົບກຸ່ມໜຶ່ງ ຫຼື ຫຼາຍກຸ່ມ.

26 ໂດຍຂຶ້ນກັບຂະໜາດຂອງໂຄງການ ແລະ ລະດັບຄວາມສ່ຽງ ແລະ ຜົນກະທົບເອກະສານຕ່າງໆທີ່ກ່ຽວຂ້ອງອາດຈະກວມເອົາບົດປະເມີນຜົນທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ແລະ ແຜນຈັດຕັ້ງປະຕິບັດແບບຄົບຊຸດ (ເຊັ່ນ: ແຜນການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ, ແຜນຈັດຕັ້ງປະຕິບັດການຍົກຍ້າຍຈັດສັນ, ແຜນຈັດຕັ້ງປະຕິບັດຊີວະນາໆພັນ, ແຜນການຄຸ້ມຄອງວັດຖຸທີ່ເປັນອັນຕະລາຍ, ແຜນການກຽມພ້ອມ ແລະ ຕອບໂຕ້ເຫດສຸກເສີນ, ແຜນສຸຂະພາບ ແລະ ຄວາມປອດໄພຂອງຊຸມຊົນ, ແຜນຟື້ນຟູລະບົບນິເວດ, ແລະ ແຜນພັດທະນາຊົນເຜົ່າພື້ນເມືອງ ແລະ ອື່ນ) ຈົນເຖິງບົດສະຫຼຸບທີ່ເຂົ້າໃຈໄດ້ງ່າຍດາຍຂອງບັນຫາ ແລະ ຄຳໝາຍໝັ້ນຕົ້ນຕໍຕ່າງໆ. ເອກະສານເຫຼົ່ານີ້ອາດຈະກວມເອົານະໂຍບາຍທາງສິ່ງແວດລ້ອມ ແລະ ສັງຄົມຂອງລູກຄ້າ ແລະ ມາດຕະການ ແລະ ການດຳເນີນງານເພີ່ມເຕີມຕ່າງໆທີ່ເປັນຜົນມາຈາກການປະເມີນຜົນເອກະລາດທີ່ຜູ້ໃຫ້ທຶນເປັນຜູ້ດຳເນີນເອງ.

27 ເຊັ່ນ: ຜູ້ຊາຍ, ແມ່ຍິງ, ຜູ້ສູງອາຍຸ, ໄວໜຸ່ມ, ຄົນທີ່ຖືກຍົກຍ້າຍຈັດສັນ ແລະ ບຸກຄົນ ຫຼື ກຸ່ມຄົນທີ່ບໍ່ສາມາດປົກປ້ອງຕົນເອງໄດ້ ຫຼື ດ້ອຍໂອກາດ.

***ໜ້າທີ່ຮັບຜິດຊອບຂອງພາກສ່ວນເອກະຊົນພາຍໃຕ້ຂະບວນການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງທີ່ລັດຖະບານເປັນເຈົ້າການດຳເນີນ***

33. ໃນກໍລະນີທີ່ຂະບວນການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງແມ່ນໜ້າທີ່ຮັບຜິດຊອບຂອງລັດຖະບານປະເທດເຈົ້າພາບໃນການເປັນຜູ້ດຳເນີນ, ລູກຄ້າຈະປະສານສົມທົບກັບອົງການຂອງລັດທີ່ກ່ຽວຂ້ອງຕາມລະດັບທີ່ອົງການຂອງລັດດັ່ງກ່າວໄດ້ໄດ້ອະນຸຍາດເພື່ອບັນລຸໃຫ້ໄດ້ຕາມຜົນໄດ້ຮັບທີ່ສອດຄ່ອງກັບຈຸດປະສົງຂອງມາດຕະຖານການດຳເນີນງານດັ່ງກ່າວນີ້. ນອກຈາກນີ້, ໃນກໍລະນີທີ່ຄວາມສາມາດຂອງລັດຖະບານຍັງມີຄວາມຈຳກັດ, ລູກຄ້າຈະເຮັດບົດບາດຫຼັກໃນລະຫວ່າງການວາງແຜນ, ການຈັດຕັ້ງປະຕິບັດ, ແລະ ການຕິດຕາມກວດກາການມີສ່ວນຮ່ວມຂອງຂອງພາກສ່ວນກ່ຽວຂ້ອງ ແລະ ໃນກໍລະນີທີ່ເໝາະສົມ ໃຫ້ກຳນົດກິດຈະກຳເພີ່ມເຕີມຕ່າງໆ.

## ການສື່ສານຂໍ້ມູນຂ່າວສານພາຍນອກ ແລະ ກົນໄກການຮ້ອງທຸກ

***ການສື່ສານຂໍ້ມູນຂ່າວສານພາຍນອກ***

34. ລູກຄ້າຈະຈັດຕັ້ງປະຕິບັດ ແລະ ຮັກສາຂັ້ນຕອນສຳລັບການສື່ສານຂໍ້ມູນຂ່າວສານພາຍນອກທີ່ກວມເອົາວິທີການໃນການ (i) ຮັບເອົາ ແລະ ບັນທຶກການສື່ສານຂໍ້ມູນຂ່າວສານພາຍນອກຈາກສັງຄົມ; (ii) ຄັດເລືອກ ແລະ ປະເມີນບັນຫາທີ່ໄດ້ຍົກຂຶ້ນ ແລະ ກຳນົດວິທີການແກ້ໄຂ; (iii) ສະໜອງ, ຕິດຕາມ ແລະ ບັນທຶກການຕອບໂຕ້ຕ່າງໆ ຖ້າມີ; ແລະ (iv) ດັດປັບແຜນງານການຄຸ້ມຄອງຕາມຄວາມເໝາະສົມ. ນອກຈາກນີ້ແລ້ວ ຊຸກຍູ້ໃຫ້ລູກຄ້າເຜີຍແຜ່ເປີດກ້ວາງບົດລາຍງານຕໍ່ກັບຄວາມຍືນຍົງທາງດ້ານສິ່ງແວດລ້ອມ ແລະ ສັງຄົມແຕ່ລະໄລຍະ.

***ກົນໄກການຮ້ອງທຸກສຳລັບຊຸມຊົນທີ່ໄດ້ຮັບຜົນກະທົບ***

35. ໃນກໍລະນີທີ່ມີຊຸມຊົນທີ່ໄດ້ຮັບຜົນກະທົບລູກຄ້າຈະຕ້ອງສ້າງກົນໄກການຮ້ອງທຸກເພື່ອຮັບເອົາ ແລະ ອຳນວຍຄວາມສະດວກໃຫ້ແກ່ການແກ້ໄຂ ຂໍ້ກັງວົນຂອງຊຸມຊົນທີ່ໄດ້ຮັບຜົນກະທົບ ແລະ ຄຳຮ້ອງທຸກກ່ຽວກັບການຈັດຕັ້ງປະຕິບັດວຽກງານທາງດ້ານສິ່ງແວດລ້ອມ ແລະ ສັງຄົມ. ລະດັບຂອງກົນໄກການຮ້ອງທຸກຄວນແທດເໝາະກັບຄວາມສ່ຽງ ແລະ ຜົນກະທົບທາງລົບຂອງໂຄງການ ແລະ ຮອງຮັບໃຫ້ຊຸມຊົນທີ່ໄດ້ຮັບຜົນກະທົບເປັນຜູ້ນຳໃຊ້ຕົ້ນຕໍ. ກົນໄກດັ່ງກ່າວຄວນແກ້ໄຂຂໍ້ກັງວົນໃຫ້ໄວໂດຍການນຳໃຊ້ຂະບວນການປຶກສາຫາລືທີ່ເຂົ້າໃຈໄດ້ດີ ແລະ ໂປ່ງໃສເຊິ່ງເປັນຂະບວນການທີ່ມີຄວາມເໝາະສົມທາງດ້ານວັດທະນະທຳ ແລະ ສາມາດເຂົ້າເຖິງໄດ້ເມື່ອຕ້ອງການ ແລະ ບໍ່ມີຄ່າໃຊ້ຈ່າຍ ແລະ ປາສະຈາກການແກ້ແຄ້ນ/ເອົາຄືນຕໍ່ກັບ ຝ່າຍທີ່ຍົກບັນຫາ ຫຼື ຂໍ້ກັງວົນດັ່ງກ່າວຂຶ້ນມາ. ລູກຄ້າຈະແຈ້ງໃຫ້ຊຸມຊົນທີ່ໄດ້ຮັບຜົນກະທົບຮັບຮູ້ຂໍ້ມູນກ່ຽວກັບກົນໄກດັ່ງກ່າວໃນລະຫວ່າງການດຳເນີນຂະບວນການມີສ່ວນຮ່ວມກັບຜູ້ທີ່ມີສ່ວນກ່ຽວຂ້ອງ.

## ການລາຍງານແບບຕໍ່ເນື່ອງໃຫ້ກັບຊຸມຊົນທີ່ໄດ້ຮັບຜົນກະທົບ

36. ລູກຄ້າຈະສະໜອງບົດລາຍງານເປັນແຕ່ລະໄລຍະໃຫ້ຊຸມຊົນທີ່ໄດ້ຮັບຜົນກະທົບເພື່ອອະທິບາຍເຖິງຄວາມຄືບໜ້າກ່ຽວກັບການປະຕິບັດຕາມແຜນດຳເນີນງານຂອງໂຄງການຕໍ່ກັບບັນຫາທີ່ຍັງມີຄວາມສ່ຽງ ຫຼື ສ້າງຜົນກະທົບໃຫ້ເຂົາເຈົ້າພ້ອມທັງບັນຫາອື່ນທີ່ຂະບວນການປຶກສາຫາລື ຫຼື ກົນໄກແກ້ໄຂຄຳຮ້ອງທຸກໄດ້ກຳນົດໄວ້ວ່າເປັນຂໍ້ກັງວົນຂອງຊຸມຊົນເຫຼົ່ານັ້ນ. ຖ້າຫາກແຜນງານຄຸ້ມຄອງຫາກພາໃຫ້ເກີດມີການປ່ຽນແປງ ຫຼື ເພີ່ມເຕີມມາດຕະການຂອງການຫຼຸດຜ່ອນ ຫຼື ການຈັດຕັ້ງປະຕິບັດທີ່ໄດ້ອະທິບາຍໄວ້ໃນແຜນດຳເນີນງານຂອງໂຄງການຕໍ່ກັບບັນຫາທີ່ຊຸມຊົນທີ່ໄດ້ຮັບຜົນກະທົບມີຄວາມເປັນກັງວົນ, ການປ່ຽນແປງເຫຼົ່ານັ້ນຈະຕ້ອງໄດ້ມີການສື່ສານໃຫ້ຊຸມຊົນທີ່ໄດ້ຮັບຜົນກະທົບຮັບຮູ້ນຳ. ຄວາມຖີ່ຂອງການສ້າງບົດລາຍງານຈະຕ້ອງໃຫ້ສົມສັດສ່ວນກັບຂໍ້ວິຕົກກັງວົນຂອງຊຸມຊົນທີ່ໄດ້ຮັບຜົນກະທົບແຕ່ບໍ່ໃຫ້ໜ້ອຍກ່ວາປີລະຄັ້ງ.



ມາດຕະຖານການດຳເນີນງານທີ 2

# ແຮງງານ ແລະ ສະພາບເງື່ອນໄຂຂອງການເຮັດວຽກ

## ພາກສະເໜີ

1. ມາດຕະຖານການດຳເນີນງານທີ 2 ຮັບຮູ້ຄວາມສຳຄັນວ່າການເຕີບໂຕຂອງເສດຖະກິດໂດຍຜ່ານການສ້າງວຽກເຮັດງານທຳ ແລະ ການສ້າງລາຍຮັບໃຫ້ຜູ້ອອກແຮງງານຕ້ອງພັດທະນາຄຽງຄູ່ກັນໄປກັບການປົກປ້ອງສິດທິພື້ນຖານ[1] ຂອງບັນດາຜູ້ອອກແຮງງານເຫຼົ່ານັ້ນ. ບໍ່ວ່າຈະເປັນທຸລະກິດປະເພດໃດ ກຳລັງແຮງງານແມ່ນຊັບສິນອັນມີຄ່າ ແລະ ສາຍພົວພັນທີ່ດີລະຫວ່າງຜູ້ອອກແຮງງານ ແລະ ຜູ້ບໍລິຫານແມ່ນອົງປະກອບອັນສຳຄັນສຳລັບຄວາມຍືນຍົງຂອງບໍລິສັດ. ຖ້າບົກຜ່ອງທີ່ຈະສ້າງ ແລະ ສົ່ງເສີມສາຍພົວພັນທີ່ດີລະຫວ່າງຜູ້ອອກແຮງງານ ແລະ ຜູ້ບໍລິຫານ ສິ່ງດັ່ງກ່າວສາມາດສົ່ງຜົນກະທົບທາງລົບຕໍ່ແນວຄິດຢຶດໝັ້ນໃນການເຮັດວຽກຂອງຜູ້ອອກແຮງງານ ແລະ ຮັກສາຜູ້ອອກແຮງງານໃຫ້ເຮັດວຽກໄດ້ ແລະ ສາມາດກາຍເປັນໄພອັນຕະລາຍຕໍ່ກັບໂຄງການໄດ້.ໃນທາງກົງກັນຂ້າມ, ຖ້າມີສາຍພົວພັນລະຫວ່າງຜູ້ອອກແຮງງານ ແລະ ຜູ້ບໍລິຫານທີ່ດີ ແລະ ຖ້າມີການປະຕິບັດຕໍ່ຜູ້ອອກແຮງງານຢ່າງຍຸດຕິທຳ ແລະ ສະໜອງສະພາບເງື່ອນໄຂໃນການເຮັດວຽກທີ່ຮັບປະກັນຄວາມປອດໄພ ແລະ ສຸຂະພາບຂອງຜູ້ອອກແຮງງານລູກຄ້າກໍອາດຈະໄດ້ຜົນປະໂຫຍດທີ່ເປັນຮູບປະທຳເຊັ່ນ: ການເພີ່ມພູນປະສິດ ຕິພາບ ແລະ ຜະລິດຕະພາບຂອງການເຮັດວຽກຂອງເຂົາເຈົ້າ.

2. ພາກສ່ວນໜຶ່ງຂອງເງື່ອນໄຂທີ່ໄດ້ກຳນົດໃນມາດຕະຖານການດຳເນີນງານນີ້ ສ່ວນໜຶ່ງແມ່ນໄດ້ອີງໃສ່ຂໍ້ແນະນຳຂອງບັນດາສົນທິສັນຍາ ແລະ ເຄື່ອງມືສາກົນຫຼາຍຢ່າງ ລວມທັງຂອງອົງການແຮງງານສາກົນ (ILO) ແລະ ອົງການສະຫະປະຊາຊາດ (UN).[2]

[1] ຕາມຂໍ້ແນະນຳໃນສົນທິສັນຍາຕ່າງໆທີ່ໄດ້ຂຽນໄວ້ໃນຂໍ້ມູນອ້າງອີງທ້າຍໜ້າເຈ້ຍ (footnote) ທີ 30.

## ວັດຖຸປະສົງ

- ເພື່ອສົ່ງເສີມການປະຕິບັດທີ່ຍຸດຕິທຳ, ບໍ່ຈຳແນກ ແລະ ໂອກາດທີ່ສະເໝີພາບຂອງຜູ້ອອກແຮງງານ.
- ເພື່ອສ້າງ, ຮັກສາ, ແລະ ປັບປຸງສາຍພົວພັນລະຫວ່າງຜູ້ອອກແຮງງານ ແລະ ຜູ້ບໍລິຫານ.
- ເພື່ອສົ່ງເສີມຄວາມສອດຄ່ອງຕໍ່ກັບກົດໝາຍການວ່າຈ້າງ ແລະ ແຮງງານຂອງປະເທດ.
- ເພື່ອປົກປ້ອງຜູ້ອອກແຮງງານ ລວມທັງຜູ້ອອກແຮງງານປະເພດທີ່ບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ເຊັ່ນເດັກນ້ອຍ, ແຮງງານເຄື່ອນຍ້າຍ,ແຮງງານທີ່ຖືກຈ້າງໂດຍຝ່າຍທີສາມ, ແລະ ແຮງງານທີ່ເຮັດວຽກໃນຕ່ອງໂສ້ການສະໜອງໃດໜຶ່ງຂອງລູກຄ້າ.
- ເພື່ອສົ່ງເສີມສະພາບເງື່ອນໄຂການເຮັດວຽກທີ່ຮັບປະກັນຄວາມປອດໄພ ແລະ ສຸຂະພາບຂອງຜູ້ອອກແຮງງານ ແລະ ສົ່ງເສີມການຮັກສາສຸຂະພາບຂອງຜູ້ອອກແຮງງານ.
- ເພື່ອຫຼີກເວັ້ນການນຳໃຊ້ແຮງງານທີ່ຖືກບັງຄັບ

[2] ສົນທິສັນຍາເຫຼົ່ານີ້ມີຄື:
- ສົນທິສັນຍາ ILO ເລກທີ 87 ວ່າດ້ວຍເສລີພາບໃນການສ້າງຕັ້ງກຳມະບານ ແລະ ການປົກປ້ອງສິດໃນການສ້າງຕັ້ງກຳມະບານ
- ສົນທິສັນຍາ ILO ເລກທີ 98 ວ່າດ້ວຍສິດທິໃນການຈັດຕັ້ງ ແລະ ການເຈລະຈາຕໍ່ລອງລວມໝູ່
- ສົນທິສັນຍາ ILO ເລກທີ 29 ວ່າດ້ວຍການບັງຄັບໃຫ້ອອກແຮງງານ
- ສົນທິສັນຍາ ILO ເລກທີ 105 ວ່າດ້ວຍການລົບລ້າງການບັງຄັບໃຫ້ອອກແຮງງານ
- ສົນທິສັນຍາ ILO ເລກທີ 138 ວ່າດ້ວຍອາຍຸຕ່ຳສຸດໃນການເຮັດວຽກ
- ສົນທິສັນຍາ ILO ເລກທີ 182 ວ່າດ້ວຍຮູບແບບທີ່ຮ້າຍແຮງທີ່ສຸດຂອງການນຳໃຊ້ແຮງງານເດັກ
- ສົນທິສັນຍາ ILO ເລກທີ 100 ວ່າດ້ວຍຄ່າແຮງງານທີ່ສະເໝີພາບ
- ສົນທິສັນຍາ ILO ເລກທີ 111 ວ່າດ້ວຍການຈຳແນກ (ການຈ້າງງານ ແລະ ການປະກອບອາຊີບ)
- ສົນທິສັນຍາ UN ວ່າດ້ວຍສິດທິຂອງເດັກ, ມາດຕາ 32.1
- ສົນທິສັນຍາ UN ວ່າດ້ວຍການປົກປ້ອງສິດທິຂອງແຮງງານເຄື່ອນຍ້າຍ ແລະ ສະມາຊິກໃນຄອບຄົວຂອງເຂົາເຈົ້າ

## ຂອບເຂດການນຳໃຊ້

3. ຄວາມສາມາດໃນການນຳໃຊ້ໄດ້ຂອງມາດຕະຖານການດຳເນີນງານດັ່ງກ່າວນີ້ແມ່ນໄດ້ຖືກສ້າງຂຶ້ນໃນລະຫວ່າງຂະບວນການກຳນົດຄວາມສ່ຽງ ແລະ ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ. ການຈັດຕັ້ງປະຕິບັດການດຳເນີນການຕ່າງໆທີ່ຈຳເປັນເພື່ອໃຫ້ບັນລຸຕາມເງື່ອນໄຂຂອງມາດຕະຖານການດຳເນີນງານດັ່ງກ່າວນີ້ແມ່ນໄດ້ຮັບການຄຸ້ມຄອງໂດຍຜ່ານລະບົບຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ, ເຊິ່ງອົງປະກອບຂອງລະບົບດັ່ງກ່າວໄດ້ຖືກກຳນົດໄວ້ໃນມາດຕະຖານການດຳເນີນງານທີ 1.

4. ຂອບເຂດການນຳໃຊ້ມາດຕະຖານການຈັດຕັ້ງປະຕິບັດນີ້ແມ່ນຂຶ້ນກັບປະເພດຂອງສາຍພົວພັນການວ່າຈ້າງລະຫວ່າງລູກຄ້າ ແລະ ຜູ້ອອກແຮງງານ. ມາດຕະຖານນີ້ນຳໃຊ້ກັບຜູ້ອອກແຮງງານທີ່ລູກຄ້າເປັນຜູ້ວ່າຈ້າງໂດຍກົງ (ຜູ້ອອກແຮງງານໂດຍກົງ), ຜູ້ອອກແຮງງານທີ່ຝ່າຍທີສາມເປັນຜູ້ວ່າຈ້າງເພື່ອເຮັດວຽກທີ່ກ່ຽວຂ້ອງກັບຂະບວນການທຸລະກິດທີ່ເປັນແກນຫຼັກ[3] ຂອງໂຄງການເຊິ່ງເປັນໄລຍະເວລາທີ່ຍາວນານພໍສົມຄວນ (ຜູ້ອອກແຮງງານສັນຍາຈ້າງ) ກໍຄືຜູ້ອອກແຮງງານທີ່ຖືກວ່າຈ້າງໂດຍຜູ້ສະໜອງຫຼັກຂອງລູກຄ້າ (ຜູ້ອອກແຮງງານໃນຕ່ອງໂສ້ການສະໜອງ).[4]

### *ຜູ້ອອກແຮງງານໂດຍກົງ*

5. ສຳລັບຜູ້ອອກແຮງງານໂດຍກົງ, ລູກຄ້າຈະນຳໃຊ້ເງື່ອນໄຂຂອງວັກທີ 8-23 ຂອງມາດຕະຖານການດຳເນີນງານນີ້.

### *ຜູ້ອອກແຮງງານສັນຍາຈ້າງ*

6. ສຳລັບຜູ້ອອກແຮງງານສັນຍາຈ້າງ, ລູກຄ້າຈະນຳໃຊ້ເງື່ອນໄຂຂອງວັກທີ 23-26 ຂອງມາດຕະຖານການດຳເນີນງານນີ້.

### *ຜູ້ອອກແຮງງານໃນຕ່ອງໂສ້ການສະໜອງ*

7. ສຳລັບຜູ້ອອກແຮງງານໃນຕ່ອງໂສ້ການສະໜອງ, ລູກຄ້າຈະນຳໃຊ້ເງື່ອນໄຂຂອງວັກທີ 27-29 ຂອງມາດຕະຖານການດຳເນີນງານນີ້.

## ເງື່ອນໄຂ

## ສະພາບເງື່ອນໄຂການເຮັດວຽກ ແລະ ການຄຸ້ມຄອງສາຍພົວພັນກັບຜູ້ອອກແຮງງານ

### *ນະໂຍບາຍ ແລະ ລະບຽບຂັ້ນຕອນທາງດ້ານຊັບພະຍາກອນມະນຸດ*

8. ລູກຄ້າຈະດັດປັບ ແລະ ຈັດຕັ້ງປະຕິບັດນະໂຍບາຍ ແລະ ລະບຽບຂັ້ນຕອນຕ່າງໆດ້ານຊັບພະຍາກອນມະນຸດທີ່ແທດເໝາະກັບຂະໜາດຂອງລູກຄ້າ ແລະ ກຳລັງແຮງງານ ເຊິ່ງກຳນົດວິທີການໃນການຄຸ້ມຄອງຜູ້ອອກແຮງງານທີ່ສອດຄ່ອງກັບເງື່ອນໄຂຂອງມາດຕະຖານການດຳເນີນງານດັ່ງກ່າວ ແລະ ສອດຄ່ອງກັບກົດໝາຍຂອງປະເທດ.

9 . ລູກຄ້າຈະສະໜອງເອກະສານຂໍ້ມູນທີ່ຊັດເຈນ ແລະ ສາມາດເຂົ້າໃຈໄດ້ໃຫ້ຜູ້ອອກແຮງງານໄດ້ຮັບຮູ້ກ່ຽວກັບສິດທິຂອງເຂົາເຈົ້າພາຍໃຕ້ ກົດໝາຍແຮງງານ ແລະ ການຈ້າງງານຂອງປະເທດ ແລະ ສັນຍາລວມໝູ່ອື່ນໆທີ່ກ່ຽວຂ້ອງ ລວມທັງສິດທິຂອງເຂົາເຈົ້າທີ່ກ່ຽວຂ້ອງກັບຈຳນວນຊົ່ວໂມງໃນການເຮັດວຽກ, ຄ່າແຮງງານ, ຄ່າລ່ວງເວລາ, ຄ່າຕອບແທນ, ແລະ ອຸດໜູນຕ່າງໆໃນເວລາທີ່ເລີ່ມສ້າງສາຍພົວພັນການ ເຮັດວຽກ ແລະ ໃນເວລາທີ່ມີການປ່ຽນແປງອັນສຳຄັນຕ່າງໆເກີດຂຶ້ນ.

### *ສະພາບເງື່ອນໄຂໃນການເຮັດວຽກ ແລະ ເງື່ອນໄຂຂອງການຈ້າງງານ*

10. ໃນກໍລະນີທີ່ລູກຄ້າແມ່ນຝ່າຍໃດໜຶ່ງທີ່ເຂົ້າຮ່ວມສັນຍາການເຈລະຈາລວມໝູ່ກັບທາງກຳມະບານຂອງຜູ້ອອກແຮງງານ, ສັນຍາດັ່ງກ່າວຈະຕ້ອງໄດ້ຮັບການເຄົາລົບ. ໃນກໍລະນີທີ່ບໍ່ມີສັນຍາເຫຼົ່ານີ້ ຫຼື ບໍ່ໄດ້ກ່າວເຖິງສະພາບເງື່ອນໄຂຂອງການເຮັດວຽກ ແລະ ຂໍ້ກຳນົດຕ່າງໆຂອງການຈ້າງງານ[5], ລູກຄ້າຈະສະໜອງສະພາບເງື່ອນໄຂໃນການເຮັດວຽກ ແລະ ຂໍ້ກຳນົດໃນການຈ້າງງານທີ່ສົມເຫດສົມຜົນໃຫ້.[6]

---

[3] ຂະບວນການດຳເນີນວຽກງານທີ່ເປັນແກນຫຼັກປະກອບມີຂະບວນການຜະລິດ ແລະ/ຫຼື ໃຫ້ບໍລິການຕ່າງໆທີ່ຈຳເປັນສຳລັບກິດຈະການທຸລະກິດສະເພາະເຈາະຈົງໃດໜຶ່ງ ເຊິ່ງຖ້າຫາກ ປາສະຈາກຂະບວນການເຫຼົ່ານີ້ແລ້ວ ກິດຈະການຂອງທຸລະກິດກໍບໍ່ສາມາດສືບຕໍ່ໄປໄດ້.

[4] ຜູ້ສະໜອງຫຼັກແມ່ນຜູ້ທີ່ສະໜອງສິນຄ້າ, ແລະ ວັດສະດຸທີ່ຈຳເປັນຢ່າງຕໍ່ເນື່ອງສຳລັບຂະບວນການດຳເນີນວຽກງານທີ່ເປັນແກນຫຼັກຂອງໂຄງການ .

[5] ຕົວຢ່າງສະພາບເງື່ອນໄຂການເຮັດວຽກ ແລະ ຂໍ້ກຳນົດຕ່າງໆຂອງການວ່າຈ້າງງານມີເງິນຄ່າແຮງງານ ແລະ ອຸດໜູນຕ່າງໆ; ການຕັດເງິນຄ່າແຮງງານ; ຊົ່ວໂມງໃນການເຮັດວຽກ, ການຈັດສັນເຮັດວຽກລ່ວງເວລາ ແລະ ຄ່າຊົດເຊີຍການເຮັດວຽກລ່ວງເວລາ; ໄລຍະພັກຜ່ອນ; ວັນພັກຜ່ອນ; ແລະ ການລາພັກຍ້ອນເຈັບປ່ວຍ, ເກີດລູກ, ພັກປະຈຳປີ ຫຼື ວັນພັກລັດ ຖະການ/ປະເພນີ.

[6] ສາມາດຕີລາຄາ ສະພາບເງື່ອນໄຂໃນການເຮັດວຽກ ແລະ ຂໍ້ກຳນົດໃນການວ່າຈ້າງງານທີ່ສົມເຫດສົມຜົນຕາມປັດໄຈເຫຼົ່ານີ້: (i) ເງື່ອນໄຂທີ່ກຳນົດໄວ້ສຳລັບວຽກໃນລັກສະນະດຽວກັນໃນຂະແໜງການ ຫຼື ອຸດສາຫະກຳທີ່ກ່ຽວຂ້ອງຢູ່ໃນຂົງເຂດ/ພາກພື້ນທີ່ມີການດຳເນີນວຽກດັ່ງກ່າວຢູ່; (ii) ສັນຍາລວມໝູ່ ຫຼື ການເຈລະຈາທີ່ຮັບຮູ້ອື່ນໆລະຫວ່າງອົງການຈັດຕັ້ງອື່ນໆຂອງຜູ້ໃຊ້ແຮງງານ ແລະ ຂອງຜູ້ຕາງໜ້າຂອງຜູ້ອອກແຮງງານໃນຂະແໜງການ ຫຼື ອຸດສາຫະກຳທີ່ກ່ຽວຂ້ອງ; (iii) ຄຳຕັດສິນຂອງຄະນະກຳມະການໄກ່ເກ່ຍ; ຫຼື (iv) ເງື່ອນໄຂທີ່ກຳນົດໂດຍກົດໝາຍຂອງປະເທດ.



11. ລູກຄ້າຈະກຳນົດບັນດາຜູ້ອອກແຮງງານເຄື່ອນຍ້າຍ ແລະ ຮັບປະກັນວ່າເຂົາເຈົ້າໄດ້ຮັບການວ່າຈ້າງໃນຂໍ້ກຳນົດ ແລະ ເງື່ອນໄຂທີ່ເທົ່າທຽມ ກັນກັບຜູ້ອອກແຮງງານທີ່ບໍ່ແມ່ນຜູ້ອອກແຮງງານເຄື່ອນຍ້າຍເຊິ່ງດຳເນີນວຽກງານທີ່ຄ້າຍຄືກັນ.

12. ໃນກໍລະນີທີ່ມີບໍລິການທີ່ພັກເຊົາ[7] ໃຫ້ຜູ້ອອກແຮງງານຕາມທີ່ໄດ້ກວມເອົາພາຍໃຕ້ມາດຕະຖານການຈັດຕັ້ງປະຕິບັດນີ້ ລູກຄ້າຈະສ້າງ ແລະ ຈັດຕັ້ງປະຕິບັດນະໂຍບາຍກ່ຽວກັບຄຸນນະພາບ ແລະ ການຄຸ້ມຄອງທີ່ພັກເຊົາ ແລະ ການສະໜອງບັນດາບໍລິການພື້ນຖານ [8]. ບໍລິການທີ່ພັກເຊົາຈະສະໜອງໃນລັກສະນະທີ່ສອດຄ່ອງກັບຫຼັກການໆບໍ່ຈຳແນກ ແລະ ມີໂອກາດທີ່ສະເໝີພາບກັນ. ການຈັດສັນທີ່ພັກເຊົາຂອງຜູ້ອອກແຮງງານບໍ່ຄວນຈະຈຳກັດອິດສະລະພາບໃນການເຄື່ອນໄຫວກິດຈະກຳ ຫຼື ດຳເນີນວຽກກຳມະບານ.

### *ອົງການຈັດຕັ້ງຂອງຜູ້ອອກແຮງງານ*

13. ລູກຄ້າຈະຕ້ອງປະຕິບັດໃຫ້ສອດຄ່ອງຕາມກົດໝາຍຂອງປະເທດໃນບັນດາປະເທດທີ່ມີກົດໝາຍທີ່ຮັບຮູ້ສິດທິຂອງຜູ້ອອກແຮງງານໃນ ການສ້າງຕັ້ງ ແລະ ເຂົ້າຮ່ວມກຳມະບານຂອງຜູ້ອອກແຮງງານຕາມຄວາມສະໝັກໃຈຂອງເຂົາເຈົ້າ ໂດຍປາສະຈາກການແຊກແຊງລົບກວນ ແລະເພື່ອເຈລະຈາລວມໝູ່. ໃນກໍລະນີທີ່ກົດໝາຍຂອງປະເທດຈຳກັດບໍ່ໃຫ້ມີກຳມະບານຂອງຜູ້ອອກແຮງງານ ລູກຄ້າຈະບໍ່ຈຳກັດຜູ້ອອກແຮງງານໃນການສ້າງກົນໄກທາງເລືອກຂຶ້ນມາເພື່ອສະແດງການຮ້ອງທຸກ ແລະ ການປົກປ້ອງສິດທິຂອງເຂົາເຈົ້າກ່ຽວກັບສະພາບເງື່ອນໄຂຂອງການເຮັດວຽກ ແລະ ຂໍ້ກຳນົດຂອງການຈ້າງແຮງງານຂອງເຂົາເຈົ້າ. ລູກຄ້າຈະບໍ່ຄວນສະແຫວງຫາແນວທາງໃນການສ້າງອິດທິພົນຕໍ່ ແລະ ຄວບຄຸມກົນໄກເຫຼົ່ານີ້.

14. ໃນກໍລະນີໃດກໍຕາມທີ່ໄດ້ກ່າວມາໃນວັກທີ 13 ຂອງມາດຕະຖານການດຳເນີນງານນີ້ ແລະ ໃນກໍລະນີທີ່ກົດໝາຍຂອງປະເທດບໍ່ໄດ້ບັງຄັບນຳໃຊ້ລູກຄ້າຈະບໍ່ກີດຂວາງຜູ້ອອກແຮງງານໃຫ້ເລືອກຕັ້ງເອົາຜູ້ຕາງໜ້າຂອງຜູ້ອອກແຮງງານ, ສ້າງ ຫຼື ເຂົ້າຮ່ວມກຳມະບານຂອງຜູ້ອອກແຮງງານຕາມຄວາມສະໝັກໃຈຂອງເຂົາເຈົ້າ ຫຼື ການເຈລະຈາລວມໝູ່ ແລະ ຈະບໍ່ຈຳແນກ ຫຼື ແກ້ແຄ້ນຕໍ່ກັບຜູ້ອອກແຮງງານທີ່ເຂົ້າຮ່ວມ ຫຼື ຕ້ອງການເຂົ້າຮ່ວມກຳມະບານ ຫຼື ການເຈລະຈາລວມໝູ່ດັ່ງກ່າວ. ລູກຄ້າຈະຕ້ອງປະສານກັນກັບຜູ້ຕາງໜ້າຂອງຜູ້ອອກແຮງງານ ຫຼື ກຳມະບານຂອງຜູ້ອອກແຮງງານ ແລະ ສະໜອງຂໍ້ມູນຂ່າວສານທີ່ຈຳເປັນໃນການເຈລະຈາຢ່າງມີຄວາມໝາຍໃນລັກສະນະທີ່ທັນເວລາ. ກຳມະບານຂອງຜູ້ອອກແຮງງານຄວນເປັນຜູ້ຕາງໜ້າຜູ້ອອກແຮງງານໃນກຳລັງແຮງງານຢ່າງຍຸດຕິທຳ.

### *ການບໍ່ຈຳແນກ ແລະ ໂອກາດທີ່ສະເໝີພາບກັນ*

15. ລູກຄ້າຈະບໍ່ຕັດສິນໃຈກ່ຽວກັບການຈ້າງງານບົນພື້ນຖານຄຸນລັກສະນະສ່ວນຕົວ[9] ທີ່ບໍ່ກ່ຽວຂ້ອງກັບເງື່ອນໄຂທີ່ມີໃນຕົວຂອງວຽກງານ. ລູກຄ້າຈະສ້າງສາຍພົວພັນໃນການຈ້າງງານບົນພື້ນຖານຫຼັກການຂອງໂອກາດທີ່ສະເໝີພາບກັນ ແລະ ການປະຕິບັດຢ່າງຍຸດຕິທຳ ແລະ ຈະບໍ່ຈຳແນກໃນທຸກໆດ້ານຂອງສາຍພົວພັນການຈ້າງງານເຊັ່ນ: ການບັນຈຸ ແລະ ການຈ້າງ, ການໃຫ້ຄ່າຕອບແທນ (ລວມ ທັງເງິນຄ່າແຮງງານ ແລະ ອຸດໜູນຕ່າງໆ), ສະພາບເງື່ອນໄຂໃນການເຮັດວຽກ, ການມອບໝາຍວຽກງານ, ການເລື່ອນຂັ້ນ/ຊັ້ນ, ການຍົກເລີກສັນຍາຈ້າງງານ ຫຼື ການກະສຽນ, ແລະ ການປະຕິບັດ ວິໄນຕ່າງໆ. ລູກຄ້າຈະມີມາດຕະການເພື່ອສະກັດກັ້ນ ແລະ ແກ້ໄຂບັນຫາການລະເມີດ, ການຂົ່ມຂູ່, ແລະ/ຫຼື ການຂູດຮີດໂດຍສະເພາະຕໍ່ກັບແມ່ຍິງ. ຫຼັກການບໍ່ມີການຈຳແນກແມ່ນຈະຖືກນຳໃຊ້ກັບຜູ້ອອກແຮງງານທີ່ເປັນແຮງງານຕ່າງດ້າວເຊັ່ນກັນ.

16. ຢູ່ໃນບັນດາປະເທດທີ່ມີກົດໝາຍກຳນົດກ່ຽວກັບການບໍ່ຈຳແນກໃນການຈ້າງງານ, ລູກຄ້າຈະປະຕິບັດໃຫ້ສອດຄ່ອງກັບກົດໝາຍເຫຼົ່ານັ້ນ. ຖ້າຫາກບໍ່ມີການກຳນົດກ່ຽວກັບການບໍ່ຈຳແນກໃນການຈ້າງງານໃນກົດໝາຍທີ່ກ່ຽວຂ້ອງຂອງປະເທດນັ້ນໆ, ລູກຄ້າຈະຕ້ອງປະຕິບັດຕາມມາດຕະຖານການດຳເນີນງານນີ້. ໃນກໍລະນີທີ່ກົດໝາຍຂອງປະເທດບໍ່ສອດຄ່ອງກັບມາດຕະຖານການດຳເນີນງານນີ້ ຊຸກຍູ້ໃຫ້ລູກຄ້າດຳເນີນງານໃຫ້ສອດຄ່ອງຕາມຈຸດປະສົງຂອງວັກທີ 15 ຂ້າງເທິງໂດຍບໍ່ມີການຝ່າຝືນກົດໝາຍທີ່ກ່ຽວຂ້ອງ.

17. ມາດຕະການພິເສດສຳລັບການປົກປ້ອງ ແລະ ການຊ່ວຍເຫຼືອເພື່ອບັນເທົາການຈຳແນກໃນອະດີດ ຫຼື ການເລືອກໃຫ້ເຮັດວຽກໃດໜຶ່ງບົນພື້ນຖານເງື່ອນໄຂທີ່ມີ

---

[7] ອາດຈະແມ່ນລູກຄ້າ ຫຼື ຝ່າຍທີສາມທີ່ເປັນຜູ້ໃຫ້ການບໍລິການເຫຼົ່ານີ້ໂດຍກົງ

[8] ເງື່ອນໄຂການບໍລິການພື້ນຖານໝາຍເຖິງເນື້ອທີ່ຂັ້ນຕໍ່າສຸດ, ການສະໜອງນໍ້າ, ລະບົບການຖ່າຍເທນໍ້າເປື້ອນ ແລະ ກຳຈັດຂີ້ເຫຍື້ອທີ່ພຽງພໍ, ການປ້ອງກັນຄວາມຮ້ອນ, ຄວາມເຢັນ, ຄວາມຊຸ່ມ, ສຽງລົບກວນ, ໄຟໄໝ້ ແລະ ສັດທີ່ເປັນພາຫະນຳເຊື້ອພະຍາດທີ່ເໝາະສົມ, ສິ່ງອຳນວຍຄວາມສະດວກທາງດ້ານສຸຂາພິບານ ແລະ ອະນາໄມທີ່ພຽງພໍ, ລະບົບລະບາຍອາກາດ, ສິ່ງອຳນວຍຄວາມສະດວກໃນການແຕ່ງຢູ່ຄົວກິນ ແລະ ເກັບຮັກສາອາຫານ ແລະ ແສງທຳມະຊາດ ແລະ ແສງໄຟຟ້າ ແລະ ໃນບາງກໍລະນີກໍມີບໍລິການປິ່ນປົວຂັ້ນພື້ນຖານ.

[9] ເຊັ່ນບົດບາດຍິງ-ຊາຍ, ເຊື້ອຊາດ, ສັນຊາດ, ຊົນເຜົ່າ, ແຫຼ່ງທີ່ມາທາງສັງຄົມ ແລະ ພື້ນເມືອງດັ້ງເດີມ, ສາສະໜາ ແລະ ຄວາມເຊື່ອ, ຄວາມພິການ, ອາຍຸ ຫຼື ເພດວິຖີ.

ໃນຕົວຂອງວຽກ, ຈະບໍ່ຖືວ່າເປັນການຈຳແນກ ຖ້າຫາກວ່າມັນສອດຄ່ອງກັບກົດໝາຍຂອງປະເທດ.

### *ການຫຼຸດຜ່ອນວຽກງານ*

18. ກ່ອນທີ່ຈະມີການຈັດຕັ້ງປະຕິບັດການຖອນພະນັກງານແບບລວມໝູ່[10], ລູກຄ້າຈະຕ້ອງດຳເນີນການວິເຄາະທາງເລືອກອື່ນໆເພື່ອຫຼຸດຜ່ອນວຽກງານ[11]. ຖ້າຫາກການວິເຄາະດັ່ງກ່າວບໍ່ສາມາດກຳນົດທາງເລືອກອື່ນໃນການຫຼຸດຜ່ອນວຽກງານໄດ້, ຈະຕ້ອງພັດທະນາ ແລະ ຈັດຕັ້ງປະຕິບັດແຜນການຫຼຸດຜ່ອນວຽກງານເພື່ອຫຼຸດຜ່ອນຜົນກະທົບທາງລົບຂອງການຫຼຸດຜ່ອນວຽກງານທີ່ມີຕໍ່ຜູ້ອອກແຮງງານ. ແຜນການຫຼຸດຜ່ອນຈະຢູ່ບົນພື້ນຖານການບໍ່ຈຳແນກ ແລະ ຈະພິຈາລະນາເອົາການປຶກສາຫາລືກັບຜູ້ອອກແຮງງານ, ໜ່ວຍງານກຳມະບານຂອງເຂົາເຈົ້າ ແລະ ລັດຖະບານ ຖ້າເຫັນວ່າເໝາະສົມ ແລະ ປະຕິບັດຕາມສັນຍາການເຈລະຈາລວມໝູ່ຖ້າມີສັນຍາດັ່ງກ່າວ. ລູກຄ້າຈະປະຕິບັດຕາມຂໍ້ກຳນົດເງື່ອນໄຂທາງກົດໝາຍ ແລະ ຂໍ້ຜູກພັນທາງສັນຍາຕ່າງໆທີ່ກ່ຽວຂ້ອງເພື່ອຈ້າງໃຫ້ອຳນາດການປົກຄອງຂອງລັດ ແລະ ການສະໜອງຂໍ້ມູນຂ່າວສານໃຫ້ກັບ ແລະ ການປຶກສາຫາລືກັບຜູ້ອອກແຮງງານ ແລະ ກຳມະບານຂອງເຂົາເຈົ້າ.

19. ລູກຄ້າຄວນຮັບປະກັນວ່າຜູ້ອອກແຮງງານທຸກຄົນໄດ້ຮັບການແຈ້ງການຕໍ່ກັບການຖອນພະນັກງານ ແລະ ໄດ້ຮັບເງິນຊົດເຊີຍຕາມກົດໝາຍ ແລະ ສັນຍາລວມໝູ່ຕາມກຳນົດເວລາທີ່ເໝາະສົມ. ທຸກໆເງິນຄ້າງຊຳລະ ຫຼື ເງິນອຸດໜຸນປະກັນສັງຄົມ ຫຼື ເງິນປະກອບສ່ວນໃສ່ບຳນານຕ່າງໆຈະຕ້ອງໄດ້ຮັບການຊຳລະ (i) ໃນວັນ ຫຼື ກ່ອນວັນຍົກເລີກສາຍພົວພັນການເຮັດວຽກກັບຜູ້ອອກແຮງງານ, (ii) ໃນກໍລະນີທີ່ເໝາະສົມ, ເພື່ອຜົນປະໂຫຍດຂອງຜູ້ອອກແຮງງານ, ຫຼື (iii) ຈະມີການຊຳລະຕາມກຳນົດເວລາທີ່ໄດ້ຕົກລົງເຫັນດີໃນສັນຍາລວມໝູ່. ໃນກໍລະນີທີ່ການຊຳລະດັ່ງກ່າວແມ່ນເພື່ອຜົນປະໂຫຍດຂອງຜູ້ອອກແຮງງານ, ຜູ້ອອກແຮງງານຈະໄດ້ຮັບຫຼັກຖານຂອງການຊຳລະດັ່ງກ່າວ.

### *ກົນໄກການຮ້ອງທຸກ*

20. ລູກຄ້າຈະເປັນຜູ້ສະໜອງກົນໄກການຮ້ອງທຸກໃຫ້ຜູ້ອອກແຮງງານ (ແລະ ໃຫ້ກັບກຳມະບານຂອງເຂົາເຈົ້າ ຖ້າມີ) ເພື່ອຍົກປະເດັນຂໍ້ກັງວົນຕ່າງໆໃນສະຖານທີ່ເຮັດວຽກຂຶ້ນ. ລູກຄ້າຈະແຈ້ງຂໍ້ມູນຕໍ່ກັບກົນໄກການຮ້ອງທຸກໃຫ້ຜູ້ອອກແຮງງານໄດ້ຮັບຮູ້ໃນເວລາການຈັດຫາງານ ແລະ ເຮັດໃຫ້ສາມາດເຂົ້າເຖິງກົນໄກດັ່ງກ່າວໄດ້ງ່າຍດາຍ. ກົນໄກດັ່ງກ່າວຄວນມີສ່ວນຮ່ວມຂອງຜູ້ບໍລິຫານໃນລະດັບທີ່ສົມຄວນ ແລະ ແກ້ໄຂຂໍ້ກັງວົນໂດຍໄວໂດຍການນຳໃຊ້ຂະບວນການທີ່ສາມາດເຂົ້າໃຈໄດ້ ແລະ ມີຄວາມໂປ່ງໃສທີ່ສະໜອງຄຳຕອບໃຫ້ກັບຜູ້ທີ່ກ່ຽວຂ້ອງໄດ້ຕາມກຳນົດເວລາໂດຍປາສະຈາກການເອົາຄືນ/ແກ້ແຄ້ນ. ກົນໄກດັ່ງກ່າວກໍ່ຄວນອະນຸຍາດໃຫ້ມີການຮ້ອງທຸກແບບປົກປິດຊື່ໄດ້. ກົນໄກດັ່ງກ່າວຕ້ອງບໍ່ກີດຂວາງການເຂົ້າເຖິງຂະບວນແກ້ໄຂທາງດ້ານຕຸລາການ ຫຼື ດ້ານບໍລິຫານທີ່ກົດໝາຍອາດໄດ້ກຳນົດໄວ້ ຫຼື ໂດຍຜ່ານຂະບວນການໄກ່ເກ່ຍ ຫຼື ກົນໄກທີ່ມາແທນທີ່ໃຫ້ກົນໄກການຮ້ອງທຸກທີ່ກຳນົດໄວ້ໃນສັນຍາລວມໝູ່.

## ການປົກປ້ອງກຳລັງແຮງງານ

### *ແຮງງານເດັກ*

21. ລູກຄ້າຈະບໍ່ວ່າຈ້າງ ຫຼື ໃຊ້ແຮງງານເດັກໃນທຸກໆຮູບການທີ່ເປັນລັກສະນະການຂູດຮີດທາງດ້ານເສດຖະກິດ ຫຼື ມີທ່າອ່ຽງທີ່ຈະເປັນອັນຕະລາຍ ຫຼື ແຊກແຊງການສຶກສາຂອງເດັກນ້ອຍ ຫຼື ມີໄພອັນຕະລາຍຕໍ່ກັບສຸຂະພາບຂອງເດັກ ຫຼື ຕໍ່ກັບພັດທະນາການທາງດ້ານຮ່າງກາຍ, ຈິດໃຈ, ຈິດວິນຍານ, ສິນທຳ ຫຼື ທາງສັງຄົມ. ລູກຄ້າຈະລະບຸຫາທຸກຄົນທີ່ມີອາຍຸຕ່ຳກ່ວາ 18 ປີ. ໃນກໍລະນີທີ່ກົດໝາຍຂອງປະເທດມີຂໍ້ກຳນົດກ່ຽວກັບການວ່າຈ້າງແຮງງານເດັກນ້ອຍ, ລູກຄ້າຈະຕ້ອງປະຕິບັດຕາມກົດໝາຍດັ່ງກ່າວທີ່ກ່ຽວຂ້ອງ. ບໍ່ໃຫ້ຈ້າງແຮງງານເດັກນ້ອຍທີ່ມີອາຍຸຕ່ຳກ່ວາ 18 ປີເພື່ອເຮັດວຽກທີ່ເປັນອັນຕະລາຍ.[12] ວຽກຂອງຄົນທີ່ມີອາຍຸຕ່ຳກ່ວາ 18 ປີຈະຕ້ອງໄດ້ຮັບການປະເມີນຄວາມສ່ຽງທີ່ເໝາະສົມ ແລະ ມີການຕິດຕາມກວດກາສຸຂະພາບ, ສະພາບເງື່ອນໄຂໃນການເຮັດວຽກ ແລະ ຊົ່ວໂມງໃນການເຮັດວຽກຢ່າງເປັນປະຈຳ.

[10] ການຖອນພະນັກງານແບບລວມໝູ່ກວມເອົາການຖອນພະນັກງານຈຳນວນຫຼາຍອັນເນື່ອງມາຈາກເຫດຜົນທາງດ້ານເສດຖະກິດ, ເຕັກນິກ ຫຼື ອົງການຈັດຕັ້ງ; ຫຼື ຍ້ອນສາເຫດ ອື່ນໆທີ່ບໍ່ກ່ຽວຂ້ອງກັບຜົນການເຮັດວຽກ ຫຼື ເຫດຜົນສ່ວນຕົວຕ່າງໆ.

[11] ຕົວຢ່າງຂອງທາງເລືອກອາດລວມມີແຜນງານການເຈລະຈາການຫຼຸດຜ່ອນຈຳນວນເວລາເຮັດວຽກ, ແຜນງານການສ້າງຄວາມສາມາດໃຫ້ພະນັກງານ; ດຳເນີນວຽກບຳລຸງຮັກສາ ໄລຍະຍາວໃນລະຫວ່າງທີ່ມີການຜະລິດຕ່ຳ ໆລໆ.

[12] ຕົວຢ່າງກິດຈະກຳວຽກທີ່ອັນຕະລາຍລວມເອົາວຽກ (i) ທີ່ມີຄວາມສ່ຽງຕໍ່ການລະເມີດທາງຮ່າງກາຍ, ຈິດໃຈ ຫຼື ທາງເພດ; (ii) ຢູ່ໃຕ້ດິນ, ໃຕ້ນ້ຳ, ເຮັດວຽກຢູ່ບ່ອນສູງ, ຫຼື ໃນ ພື້ນທີ່ຄັບແຄບ; (iii) ທີ່ຕ້ອງໃຊ້ກົນຈັກ, ອຸປະກອນ ຫຼື ເຄື່ອງມືທີ່ອັນຕະລາຍ ຫຼື ກ່ຽວຂ້ອງກັບການຫາບເຄື່ອງໜັກ; (iv) ໃນສະພາບແວດລ້ອມທີ່ບໍ່ຮັບປະກັນທາງດ້ານສຸຂະພາບ ທີ່ເຮັດໃຫ້ຜູ້ອອກແຮງງານມີຄວາມສ່ຽງຕໍ່ທາດໃດໜຶ່ງ, ຂະບວນການ, ອຸນຫະພູມ, ສຽງລົບກວນ, ຫຼື ການສັ່ນໄກວທີ່ເປັນອັນຕະລາຍ ສິ່ງຜົນເສຍຫາຍຕໍ່ກັບສຸຂະພາບ; ຫຼື (v) ຢູ່ໃນສະພາບເງື່ອນໄຂທີ່ລຳບາກເຊັ່ນ: ຊົ່ວໂມງເຮັດວຽກດົນ, ເຮັດວຽກເດິກ ຫຼື ມີການຈຳກັດພື້ນທີ່ໂດຍຜູ້ໃຊ້ແຮງງານ.



### *ແຮງງານທີ່ຖືກບັງຄັບ*

22. ລູກຄ້າຈະບໍ່ວ່າຈ້າງແຮງງານທີ່ຖືກບັງຄັບເຊິ່ງປະກອບມີວຽກ ຫຼື ການບໍລິການທີ່ດຳເນີນແບບບໍ່ສະໝັກໃຈເຊິ່ງດຳເນີນພາຍໃຕ້ການບັງຄັບຂົ່ມ ຂູ່ ຫຼື ການໃສ່ໂທດຕໍ່ບຸກຄົນໃດໜຶ່ງ ເຊິ່ງກວມເອົາແຮງງານປະເພດໃດກໍໄດ້ທີ່ບໍ່ມີລັກສະນະສະໝັກໃຈ ຫຼື ເປັນລັກສະນະບັງຄັບ ເຊັ່ນ: ແຮງງານຕາມສັນຍາ, ແຮງງານໃຊ້ໜີ້ ຫຼື ແຮງງານທີ່ມີສາຍພົວພັນທາງດ້ານສັນຍາແຮງງານຕ່າງໆ. ລູກຄ້າຈະບໍ່ໃຊ້ແຮງງານທີ່ຕົກເປັນເຫຍື່ອການຄ້າມະນຸດ[13].

## ສຸຂະພາບ ແລະ ຄວາມປອດໄພຂອງແຮງງານ

23. ລູກຄ້າຈະຕ້ອງສະໜອງສະພາບແວດລ້ອມໃນການເຮັດວຽກທີ່ປອດໄພ ແລະ ຮັບປະກັນທາງດ້ານສຸຂະພາບໂດຍພິຈາລະນາຄວາມ ສ່ຽງຕ່າງໆທີ່ມີໃນຕົວໃນຂະແໜງການສະເພາະໃດໜຶ່ງ ແລະ ປະເພດໄພອັນຕະລາຍສະເພາະໃດໜຶ່ງໃນເຂດການເຮັດວຽກຂອງລູກຄ້າລວມທັງ ໄພອັນຕະລາຍຕໍ່ຮ່າງກາຍ, ສານເຄມີ ແລະ ລັງສີວິທະຍາ ແລະ ໄພຂົ່ມຂູ່ສະເພາະເຈາະຈົງຕໍ່ແມ່ຍິງ. ລູກຄ້າຈະສ້າງບາດກ້າວຕ່າງໆໃນການປ້ອງກັນອຸບັດຕິເຫດ, ການບາດເຈັບ ແລະ ພະຍາດທີ່ເກີດຂຶ້ນຈາກ ແລະ ກ່ຽວພັນກັບ ຫຼື ເກີດຂຶ້ນໃນລະຫວ່າງການເຮັດວຽກໂດຍ ການຫຼຸດຜ່ອນສາຍເຫດຂອງໄພອັນຕະລາຍຕ່າງໆໃຫ້ສົມເຫດສົມຜົນທີ່ສຸດເທົ່າທີ່ຈະປະຕິບັດໄດ້. ໂດຍປະຕິບັດໃຫ້ສອດຄ່ອງກັບວິທີປະຕິບັດ ແລະ ບົດຮຽນທີ່ດີສາກົນຂອງອຸດສະຫະກຳ[14], ດັ່ງທີ່ມີຢູ່ໃນແຫຼ່ງຂໍ້ມູນທີ່ຮັບຮູ້ຂັ້ນສາກົນຕ່າງໆລວມທັງໃນບົດແນະນຳວ່າດ້ວຍສິ່ງແວດລ້ອມ, ສຸຂະພາບ ແລະ ຄວາມປອດໄພຂອງກຸ່ມທະນາຄານໂລກ ລູກຄ້າຈະແກ້ໄຂຂົງເຂດຕ່າງໆທີ່ລວມເອົາ (i) ການກຳນົດທ່າອ່ຽງຂອງໄພອັນຕະລາຍຕໍ່ກັບຜູ້ອອກແຮງງານ ໂດຍສະເພາະແມ່ນໄພທີ່ອັນຕະລາຍເຖິງຊີວິດ; (ii) ການສະໜອງມາດຕະການໃນການສະກັດກັ້ນ ແລະ ປ້ອງກັນ ລວມທັງການດັດປັບ, ປ່ຽນແທນ ແລະ ລົບລ້າງເງື່ອນໄຂ ຫຼື ສານທີ່ເປັນອັນຕະລາຍ; (iii) ການຝຶກອົບຮົມໃຫ້ຜູ້ອອກແຮງງານ; (iv) ການບັນທຶກ ແລະ ການລາຍງານອຸບັດຕິເຫດ, ພະຍາດ ຫຼື ເຫດການດ້ານແຮງງານ; ແລະ (v) ການສະກັດກັ້ນ, ການກຽມພ້ອມ ແລະ ການ ຕອບໂຕ້ເຫດສຸກເສີນ. ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການກຽມພ້ອມ ແລະ ຕອບໂຕ້ເຫດສຸກເສີນແມ່ນໃຫ້ອ້າງອີງຫາມາດຕະຖານການດຳເນີນງານທີ 1.

## ຜູ້ອອກແຮງງານທີ່ໄດ້ຮັບການວ່າຈ້າງໂດຍຝ່າຍທີສາມ

24. ສຳລັບຜູ້ອອກແຮງງານສັນຍາຈ້າງ ລູກຄ້າຈະໃຊ້ຄວາມພະຍາຍາມທີ່ສົມເຫດສົມຜົນທາງດ້ານການຄ້າເພື່ອຮັບປະກັນວ່າບຸກຄົນທີ ສາມທີ່ເຮັດສັນຍາຈ້າງຜູ້ອອກແຮງງານເຫຼົ່ານີ້ແມ່ນວິສາຫະກິດທີ່ມີຊື່ສຽງທີ່ດີ ແລະ ຖືກຕ້ອງຕາມກົດໝາຍ ແລະ ມີລະບົບການຄຸ້ມຄອງທາງດ້ານສິ່ງແວດລ້ອມ ແລະ ສັງຄົມທີ່ເໝາະສົມເພື່ອຈະຊ່ວຍໃຫ້ເຂົາເຈົ້າດຳເນີນງານໃນຮູບການທີ່ສອດຄ່ອງກັບຂໍ້ກຳນົດເງື່ອນຂອງມາດຕະຖານການດຳເນີນງານດັ່ງກ່າວນີ້ ຍົກເວັ້ນໃນວັກທີ 18–19 ແລະ 27–29.

25. ລູກຄ້າຈະສ້າງນະໂຍບາຍ ແລະ ລະບຽບການເພື່ອຄຸ້ມຄອງ ແລະ ຕິດຕາມກວດກາຜົນງານຂອງນາຍຈ້າງຂອງຜູ້ອອກແຮງງານທີ່ເປັນສັນຍາຈ້າງຕາມເງື່ອນໄຂຂອງມາດຕະຖານການດຳເນີນງານນີ້. ນອກຈາກນີ້, ລູກຄ້າຈະໃຊ້ຄວາມພະຍາຍາມທີ່ສົມເຫດສົມຜົນທາງດ້ານການຄ້າເພື່ອເຊື່ອມສານເອົາເງື່ອນໄຂເຫຼົ່ານີ້ ເຂົ້າໃນຂໍ້ຕົກລົງຂອງສັນຍາກັບຜູ້ໃຊ້ແຮງງານຝ່າຍທີສາມ.

26. ລູກຄ້າຈະຮັບປະກັນວ່າຜູ້ອອກແຮງງານສັນຍາຈ້າງທີ່ໄດ້ກ່າວເຖິງໃນວັກທີ 24–25 ຂອງມາດຕະຖານການດຳເນີນງານດັ່ງກ່າວນີ້ມີກົນໄກການຮ້ອງທຸກ. ໃນກໍລະນີທີ່ຝ່າຍທີສາມບໍ່ສາມາດສະໜອງກົນໄກການຮ້ອງທຸກໃຫ້ໄດ້ ລູກຄ້າຈະຂະຫຍາຍຂອບເຂດກົນໄກການຮ້ອງທຸກຂອງຕົນໃຫ້ກວມເອົາຜູ້ອອກແຮງງານຂອງຝ່າຍທີສາມນຳ.

## ຕ່ອງໂສ້ການສະໜອງ

27. ໃນກໍລະນີທີ່ມີຄວາມສ່ຽງໃນການໃຊ້ແຮງງານເດັກ ຫຼື ແຮງງງານທີ່ຖືກບັງຄັບ[15] ໃນຕ່ອງໂສ້ງການສະໜອງຂັ້ນຕົ້ນ, ລູກຄ້າຈະລະບຸຫາຄວາມສ່ຽງເຫຼົ່ານັ້ນໃຫ້ສອດຄ່ອງກັບວັກທີ 21 ແລະ 22 ຂ້າງເທິງນີ້. ຖ້າໄດ້ລະບຸເຫັນກໍລະນີຂອງການໃຊ້ແຮງງານເດັກ ຫຼື ແຮງງານທີ່

[13] ການຄ້າມະນຸດມີນິຍາມວ່າການຈັດຫາງານໃຫ້, ການຂົນສົ່ງ, ການຊຸກເຊື່ອງ ຫຼື ການຮັບເອົາບຸກຄົນໂດຍວິທີທາງໃນການຂົ່ມຂູ່ ຫຼື ໃຊ້ກຳລັງຂູ່ ຫຼື ຮູບການອື່ນໆໃນການບັງຄັບ, ລັກພາຕົວ, ສໍ້ໂກງ, ຕົວະຍົວະ, ສວຍໃຊ້ອຳນາດ, ຫຼື ຢູ່ໃນຈຸດຢືນທີ່ບໍ່ສາມາດຊ່ວຍເຫຼືອຕົວເອງໄດ້ ຫຼື ການນຳໃຊ້ເງິນ ຫຼື ຜົນປະໂຫຍດອື່ນເພື່ອຊື້ການຍິນຍອມໂດຍຄົນທີ່ມີອຳນາດຄວບຄຸມຜູ້ອື່ນ ເພື່ອຈຸດປະສົງໃນການຂູດຮີດ. ແມ່ຍິງ ແລະ ເດັກນ້ອຍໂດຍສະເພາະແລ້ວ ແມ່ນບຸກຄົນທີ່ມີຄວາມບອບບາງທີ່ຈະຕົກເປັນເຫຍື່ອການຄ້າມະນຸດ.

[14] ມີນິຍາມວ່າການນຳໃຊ້ສີມືແຮງງານ, ຄວາມດຸໝັ່ນ, ຄວາມຮອບຄອບ, ແລະ ການເບິ່ງການໄກທີ່ຄາດການໃຫ້ບັນດາພະນັກງານວິຊາຊີບທີ່ມີທັກສະສີມື ແລະ ປະສົບການຄວນມີ ເຊິ່ງເປັນຜູ້ທີ່ເຮັດວຽກປະເພດດຽວກັນພາຍໃຕ້ສະພາບເງື່ອນໄຂຄ້າຍຄືກັນຢູ່ທົ່ວໂລກ ຫຼື ໃນພາກພື້ນ.

[15] ທ່າອ່ຽງຄວາມສ່ຽງຂອງແຮງງານເດັກ ແລະ ແຮງງານທີ່ຖືກບັງຄັບຈະມີການກຳນົດໃນລະຫວ່າງຂະບວນການກຳນົດຄວາມສ່ຽງ ແລະ ຜົນກະທົບຕາທີ່ໄດ້ຂຽນໄວ້ໃນມາດຕະຖານ ການດຳເນີນງານທີ 1.

ຖືກບັງຄັບແລ້ວລູກຄ້າຈະດຳເນີນບາດກ້າວທີ່ເໝາະສົມໃນການແກ້ໄຂບັນຫາເຫຼົ່ານີ້. ລູກຄ້າຈະຕິດ ຕາມກວດກາຕ່ອງໂສ້ການສະໜອງຂັ້ນຕົ້ນຂອງຕົນເອງຢ່າງຕໍ່ເນື່ອງເພື່ອກຳນົດຫາການປ່ຽນແປງທີ່ສຳຄັນຕ່າງໆໃນຕ່ອງໂສ້ມູນຄ່າດັ່ງກ່າວ ແລະ ຖ້າຫາກພົບເຫັນຄວາມສ່ຽງ ຫຼື ເຫດການແຮງງານເດັກ/ແຮງງານທີ່ຖືກບັງຄັບອັນໃໝ່ລູກຄ້າຈະດຳເນີນບາດກ້າວທີ່ເໝາະສົມໃນການແກ້ໄຂບັນຫາໃໝ່ເຫຼົ່ານີ້.

28. ນອກເໜືອຈາກນີ້, ໃນກໍລະນີທີ່ມີຄວາມສ່ຽງສູງດ້ານຄວາມປອດໄພທີ່ກ່ຽວຂ້ອງກັບຜູ້ອອກແຮງງານໃນຕ່ອງໂສ້ການສະໜອງ, ລູກຄ້າຈະນຳສະເໜີລະບຽບການ ແລະ ມາດຕະການຫຼຸດຜ່ອນຄວາມສ່ຽງເພື່ອຮັບປະກັນວ່າຜູ້ສະໜອງຂັ້ນຕົ້ນພາຍໃນຕ່ອງໂສ້ການສະໜອງໄດ້ດຳເນີນບາດກ້າວຕ່າງໆເພື່ອສະກັດກັ້ນ ແລະ ແກ້ໄຂສະຖານະການທີ່ມີໄພຕໍ່ຊີວິດຂອງເຂົາເຈົ້າ.

29. ຄວາມສາມາດຂອງລູກຄ້າໃນການແກ້ໄຂຄວາມສ່ຽງຢ່າງເຕັມສ່ວນຈະຂຶ້ນກັບລະດັບຂອງການຄວບຄຸມ ຫຼື ອິດທິພົນຂອງຝ່າຍບໍລິຫານຂອງລູກຄ້າຕໍ່ກັບຜູ້ສະໜອງຂັ້ນຕົ້ນຂອງເຂົາເຈົ້າ. ໃນກໍລະນີທີ່ບໍ່ສາມາດແກ້ໄຂໄດ້ລູກຄ້າຈະຄ່ອຍໆປ່ຽນຕ່ອງໂສ້ການສະໜອງຂັ້ນຕົ້ນຂອງຕົນໄປຫາຜູ້ສະໜອງທີ່ສາມາດສະແດງໃຫ້ເຫັນວ່າເຂົາເຈົ້າສາມາດປະຕິບັດໃຫ້ສອດຄ່ອງຕາມມາດຕະຖານການດຳເນີນງານໄດ້.

## ມາດຕະຖານການດຳເນີນງານທີ 3

# ປະສິດທິພາບຂອງການນຳໃຊ້ຊັບພະຍາກອນ ແລະ ການປ້ອງກັນມົນລະພິດ

## ພາກສະເໜີ

1. ມາດຕະຖານການດຳເນີນງານທີ 3 ຮັບຮູ້ວ່າ ກິດຈະກຳທາງເສດຖະກິດ ແລະ ການຂະຫຍາຍຕົວເມືອງມັກເພີ່ມລະດັບຂອງມົນລະພິດທາງອາກາດ, ທາງນໍ້າ, ທາງບົກ ແລະ ຊົມໃຊ້ຊັບພະຍາກອນທີ່ມີຈຳກັດໃນຮູບການທີ່ເປັນໄພອັນຕະລາຍຕໍ່ກັບຜູ້ຄົນ ແລະ ສິ່ງແວດລ້ອມໃນຂັ້ນທ້ອງຖິ່ນ, ພາກພື້ນ ແລະ ທົ່ວໂລກ.[1] ປະຈຸບັນກໍ່ມີຄວາມເປັນເອກະພາບກັນຢ່າງຫຼວງຫຼາຍໃນທົ່ວໂລກວ່າ ລະດັບຂອງຄວາມເຂັ້ມຂຸ້ນຂອງທາດອາຍພິດເຮືອນແກ້ວໃນຊັ້ນບັນຍາກາດກຳລັງເປັນໄພຄຸກຄາມແກ່ຂະແໜງສາທາລະນະສຸກ ແລະ ສະຫວັດດີການຂອງຄົນໃນຍຸກປະຈຸບັນ ແລະ ອະນາຄົດ. ໃນເວລາດຽວກັນ, ການນຳໃຊ້ຊັບພະຍາກອນທີ່ມີປະສິດຕິພາບ ແລະ ປະສິດທິຜົນ ຫຼາຍກ່ວາເກົ່າ ແລະ ການປ້ອງກັນມົນລະພິດ[2] ແລະ ການ ຫຼີກເວັ້ນການປ່ອຍທາດອາຍພິດເຮືອນແກ້ວ ແລະ ເຕັກໂນ ໂລຊີ ແລະ ວິທີປະຕິບັດໃນການຫຼຸດຜ່ອນຄວາມສ່ຽງ ແລະ ຜົນກະທົບກໍສາມາດເຂົ້າເຖິງໄດ້ງ່າຍຂຶ້ນ ແລະ ສາມາດນຳໃຊ້ໄດ້ຢູ່ໃນທຸກໆບ່ອນທົ່ວໂລກ ເຊິ່ງສ່ວນໃຫຍ່ສາມາດຈັດຕັ້ງປະຕິບັດໄດ້ໂດຍຜ່ານການປັບປຸງວິທີການ ວິທະຍາຢ່າງຕໍ່ເນື່ອງເພື່ອປັບປຸງຄຸນນະພາບ ຫຼື ຜະລິດຕະພາບທີ່ເປັນທີ່ຮູ້ຈັກກັນດີໂດຍທົ່ວໄປໃນບັນດາບໍລິສັດໃນຂະແໜງການອຸດສາຫະກຳ, ກະສິກຳ ແລະ ບໍລິການ ສ່ວນໃຫຍ່.

[1] ໃນຈຸດປະສົງຂອງມາດຕະຖານການຈັດຕັ້ງປະຕິບັດດັ່ງກ່າວນີ້ ຄຳວ່າ “ມົນລະພິດ” ໝາຍເຖິງມົນລະພິດທາງເຄມີທີ່ເປັນອັນຕະລາຍ ແລະ ບໍ່ອັນຕະລາຍໃນພາວະແຂງ, ພາວະແຫຼວ ຫຼື ພາວະອາຍ ແລະ ລວມເອົາອົງປະກອບອື່ນໆເຊັ່ນ ສັດຕູພືດ, ເຊື້ອພະຍາດ, ການປ່ອຍອາຍຮ້ອນທີ່ມີຜົນກະທົບຕໍ່ນໍ້າ, ການປ່ອຍທາດອາຍພິດເຮືອນແກ້ວ (GHG), ກິ່ນເໝັນລົບກວນ, ສຽງລົບກວນ, ການສັ່ນໄກວ, ລັງສີ, ພະລັງງານແມ່ເຫຼັກໄຟຟ້າ ແລະ ການສ້າງທ່າແຮງຜົນກະທົບທາງສາຍຕາລວມເຖິງແສງ.

[2] ໃນຈຸດປະສົງຂອງມາດຕະຖານການດຳເນີນງານດັ່ງກ່າວນີ້ ຄຳວ່າ “ການປ້ອງກັນມົນລະພິດ” ບໍ່ໄດ້ໝາຍເຖິງການລົບລ້າງການປ່ອຍມົນລະພິດຢ່າງເດັດຖານ ແຕ່ ແມ່ນການຫຼີກເວັ້ນໃນເວລາທີ່ສາມາດເຮັດໄດ້ ແລະ ຖ້າເປັນໄປບໍ່ໄດ້ ກໍ່ໃຫ້ຫຼຸດຜ່ອນປະລິມານຂອງມົນລະພິດໃຫ້ຕໍ່າສຸດໃນລະດັບທີ່ໜ້າ ເພິ່ງພໍໃຈຕາມຈຸດປະສົງຂອງ ມາດຕະຖານການດຳເນີນງານນີ້.

2. ມາດຕະຖານການດຳເນີນງານດັ່ງກ່າວ ອະທິບາຍວິທີການໃນລະດັບໂຄງການຕໍ່ກັບປະສິດທິພາບຂອງຊັບພະຍາກອນ ແລະ ການປ້ອງກັນ ແລະ ຄວບຄຸມມົນລະພິດທີ່ສອດຄ່ອງກັບເຕັກໂນໂລຊີ ແລະ ວິທີປະຕິບັດທີ່ໄດ້ມີການເຜີຍແຜ່ຢູ່ລະດັບສາກົນ. ນອກຈາກນີ້, ມາດຕະຖານການດຳເນີນງານກໍ່ຍັງສົ່ງເສີມຄວາມສາມາດຂອງບໍລິສັດເອກະຊົນໃນການນຳໃຊ້ເຕັກໂນໂລຊີ ແລະ ວິທີປະຕິບັດຕາບໃດທີ່ການນຳໃຊ້ຂອງ ເຂົາເຈົ້ານັ້ນເປັນໄປໄດ້ໃນສະພາບເງື່ອນໄຂຂອງໂຄງການທີ່ອາໄສສີມືແຮງງານ ແລະ ຊັບພະຍາກອນທີ່ຫາໄດ້ໃນທ້ອງຕະຫຼາດ.

## ວັດຖຸປະສົງ

- ເພື່ອຫຼີກເວັ້ນ ຫຼື ຫຼຸດຜ່ອນຜົນກະທົບທາງລົບຕໍ່ກັບສຸຂະພາບຂອງມະນຸດ ແລະ ສິ່ງແວດລ້ອມໂດຍການຫຼີກເວັ້ນ ຫຼື ຫຼຸດຜ່ອນປະລິມານຂອງມົນລະພິດທີ່ເກີດຈາກກິດຈະກຳຂອງໂຄງການ.
- ເພື່ອສົ່ງເສີມການນຳໃຊ້ຊັບພະຍາກອນໃຫ້ມີຄວາມຍືນຍົງຫຼາຍຂຶ້ນ ລວມທັງພະລັງງານ ແລະ ນໍ້າ.
- ເພື່ອຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວທີ່ກ່ຽວພັນກັບໂຄງການ.

## ຂອບເຂດການນຳໃຊ້

3. ຄວາມສາມາດໃນການນຳໃຊ້ມາດຕະຖານການດຳເນີນງານດັ່ງກ່າວນີ້ແມ່ນຖືກກຳນົດໃນລະຫວ່າງຂະບວນການກຳນົດຄວາມສ່ຽງ ແລະ ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ. ການຈັດຕັ້ງປະຕິບັດການດຳເນີນງານຕ່າງໆທີ່ຈຳເປັນເພື່ອປະຕິບັດໃຫ້ສອດຄ່ອງຕາມຂໍ້ກຳນົດເງື່ອນໄຂຂອງມາດຕະຖານການດຳເນີນ

ງານດັ່ງກ່າວນີ້ແມ່ນມີການຄຸ້ມຄອງໂດຍຜ່ານລະບົບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ເຊິ່ງອົງປະກອບຂອງລະບົບດັ່ງກ່າວແມ່ນໄດ້ຂຽນລາຍລະອຽດໄວ້ໃນມາດຕະຖານການດຳເນີນງານທີ 1.

## ເງື່ອນໄຂ

4. ໃນລະຫວ່າງຕະຫຼອດໄລຍະຮອບວຽນອາຍຸຂອງໂຄງການລູກຄ້າຈະຕ້ອງພິຈາລະນາສະພາບແວດລ້ອມທັງໝົດ ແລະ ນຳໃຊ້ຫຼັກການ ແລະ ເຕັກນິກປະສິທິພາບຂອງຊັບປະຍາກອນທີ່ເປັນໄປໄດ້ທາງດ້ານເຕັກນິກ ແລະທາງດ້ານການເງິນ ແລະ ການສະກັດກັ້ນມົນລະພິດທີ່ແທດເໝາະທີ່ສຸດໃນການຫຼີກເວັ້ນ ຫຼື ໃນກໍລະນີທີ່ບໍ່ ສາມາດຫຼີກເວັ້ນໄດ້ເພື່ອຫຼຸດຜ່ອນຜົນກະທົບທາງລົບຕໍ່ກັບສຸຂະພາບຂອງມະນຸດ ແລະ ສິ່ງແວດລ້ອມ[3]. ຫຼັກການແລະ ເຕັກນິກທີ່ໄດ້ຖືກນຳໃຊ້ໃນໄລຍະຕະຫຼອດໄລຍະຮອບວຽນອາຍຸຂອງໂຄງການຈະຖືກອອກແບບ ອີງຕາມປະເພດຂອງໄພອັນຕະລາຍ ແລະ ຄວາມສ່ຽງທີ່ກ່ຽວພັນກັບລັກສະນະຕົວຈິງຂອງໂຄງການ ແລະ ສອດຄ່ອງກັບບົດຮຽນທີ່ດີຂອງສາກົນໃນວຽກງານອຸດສາຫະກຳ[4], ຕາມທີ່ໄດ້ສະແດງໃນແຫຼ່ງຂໍ້ມູນທີ່ມີການຮັບຮູ້ໃນຂັ້ນສາກົນ ລວມທັງບົດແນະນຳທາງດ້ານສິ່ງແວດລ້ອມ, ສຸຂະພາບ ແລະຄວາມປອດໄພຂອງກຸ່ມທະນາຄານໂລກ.

5. ລູກຄ້າຈະອ້າງອີງຫາບົດແນະນຳທາງດ້ານສິ່ງແວດລ້ອມ, ສຸຂະພາບ ແລະ ຄວາມປອດໄພ ຫຼື ແຫຼ່ງຂໍ້ມູນທີ່ມີການຮັບຮູ້ໃນຂັ້ນສາກົນອື່ນໆ ຕາມຄວາມເໝາະສົມໃນເວລາທີ່ປະເມີນຜົນ ແລະ ເລືອກເອົາຊັບພະຍາກອນທີ່ມີປະສິດທິພາບ ແລະ ເຕັກນິກ ເພື່ອຄວບຄຸມ ແລະປ້ອງກັນມົນລະພິດ. ບົດແນະນຳທາງດ້ານສິ່ງແວດລ້ອມ, ສຸຂະພາບ ແລະ ຄວາມປອດໄພປະກອບມີລະດັບ ແລະມາດຕະຖານຂອງຜົນງານໃນການຈັດຕັ້ງປະຕິບັດທີ່ມີການຍອມຮັບຕາມປົກກະຕິ ແລະ ນຳໃຊ້ໄດ້ກັບໂຄງການ.

[3] ຄວາມເປັນໄປໄດ້ (ການວິພາກ) ທາງດ້ານເຕັກນິກແມ່ນອີງໃສ່ວ່າມາດຕະການ ແລະ ກິດຈະກຳທີ່ໄດ້ສະເໜີນັ້ນສາມາດຈັດຕັ້ງປະຕິບັດໄດ້ໂດຍຜູ້ທີ່ມີສີມືແຮງງານ, ອຸປະກອນ ແລະ ວັດສະດຸທີ່ຫາຊື້ໄດ້ໂດຍພິຈາລະນາປັດໄຈທີ່ເກີດຂຶ້ນໃນຂັ້ນທ້ອງຖິ່ນເຊັ່ນ ດິນຟ້າອາກາດ, ພູມສາດ, ປະຊາກອນ, ໂຄງລ່າງພື້ນຖານ, ການປ້ອງກັນຄວາມສະຫງົບ, ການຄຸ້ມຄອງບໍລິຫານ, ຄວາມສາມາດ, ແລະ ຄວາມໜ້າເຊື່ອຖືໃນການດຳເນີນວຽກງານ. ຄວາມເປັນໄປໄດ້ (ການວິພາກ) ທາງດ້ານການເງິນແມ່ນອີງໃສ່ການພິຈາລະນາ ທາງດ້ານທຸລະກິດລວມທັງຜົນກະທົບຂອງຕົ້ນທຶນທີ່ເພີ່ມຂຶ້ນສຳລັບການນຳໃຊ້ມາດຕະການ ແລະການດຳເນີນການຕ່າງໆໂດຍສົມທຽບກັບການລົງທຶນໃນໂຄງການ, ການບໍລິຫານ, ແລະ ຕົ້ນທຶນໃນການບຳລຸງຮັກສາ.

[4] GIIP ມີນິຍາມວ່າການນຳໃຊ້ສີມືແຮງງານ, ຄວາມດຸໝັ່ນ, ຄວາມຮອບຄອບ, ແລະ ການເບິ່ງການໄກທີ່ຄາດການໃຫ້ບັນດາພະນັກງານວິຊາຊີບທີ່ມີທັກສະສີມືແລະ ປະສົບການ ຄວນມີ ເຊິ່ງເປັນຜູ້ທີ່ເຮັດວຽກປະເພດດຽວກັນພາຍໃຕ້ສະພາບເງື່ອນໄຂຄ້າຍຄືກັນຢູ່ທົ່ວໂລກ ຫຼື ໃນພາກພື້ນ. ຜົນໄດ້ຮັບຂອງການນຳໃຊ້ດັ່ງກ່າວຄວນແມ່ນວ່າ ໂຄງການໄດ້ນຳໃຊ້ ເຕັກໂນໂລຊີຕ່າງໆທີ່ເໝາະສົມທີ່ສຸດໃນສະຖານະການຕ່າງໆທີ່ມີຄວາມສະເພາະເຈາະຈົງຕໍ່ໂຄງການ.

ໃນກໍລະນະທີ່ລະບຽບການຂອງປະເທດເຈົ້າພາບແຕກຕ່າງຈາກລະດັບ ແລະ ມາດຕະການທີ່ປະກົດຢູ່ໃນບົດແນະນຳດັ່ງກ່າວ, ໂຄງການຄວນປະຕິບັດຕາມຕົວໃດກໍ່ໄດ້ທີ່ເຫັນວ່າມີຄວາມຮັດກຸມຫຼາຍກ່ວາ. ຖ້າຫາກເຫັນວ່າການໃຊ້ລະດັບ ແລະ ມາດຕະການທີ່ຮັດກຸມໜ້ອຍກ່ວານັ້ນມີຄວາມເໝາະສົມກ່ວາຕາມທັດສະນະສະພາບເງື່ອນໄຂສະເພາະຂອງໂຄງການ ລູກຄ້າຈະຕ້ອງມີການຮ່າງເຫດຜົນລາຍລະອຽດຄົບຊຸດຕໍ່ກັບທາງເລືອກອື່ນທີ່ໄດ້ສະເໜີໂດຍຜ່ານຂະບວນການກຳນົດ ແລະ ປະເມີນຜົນຄວາມສ່ຽງແລະ ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ. ການໃຫ້ເຫດຜົນດັ່ງກ່າວຄວນສະແດງໃຫ້ເຫັນວ່າ ການເລືອກເອົາລະດັບການຈັດຕັ້ງປະຕິບັດທາງເລືອກໃດໜຶ່ງນັ້ນແມ່ນມີຄວາມສອດຄ່ອງກັບຈຸດປະສົງຂອງມາດຕະຖານການດຳເນີນງານນີ້.

## ປະສິດທິພາບຂອງການນຳໃຊ້ຊັບພະຍາກອນ

6. ລູກຄ້າຈະຈັດຕັ້ງປະຕິບັດມາດຕະການທີ່ມີຄວາມເປັນໄປໄດ້ທາງດ້ານເຕັກນິກ ແລະ ການເງິນ ແລະ ປະຢັດຕົ້ນທຶນ[5] ເພື່ອການປັບປຸງປະສິດທິຜົນໃນການຊົມໃຊ້ພະລັງງານ, ນ້ຳ, ຊັບພະຍາກອນ ແລະ ວັດສະດຸຕ່າງໆ ໂດຍມີຈຸດສຸມໃນຂົງເຂດຕ່າງໆທີ່ພິຈາລະນາວ່າເປັນກິດຈະການທຸລະກິດແກນຫຼັກ. ມາດຕະການເຫຼົ່ານີ້ຈະເຊື່ອມສານຫຼັກການໃນການຜະລິດທີ່ສະອາດ ເຂົ້າໃນການອອກແບບຜະລິດຕະພັນ ແລະ ຂະບວນການຜະລິດຫຼາຍຂຶ້ນໂດຍມີຈຸດປະສົງໃນການປະຢັດວັດຖຸດິບ, ພະລັງງານ ແລະ ນ້ຳ. ໃນກໍລະນີທີ່ມີຂໍ້ມູນມາດຕະຖານລູກຄ້າຈະດຳເນີນການສົມທຽບເພື່ອສ້າງລະດັບສຳພັນຂອງປະສິດທິພາບ.

### *ທາດອາຍພິດເຮືອນແກ້ວ*

7. ນອກຈາກມາດຕະການ ຂອງການນຳໃຊ້ຊັບພະຍາກອນຢ່າງມີປະສິດທິພາບທີ່ໄດ້ອະທິບາຍໄວ້ຂ້າງເທິງແລ້ວ, ລູກຄ້າຈະພິຈາລະນາທາງເລືອກຕ່າງໆ ແລະ ຈັດຕັ້ງປະຕິບັດທາງເລືອກທີ່ມີຄວາມເປັນໄປໄດ້ທາງດ້ານເຕັກນິກແລະ ການເງິນ ແລະ ປະຢັດຕົ້ນທຶນເພື່ອຫຼຸດຜ່ອນການປ່ອຍທາດອາຍພິດເຮືອນແກ້ວທີ່ກ່ຽວຂ້ອງກັບໂຄງການໃນລະຫວ່າງການອອກແບບ ແລະ ການດຳເນີນກິດຈະກຳຂອງໂຄງງານ. ທາງເລືອກເຫຼົ່ານີ້ອາດຈະລວມເອົາແຕ່ບໍ່ຈຳກັດຢູ່ພຽງແຕ່ທາງເລືອກທີ່ຕັ້ງໂຄງການອື່ນ, ການນຳໃຊ້ແຫຼ່ງພະລັງງານສະອາດ ແລະ ມີອັດຕາການປ່ອຍທາດອາຍກາກບອນຕ່ຳ, ວິທີການຄຸ້ມຄອງກະສິກຳ, ປ່າໄມ້ແລະ ລ້ຽງສັດແບບຍືນຍົງ, ການຫຼຸດຜ່ອນທາດອາດທີ່ຮົ່ວໄຫຼ ແລະ ການຫຼຸດຜ່ອນແປວໄຟຂອງອາຍ.

[5] ຄວາມປະຢັດຕົ້ນທຶນແມ່ນຖືກກຳນົດໂດຍອີງຕາມຄ່າໃຊ້ຈ່າຍຂອງທຶນ ແລະຄ່າໃຊ້ຈ່າຍບໍລິຫານ ແລະ ຜົນປະໂຫຍດທາງການເງິນຂອງມາດຕະການທີ່ມີການພິຈາລະນາຕາມກຳນົດຕະຫຼອດໄລຍະຂອງມາດຕະການ.

8. ສຳລັບໂຄງການທີ່ຄາດການວ່າຈະຜະລິດ ຫຼື ປະຈຸບັນມີກຳລັງຜະລິດທີ່ມີປະລິມານຂອງທາດອາຍກາກໂບນິກທຽບເທົ່າຫຼາຍກ່ວາ 25.000 ໂຕນ ຕໍ່ ປີ [6], ລູກຄ້າຈະຄິດໄລ່ປະລິມານການປ່ອຍທາດອາຍ ຈາກສິ່ງປະກອບສ້າງທີ່ເປັນເຈົ້າຂອງ ຫຼື ຄວບຄຸມຢູ່ໃນຂອບເຂດຂອງໂຄງການໂດຍກົງ[7], ພ້ອມທັງການປ່ອຍທາດອາຍໂດຍທາງອ້ອມທີ່ກ່ຽວຂ້ອງກັບການຜະລິດພະລັງງານນອກເຂດໂຄງການ[8] ໂດຍໂຄງການ. ລູກຄ້າຈະເປັນຜູ້ດຳເນີນການຄິດໄລ່ປະລິມານຂອງການປ່ອຍທາດອາຍພິດເຮືອນແກ້ວປະຈຳປີໂດຍສອດຄ່ອງກັບວິທີການວິທະຍາ ແລະ ວິທີປະຕິບັດທີ່ດີ ແລະ ເປັນທີ່ຮັບຮູ້ໃນລະດັບສາກົນ.[9]

### *ການຊົມໃຊ້ນ້ຳ*

9. ໃນກໍລະນີທີ່ໂຄງການມີທ່າອ່ຽງວ່າຈະເປັນຜູ້ຊົມໃຊ້ນ້ຳໃນປະລິມານຫຼາຍ, ນອກຈາກການນຳໃຊ້ເງື່ອນໄຂກ່ຽວກັບຊັບພະຍາກອນທີ່ມີປະສິດທິພາບໃນມາດຕະຖານການດຳເນີນງານດັ່ງກ່າວນີ້ແລ້ວ, ລູກຄ້າຄວນຈະນຳໃຊ້ມາດຕະການທີ່ຫຼີກເວັ້ນ ແລະ ຫຼຸດຜ່ອນການນຳໃຊ້ນ້ຳເພື່ອໃຫ້ການຊົມໃຊ້ນ້ຳຂອງໂຄງການບໍ່ສົ່ງຜົນກະທົບທາງລົບຫຼາຍຕໍ່ຜູ້ອື່ນ. ມາດຕະການເຫຼົ່ານີ້ລວມເອົາແຕ່ບໍ່ຈຳກັດພຽງແຕ່ການນຳໃຊ້ມາດຕະການປະຢັດນ້ຳທີ່ມີຄວາມເປັນໄປໄດ້ທາງເຕັກນິກພາຍໃນການດຳເນີນງານຂອງລູກຄ້າ, ການນຳໃຊ້ແຫຼ່ງນ້ຳທີ່ເປັນທາງເລືອກອື່ນ, ການທົດແທນ/ຊົດເຊີຍການຊົມໃຊ້ນ້ຳເພື່ອຫຼຸດຜ່ອນຄວາມຕ້ອງການຊັບພະຍາກອນນ້ຳໂດຍລວມພາຍໃນຂອບຂອງຄວາມສາມາດໃນການສະໜອງ, ແລະ ການປະເມີນຫາທີ່ຕັ້ງທີ່ເປັນທາງເລືອກອື່ນຂອງໂຄງການ.

## ການປ້ອງກັນມົນລະພິດ

10. ລູກຄ້າຈະຫຼີກເວັ້ນການປ່ອຍສານມົນລະພິດ ຫຼືໃນກໍລະນີທີ່ບໍ່ສາມາດຫຼີກເວັ້ນໄດ້ ລູກຄ້າຈະຫຼຸດຜ່ອນແລະ/ຫຼື ຄວບຄຸມຄວາມເຂັ້ມຂຸ້ນ ແລະ ປະລິມານມວນ

[6] ການຄິດໄລ່ປະລິມານຂອງການປ່ອຍທາດອາຍພິດຄວນພິຈາລະນາແຫຼ່ງປ່ອຍທາດອາຍພິດເຮືອນແກ້ວທີ່ ຫຼາຍກ່ວາໝູ່ ລວມທັງແຫຼ່ງປ່ອຍທີ່ບໍ່ກ່ຽວກັບພະລັງງານເຊັ່ນ ອາຍມີແທນ (methane) ແລະ ອາຍໄນຕຣັດອອກຊາຍ (nitrous oxide) ແລະ ອື່ນໆ.

[7] ການປ່ຽນແປງອັນເນື່ອງມາຈາກໂຄງການ ຕໍ່ກັບປະລິມານຂອງທາດກາກບອນໃນດິນ ຫຼື ໃນມວນຊີວະເທິງໜ້າດິນ ແລະ ການຍ່ອຍສະຫຼາຍຂອງສານອິນຊີອັນ ເນື່ອງມາຈາກໂຄງການອາດຈະປະກອບສ່ວນເຂົ້າໃນແຫຼ່ງປ່ອຍທາດອາຍໂດຍກົງ ແລະ ຄວນລວມໃນການຄິດໄລ່ປະລິມານການປ່ອຍທາດອາຍໃນບ່ອນທີ່ຄາດການວ່າ ຈະມີການປ່ອຍທາດອາຍເປັນຈຳນວນຫຼາຍ.

[8] ໝາຍເຖິງການຜະລິດໄຟຟ້າອັນອື່ນນອກເຂດສະໜາມໂຄງການ ແລະພະລັງງານຄວາມຮ້ອນ ຫຼື ຄວາມເຢັນທີ່ນຳໃຊ້ໃນໂຄງການ.

[9] ຄະນະກຳມະການລະຫວ່າງລັດຖະບານວ່າດ້ວຍການປ່ຽນແປງຂອງດິນຟ້າອາກາດ, ອົງການຈັດຕັ້ງສາກົນຕ່າງໆ, ແລະ ອົງກອນທີ່ກ່ຽວຂ້ອງຂອງປະເທດເຈົ້າພາບຈະເປັນຜູ້ສະໜອງວິທີການວິທະຍາໃນການຄິດໄລ່ການປະເມີນໃຫ້.

ສານຂອງການປ່ອຍໃຫ້ຕ່ຳສຸດ. ການຫຼຸດຜ່ອນ ແລະ/ຫຼື ການຄວບຄຸມດັ່ງກ່າວຈະນຳໃຊ້ກັບການປ່ອຍສານມົນລະພິດໃສ່ອາກາດ, ນ້ຳ ແລະ ດິນ ອັນເນື່ອງມາຈາກສະພາບເງື່ອນໄຂປົກກະຕິ, ບໍ່ປົກກະຕິ ແລະ ບັງເອີນ ທີ່ມີທ່າແຮງສົ່ງຜົນກະທົບໃນລະດັບທ້ອງຖິ່ນ, ພາກພື້ນແລະ ຂ້າມປະເທດ[10]. ໃນກໍລະນີທີ່ມີປະຫວັດເກີດມົນລະພິດມາກ່ອນແລ້ວເຊັ່ນ ມີສິ່ງເຈືອປົນໃນດິນ ແລະ ໃນນ້ຳບາດານລູກຄ້າຈະຊອກຫາວິທີທາງເພື່ອກຳນົດວ່າເຂົາເຈົ້າມີໜ້າທີ່ຮັບຜິດຊອບໃນການສ້າງມາດຕະການຫຼຸດຜ່ອນ ຫຼື ບໍ່. ຖ້າກຳນົດເຫັນວ່າລູກຄ້າມີໜ້າທີ່ຮັບຜິດຊອບທາງກົດໝາຍ, ກໍ່ໝາຍຄວາມວ່າພັນທະໜ້າທີ່ເຫຼົ່ານີ້ຈະໄດ້ຮັບການແກ້ໄຂໂດຍອີງຕາມກົດໝາຍຂອງປະເທດ ຫຼື ຖ້າກົດໝາຍບໍ່ສາມາດນຳໃຊ້ໄດ້, ກໍ່ໃຫ້ປະຕິບັດຕາມບົດຮຽນທີ່ດີຂອງສາກົນກ່ຽວກັບວຽກງານອຸດສາຫະກຳ.[11]

11. ເພື່ອແກ້ໄຂທ່າແຮງຜົນກະທົບທາງລົບຂອງໂຄງການຕໍ່ສະພາບແວດລ້ອມປະຈຸບັນ[12], ລູກຄ້າຈະພິຈາລະນາປັດໄຈຕ່າງໆທີ່ກ່ຽວຂ້ອງຕົວຢ່າງ: (i) ສະພາບແວດລ້ອມໃນປະຈຸບັນ; (ii) ຄວາມສາມາດໃນການດູດຊຶມທີ່ຈຳກັດ[13] ຂອງສິ່ງແວດລ້ອມ; (iii) ການນຳໃຊ້ທີ່ດິນທີ່ມີຢູ່ໃນປະຈຸບັນ ແລະ ໃນອະນາຄົດ; (iv) ໄລຍະຫ່າງຂອງໂຄງການທີ່ໃກ້ກັບເຂດທີ່ມີຄວາມສຳຄັນທາງດ້ານຊີວະນາໆພັນ; ແລະ (v) ທ່າອ່ຽງຂອງການເກີດຜົນກະທົບສະສົມທີ່ມີຜົນຕາມມາອັນບໍ່ແນ່ນອນ ແລະ/ຫຼືບໍ່ສາມາດເອົາກັບມາຄືນໄດ້. ໃນກໍລະນີທີ່ໂຄງການມີທ່າແຮງທີ່ຈະປະກອບສ່ວນເປັນແຫຼ່ງປ່ອຍມົນລະພິດທີ່ຫຼວງຫຼາຍໃນເຂດທີ່ມີຄວາມຊຸດໂຊມຢູ່ແລ້ວ – ນອກຈາກການນຳໃຊ້ມາດຕະການຂອງຊັບພະຍາກອນທີ່ມີປະສິດທິພາບແລະ ການຄວບຄຸມມົນລະພິດທີ່ໄດ້ກຳນົດໄວ້ໃນມາດຕະຖານການດຳເນີນງານດັ່ງກ່າວນີ້ – ລູກຄ້າຈະຕ້ອງພິຈາລະນາຍຸດທະສາດເພີ່ມເຕີມ ແລະ ນຳໃຊ້ມາດຕະການເພື່ອຫຼີກເວັ້ນ ແລະ ຫຼຸດຜ່ອນຜົນກະທົບທາງລົບ. ຍຸດທະສາດເຫຼົ່ານີ້ລວມເອົາ ແຕ່ບໍ່ຈຳກັດພຽງແຕ່ການປະເມີນຜົນຫາທີ່ຕັ້ງອື່ນຂອງໂຄງການ ແລະ ການສ້າງຄວາມສົມດຸນຄືນ.

[10] ມົນລະພິດຂ້າມປະເທດລວມມີສິ່ງຕ່າງໆທີ່ໄດ້ກວມເອົາພາຍໃຕ້ສົນທິສັນຍາວ່າດ້ວຍການເຄື່ອນຍ້າຍຂອງມົນລະພິດທາງອາກາດ.

[11] ອາດຈະຈຳເປັນຕ້ອງປະສານງານກັບອຳນາດການປົກຄອງຂັ້ນສູນກາງ ແລະທ້ອງຖິ່ນ, ຊຸມຊົນ ແລະ ຜູ້ປະກອບສ່ວນຕໍ່ການເຈືອປົນດັ່ງກ່າວ ແລະ ໃຫ້ມີການປະເມີນຜົນທີ່ປະຕິ ບັດຕາມວິທີການບົນພື້ນຖານຄວາມສ່ຽງທີ່ສອດຄ່ອງກັບວິທີປະຕິບັດສາກົນທີ່ດີຂອງວຽກງານອຸດສາຫະກຳດັ່ງທີ່ໄດ້ກຳນົດໃນບົດແນະນຳດ້ານສິ່ງແວດລ້ອມ, ສຸຂະພາບ ແລະ ຄວາມປອດໄພ.

[12] ເຊັ່ນທາງອາກາດ, ໜ້ານ້ຳ ແລະ ນ້ຳໄຕ້ດິນ ແລະ ໜ້າດິນ.

[13] ຄວາມສາມາດຂອງສິ່ງແວດລ້ອມໃນການດູດເອົາປະລິມານທີ່ເພີ່ມຂຶ້ນຂອງສານມົນລະພິດ ແຕ່ ກໍ່ຮັກສາລະດັບມົນລະພິດໃຫ້ບໍ່ເກີນເພດານທີ່ເປັນຄວາມສ່ຽງທີ່ບໍ່ສາມາດຍອມ ຮັບໄດ້ຕໍ່ກັບສຸຂະພາບຂອງມະນຸດ ແລະ ສິ່ງແວດລ້ອມ.

### *ສິ່ງເສດເຫຼືອ*

12. ລູກຄ້າຈະຫຼີກເວັ້ນການສ້າງສິ່ງເສດເຫຼືອທີ່ເປັນອັນຕະລາຍ ແລະ ບໍ່ເປັນອັນຕະລາຍ. ໃນກໍລະນີທີ່ບໍ່ສາມາດຫຼີກເວັ້ນການສ້າງສິ່ງເສດເຫຼືອໄດ້ ລູກຄ້າຈະຫຼຸດຜ່ອນການສ້າງສິ່ງເສດເຫຼືອ ແລະ ກູ້ເອົາ ແລະ ໝູນໃຊ້ສິ່ງເສດເຫຼືອຄືນໃໝ່ໃນລັກສະນະທີ່ປອດໄພຕໍ່ສຸຂະພາບ ແລະ ສິ່ງແວດລ້ອມ. ໃນກໍລະນີທີ່ບໍ່ສາມາດກູ້ເອົາ ຫຼື ໝູນໃຊ້ສິ່ງເສດເຫຼືອຄືນໃໝ່ໄດ້ລູກຄ້າຈະບໍາບັດ, ທໍາລາຍ ຫຼື ກໍາຈັດສິ່ງເສດເຫຼືອໃນລັກສະນະທີ່ປອດໄພຕໍ່ສິ່ງແວດລ້ອມທີ່ມີການຄວບຄຸມການປ່ອຍທາດອາຍພິດ ແລະ ສິ່ງຕົກຄ້າງທີ່ເປັນຜົນມາຈາກການຂົນສົ່ງ ແລະ ຈັດການກັບສິ່ງເສດເຫຼືອ. ຖ້າຫາກສິ່ງເສດເຫຼືອທີ່ສ້າງຂຶ້ນເຫັນວ່າເປັນອັນຕະລາຍ,[14] ລູກຄ້າຈະນໍາໃຊ້ທາງເລືອກຂອງບົດຮຽນຂອງສາກົນທີ່ດີກ່ຽວກັບວຽກງານອຸດສາຫະກໍາໃນການກໍາຈັດສິ່ງເສດເຫຼືອທີ່ຮັບປະກັນທາງດ້ານສິ່ງແວດລ້ອມໃນເວລາດຽວກັນກໍປະຕິບັດຕາມຂໍ້ຈໍາກັດຂອງການເຄື່ອນຍ້າຍສິ່ງເສດເຫຼືອທີ່ເປັນອັນຕະລາຍຂ້າມປະເທດ.[15] ໃນກໍລະນີທີ່ຝ່າຍທີສາມເປັນຜູ້ກໍາຈັດສິ່ງເສດເຫຼືອອັນຕະລາຍລູກຄ້າຈະໃຊ້ບໍລິສັດຜູ້ຮັບເໝົາທີ່ມີສຽງ ແລະ ຖືກຕ້ອງຕາມກົດໝາຍທີ່ໄດ້ຮັບໃບອະນຸຍາດຈາກອົງກອນຄຸ້ມຄອງທີ່ກ່ຽວຂ້ອງຂອງລັດ ແລະ ໄດ້ຮັບເອກະສານຕາມຕ່ອງໂສ້ງການຄຸ້ມຄອງ (ຫຼື chain of custody documentation) ຈົນຮອດປາຍທາງສຸດທ້າຍ. ລູກຄ້າຈະຕ້ອງຮັບປະກັນວ່າສະໜາມກໍາຈັດສິ່ງເສດເຫຼືອທີ່ມີໃບອະນຸຍາດໄດ້ເຄື່ອນໄຫວຕາມມາດຕະຖານທີ່ຍອມຮັບໄດ້ ຫຼື ບໍ່ ແລະ ເຄື່ອນໄຫວຢູ່ໃສ ກ່ອນທີ່ລູກຄ້າຈະນໍາໃຊ້ສະໜາມກໍາຈັດສິ່ງເສດເຫຼືອເຫຼົ່ານີ້. ຖ້າເປັນໄປບໍ່ໄດ້ລູກຄ້າຄວນຫຼຸດຜ່ອນສິ່ງເສດເຫຼືອທີ່ຈະສົ່ງໄປສະໜາມດັ່ງກ່າວ ແລະ ພິຈາລະນາທາງເລືອກອື່ນໃນການກໍາຈັດລວມ ທັງຄວາມເປັນໄປໄດ້ໃນການສ້າງບ່ອນກູ້ຄືນ ຫຼື ຝັງກົບຂອງຕົນເອງໃນເຂດໂຄງການ.

### *ການຄຸ້ມຄອງວັດຖຸທີ່ເປັນອັນຕະລາຍ*

13. ບາງຄັ້ງໂຄງການກໍ່ນໍາໃຊ້ວັດຖຸທີ່ເປັນອັນຕະລາຍເພື່ອເປັນວັດຖຸດິບ ຫຼື ເພື່ອສ້າງຜະລິດຕະພັນໃດໜຶ່ງຂຶ້ນ. ລູກຄ້າຈະຫຼີກເວັ້ນ ຫຼື ໃນກໍລະນີທີ່ບໍ່ສາມາດທີ່ຈະຫຼີກເວັ້ນໄດ້, ຈະຫຼຸດຜ່ອນ ຫຼື ຄວບຄຸມການປ່ອຍວັດຖຸອັນຕະລາຍອອກສູ່ສິ່ງແວດລ້ອມ. ໃນກໍລະນີນີ້, ລູກຄ້າຕ້ອງໄດ້ເຮັດການປະເມີນການຜະລິດ, ການຂົນສົ່ງ, ການຮັບມື, ການເກັບຮັກສາ ແລະ ການນໍາໃຊ້ວັດຖຸທີ່ເປັນອັນຕະລາຍໃນກິດຈະກໍາຂອງໂຄງການ. ລູກຄ້າຈະພິຈາລະນານໍາໃຊ້ວັດຖຸທີ່ເປັນອັນຕະລາຍໜ້ອຍກ່ວາແທນ ໃນກໍລະນີທີ່ວັດຖຸອັນຕະລາຍຈະຖືກນໍາໃຊ້ໃນຂະບວນການຜະລິດ ແລະ ກິດຈະກໍາອື່ນໆ. ລູກຄ້າຈະຫຼີກເວັ້ນການຜະລິດ, ການຄ້າ ແລະ ການນໍາໃຊ້ສານເຄມີ ແລະ ວັດຖຸອັນຕະລາຍທີ່ມີການຫວງຫ້າມໃນລະດັບສາກົນ ຫຼື ຄ່ອຍໆຢຸດເຊົາ ອັນເນື່ອງມາຈາກສານພິດປະລິມານສູງສໍາລັບສິ່ງທີ່ມີຊີວິດ, ມີສານຕົກຄ້າງຍາວນານໃນສິ່ງແວດລ້ອມ, ມີທ່າອ່ຽງໃນການເກີດການສະສົມສານພິດໃນສິ່ງທີ່ມີຊີວິດ ຫຼື ທ່າອ່ຽງທີ່ເຮັດໃຫ້ຊັ້ນໂອໂຊນໃນຊັ້ນບັນຍາກາດບາງລົງ.[16]

### *ການນໍາໃຊ້ ແລະ ການຄຸ້ມຄອງຢາປາບສັດຕູພືດ*

14. ໃນກໍລະນີທີ່ເໝາະສົມ ລູກຄ້າຈະສ້າງ ແລະ ຈັດຕັ້ງປະຕິບັດວິທີການ ການຄຸ້ມຄອງສັດຕູພືດແບບປະສົມປະສານ (IPM) ແລະ/ຫຼື ການຄຸ້ມຄອງພາຫະນໍາເຊື້ອແບບປະສົມປະສານ (IVM) ໂດຍຕັ້ງເປົ້າໃສ່ການຕິດແປດຂອງສັດຕູພືດທີ່ສົ່ງຜົນກະທົບທາງເສດຖະກິດຢ່າງຫຼວງຫຼາຍ ແລະ ພາຫະນໍາເຊື້ອພະຍາດທີ່ສົ່ງຜົນກະທົບຕໍ່ສາທາລະນະສຸກ. ແຜນງານການຄຸ້ມຄອງສັດຕູພືດແບບປະສົມປະສານ ແລະ ການຄຸ້ມຄອງພາຫະນໍາເຊື້ອແບບປະສົມປະສານຂອງລູກຄ້າຈະເຊື່ອມສານເອົາການປະສານນໍາໃຊ້ຂໍ້ມູນຂ່າວສານທາງດ້ານສັດຕູພືດ ແລະ ສິ່ງແວດລ້ອມຄຽງຄູ່ກັນກັບວິທີການໃນການຄວບຄຸມສັດຕູພືດທີ່ລວມທັງວິທີປະຕິບັດຂອງວັດທະນະທໍາທ້ອງຖິ່ນ, ທາງຊີວະວິທະຍາ, ທາງກໍາມະພັນ ແລະ ສໍາລັບທາງເລືອກສຸດທ້າຍແມ່ນວິທີການທາງດ້ານເຄມີເພື່ອສະກັດກັ້ນການກໍ່ຄວາມເສຍຫາຍຂອງສັດຕູພືດທີ່ມີຜົນກະທົບຮຸນແຮງທາງເສດຖະກິດ ແລະ/ຫຼື ການຕິດເຊື້ອພະຍາດໃນຄົນ ແລະ ສັດ.

15. ໃນກໍລະນີທີ່ກິດຈະກໍາການຄຸ້ມຄອງສັດຕູພືດລວມເອົາການນໍາໃຊ້ຢາປາບສັດຕູພືດທີ່ເປັນສານເຄມີ, ລູກຄ້າຈະເລືອກຢາເຄມີປາບສັດຕູພືດທີ່ມີລະດັບເປັນພິດຕໍ່າຕໍ່ມະນຸດ ແລະ ຮັບຮູ້ວ່າມີປະສິດທິຜົນຕໍ່ພັນສັດຕູພືດເປົ້າໝາຍ ແລະ ມີຜົນກະທົບຕໍ່າສຸດຕໍ່ສິ່ງແວດລ້ອມ ແລະ ພັນສັດທີ່ບໍ່ແມ່ນເປົ້າໝາຍ. ໃນເວລາທີ່ລູກຄ້າເລືອກສານເຄມີປາບສັດຕູພືດ, ການເລືອກໃຊ້ສານດັ່ງກ່າວຕ້ອງຢູ່ບົນພື້ນຖານຂໍ້ກໍານົດເງື່ອນໄຂທີ່ວ່າຢາປາບສັດຕູພືດດັ່ງກ່າວມີການຫຸ້ມຫໍ່ໃນພາຊະນະບັນຈຸທີ່ປອດໄພ, ມີສະຫຼາກຕິດວ່ານໍາໃຊ້ໄດ້ປອດໄພ ແລະ ເໝາະສົມ ແລະ ຜູ້ຜະລິດຢາປາບສັດຕູພືດດັ່ງກ່າວແມ່ນຫົວໜ່ວຍທີ່ເຄື່ອນໄຫວໃນປັດຈຸບັນ ແລະ ມີໃບອະນຸຍາດຈາກອົງການຂອງລັດທີ່ກ່ຽວຂ້ອງ.

16. ລູກຄ້າຈະອອກແບບລະບອບການນໍາໃຊ້ຢາປາບສັດຕູພືດຂອງເຂົາເຈົ້າເພື່ອ (i) ຫຼີກເວັ້ນສິ່ງຜົນເສຍຫາຍຕໍ່ສັດຕູທໍາມະຊາດຂອງສັດຕູພືດ ທີ່ເປັນເປົ້າໝາຍ ແລະ ໃຫ້ຫຼຸດຜ່ອນໃຫ້ຕໍ່າສຸດໃນກໍລະນີທີ່ບໍ່ສາມາດຫຼີກເວັ້ນໄດ້ ແລະ (ii) ຫຼີກເວັ້ນຄວາມສ່ຽງທີ່ກ່ຽວຂ້ອງກັບການພັດທະນາຄວາມດື້ຢາຂອງສັດຕູພືດ ແລະ ພາຫະນໍາເຊື້ອພະຍາດ ແລະ ໃຫ້ຫຼຸດຜ່ອນໃຫ້ຕໍ່າສຸດໃນກໍລະນີທີ່ບໍ່ສາມາດຫຼີກເວັ້ນໄດ້. ນອກຈາກນີ້ ການຮັບມື, ການເກັບຮັກສາ, ການນໍາໃຊ້ ແລະ ການກໍາຈັດຢາປາບສັດຕູພືດຕ້ອງປະຕິບັດຕາມລະບຽບສາກົນວ່າດ້ວຍການແຈກຢາຍ ແລະ ການນໍາໃຊ້ຢາປາບສັດຕູພືດຂອງອົງການອາຫານ ແລະ ການກະເສດໂລກ (FAO) ຫຼື ວິທີປະຕິບັດສາກົນທີ່ດີຂອງວຽກງານອຸດສາຫະກໍາອື່ນໆ.

17. ລູກຄ້າຈະບໍ່ຊື້, ເກັບຮັກສາ, ນໍາໃຊ້, ຜະລິດ ຫຼື ຄ້າຜະລິດຕະພັນທີ່ນອນຢູ່ໃນປະເພດທີ 1a (ອັນຕະລາຍຮ້າຍແຮງ) ຂອງບົດແນະນໍາການຈັດປະເພດຢາປາບສັດຕູພືດຕາມຄວາມອັນຕະລາຍຂອງອົງການ WHO; ຫຼື 1b (ອັນຕະລາຍຫຼາຍ). ລູກຄ້າຈະບໍ່ຊື້, ເກັບຮັກສາ, ນໍາໃຊ້, ຜະລິດ ຫຼື ຄ້າຢາປາບສັດຕູພືດປະເພດ 2 (ອັນຕະລາຍປານກາງ) ເວັ້ນເສຍແຕ່ວ່າໂຄງການຈະມີການຄວບຄຸມການຜະລິດ, ການຈັດຊື້, ຫຼື ການຈັດຈໍາໜ່າຍ/ແຈກຢາຍ ແລະ/ຫຼື ນໍາໃຊ້ສານເຄມີເຫຼົ່ານັ້ນຢ່າງເໝາະສົມ. ບໍ່ຄວນໃຫ້ບຸກຄະລາກອນທົ່ວໄປສາມາດເຂົ້າເຖິງສານເຄມີເຫຼົ່ານີ້ໄດ້ໂດຍປາສະຈາກການຝຶກອົບຮົມ, ອຸປະກອນ ແລະ ສິ່ງອໍານວຍຄວາມສະດວກຕ່າງໆທີ່ແທດເໝາະໃນການຮັບມື, ເກັບຮັກສາ, ນໍາໃຊ້ ແລະ ກໍາຈັດຜະລິດຕະພັນເຫຼົ່ານີ້ຢ່າງເໝາະສົມ.

14 ຕາມທີ່ໄດ້ກໍານົດໂດຍສົນທິສັນຍາສາກົນ ຫຼື ນິຕິກໍາຂອງປະເທດດັ່ງກ່າວ.

15 ການເຄື່ອນຍ້າຍສິ່ງເສດເຫຼືອທີ່ເປັນອັນຕະລາຍຂ້າມປະເທດຄວນສອດຄ່ອງກັບກົດໝາຍຂອງປະເທດ, ຂອງທ້ອງຖິ່ນ, ແລະ ຂອງສາກົນ ລວມທັງ ສົນທິສັນຍາບາເຊວວ່າດ້ວຍ ການຄວບຄຸມການເຄື່ອນຍ້າຍຂ້າມແດນ ແລະ ການກໍາຈັດສິ່ງເສດເຫຼືອທີ່ເປັນອັນຕະລາຍ ແລະ ສົນທິສັນຍາລອນດອນວ່າດ້ວຍການສະກັດກັ້ນມົນລະພິດທາງທະເລອັນເປັນຜົນມາຈາກສິ່ງເສດເຫຼືອ ແລະ ວັດສະດຸອື່ນໆ.

16 ສອດຄ່ອງກັບຈຸດປະສົງຂອງສົນທິສັນຍາສະຕອກໂຮມວ່າດ້ວຍສານພິດທີ່ຕົກຄ້າງຍາວນານ ແລະ ອະນຸສັນຍາມອນທຣຽວວ່າດ້ວຍສານທໍາລາຍຊັ້ນໂອໂຊນ. ຄວນມີການພິຈາລະນາໃນລັກສະນະດຽວຕໍ່ກັບການນໍາໃຊ້ເກນຈັດປະເພດຂອງຢາປາບສັດຕູພືດຂອງອົງການອະນາໄມໂລກ.

มาดตะฐานภาบดำเนินງານທີ 4

# ສຸຂະພາບ, ຄວາມປອດໄພ ແລະ ການປ້ອງກັນຄວາມສະຫງົບ ຂອງຊຸມຊົນ

## ພາກສະເໜີ

1. ມາດຕະຖານການດຳເນີນງານທີ 4 ຮັບຮູ້ວ່າກິດຈະກຳ, ອຸປະກອນ ແລະ ໂຄງລ່າງພື້ນຖານຂອງໂຄງການສາມາດເພີ່ມຄວາມສ່ຽງ ແລະ ຜົນກະທົບຕໍ່ຊຸມຊົນໄດ້. ນອກຈາກນີ້, ບັນດາຊຸມຊົນທີ່ຈະພົບກັບຜົນກະທົບຈາກການປ່ຽນແປງຂອງດິນຟ້າອາກາດອາດຈະປະສົບກັບຜົນກະທົບທີ່ຫຼາຍ ແລະ/ຫຼື ຮ້າຍແຮງຂຶ້ນອັນເປັນຜົນມາຈາກກິດຈະກຳຂອງໂຄງການ. ໃນຂະນະທີ່ມີການຮັບຮູ້ເຖິງບົດບາດຂອງອຳນາດການປົກຄອງຂອງລັດຕໍ່ກັບການສົ່ງເສີມສຸຂະພາບ, ຄວາມປອດໄພ ແລະ ການປ້ອງກັນຄວາມສະຫງົບຂອງສັງຄົມແລ້ວ ມາດຕະຖານການດຳເນີນງານນີ້ໄດ້ອະທິບາຍເຖິງໜ້າທີ່ຮັບຜິດຊອບຂອງລູກຄ້າເພື່ອຫຼີກເວັ້ນ ຫຼື ຫຼຸດຜ່ອນຄວາມສ່ຽງ ແລະ ຜົນກະທົບໃຫ້ຕ່ຳສຸດຕໍ່ກັບສຸຂະພາບ, ຄວາມປອດໄພ ແລະ ຄວາມສະຫງົບໃຫ້ຊຸມຊົນ ທີ່ອາດຈະເກີດຈາກກິດຈະກຳທີ່ກ່ຽວຂ້ອງກັບໂຄງການ ໂດຍເອົາໃຈໃສ່ສະເພາະກັບກຸ່ມທີ່ບໍ່ສາມາດຊ່ວຍເຫຼືອຕົນເອງໄດ້.

2. ໃນເຂດທີ່ມີການຂັດແຍ່ງ ຫຼື ຫຼັງການຂັດແຍ່ງ, ລະດັບຄວາມສ່ຽງ ແລະ ຜົນກະທົບທີ່ໄດ້ອະທິບາຍໃນມາດຕະຖານການດຳເນີນງານອາດຈະສູງກວ່າ. ຄວາມສ່ຽງທີ່ວ່າໂຄງການອາດຈະເປັນຕົວເຮັດໃຫ້ສະຖານະການທ້ອງຖິ່ນທີ່ອ່ອນໄຫວຢູ່ແລ້ວນັ້ນຮ້າຍແຮງກວ່າເກົ່າ ແລະ ເພີ່ມຄວາມກົດດັນຕໍ່ຊັບພະຍາກອນທ້ອງຖິ່ນທີ່ມີຈຳກັດຢູ່ແລ້ວບໍ່ຄວນຖືກເບິ່ງຂ້າມ ຍ້ອນວ່າມັນອາດຈະນຳໄປສູ່ຂໍ້ຂັດແຍ່ງເພີ່ມເຕີມ.

## ວັດຖຸປະສົງ

- ເພື່ອຄາດການ ແລະ ຫຼີກເວັ້ນຜົນກະທົບທາງລົບຕໍ່ກັບສຸຂະພາບ ແລະ ຄວາມປອດໄພຂອງຊຸມຊົນທີ່ໄດ້ຮັບຜົນກະທົບຕະຫຼອດໄລຍະອາຍຸຂອງໂຄງການທັງໃນສະພາບເງື່ອນໄຂປົກກະຕິ ແລະ ບໍ່ປົກກະຕິ.
- ເພື່ອຮັບປະກັນວ່າການປົກປ້ອງບຸກຄະລາກອນ ແລະ ຊັບສິນມີການດຳເນີນໂດຍສອດຄ່ອງກັບຫຼັກການສິດທິມະນຸດຕ່າງໆທີ່ກ່ຽວຂ້ອງ ແລະ ເປັນລັກສະນະທີ່ຫຼີກເວັ້ນຄວາມສ່ຽງຕໍ່ຊຸມຊົນທີ່ໄດ້ຮັບຜົນກະທົບ.

## ຂອບເຂດການນຳໃຊ້

3. ຄວາມສາມາດໃນການນຳໃຊ້ມາດຕະຖານການດຳເນີນງານນີ້ແມ່ນກຳນົດຂຶ້ນໃນລະຫວ່າງຂະບວນການກຳນົດຄວາມສ່ຽງ ແລະ ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ. ການຈັດຕັ້ງປະຕິບັດການດຳເນີນງານຕ່າງໆທີ່ຈຳເປັນເພື່ອສາມາດປະຕິບັດຕາມຂໍ້ກຳນົດເງື່ອນໄຂຂອງມາດຕະຖານການດຳເນີນງານດັ່ງກ່າວນີ້ແມ່ນຄຸ້ມຄອງໂດຍຜ່ານລະບົບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ເຊິ່ງລາຍລະອຽດຂອງລະບົບດັ່ງກ່າວແມ່ນໄດ້ກຳນົດໃນມາດຕະຖານການດຳເນີນງານທີ 1 ແລ້ວ.

4. ມາດຕະຖານການດຳເນີນງານນີ້ໄດ້ແກ້ໄຂຄວາມສ່ຽງ ແລະ ຜົນກະທົບຕໍ່ກັບຊຸມຊົນທີ່ໄດ້ຮັບຜົນກະທົບຈາກກິດຈະກຳຂອງໂຄງການ. ເງື່ອນໄຂທາງດ້ານສຸຂະພາບ ແລະ ຄວາມປອດໄພຂອງແຮງງານແມ່ນໄດ້ລວມເຂົ້າໃນມາດຕະຖານການດຳເນີນງານທີ 2 ແລ້ວ ແລະ ມາດຕະຖານທາງສິ່ງແວດລ້ອມເພື່ອຫຼີກເວັ້ນ ຫຼື ຫຼຸດຜ່ອນຜົນກະທົບຕໍ່ສຸຂະພາບຂອງຄົນ ແລະ ສິ່ງແວດລ້ອມອັນເປັນຜົນມາຈາກມົນລະພິດແມ່ນໄດ້ລວມເຂົ້າໃນມາດຕະຖານການດຳເນີນງານທີ 3 ແລ້ວ.

## ເງື່ອນໄຂ

### ສຸຂະພາບ ແລະ ຄວາມປອດໄພຂອງຊຸມຊົນ

5. ລູກຄ້າຈະປະເມີນຄວາມສ່ຽງ ແລະ ຜົນກະທົບຕໍ່ກັບສຸຂະພາບ ແລະ ຄວາມປອດໄພຂອງຊຸມຊົນທີ່ໄດ້ຮັບຜົນກະທົບໃນຕະຫຼອດໄລຍະວົງຈອນຂອງໂຄງການ ແລະ ສ້າງມາດຕະການໃນການສະກັດກັ້ນ ແລະ ຄວບຄຸມທີ່ສອດຄ່ອງກັບບົດຮຽນທີ່ດີຂອງສາກົນກ່ຽວກັບວຽກງານອຸດສາຫະກຳ, [1] ເຊັ່ນບົດແນະນຳທາງດ້ານສິ່ງແວດລ້ອມ, ສຸຂະພາບ ແລະ ຄວາມປອດໄພຂອງກຸ່ມທະນາຄານໂລກ ຫຼື ແຫຼ່ງຂໍ້ມູນອື່ນໆທີ່ຮັບຮູ້ໃນຂັ້ນສາກົນ. ລູກຄ້າຈະກຳນົດຄວາມສ່ຽງ ແລະ ຜົນກະທົບ ແລະ ສະເໜີມາດຕະການໃນການຫຼຸດຜ່ອນຄວາມສ່ຽງ ແລະ ຜົນກະທົບທີ່ສົມສັດສ່ວນກັບລັກສະນະຕົວຈິງ ແລະ ຂະໜາດຂອງຄວາມສ່ຽງ ແລະ ຜົນກະທົບ. ມາດຕະການເຫຼົ່ານີ້ຈະຖືເອົາການຫຼີກເວັ້ນຄວາມສ່ຽງ ແລະ ຜົນກະທົບເປັນຫຼັກຫຼາຍກວ່າການຫຼຸດຜ່ອນ.

### *ການອອກແບບ ແລະ ຄວາມປອດໄພຂອງໂຄງລ່າງພື້ນຖານ ແລະ ອຸປະກອນ*

6. ລູກຄ້າຈະອອກແບບ, ກໍ່ສ້າງ, ນຳໃຊ້, ແລະ ຮື້ຖອນອົງປະກອບຕ່າງໆຂອງໂຄງສ້າງ ຂອງໂຄງການອີງຕາມບົດຮຽນທີ່ດີຂອງສາກົນສຳລັບວຽກງານອຸດສາຫະກຳໂດຍພິຈາລະນາຄວາມສ່ຽງທາງດ້ານຄວາມປອດໄພຕໍ່ຝ່າຍທີສາມ ຫຼື ຊຸມຊົນທີ່ໄດ້ຮັບຜົນກະທົບ. ໃນເວລາທີ່ຄົນທົ່ວໄປຈະເຂົ້າມາໃນຕຶກອາຄານ ຫຼື ໂຄງສ້າງທີ່ຫາກໍ່ສ້າງແລ້ວໃໝ່ ລູກຄ້າຈະພິຈາລະນາຄວາມສ່ຽງທີ່ເພີ່ມຂຶ້ນ ກໍລະນີທີ່ຄົນທົ່ວໄປຈະປະເຊີນຕໍ່ອຸບັດຕິເຫດ ແລະ/ຫຼື ໄພອັນຕະລາຍທາງທຳມະຊາດ ແລະ ການພິຈາລະນາດັ່ງກ່າວຈະຕ້ອງສອດຄ່ອງກັບຫຼັກການສາກົນກ່ຽວກັບການເຂົ້າເຖິງໄດ້. ອົງປະກອບຂອງໂຄງສ້າງຈະໄດ້ຮັບການອອກແບບ ແລະ ກໍ່ສ້າງ ໂດຍນັກວິຊາການທີ່ມີຄວາມສາມາດ ແລະ ໄດ້ຮັບການຢັ້ງຢືນ ຫຼື ອະນຸມັດຈາກອຳນາດການປົກຄອງ ຫຼື ວິຊາການທີ່ກ່ຽວຂ້ອງ. ໃນເວລາທີ່ອົງປະກອບຂອງໂຄງສ້າງເຊັ່ນ: ເຂື່ອນ, ເຂື່ອນເກັບກັກສິ່ງເສດເຫຼືອຈາກການຜະລິດ (tailing dam), ຫຼື ອ່າງເກັບຂີ້ເທົ່າ (ash ponds) ຕັ້ງຢູ່ເຂດທີ່ມີຄວາມສ່ຽງສູງ, ຖ້າຫາກໂຄງສ້າງເຫຼົ່ານີ້ຫາກພັງລົງ ຫຼື ເກີດຄວາມບົກຜ່ອງກໍອາດຈະເປັນໄພຄຸກຄາມຕໍ່ຄວາມປອດໄພຂອງຊຸມຊົນໄດ້; ລູກຄ້າຈະຈ້າງຜູ້ຊ່ຽວຊານຄົນໜຶ່ງ ຫຼື ຫຼາຍຄົນທີ່ມີປະສົບການໃນໂຄງການທີ່ຄ້າຍຄືກັນ, ແຕ່ບໍ່ແມ່ນ ຄົນທີ່ກ່ຽວຂ້ອງກັບບັນດາຜູ້ມີໜ້າທີ່ຮັບຜິດຊອບໃນການອອກແບບ ແລະ ກໍ່ສ້າງ, ເພື່ອໃຫ້ເຂົາເຈົ້າດຳເນີນການທົບທວນຕັ້ງແຕ່ເລີ່ມຕົ້ນໃຫ້ໄວເທົ່າທີ່ຈະເປັນໄປໄດ້ໃນການພັດທະນາໂຄງການ ແລະ ທົບທວນຕະຫຼອດໄລຍະຕ່າງໆຂອງການອອກແບບ, ການກໍ່ສ້າງ, ການນຳໃຊ້, ແລະ ການຮື້ຖອນໂຄງການ. ສຳລັບໂຄງການທີ່ນຳໃຊ້ອຸປະກອນທີ່ມີການເຄື່ອນຍ້າຍຢູ່ຕາມທ້ອງຖະໜົນ ຫຼື ເປັນໂຄງລ່າງພື້ນຖານໃນລັກສະນະອື່ນໆ, ລູກຄ້າຈະຊອກຫາວິທີຫຼີກເວັ້ນການເກີດອຸບັດຕິເຫດ ແລະ ການບາດເຈັບຕໍ່ປະຊາຊົນທີ່ກ່ຽວຂ້ອງກັບການນຳໃຊ້ອຸປະກອນດັ່ງກ່າວ.

### *ການຄຸ້ມຄອງ ແລະ ຄວາມປອດໄພຂອງວັດຖຸອັນຕະລາຍ*

7. ລູກຄ້າຈະຫຼີກເວັ້ນ ແລະ ຫຼຸດຜ່ອນທ່າອ່ຽງຄວາມສ່ຽງຂອງຊຸມຊົນຕໍ່ກັບວັດຖຸ ແລະ ສານທີ່ເປັນອັນຕະລາຍທີ່ໂຄງການອາດຈະປ່ອຍອອກມາ. ໃນກໍລະນີທີ່ມີທ່າອ່ຽງວ່າ ສາທາລະນະຊົນ (ລວມທັງຜູ້ອອກແຮງງານ ແລະ ຄອບຄົວຂອງເຂົາເຈົ້າ) ອາດຈະໄດ້ຮັບໄພອັນຕະລາຍໂດຍສະເພາະແມ່ນໄພເຖິງຊີວິດ ລູກຄ້າຈະຕ້ອງໃຊ້ຄວາມເອົາໃຈໃສ່ເປັນພິເສດເພື່ອຫຼີກເວັ້ນ ຫຼື ຫຼຸດຜ່ອນຄວາມສ່ຽງໂດຍການດັດປັບ, ປ່ຽນແທນ ຫຼື ລົບລ້າງເງື່ອນໄຂ ຫຼື ວັດຖຸທີ່ກໍ່ໃຫ້ເກີດທ່າແຮງໄພອັນຕະລາຍເຫຼົ່ານັ້ນ. ໃນກໍລະນີທີ່ວັດຖຸອັນຕະລາຍເປັນພາກສ່ວນໜຶ່ງຂອງໂຄງລ່າງພື້ນຖານ ຫຼື ອົງປະກອບຂອງໂຄງການທີ່ມີຢູ່ ລູກຄ້າຈະຕ້ອງໄດ້ເອົາໃຈໃສ່ເປັນພິເສດໃນເວລາດຳເນີນກິດຈະກຳຮື້ຖອນໂຄງການ ເພື່ອທີ່ຈະຫຼີກເວັ້ນຄວາມສ່ຽງຕໍ່ກັບຊຸມຊົນ. ລູກຄ້າຈະໃຊ້ຄວາມພະຍາຍາມທີ່ສົມເຫດສົມຜົນທາງດ້ານການຄ້າເພື່ອຄວບຄຸມຄວາມປອດໄພໃນການຂົນສົ່ງວັດຖຸອັນຕະລາຍ ແລະ ການຂົນສົ່ງ ແລະ ການກຳຈັດສິ່ງເສດເຫຼືອທີ່ເປັນອັນຕະລາຍ ແລະ ຈະຈັດຕັ້ງປະຕິບັດມາດຕະການເພື່ອຫຼີກເວັ້ນ ແລະ ຄວບຄຸມຄວາມສ່ຽງຂອງຊຸມຊົນຕໍ່ຢາປາບສັດຕູພືດໂດຍອີງຕາມຂໍ້ກຳນົດເງື່ອນໄຂໃນມາດຕະຖານການດຳເນີນງານທີ 3.

### *ການບໍລິການລະບົບນິເວດ*

8. ຜົນກະທົບໂດຍກົງຂອງໂຄງການຕໍ່ກັບບໍລິການລະບົບນິເວດບູລິມະສິດອາດຈະເປັນຜົນໃຫ້ເກີດຄວາມສ່ຽງ ແລະ ຜົນກະທົບທາງລົບຕໍ່ສຸຂະພາບ ແລະ ຄວາມສ່ຽງຕໍ່ກັບຊຸມຊົນ. ໃນມາດຕະຖານການດຳເນີນງານນີ້ບໍລິການລະບົບນິເວດແມ່ນຈຳກັດສະເພາະແຕ່ປະເພດບໍລິການທີ່ສະໜອງ ແລະ ຄຸ້ມຄອງການບໍລິການຕ່າງໆດັ່ງທີ່ໄດ້ກຳນົດໃນວັກທີ 2 ຂອງມາດຕະຖານການດຳເນີນງານທີ 6. ຕົວຢ່າງ, ການປ່ຽນແປງການນຳໃຊ້ທີ່ດິນ ຫຼື ການສູນເສຍເຂດກັນຊົນທຳມະຊາດເຊັ່ນດິນບໍລິເວນນ້ຳ,

[1] ມີນິຍາມວ່າການນຳໃຊ້ສີມືແຮງງານ, ຄວາມດູໝັ່ນ, ຄວາມຮອບຄອບ, ແລະ ການເບິ່ງການໄກທີ່ຄາດການໃຫ້ບັນດາພະນັກງານວິຊາຊີບທີ່ມີທັກສະ ແລະ ປະສົບການຄວນມີ ເຊິ່ງເປັນຜູ້ທີ່ເຮັດວຽກປະເພດດຽວກັນພາຍໃຕ້ສະພາບເງື່ອນໄຂຄ້າຍຄືກັນຢູ່ທົ່ວໂລກ ຫຼື ໃນພາກພື້ນ.

ປ່າແຄມຝັ່ງທະເລ, ແລະ ປ່າເຂດເນີນສູງທີ່ຫຼຸດຜ່ອນຜົນກະທົບຂອງໄພອັນຕະລາຍທາງທຳມະຊາດເຊັ່ນ: ອຸທົກກະໄພ, ດິນເຈື່ອນ, ແລະ ອັກຄີໄພ ເຊິ່ງອາດຈະເຮັດໃຫ້ເພີ່ມຄວາມບອບບາງ ແລະ ຄວາມສ່ຽງ ແລະ ຜົນກະທົບທີ່ກ່ຽວຂ້ອງກັບຄວາມປອດໄພຂອງຊຸມຊົນ. ການຫຼຸດຜ່ອນ ຫຼື ການເຊື່ອມໂຊມຂອງຊັບພະຍາກອນທຳມະຊາດເຊັ່ນ: ຜົນກະທົບທາງລົບຕໍ່ຄຸນນະພາບ, ປະລິມານ ແລະ ບໍລິມາດຂອງນ້ຳຈືດ[2] ອາດຈະກໍ່ໃຫ້ເກີດຄວາມສ່ຽງ ແລະ ຜົນກະທົບທີ່ກ່ຽວຂ້ອງກັບສຸຂະພາບ. ໃນກໍລະນີທີ່ເໝາະສົມ ແລະ ເປັນໄປໄດ້, ລູກຄ້າຈະກຳນົດຄວາມສ່ຽງ ແລະ ທ່າແຮງຜົນກະທົບ ເຫຼົ່ານັ້ນຕໍ່ກັບການບໍລິການຂອງລະບົບນິເວດບູລິມະສິດທີ່ອາດຈະຖືກຜົນກະທົບດ້ານລົບຫຼາຍຂຶ້ນຈາກການປ່ຽນຂອງດິນຟ້າອາກາດ. ຄວນຫຼີກເວັ້ນຜົນກະທົບທາງລົບ ແລະ ຖ້າບໍ່ສາມາດຫຼີກເວັ້ນຜົນກະທົບເຫຼົ່ານີ້ໄດ້ ລູກຄ້າຈະຈັດຕັ້ງປະຕິບັດມາດຕະການຫຼຸດຜ່ອນຄວາມສ່ຽງ ແລະ ຜົນກະທົບຕາມວັກທີ 24 ແລະ 25 ຂອງມາດຕະຖານການດຳເນີນງານທີ 6. ຕໍ່ກັບການນຳໃຊ້ຂອງ ແລະ ການສູນເສຍການເຂົ້າເຖິງບໍລິການລະບົບນິເວດຕ່າງໆ ລູກຄ້າຈະຈັດຕັ້ງປະຕິບັດມາດຕະການຫຼຸດຜ່ອນຄວາມສ່ຽງ ແລະ ຜົນກະທົບຕາມວັກທີ 25 – 29 ຂອງມາດຕະຖານການດຳເນີນງານທີ 5.

***ຄວາມສ່ຽງຂອງຊຸມຊົນຕໍ່ກັບພະຍາດ***

9. ລູກຄ້າຈະຫຼີກເວັ້ນ ແລະ ຫຼຸດຜ່ອນທ່າອ່ຽງທີ່ຊຸມຊົນຈະຖືກກະທົບໃຫ້ຕ່ຳສຸດຕໍ່ກັບພະຍາດທີ່ເກີດຈາກນ້ຳ, ພະຍາດທີ່ອາໄສນ້ຳ, ພະຍາດທີ່ກ່ຽວຂ້ອງກັບນ້ຳ ແລະ ພະຍາດທີ່ເກີດຈາກພາຫະນຳເຊື້ອ ແລະ ພະຍາດຕິດຕໍ່ຕ່າງໆທີ່ອາດເກີດຈາກກິດຈະກຳຂອງໂຄງການ ໂດຍການພິຈາລະນາຄວາມສ່ຽງທີ່ແຕກຕ່າງກັນຕ່າງໆຕໍ່ກຸ່ມຄົນທີ່ບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ແລະ ຄວາມອ່ອນໄຫວຂອງກຸ່ມຄົນດັ່ງກ່າວ. ໃນກໍລະນີທີ່ພະຍາດໃດໜຶ່ງແຜ່ລະບາດໃນຊຸມຊົນໃນຂົງເຂດທີ່ໂຄງການດຳເນີນການຢູ່, ລູກຄ້າຄວນສຳຫຼວດຫາໂອກາດຕ່າງໆຕະຫຼອດ ໄລຍະຮອບວຽນອາຍຸຂອງໂຄງການເພື່ອປັບປຸງເງື່ອນໄຂທາງສິ່ງແວດລ້ອມທີ່ອາດຈະຊ່ວຍຫຼຸດຜ່ອນຈຳນວນຜູ້ຕິດແປດພະຍາດ.

10. ລູກຄ້າຈະຫຼີກເວັ້ນ ແລະ ຫຼຸດຜ່ອນການແຜ່ລາມຂອງພະຍາດຕິດຕໍ່ທີ່ອາດຈະກ່ຽວຂ້ອງກັບການເຂົ້າມາເຮັດວຽກຂອງແຮງງານຊົ່ວຄາວ ແລະ ແຮງງານຖາວອນ.

[2] ນ້ຳຈືດແມ່ນຕົວຢ່າງອັນໜຶ່ງຂອງບໍລິການລະບົບນິເວດ.

***ການກຽມພ້ອມ ແລະ ຕອບໂຕ້ເຫດສຸກເສີນ***

11. ນອກຈາກເງື່ອນໄຂກ່ຽວກັບການກຽມພ້ອມ ແລະ ການຕອບໂຕ້ເຫດສຸກເສີນທີ່ໄດ້ອະທິບາຍໃນມາດຕະຖານການດຳເນີນງານທີ 1 ແລ້ວ, ລູກຄ້າຈະໃຫ້ການຊ່ວຍເຫຼືອ ແລະ ປະສານສົມທົບກັບຊຸມຊົນທີ່ໄດ້ຮັບຜົນກະທົບ, ອຳນາດການປົກຄອງທ້ອງຖິ່ນ, ແລະ ຝ່າຍອື່ນໆທີ່ກ່ຽວຂ້ອງໃນການກະກຽມຂອງເຂົາເຈົ້າເພື່ອຕອບໂຕ້ເຫດສຸກເສີນຢ່າງມີປະສິດທິຜົນໂດຍສະເພາະໃນເວລາທີ່ການມີສ່ວນຮ່ວມ ແລະ ການປະສານ ສົມທົບຂອງເຂົາເຈົ້ານັ້ນເປັນສິ່ງຈຳເປັນໃນການຕອບໂຕ້ເຫດສຸກເສີນດັ່ງກ່າວ. ຖ້າຫາກອຳນາດການປົກຄອງທ້ອງຖິ່ນມີຄວາມສາມາດທີ່ຈຳກັດ ຫຼື ບໍ່ມີເລີຍຕໍ່ກັບການຕອບໂຕ້ຢ່າງມີປະສິດທິຜົນ ລູກຄ້າຈະເຮັດບົດບາດຢ່າງຫ້າວຫັນໃນການກະກຽມ ແລະ ຕອບໂຕ້ເຫດສຸກເສີນທີ່ກ່ຽວຂ້ອງກັບໂຄງການ. ລູກຄ້າຈະບັນທຶກກິດຈະກຳ,ຊັບພະຍາກອນ ແລະ ໜ້າທີ່ຮັບຜິດຊອບການກຽມພ້ອມ ແລະ ຕອບໂຕ້ເຫດ ສຸກເສີນຂອງລູກຄ້າ ແລະ ຈະເປີດເຜີຍຂໍ້ມູນຂ່າວສານທີ່ກ່ຽວຂ້ອງໃຫ້ຊຸມຊົນທີ່ໄດ້ຮັບຜົນກະທົບ, ອຳນາດການ ປົກຄອງທີ່ກ່ຽວຂ້ອງ, ຫຼື ຝ່າຍຕ່າງໆໄດ້ຮັບຮູ້.

## ພະນັກງານປ້ອງກັນຄວາມສະຫງົບ

12. ໃນເວລາທີ່ລູກຄ້າຈ້າງພະນັກງານໂດຍກົງ ຫຼື ສັນຍາຈ້າງມາເປັນພະນັກງານຮັກສາຄວາມປອດໄພ ແລະ ຄວາມສະຫງົບເພື່ອປົກປ້ອງບຸກຄະລາກອນ ແລະ ຊັບສິນຂອງລູກຄ້າ, ລູກຄ້າຈະປະເມີນຄວາມສ່ຽງຂອງການດຳເນີນການປ້ອງກັນຄວາມສະຫງົບຕໍ່ກັບຄົນທີ່ຢູ່ພາຍໃນ ແລະ ນອກເຂດຂອງໂຄງການ. ໃນການດຳເນີນການດັ່ງກ່າວ ລູກຄ້າຈະດຳເນີນໄປຕາມຫຼັກການສົມສັດສ່ວນ ແລະ ບົດຮຽນທີ່ດີຂອງສາກົນກ່ຽວກັບວຽກງານອຸດສາຫະກຳ[3] ທີ່ກ່ຽວຂ້ອງກັບການວ່າຈ້າງ, ກົດລະບຽບພະນັກງານ, ການຝຶກອົບຮົມ, ການປະກອບອຸປະກອນ, ການຕິດຕາມກວດກາຜູ້ອອກແຮງງານດັ່ງກ່າວ ແລະ ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ. ລູກຄ້າຈະຕ້ອງດຳເນີນການສອບຖາມຢ່າງສົມເຫດສົມຜົນເພື່ອຮັບປະກັນວ່າຜູ້ທີ່ປ້ອງກັນຄວາມສະຫງົບບໍ່ໄດ້ມີສ່ວນກ່ຽວພັນກັບກໍລະນີການສວຍໃຊ້ອຳນາດເກີນຂອບເຂດໃນອະດີດ; ຈະຝຶກອົບຮົມເຂົາເຈົ້າໃຫ້ພຽງພໍຕໍ່ກັບການນຳໃຊ້ກຳລັງ (ຫຼື ນຳໃຊ້ອາວຸດໃນກໍລະນີທີ່ສອດຄ່ອງ), ແລະ ການປະພຶດທີ່ເໝາະສົມຕໍ່ກັບຜູ້ອອກແຮງງານ ແລະ ຊຸມຊົນທີ່ໄດ້ຮັບຜົນກະທົບ; ແລະ ຮຽກຮ້ອງໃຫ້ເຂົາເຈົ້າປະຕິບັດພາຍໃຕ້ກົດໝາຍທີ່ກ່ຽວຂ້ອງ. ລູກຄ້າຈະ ບໍ່ສະໜັບສະໜູນການນຳໃຊ້ກຳລັງໃດໆຍົກເວັ້ນໃນການນຳໃຊ້ເພື່ອຈຸດປະສົງໃນການປົກປ້ອງ ຫຼື ປ້ອງກັນທີ່ສົມສ່ວນກັບລັກສະນະຕົວຈິງ ແລະ ລະດັບຂອງຄວາມສ່ຽງ. ລູກຄ້າຈະສະໜອງກົນໄກການຮ້ອງທຸກຕໍ່ກັບຊຸມຊົນທີ່ໄດ້ຮັບຜົນກະທົບເພື່ອໃຫ້ແຈ້ງຂໍ້ກັງວົນກ່ຽວກັບການຮັກສາຄວາມປອດໄພ ແລະ ການປະຕິບັດຂອງພະນັກງານຮັກສາຄວາມປອດໄພ.

[3] ລວມທັງວິທີປະຕິບັດທີ່ສອດຄ່ອງກັບຫຼັກປະຕິບັດຂອງອົງການສະຫະປະຊາຊາດສຳລັບເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ແລະ ຫຼັກການພື້ນຖານຂອງ UN ວ່າດ້ວຍການນຳໃຊ້ກຳລັງ ແລະ ອາວຸດຂອງເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ.

13. ລູກຄ້າຈະປະເມີນ ແລະ ບັນທຶກເອກະສານຄວາມສ່ຽງທີ່ເກີດຈາກການນຳໃຊ້ພະນັກງານປ້ອງກັນຄວາມສະຫງົບຂອງລັດທີ່ຖືກສົ່ງໄປສະໜອງການບໍລິການປ້ອງກັນຄວາມສະຫງົບຢູ່ທີ່ສະຖານທີ່ຕັ້ງຂອງໂຄງການ. ລູກຄ້າຈະຮັບປະກັນວ່າພະນັກງານປ້ອງກັນຄວາມສະຫງົບຂອງລັດຈະຕ້ອງ ປະ ພຶດຕົນໃນລັກສະນະທີ່ສອດຄ່ອງກັບວັກທີ 12 ຂ້າງເທິງນີ້ ແລະ ຊຸກຍູ້ໃຫ້ອົງການລັດທີ່ກ່ຽວຂ້ອງຕ້ອງເປີດເຜີຍໃຫ້ສັງຄົມຮູ້ກ່ຽວກັບລະບົບການຈັດຕັ້ງການຮັກສາຄວາມສະຫງົບຢູ່ທີ່ບັນດາຕຶກອາຄານຂອງລູກຄ້າບົນພື້ນຖານບໍ່ຂັດກັບຂໍ້ກັງວົນດ້ານການຮັກສາຄວາມສະຫງົບ.

14. ລູກຄ້າຈະພິຈາລະນາ ແລະ ໃນກໍລະນີທີ່ເໝາະສົມສືບສວນສອບສວນທຸກການກ່າວຫາກ່ຽວກັບການກະທຳທີ່ຜິດກົດໝາຍ ຫຼື ທາລຸນນະກຳຂອງພະນັກງານປ້ອງກັນຄວາມສະຫງົບ, ດຳເນີນການ (ຫຼື ຮຽກຮ້ອງໃຫ້ຝ່າຍທີ່ກ່ຽວຂ້ອງດຳເນີນການ) ເພື່ອສະກັດກັ້ນບໍ່ໃຫ້ເກີດຂຶ້ນອີກ, ແລະ ລາຍງານການກະທຳທີ່ຜິດກົດໝາຍ ຫຼື ທາລຸນນະກຳໃຫ້ອຳນາດການປົກຄອງໄດ້ຮັບຮູ້.

ມາດຕະຖານການດຳເນີນງານທີ 5

# ການໄດ້ມາຂອງທີ່ດິນ ແລະ ການຍົກຍ້າຍປະຊາຊົນແບບບໍ່ສະໝັກໃຈ

## ພາກສະເໜີ

1. ມາດຕະຖານການດຳເນີນງານທີ 5 ຮັບຮູ້ວ່າການໄດ້ມາຂອງທີ່ດິນ ແລະ ການຈຳກັດຕໍ່ການນຳໃຊ້ທີ່ດິນ ເຊິ່ງພົວພັນກັບໂຄງການນັ້ນສາມາດສົ່ງຜົນກະທົບທາງລົບຫຼາຍຢ່າງຕໍ່ຊຸມຊົນ ແລະ ປະຊາຊົນທີ່ນຳໃຊ້ທີ່ດິນກ່ຽວຂ້ອງດັ່ງກ່າວ. ການຍົກຍ້າຍຈັດສັນປະຊາຊົນແບບບໍ່ສະໝັກໃຈໝາຍເຖິງທັງສອງກໍລະນີຄືດັ່ງຕໍ່ໄປນີ້: ການຍົກຍ້າຍທາງກາຍະພາກ (ການຈັດສັນທີ່ຢູ່ອາໄສຄືນໃໝ່ ແລະ ການສູນເສຍທີ່ຢູ່ອາໄສເດີມ) ໄປຈົນເຖິງກໍລະນີການຍົກຍ້າຍທາງເສດຖະກິດ (ການສູນເສຍຊັບສິນ ຫຼື ການສູນເສຍການເຂົ້າເຖິງຊັບສິນທີ່ນຳໄປສູ່ການສູນເສຍລາຍໄດ້ ຫຼື ຮູບການອື່ນໆຂອງການຫາລ້ຽງຊີບ [1] ) ອັນເປັນຜົນເນື່ອງມາຈາກການໄດ້ມາຂອງທີ່ດິນ[2] ແລະ/ຫຼື ການຈຳກັດຕໍ່ການນຳໃຊ້ທີ່ດິນເຊິ່ງພົວພັນກັບໂຄງການ. ການຍົກຍ້າຍຈັດສັນປະຊາຊົນຈະຖືວ່າ ເປັນການຈັດຕັ້ງປະຕິບັດແບບບໍ່ສະໝັກໃຈໃນກໍລະນີທີ່ປະຊາຊົນ ຫຼື ຊຸມຊົນທີ່ຖືກກະທົບບໍ່ມີສິດທີ່ຈະປະຕິເສດການໄດ້ມາຂອງທີ່ດິນ ຫຼື ການຈຳກັດຕໍ່ການນຳໃຊ້ທີ່ດິນອັນເປັນຜົນເຮັດໃຫ້ມີການຍົກຍ້າຍທາງກາຍະພາກ ຫຼື ການຍົກຍ້າຍທາງເສດຖະກິດ. ການຍົກຍ້າຍປະຊາຊົນແບບບໍ່ສະໝັກໃຈເກີດຂຶ້ນໃນກໍລະນີ (i) ມີການເວນຄືນທີ່ດິນທີ່ຖືກຕ້ອງຕາມກົດໝາຍ ຫຼື ການຈຳກັດແບບຊົ່ວຄາວ ຫຼື ຖາວອນຕໍ່ສິດນຳໃຊ້ທີ່ດິນ ແລະ ການເຈລະຕາຍົກຍ້າຍເຊິ່ງຜູ້ຊື້ສາມາດນຳໃຊ້ມາດຕະການເວນຄືນທີ່ດິນ ຫຼື ວາງຂໍ້ກຳນົດທາງກົດໝາຍຕໍ່ສິດນຳໃຊ້ທີ່ດິນຖ້າການເຈລະຈາເພື່ອໃຫ້ຜູ້ຂາຍຍອມຍົກຍ້າຍຫາກບໍ່ປະສົບຜົນສຳເລັດ.

2. ເວັ້ນເສຍແຕ່ມີການຄຸ້ມຄອງຢ່າງຖືກຕ້ອງ, ການຍົກຍ້າຍປະຊາຊົນແບບບໍ່ສະໝັກໃຈອາດຈະເປັນຜົນນຳໄປສູ່ການເຮັດໃຫ້ຊຸມຊົນ ແລະ ປະຊາຊົນທີ່ໄດ້ຮັບຜົນກະທົບຕ້ອງປະເຊີນກັບຄວາມຫຍຸ້ງຍາກລຳບາກ ແລະ ຄວາມທຸກຍາກໃນໄລຍະຍາວ ກໍຄືຜົນກະທົບທາງສິ່ງແວດລ້ອມ ແລະ ຜົນກະທົບທາງລົບດ້ານເສດຖະກິດ–ສັງຄົມໃນເຂດທີ່ເຂົາເຈົ້າຖືກຍົກຍ້າຍຈັດສັນໄປຢູ່ໃໝ່. ດ້ວຍເຫດຜົນເຫຼົ່ານີ້, ຈິ່ງຄວນຫຼີກເວັ້ນການຍົກຍ້າຍຈັດສັນປະຊາຊົນແບບບໍ່ສະໝັກໃຈ. ຢ່າງໃດກໍດີ, ໃນກໍລະນີທີ່ບໍ່ສາມາດຫຼີກເວັ້ນການຍົກຍ້າຍຈັດສັນປະຊາຊົນແບບບໍ່ສະໝັກໃຈໄດ້ ແມ່ນຄວນກະທຳໃນລັກສະນະຈຳກັດ ແລະ ມີການວາງແຜນ ແລະ ຈັດຕັ້ງປະຕິບັດມາດຕະການທີ່ເໝາະສົມ ເພື່ອຫຼຸດຜ່ອນຜົນກະທົບໃນທາງລົບທີ່ຈະເກີດຕໍ່ກັບປະຊາຊົນທີ່ຖືກຍົກຍ້າຍຈັດສັນ ແລະ ຊຸມຊົນເຈົ້າພາບ[3]. ລັດຖະບານມີບົດບາດເປັນໃຈກາງໃນຂະບວນການໄດ້ມາຂອງທີ່ດິນ ເຊິ່ງລວມເອົາການກຳນົດອັດຕາຄ່າຊົດເຊີຍ ເພາະສະນັ້ນ ລັດຖະບານຈະເປັນບຸກຄົນທີສາມທີ່ສຳຄັນໃນຫຼາກຫຼາຍສະພາບການ. ປະສົບການທີ່ຜ່ານມາສະແດງໃຫ້ເຫັນວ່າ ການເຂົ້າມີສ່ວນຮ່ວມໂດຍກົງຂອງຜູ້ພັດທະນາໂຄງການໃນກິດຈະກຳການຍົກຍ້າຍຈັດສັນປະຊາຊົນສາມາດເຮັດໃຫ້ການຈັດຕັ້ງປະຕິບັດບັນດາກິດຈະກຳຕ່າງໆທີ່ກ່ຽວຂ້ອງກັບການຍົກຍ້າຍຈັດສັນ ກໍ່ຄືການນຳສະເໜີວິທີການຕ່າງໆທີ່ເປັນນະວັດຕະກຳໃໝ່ເພື່ອປັບປຸງຊີວິດການເປັນຢູ່ຂອງປະຊາຊົນຜູ້ທີ່ຖືກກະທົບຈາກການຍົກຍ້າຍໄດ້ໃນລັກສະນະທີ່ປະຢັດ, ມີປະສິດທິພາບ ແລະ ວ່ອງໄວ.

3. ເພື່ອຫຼີກເວັ້ນການເວນຄືນທີ່ດິນ ແລະ ຕັດບັນຫາຄວາມຈຳເປັນທີ່ຕ້ອງໃຊ້ອຳນາດການປົກຄອງລັດເພື່ອຈັດຕັ້ງປະຕິບັດການຍົກຍ້າຍ, ຊຸກຍູ້ໃຫ້ລູກຄ້ານຳໃຊ້ຮູບການເຈລະຈາການຍົກຍ້າຍຈັດສັນທີ່ຕອບສະໜອງໄດ້ຕາມບັນດາເງື່ອນໄຂຂອງມາດຕະຖານການດຳເນີນງານນີ້ ເຖິງວ່າເຂົາເຈົ້າຈະມີວິທີການທາງກົດໝາຍເພື່ອເອົາທີ່ດິນໂດຍປາສະຈາກຄວາມຍິນຍອມຂອງຜູ້ຂາຍກໍ່ຕາມ.

## ວັດຖຸປະສົງ

- ເພື່ອຫຼີກເວັ້ນ ແລະ ໃນກໍລະນີທີ່ບໍ່ສາມາດຫຼີກເວັ້ນໄດ້ແມ່ນໃຫ້ຈຳກັດການຍົກຍ້າຍຈັດສັນໂດຍການສຶກສາເບິ່ງບັນດາການອອກແບບໂຄງການທີ່ເປັນທາງເລືອກ.
- ເພື່ອຫຼີກເວັ້ນການບັງຄັບໃຫ້ອອກຈາກທີ່ດິນ.
- ເພື່ອຄາດກະ ແລະ ຫຼີກເວັ້ນ ຫຼືໃນກໍລະນີທີ່ບໍ່ສາມາດຫຼີກເວັ້ນໄດ້ແມ່ນໃຫ້ຈຳກັດຜົນກະທົບທາງລົບດ້ານເສດຖະກິດ–ສັງຄົມທີ່ເກີດຈາກການໄດ້ມາຂອງທີ່ດິນ ຫຼື ຂໍ້ຈຳກັດຕໍ່ສິດການນຳໃຊ້ທີ່ດິນດ້ວຍ (i) ການສະໜອງຄ່າຊົດເຊີຍໃຫ້ການສູນເສຍຊັບສິນຕາມມູນຄ່າທົດແທນ[4] ແລະ (ii) ການຮັບປະກັນວ່າກິດຈະກຳຕ່າງໆທີ່ກ່ຽວຂ້ອງກັບການຍົກຍ້າຍແມ່ນໄດ້ຮັບການຈັດຕັ້ງປະຕິບັດດ້ວຍການເຜີຍແຜ່ຂໍ້ມູນຂ່າວສານຢ່າງເໝາະສົມ,ການຂໍຄຳປຶກສາ ແລະ ການມີສ່ວນຮ່ວມຂອງຜູ້ທີ່ຖືກກະທົບໂດຍໄດ້ຮັບຂໍ້ມູນ ເປັນຢ່າງດີ.
- ເພື່ອປັບປຸງ ຫຼື ປົວແປງການຫາລ້ຽງຊີບ ແລະ ມາດຕະຖານການດຳລົງຊີວິດຂອງຜູ້ທີ່ຖືກຍົກຍ້າຍ.
- ເພື່ອປັບປຸງເງື່ອນໄຂການດຳລົງຊີວິດໃຫ້ຜູ້ທີ່ຖືກຍົກຍ້າຍທາງກາຍະພາກຜ່ານການສະໜອງທີ່ຢູ່ອາໄສຢ່າງພຽງພໍເຊິ່ງມີການຄໍ້າປະກັນສິດນຳໃຊ້ທີ່ດິນ[5] ໃນເຂດຍົກຍ້າຍຈັດສັນ.

## ຂອບເຂດການນຳໃຊ້

4. ຄວາມສາມາດໃນການນຳໃຊ້ມາດຕະຖານການດຳເນີນງານນີ້ ແມ່ນຖືກກຳນົດໄວ້ໃນໄລຍະການກຳນົດຄວາມສ່ຽງ ແລະ ຜົນກະທົບທາງ ດ້ານສິ່ງແວດລ້ອມ ແລະ ສັງຄົມ. ການຈັດຕັ້ງປະຕິບັດກິດຈະກຳຕ່າງໆທີ່ຈຳເປັນເພື່ອຕອບສະໜອງໃຫ້ໄດ້ຕາມເງື່ອນໄຂຕ່າງໆຂອງມາດຕະຖານການດຳເນີນງານນີ້ແມ່ນຖືກຄຸ້ມຄອງຜ່ານລະບົບຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມຂອງລູກຄ້າ, ເຊິ່ງບັນດາອົງປະກອບຕ່າງໆແມ່ນຖືກກຳນົດໄວ້ໃນມາດຕະຖານການດຳເນີນງານທີ 1.

5. ມາດຕະຖານການດຳເນີນງານນີ້ນຳໃຊ້ຕໍ່ການຍົກຍ້າຍທາງກາຍະພາກ ແລະ/ຫຼື ທາງເສດຖະກິດອັນເປັນຜົນເນື່ອງມາຈາກບັນດາປະເພດ ຕ່າງໆຂອງທຸລະກຳທີ່ພົວພັນກັບທີ່ດິນຄືດັ່ງຕໍ່ໄປນີ້:

- ສິດຕໍ່ທີ່ດິນ ຫຼື ສິດນຳໃຊ້ທີ່ດິນທີ່ໄດ້ມາຜ່ານການເວນຄືນທີ່ດິນ ຫຼື ຂັ້ນຕອນການດຳເນີນການອື່ນໆທີ່ເປັນພາກບັງຄັບຕາມລະບົບກົດໝາຍຂອງປະເທດເຈົ້າພາບ;
- ສິດຕໍ່ທີ່ດິນ ຫຼື ສິດນຳໃຊ້ທີ່ດິນຜ່ານການເຈລະຈາການຍົກຍ້າຍກັບເຈົ້າຂອງທີ່ດິນ ຫຼື ຜູ້ທີ່ມີສິດທາງກົດໝາຍຕໍ່ທີ່ດິນຖ້າຫາກບໍ່ປະສົບຜົນສະເລັດໃນການບັນລຸຂໍ້ຕົກລົງໃນການຍົກຍ້າຍແມ່ນອາດເປັນຜົນນຳໄປສູ່ການເວນຄືນທີ່ດິນ ຫຼື ຂັ້ນຕອນການດຳເນີນການອື່ນໆທີ່ເປັນພາກບັງຄັບທາງກົດໝາຍ.[6]
- ສະພາບເງື່ອນໄຂຂອງໂຄງການໃນກໍລະນີທີ່ມີການກຳນົດຂໍ້ຈຳກັດແບບບໍ່ສະໝັກໃຈຕໍ່ການນຳໃຊ້ທີ່ດິນ ແລະ ການເຂົ້າເຖິງຊັບພະຍາກອນ ເຊິ່ງເຂົາເຈົ້າມີສິດນຳໃຊ້ຕາມປະເພນີ ແລະ ສິດນຳໃຊ້ຂອງເຂົາເຈົ້າຖືກຮັບຮູ້;[7] ຫຼື
- ສະພາບຂອງໂຄງການທີ່ຈຳເປັນຕ້ອງໄດ້ຍົກຍ້າຍຄົນທີ່ຈັບຈອງດິນທີ່ບໍ່ເປັນທາງການ, ບໍ່ມີສິດນຳໃຊ້ຕາມປະເພນີ, ບໍ່ມີສິດນຳໃຊ້ອື່ນທີ່ເປັນທີ່ຮັບຮູ້ອອກ[8];

---

1 ຄຳວ່າ "ການຫາລ້ຽງຊີບ" ໝາຍເຖິງວິທີການໃນຂອບເຂດກ້ວາງຂວາງທີ່ບຸກຄົນ, ຄອບຄົວແລະຊຸມຊົນນຳໃຊ້ເພື່ອຫາລ້ຽງຊີບ ເຊັ່ນ: ລາຍໄດ້ທີ່ເປັນເງິນເດືອນ, ການຜະລິດກະສິ ກຳ, ການຫາປາ, ການຫາອາຫານແລະເກັບເຄື່ອງປ່າຂອງດົງ, ການຫາລ້ຽງຊີບບົນພື້ນຖານການນຳໃຊ້ຊັບພະຍາກອນທຳມະຊາດ, ການຂາຍເລັກໆນ້ອຍໆ, ແລະ ການເອົາຜົນຜະລິດແລກປ່ຽນກັນ.

2 ການໄດ້ມາຂອງທີ່ດິນ ລວມເອົາທັງກໍລະນີຊື້ສິດນຳໃຊ້ທີ່ດິນຂາດຕົວ ແລະ ການໄດ້ມາຂອງສິດໃນການເຂົ້າເຖິງເຊັ່ນ: ສິດຜ່ານດິນຜູ້ອື່ນເພື່ອເຂົ້າເຖິງທີ່ດິນຂອງຕົນ ຫຼື ສິດຕັນ ທາງເຂົ້າ.

3 ຊຸມຊົນເຈົ້າພາບແມ່ນຊຸມຊົນທີ່ຮັບເອົາຜູ້ທີ່ຖືກຍົກຍ້າຍເຂົ້າມາອາໄສຢູ່ນຳ.

4 ມູນຄ່າທົດແທນຖືກກຳນົດວ່າເປັນມູນຄ່າຂອງຊັບສິນຕາມມູນຄ່າໃນຕະຫຼາດບວກກັບຄ່າທຸລະກຳ. ໃນການນຳໃຊ້ວິທີການປະເມີນມູນຄ່າແບບນີ້, ການຫັກຄ່າຫຼຸ້ຍຫ້ຽນຂອງໂຄງສ້າງ ແລະ ຊັບສິນແມ່ນບໍ່ຄວນຖືກພິຈາລະນາລວມເຂົ້າ. ມູນຄ່າຕາມຕະຫຼາດຖືກກຳນົດວ່າເປັນມູນຄ່າທີ່ຕ້ອງການໃຫ້ຊຸມຊົນ ແລະ ບຸກຄົນທີ່ໄດ້ຮັບຜົນກະທົບສາມາດທົດແທນ ຊັບສິນທີ່ສູນເສຍໄປດ້ວຍຊັບສິນທີ່ມີມູນຄ່າຄ້າຍຄືກັນ. ວິທີການປະເມີນມູນຄ່າສຳລັບການກຳນົດມູນຄ່າທົດແທນຄວນຖືກບັນທຶກເປັນເອກະສານ ແລະ ລວມເຂົ້າໃນແຜນຍົກຍ້າຍຈັດສັນ ແລະ/ຫຼື ແຜນປົວແປງຊີວິດການເປັນຢູ່ (ສຳລັບລາຍລະອຽດໃຫ້ເບິ່ງຢູ່ວັກທີ 18 ແລະ 25).

5 ການຄໍ້າປະກັນກຳມະສິດທີ່ດິນໝາຍເຖິງບຸກຄົນ ຫຼື ຊຸມຊົນທີ່ຖືກຍົກຍ້າຍໄດ້ຮັບການຍົກຍ້າຍເຂົ້າໃນເຂດທີ່ເຂົາເຈົ້າສາມາດຄອບຄອງທີ່ດິນໄດ້ຢ່າງຖືກຕ້ອງຕາມກົດໝາຍ ແລະ ເຂົາເຈົ້າໄດ້ຮັບການປົກປ້ອງຈາກຄວາມສ່ຽງເກີດ ການບັງຄັບໃຫ້ອອກຈາກທີ່ດິນ.

6 ສິ່ງດັ່ງກ່າວຍັງນຳໃຊ້ກັບສິດຕາມປະເພນີ ທີ່ຖືກຮັບຮູ້ ຫຼື ສາມາດຮັບຮູ້ພາຍໃຕ້ກົດໝາຍຂອງປະເທດເຈົ້າພາບ. ການເຈລະຈາອາດຈະຈັດຕັ້ງປະຕິບັດໂດຍລັດຖະບານ ຫຼື ໂດຍບໍ ລິສັດ (ບາງກໍລະນີໃນຖານະເປັນຕົວແທນຂອງລັດຖະບານ).

7 ພາຍໃຕ້ສະພາບການດັ່ງກ່າວ, ພົບເລື້ອຍໆວ່າ: ຜູ້ໄດ້ຮັບຜົນກະທົບບໍ່ມີກຳມະສິດເປັນເຈົ້າຂອງທີ່ຖືກຮັບຮູ້ທາງການ ເຊິ່ງອາດຈະລວມເອົາສິ່ງແວດລ້ອມນໍ້າຈືດ ແລະ ນໍ້າທະເລ. ມາດຕະຖານການດຳເນີນງານນີ້ອາດຈະນຳໃຊ້ເມື່ອເຂດຊີວະນາໆພັນທີ່ພົວພັນກັບໂຄງການ ຫຼື ເຂດກັນຊົນທີ່ຖືກກຳນົດຕາມກົດໝາຍລະບຸໄວ້ແຕ່ລູກຄ້າບໍ່ໄດ້ເອົາເຂດດັ່ງກ່າວ.

8 ໃນຂະນະທີ່ຄົນຈຳນວນໜຶ່ງບໍ່ມີສິດໃນທີ່ດິນທີ່ເຂົາເຈົ້າຈັບຈອງຢູ່, ມາດຕະຖານການດຳເນີນງານນີ້ຕ້ອງການໃຫ້ເກັບຮັກສາ, ປ່ຽນແທນ, ຫຼື ຊົດເຊີຍຊັບສິນທີ່ບໍ່ແມ່ນທີ່ດິນ; ການຍົກຍ້າຍຈັດສັນຈະຕ້ອງໄດ້ຖືກດຳເນີນໃນຮູບການທີ່ມີຄວາມໝັ້ນຄົງຂອງກຳມະສິດເປັນເຈົ້າຂອງທີ່ດິນ; ແລະ ຊີວິດການເປັນຢູ່ທີ່ໄດ້ສູນເສຍໄປມີການສ້າງຄືນໃໝ່.

- ຂໍ້ຈຳກັດຕໍ່ການເຂົ້າເຖິງທີ່ດິນ ຫຼື ການນຳໃຊ້ຊັບພະຍາກອນອື່ນໆເຊິ່ງລວມທັງທີ່ດິນລວມຂອງຊຸມຊົນ ແລະ ຊັບພະຍາກອນທຳມະຊາດເຊັ່ນ: ຊັບພະຍາກອນທາງທະເລ ແລະ ທາງນ້ຳ, ໄມ້ ແລະ ເຄື່ອງປ່າຂອງດົງ, ນ້ຳຈືດ,ພືດທີ່ເປັນຢາປົວພະຍາດ, ເຂດລ່າ ສັດ ແລະ ຫາອາຫານ ແລະ ເຄື່ອງປ່າຂອງດົງ,ເຂດລ້ຽງສັດ ແລະ ເຂດປູກຝັງ.[9]

6. ມາດຕະຖານການດຳເນີນງານນີ້ບໍ່ນຳໃຊ້ກັບການຍົກຍ້າຍທີ່ເປັນຜົນເນື່ອງມາຈາກທຸລະກຳຊື້-ຂາຍທີ່ດິນແບບສະໝັກໃຈ(ໝາຍເຖິງທຸລະກຳຊື້-ຂາຍກັນໃນຕະຫຼາດເຊິ່ງຜູ້ຂາຍບໍ່ມີພັນທະຕ້ອງຂາຍ ແລະ ຜູ້ຊື້ ບໍ່ສາມາດທີ່ຈະນຳໃຊ້ມາດຕະການຂັ້ນສຸດທ້າຍທີ່ເປັນການເວນຄືນທີ່ດິນ ຫຼື ຂັ້ນຕອນບັງຄັບທາງກົດໝາຍອື່ນໆທີ່ຖືກຮັບຮອງໂດຍລະບົບກົດໝາຍຂອງປະເທດເຈົ້າພາບຖ້າການເຈລະຈາຫາກຫຼົ້ມເຫຼວ). ມາດຕະຖານການດຳເນີນງານນີ້ຍັງບໍ່ນຳໃຊ້ກັບຜົນກະທົບຕ່າງໆທີ່ມີຕໍ່ການຫາລ້ຽງຊີບໃນກໍລະນີທີ່ໂຄງການ ບໍ່ໄດ້ປ່ຽນແປງການນຳໃຊ້ທີ່ດິນຂອງກຸ່ມຕ່າງໆ ຫຼື ຊຸມຊົນ[10] ທີ່ໄດ້ຮັບຜົນກະທົບ.

7. ໃນກໍລະນີທີ່ຜົນກະທົບຈາກໂຄງການຕໍ່ທີ່ດິນ, ຊັບສິນ ຫຼື ການເຂົ້າເຖິງຊັບສິນຫາກກາຍເປັນຜົນກະທົບທາງລົບໃນລະດັບສູງພາຍໃນໄລຍະໃດໜຶ່ງຂອງການຈັດຕັ້ງປະຕິບັດໂຄງການ, ລູກຄ້າ ຄວນພິຈາລະນານຳໃຊ້ເງື່ອນໄຂຕ່າງໆຂອງມາດຕະຖານການຈັດຕັ້ງປະຕິບັດນີ້ເຖິງວ່າຈະບໍ່ມີການດຳເນີນການໄດ້ມາຂອງທີ່ດິນ ຫຼື ການຈຳກັດສິດການນຳໃຊ້ທີ່ດິນກ່ຽວຂ້ອງກໍ່ຕາມ.

## ເງື່ອນໄຂ

## ຂໍ້ກຳນົດທົ່ວໄປ

### *ການອອກແບບໂຄງການ*

8. ລູກຄ້າຈະຕ້ອງພິຈາລະນາເບິ່ງການອອກແບບໂຄງການທີ່ເປັນທາງເລືອກຕ່າງໆເພື່ອຫຼີກເວັ້ນ ຫຼື ຈຳກັດ ການຍົກຍ້າຍຈັດສັນຕົວຈິງທາງກາຍະພາກ ແລະ/ຫຼື ທາງເສດຖະກິດ ໃນຂະນະດຽວກັນກໍ່ຮັກສາຄວາມສົມດຸນລະຫວ່າງຜົນໄດ້ ແລະ ຜົນເສຍທາງສິ່ງ ແວດລ້ອມ, ສັງຄົມ ແລະ ການເງິນ, ເອົາໃຈໃສ່ເປັນພິເສດຕໍ່ຜົນກະທົບທີ່ມີຕໍ່ຄົນທຸກ ແລະ ຜູ້ທີ່ບໍ່ສາມາດປົກປ້ອງຕົນເອງໄດ້.

### *ການຊົດເຊີຍ ແລະ ຜົນປະໂຫຍດສຳລັບຜູ້ທີ່ຖືກຍົກຍ້າຍ*

9 ຫາກບໍ່ສາມາດຫຼີກເວັ້ນການຍົກຍ້າຍໄດ້, ລູກຄ້າຈະຕ້ອງສະໜອງການຊົດເຊີຍຕໍ່ການສູນເສຍຊັບສິນໃນມູນຄ່າເຕັມຂອງການຍົກຍ້າຍ ແລະ ການຊ່ວຍເຫຼືອອື່ນໆ[11] ໃຫ້ຊຸມຊົນ ແລະ ຄົນທີ່ຖືກຍົກຍ້າຍ ເພື່ອຊ່ວຍເຂົາເຈົ້າປັບປຸງ ຫຼື ປົວແປງມາດຕະຖານການດຳລົງຊີວິດ ຫຼື ການຫາລ້ຽງຊີບຂອງເຂົາເຈົ້າຕາມທີ່ກຳນົດໄວ້ໃນມາດຕະຖານການດຳເນີນງານນີ້. ມາດຕະຖານການຊົດເຊີຍຈະຕ້ອງໂປ່ງໃສ ແລະ ຖືກນຳໃຊ້ຢ່າງສະເໝີຕົ້ນສະເໝີປາຍກັບທຸກຊຸມຊົນ ແລະ ກຸ່ມຄົນທີ່ຖືກກະທົບຈາກການຍົກຍ້າຍດັ່ງກ່າວ. ກໍລະນີການຫາລ້ຽງຊີບຂອງຄົນທີ່ຖືກຍົກຍ້າຍຫາກຢູ່ບົນພື້ນຖານການນຳໃຊ້ທີ່ດິນ[12], ຫຼື ກໍລະນີທີ່ທີ່ດິນເປັນກຳມະສິດລວມໝູ່, ລູກຄ້າ (ເທົ່າທີ່ສາມາດເຮັດໄດ້[13]) ຈະຕ້ອງສະໜອງການຊົດເຊີຍທີ່ດິນຢູ່ເຂດຍົກຍ້າຍຈັດສັນ. ລູກຄ້າຈະເຂົ້າ ຖືຄອງທີ່ດິນທີ່ໄດ້ມາ ແລະ ຊັບສິນກ່ຽວຂ້ອງຕ່າງໆໄດ້ ກໍ່ຕໍ່ເມື່ອວ່າ: ໄດ້ມີການສະໜອງການຊົດເຊີຍແລ້ວ[14] ແລະ ຕາມທີ່ເຫັນວ່າເໝາະສົມຄືໄດ້ມີການຈ່າຍຄ່າອຸດໜູນເຂດຍົກຍ້າຍຈັດສັນ ແລະ ຄ່າອຸດໜູນການຍົກຍ້າຍໃຫ້ຜູ້ທີ່ຖືກຍົກຍ້າຍແລ້ວ ນອກເໜືອຈາກການຊົດເຊີຍ[15]. ລູກຄ້າຍັງຈະຕ້ອງສະໜອງໂອກາດໃຫ້ຊຸມຊົນ ແລະ ຄົນທີ່ຖືກຍົກຍ້າຍໃນການເຮັດໃຫ້ຕົນເອງໄດ້ຮັບຜົນປະໂຫຍດດ້ານການພັດທະນາທີ່ເໝາະສົມຈາກໂຄງການ.

[9] ຊັບສິນທີ່ເປັນຊັບພະຍາກອນທຳມະຊາດທີ່ອ້າງອີງໃນມາດຕະຖານການດຳເນີນງານນີ້ແມ່ນທຽບເທົ່າກັບບໍລິການສະໜອງຂອງລະບົບນິເວດຕາມທີ່ອະທິບາຍໄວ້ໃນມາດຕະຖານ ການດຳເນີນງານທີ 6.

[10] ຜົນກະທົບທີ່ມີລັກສະນະທົ່ວໄປເຊິ່ງສິ່ງຜົນຕໍ່ຊຸມຊົນ ແລະ ກຸ່ມຄົນຕ່າງໆແມ່ນຖືກສົນທະນາໃນມາດຕະຖານການດຳເນີນງານ 1. ຕົວຢ່າງ: ການລົບກວນຕໍ່ການເຂົ້າເຖິງແຮ່ທາດຂອງປະຊາຊົນທີ່ປະກອບອາຊີບຮ່ອນແຮ່ແມ່ນໄດ້ສົນທະນາໄວ້ໃນມາດຕະຖານການດຳເນີນງານ 1.

[11] ຄືດັ່ງທີ່ອະທິບາຍໄວ້ໃນວັກທີ 19 ແລະ 26.

[12] ຄຳວ່າ: “ບົນພື້ນຖານການນຳໃຊ້ທີ່ດິນ” ລວມເອົາກິດຈະກຳຫາລ້ຽງຊີບຕ່າງໆເຊັ່ນ: ການປູກຝັງແບບເອື່ອຍອີງທຳມະຊາດຜະລິດພໍກຸ້ມຢູ່ກຸ້ມກິນ ແລະ ການລ້ຽງສັດ ກໍ່ຄືການເກັບກ່ຽວຊັບພະຍາກອນທຳມະຊາດ.

[13] ສະເໜີໃຫ້ອ້າງອີງໃສ່ວັກທີ 26 ຂອງມາດຕະຖານການດຳເນີນງານນີ້ສຳລັບເງື່ອນໄຂເພີ່ມເຕີມ.

[14] ໃນບາງກໍລະນີ, ອາດຈະເປັນໄປບໍ່ໄດ້ທີ່ຈະປະຕິບັດການຊົດເຊີຍໃຫ້ທຸກຄົນທີ່ຖືກກະທົບກ່ອນທີ່ຈະເຂົ້າຄອບຄອງທີ່ດິນ, ຕົວຢ່າງ: ເມື່ອກຳມະສິດຕໍ່ທີ່ດິນກ່ຽວຂ້ອງຫາກຍັງມີຂໍ້ຂັດແຍ່ງຢູ່. ສະພາບເງື່ອນໄຂຄືດັ່ງກ່າວ ຄວນຖືກກຳນົດ ແລະ ຕົກລົງກັນເປັນຕາມແຕ່ລະກໍລະນີໄປ; ແລະ ຄວນສ້າງກອງທຶນຊົດເຊີຍ, ຕົວຢ່າງ: ຜ່ານການຝາກເງິນເຂົ້າໃນບັນຊີທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງບຸກຄົນທີສາມກ່ອນທີ່ຈະຈັດຕັ້ງປະຕິບັດການຍົກຍ້າຍ.

[15] ເວັ້ນເສຍແຕ່ເປັນການຍົກຍ້າຍພາຍໃຕ້ການຄຸ້ມຄອງຂອງລັດ ແລະ ໃນກໍລະນີທີ່ລູກຄ້າບໍ່ມີບົດບາດອິດທິພົນໂດຍກົງຕໍ່ການກຳນົດເວລາໃນການປະຕິບັດການຊົດເຊີຍ. ກໍລະນີເຊັ່ນນັ້ນຄວນຖືກແກ້ໄຂຕາມວັກທີ 27–29 ຂອງມາດຕະຖານການດຳເນີນງານນີ້. ອາດຈະປະຕິບັດການຊົດເຊີຍເປັນແຕ່ລະໄລຍະຫາກກໍລະນີການຊົດເຊີຍເປັນເງິນສົດທີ່ປະຕິບັດຄັ້ງດຽວແລ້ວອາດຈະຈຳກັດການບັນລຸຈຸດປະສົງທາງສັງຄົມ ແລະ/ຫຼື ຈຸດປະສົງດ້ານການຍົກຍ້າຍ ຫຼື ໃນກໍລະນີທີ່ມີຜົນກະທົບຕໍ່ເນື່ອງຕໍ່ກິດຈະກຳຫາລ້ຽງຊີບ.



### *ການເຂົ້າມີສ່ວນຮ່ວມຂອງຊຸມຊົນ*

10. ລູກຄ້າ ຈະຕ້ອງເອົາຊຸມຊົນທີ່ໄດ້ຮັບຜົນກະທົບເຂົ້າມີສ່ວນຮ່ວມເຊິ່ງລວມທັງ: ຊຸມຊົນເຈົ້າພາບໂດຍຜ່ານຂະບວນການເຂົ້າມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງຕາມທີ່ອະທິບາຍໄວ້ໃນມາດຕະຖານການດຳເນີນງານທີ 1. ຂະບວນການຕັດສິນບັນຫາທີ່ພົວພັນກັບການຍົກຍ້າຍຈັດສັນ ແລະ ການປົວແປງຊີວິດການເປັນຢູ່ຄວນລວມເອົາບັນດາທາງເລືອກຕ່າງໆຕາມທີ່ເຫັນວ່າເໝາະສົມ. ການເປີດເຜີຍຂໍ້ມູນຂ່າວສານທີ່ກ່ຽວຂ້ອງ ແລະ ການມີສ່ວນຮ່ວມຂອງຊຸມຊົນ ແລະ ຄົນທີ່ໄດ້ຮັບຜົນກະທົບຈະຕ້ອງຈັດຕັ້ງປະຕິບັດຕໍ່ເນື່ອງຕະຫຼອດໄລຍະການວາງແຜນ, ການຈັດຕັ້ງປະຕິບັດ, ການຕິດຕາມກວດກາ ແລະ ການປະເມີນການປະຕິບັດການຊົດເຊີຍ ແລະ ການຍົກຍ້າຍເພື່ອໃຫ້ໄດ້ຮັບຜົນໄດ້ຮັບຕ່າງໆທີ່ສອດຄ່ອງກັບຈຸດປະສົງຂອງມາດຕະຖານການດຳເນີນງານນີ້.[16] ບັນດາຂໍ້ກຳນົດອື່ນໆ ທີ່ນຳໃຊ້ຕໍ່ການຂໍຄຳປຶກສາກັບຄົນພື້ນເມືອງດັ້ງເດີມແມ່ນອີງຕາມມາດຕະຖານການດຳເນີນງານທີ 7.

### *ກົນໄກການຮ້ອງທຸກ*

11. ລູກຄ້າຈະຕ້ອງສ້າງກົນໄກແກ້ໄຂຄຳຮ້ອງທຸກທີ່ສອດຄ່ອງກັບມາດຕະຖານການດຳເນີນງານ 1 ຂຶ້ນໃນໄລຍະການພັດທະນາໂຄງການໃຫ້ໄວ້ເທົ່າທີ່ຈະໄວໄດ້. ນີ້ຈະຊ່ວຍອະນຸຍາດໃຫ້ລູກຄ້າໃຫ້ໄດ້ຮັບ ແລະ ແກ້ໄຂຂໍ້ກັງວົນສະເພາະກ່ຽວກັບການຊົດເຊີຍ ແລະ ການຍົກຍ້າຍຈັດສັນທີ່ຍົກຂຶ້ນໂດຍຜູ້ຖືກຍົກຍ້າຍ ຫຼື ຄົນໃນຊຸມຊົນເຈົ້າພາບໃນລັກສະນະທີ່ທ່ວງທັນເວລາເຊິ່ງລວມທັງກົນໄກແກ້ໄຂທີ່ຖືກອອກແບບມາເພື່ອແກ້ໄຂຂໍ້ຂັດແຍ່ງຕ່າງໆໃນລັກສະນະທີ່ເປັນກາງ.

### *ການວາງແຜນ ແລະ ການຈັດຕັ້ງປະຕິບັດການຍົກຍ້າຍ ແລະ ການປົວແປງຊີວິດການເປັນຢູ່*

12. ກໍລະນີທີ່ການຍົກຍ້າຍ ຫາກບໍ່ສາມາດຫຼີກເວັ້ນໄດ້ ອາດເປັນຍ້ອນຜົນຂອງການເຈລະຈາການຍົກຍ້າຍ ຫຼື ການເວນຄືນທີ່ດິນ, ຈະຕ້ອງດຳເນີນການສຳຫຼວດພົນລະເມືອງ ເພື່ອເກັບກຳຂໍ້ມູນພື້ນຖານດ້ານເສດຖະກິດ–ສັງຄົມເພື່ອກຳ ນົດຜູ້ທີ່ຈະຖືກຍົກຍ້າຍໂດຍໂຄງການ, ກຳນົດຜູ້ທີ່ຄົບເງື່ອນໄຂໃນການໄດ້ຮັບການຊົດເຊີຍ ແລະ ການຊ່ວຍເຫຼືອ[17], ແລະ ບໍ່ຊຸກຍູ້ຜູ້ທີ່ບໍ່ຄົບເງື່ອນໄຂເຊັ່ນ: ຜູ້ທີ່ ສວຍໂອກາດມາຕັ້ງຖິ່ນຖານບໍ່ໃຫ້ກ່າວຫວງເອົາຜົນປະໂຫຍດໃດໆຈາກການຊົດເຊີຍ. ກໍລະນີບໍ່ມີຂັ້ນຕອນທາງການຂອງລັດຖະບານປະເທດເຈົ້າພາບ, ລູກຄ້າຈະຕ້ອງກຳນົດວັນທີໝົດສິດສຳລັບການໄດ້ຮັບການຊົດເຊີຍ. ຂໍ້ມູນກ່ຽວກັບວັນທີໝົດສິດຕ້ອງມີການບັນທຶກເປັນເອກະສານຄັກແນ່ ແລະ ເຜີຍແຜ່ໃຫ້ຮູ້ທົ່ວກັນໃນເຂດທີ່ຕັ້ງຂອງໂຄງການ.

13. ໃນກໍລະນີທີ່ຜູ້ໄດ້ຮັບຜົນກະທົບຫາກປະຕິເສດ ຂໍ້ສະເໜີການຊົດເຊີຍທີ່ຖືກຕ້ອງຕາມເງື່ອນໄຂຂອງມາດຕະຖານການຈັດຕັ້ງປະຕິບັດນີ້ ເຊິ່ງເປັນຜົນເຮັດໃຫ້ສາມາດລິເລີ່ມຂັ້ນຕອນການເວນຄືນທີ່ດິນ ຫຼື ຂັ້ນຕອນທາງກົດໝາຍອື່ນໆ, ລູກຄ້າຈະຕ້ອງສຶກສາເບິ່ງໂອກາດໃນການປະສານສົມທົບກັບອົງການລັດທີ່ຮັບຜິດຊອບ ແລະ ຖ້າໄດ້ຮັບອະນຸຍາດຈາກອົງການທີ່ຮັບຜິດຊອບ, ລູກຄ້າຕ້ອງດຳ ເນີນບົດບາດທີ່ຫ້າວຫັນໃນການວາງແຜນ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາການຍົກຍ້າຍ (ລະອຽດໃຫ້ເບິ່ງວັກທີ 30–32).

14. ລູກຄ້າຈະຕ້ອງສ້າງຂັ້ນຕອນເພື່ອຕິດຕາມກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນຍົກຍ້າຍຈັດສັນ ຫຼື ແຜນປົວແປງຊີວິດການເປັນຢູ່ (ລະອຽດເບິ່ງວັກທີ 19 ແລະ 25) ແລະ ປະຕິບັດກິດຈະກຳກວດແກ້ຕາມຄວາມຈຳເປັນ. ຂອບເຂດຂອງກິດຈະກຳຕິດຕາມກວດກາຈະຕ້ອງສົມສ່ວນກັບຄວາມສ່ຽງ ແລະ ຜົນກະທົບຂອງໂຄງການ. ສຳລັບໂຄງການທີ່ມີຄວາມສ່ຽງສູງດ້ານການຍົກຍ້າຍຈັດສັນແບບບໍ່ສະໝັກໃຈ, ລູກຄ້າຈະຕ້ອງຮັກສາວິຊາການອາຊີບທີ່ມີຄວາມຮູ້ດ້ານການຍົກຍ້າຍຈັດສັນ ເພື່ອສະໜອງຄຳແນະ ນຳໃຫ້ຕົນສາມາດປະຕິບັດໄດ້ຕາມມາດຕະຖານການດຳເນີນງານນີ້ ແລະ ເພື່ອຢັ້ງຢືນຂໍ້ມູນຂ່າວສານການຕິດຕາມກວດກາຂອງລູກຄ້າ. ຜູ້ທີ່ໄດ້ຮັບຜົນກະທົບຈະຕ້ອງໄດ້ຮັບການຂໍຄຳປຶກສາໃນໄລຍະດຳເນີນຂະບວນການຕິດຕາມກວດກາດັ່ງກ່າວ.

15. ການຈັດຕັ້ງປະຕິບັດແຜນຍົກຍ້າຍ ຫຼື ແຜນປົວແປງຊີວິດການເປັນຢູ່ ຈະຖືວ່າສຳເລັດກໍ່ຕໍ່ເມື່ອບັນດາຜົນ

[16] ຂະບວນການຂໍຄຳປຶກສາຄວນຮັບປະກັນວ່າ: ໄດ້ຮັບຟັງທັດສະນະຂອງແມ່ຍິງ ແລະ ຜົນປະໂຫຍດຂອງເຂົາເຈົ້າຖືກລວມເຂົ້າໃນທຸກດ້ານຂອງການວາງແຜນ ແລະ ການຈັດຕັ້ງປະຕິບັດການຍົກຍ້າຍ. ການແກ້ໄຂຜົນກະທົບຕໍ່ການຫາລ້ຽງຊີບອາດຈະຕ້ອງເຮັດການວິເຄາະພາຍໃນຄົວເຮືອນ ກໍລະນີການຫາລ້ຽງຊີບຂອງແມ່ຍິງ ແລະ ຜູ້ຊາຍຫາກຖືກກະທົບຕ່າງກັນ. ຄວນມີການສຶກສາເບິ່ງຄວາມນິຍົມມັກຂອງແມ່ຍິງ ແລະ ຜູ້ຊາຍໃນດ້ານກົນໄກການຊົດເຊີຍເຊັ່ນ: ການຊົດເຊີຍເປັນວັດຖຸແທນການຊົດເຊີຍເປັນເງິນສົດ.

[17] ເອກະສານຢັ້ງຢືນກຳມະສິດ ຫຼື ການຄອບຄອງ ແລະ ສາຍພົວພັນໃນການຊົດເຊີຍຄວນຖືກອອກເປັນຊື່ຂອງຄູ່ຜົວເມຍ ຫຼື ຊື່ຫົວໜ້າຄອບຄົວ, ສ່ວນການຊ່ວຍເຫຼືອອື່ນໆດ້ານການຍົກຍ້າຍເຊັ່ນ: ການຝຶກອົບຮົມສີມືແຮງງານ, ການເຂົ້າເຖິງສິນເຊື່ອ, ແລະ ໂອກາດໃນການມີວຽກເຮັດງານທຳຄວນຈະມີສະໜອງໃຫ້ແມ່ຍິງໃນລັກສະນະສະເໝີພາບກັບຜູ້ຊາຍ ແລະ ດັດປັບໃຫ້ຖືກຕ້ອງກັບຄວາມຕ້ອງການຂອງເຂົາເຈົ້າ. ກໍລະນີກົດໝາຍແລະລະບົບຄ້ຳປະກັນກຳມະສິດຕາມກົດໝາຍພາຍໃນບໍ່ຮັບຮູ້ສິດຂອງແມ່ຍິງໃນການເປັນເຈົ້າຂອງທີ່ດິນ ຫຼື ເຮັດສັນຍາທີ່ພົວພັນກັບທີ່ດິນ, ຄວນພິຈາລະນາມາດຕະການຕ່າງໆເພື່ອສະໜອງການປົກປ້ອງແມ່ຍິງໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້ໂດຍມີຈຸດປະສົງທີ່ຕ້ອງການບັນລຸຄວາມສະເໝີ ພາບຍິງ–ຊາຍ.

ກະທົບທາງລົບຈາກການຍົກຍ້າຍດັ່ງກ່າວໄດ້ຮັບການແກ້ໄຂໃນລັກສະນະທີ່ສອດຄ່ອງກັບແຜນກ່ຽວຂ້ອງ ກໍ່ຄືຈຸດປະສົງຂອງມາດຕະຖານດຳເນີນງານນີ້. ອາດເປັນສິ່ງຈຳເປັນສຳລັບລູກຄ້າທີ່ຕ້ອງຈ້າງພາກສ່ວນກວດສອບພາຍນອກໃຫ້ມາກວດສອບການສຳເລັດການຈັດຕັ້ງປະຕິບັດແຜນຍົກຍ້າຍ ຫຼື ແຜນປົວແປງຊີວິດການເປັນຢູ່ເພື່ອປະເມີນເບິ່ງວ່າ: ປະຕິບັດໄດ້ຕາມຂໍ້ກຳນົດຕ່າງໆທັງນີ້ທັງນັ້ນແມ່ນຂຶ້ນກັບຂະໜາດ ແລະ/ຫຼື ຄວາມສະຫຼັບຊັບຊ້ອນຂອງການຍົກຍ້າຍທາງກາຍະພາກ ແລະ ທາງເສດຖະກິດທີ່ພົວພັນກັບໂຄງການ.ການກວດສອບຜົນສຳເລັດດັ່ງກ່າວຄວນຈັດຕັ້ງປະຕິບັດທັນທີເມື່ອສຳເລັດການຈັດຕັ້ງປະຕິບັດທຸກມາດຕະການຫຼຸດຜ່ອນຜົນກະທົບ ແລະ ເມື່ອເຫັນວ່າ: ຜູ້ທີ່ຖືກຍົກຍ້າຍໄດ້ຮັບການສະໜອງໂອກາດ ແລະ ການຊ່ວຍເຫຼືອທີ່ພຽງພໍເພື່ອໃຫ້ເຂົາເຈົ້າສາມາດປົວແປງຊີວິດການເປັນຢູ່ຂອງຕົນໃນລັກສະນະທີ່ຍືນຍົງ. ການກວດສອບຜົນສຳເລັດດັ່ງກ່າວຈະລວມເອົາຢ່າງໜ້ອຍສຸດການທົບທວນຄວາມຄົບຖ້ວນທັງໝົດຂອງ ມາດຕະການຫຼຸດຜ່ອນຜົນກະທົບທີ່ຖືກຈັດຕັ້ງປະຕິບັດໂດຍລູກຄ້າ, ການສົມທຽບຜົນໄດ້ຮັບຂອງການຈັດຕັ້ງປະຕິບັດໃສ່ຈຸດປະສົງທີ່ໄດ້ຕົກລົງກັນໄວ້ແລະຂໍ້ສະຫຼຸບທີ່ວ່າ: ຈະຍຸດຕິຂະບວນການຕິດຕາມກວດກາໄດ້ ຫຼື ບໍ່.[18]

16. ກໍລະນີທີ່ລັກສະນະຕົວຈິງ ຫຼື ຂະໜາດຂອງການໄດ້ມາຂອງທີ່ດິນ ຫຼື ການຈຳກັດຕໍ່ການນຳໃຊ້ທີ່ດິນທີ່ພົວພັນກັບໂຄງການ ບໍ່ຮູ້ທ່າແຮງທີ່ເປັນສາເຫດເຮັດໃຫ້ມີການຍົກຍ້າຍທາງກາຍະພາກ ແລະ/ຫຼື ທາງເສດຖະກິດອັນເປັນຍ້ອນໄລຍະການພັດທະນາໂຄງການ, ລູກຄ້າຈະຕ້ອງສ້າງກອບຄຸ້ມຄອງການຍົກຍ້າຍ ແລະ/ຫຼື ການປົວແປງຊີວິດການເປັນຢູ່ທີ່ກຳນົດຫຼັກການລວມໂດຍສອດຄ່ອງກັບມາດຕະຖານການດຳເນີນງານນີ້. ເມື່ອກຳນົດບັນດາອົງປະກອບຕ່າງໆຂອງໂຄງການແລ້ວ ແລະ ມີຂໍ້ມູນຂ່າວສານຈຳເປັນພ້ອມສະໜອງໃຫ້ແລ້ວ, ກອບຄຸ້ມຄອງດັ່ງກ່າວຈະຖືກຜັນຂະຫຍາຍເປັນແຜນຍົກຍ້າຍ ຫຼື ແຜນປົວແປງຊີວິດການເປັນຢູ່ສະເພາະ ແລະ ຂັ້ນຕອນຕ່າງໆ ໂດຍອີງຕາມເນື້ອໃນຂອງວັກທີ 19 ແລະ 25 ຂ້າງລຸ່ມນີ້.

[18] ການກວດສອບຜົນສຳເລັດຂອງແຜນຍົກຍ້າຍ ແລະ/ຫຼື ແຜນປົວແປງຊີວິດການເປັນຢູ່ແມ່ນຈະຖືກຈັດຕັ້ງປະຕິບັດໂດຍຊ່ຽວຊານສາກົນດ້ານການຍົກຍ້າຍຈັດສັນເມື່ອສະຫຼຸບໄລຍະຕິດຕາມກວດກາທີ່ໄດ້ຕົກລົງກັນໄວ້, ແລະ ຈະລວມເອົາການປະເມີນແບບເລິກເຊິ່ງຫຼາຍກ່ວາທີ່ມີໃນກິດຈະກຳຕິດຕາມກວດກາແບບປົກກະຕິຕໍ່ການຍົກຍ້າຍຢ່າງໜ້ອຍສຸດແມ່ນລວມເອົາການທົບທວນຕໍ່ການຈັດຕັ້ງປະຕິບັດຂອງລູກຄ້າຕໍ່ທຸກມາດຕະການຫຼຸດຜ່ອນຜົນກະທົບທີ່ພົວກັນກັບການຍົກຍ້າຍທາງກາຍະພາກ ແລະ/ຫຼື ທາງເສດຖະກິດ, ສົມທຽບຜົນ ໄດ້ຮັບຂອງການຈັດຕັ້ງປະຕິບັດໃສ່ຈຸດປະສົງທີ່ຕົກລົງກັນໄວ້, ຂໍ້ສະຫຼຸບເບິ່ງວ່າ: ຂະບວນການຕິດຕາມກວດກາສາມາດຍຸຕິລົງໄດ້ຫຼືບໍ່, ຕາມທີ່ເຫັນວ່າ: ເໝາະສົມແຜນກິດຈະກຳກວດແກ້ມີລາຍການຂອງທຸກກິດຈະກຳຈຳເປັນທີ່ຕ້ອງເຮັດເພື່ອໃຫ້ບັນລຸໄດ້ຕາມຈຸດປະສົງຕ່າງໆ.

## ການຍົກຍ້າຍ

17. ຜູ້ທີ່ຖືກຍົກຍ້າຍອາດຈະຖືກຈັດວ່າເປັນຜູ້ທີ່ (i) ມີສິດຖືກຕ້ອງຕາມກົດໝາຍຕໍ່ທີ່ດິນ ຫຼື ຊັບສິນທີ່ເຂົາເຈົ້າຄອບຄອງ ຫຼື ນຳໃຊ້; (ii) ທີ່ບໍ່ມີສິດຖືກຕ້ອງຕາມກົດໝາຍຕໍ່ທີ່ດິນ ຫຼື ຊັບສິນແຕ່ສາມາດກ່າວທວງສິດຕໍ່ທີ່ດິນດັ່ງກ່າວ ເຊິ່ງຖືກຮັບຮູ້ ຫຼື ສາມາດຖືກຮັບຮູ້ໄດ້ພາຍໃຕ້ກົດໝາຍພາຍໃນປະເທດ[19]; ຫຼື (iii) ເປັນຜູ້ທີ່ບໍ່ມີສິດທີ່ຖືກຮັບຮູ້ທາງກົດໝາຍ ຫຼື ບໍ່ສາມາດກ່າວທວງສິດຕໍ່ທີ່ດິນ ຫຼື ຊັບສິນ ທີ່ເຂົາເຈົ້າຄອບຄອງ ຫຼື ນຳໃຊ້ຢູ່. ການສຳຫຼວດພົນລະເມືອງຈະກຳນົດສະຖານະ ຫຼື ປະເພດຂອງຜູ້ທີ່ຖືກຍົກຍ້າຍ.

18. ການໄດ້ມາຂອງທີ່ດິນ ແລະ/ຫຼື ການຈຳກັດຕໍ່ການນຳໃຊ້ທີ່ດິນທີ່ພົວພັນກັບໂຄງການ ອາດຈະເປັນຜົນນຳໄປສູ່ການຍົກຍ້າຍທາງກາຍະ ພາກ ກໍ່ຄື ການຍົກຍ້າຍທາງເສດຖະກິດຕໍ່ປະຊາຊົນໃນເຂດສະຖານທີ່ຕັ້ງຂອງໂຄງການ. ຜົນສະທ້ອນຕາມມາ, ເງື່ອນໄຂຂອງມາດຕະຖານການຈັດຕັ້ງປະຕິບັດນີ້ທີ່ພົວພັນກັບການຍົກຍ້າຍທາງກາຍະພາກ ແລະ ທາງເສດຖະກິດອາດຈະນຳໃຊ້ຢ່າງຕໍ່ເນື່ອງ.[20]

### *ການຍົກຍ້າຍທາງກາຍະພາກ*

19. ໃນກໍລະນີຂອງການຍົກຍ້າຍທາງກາຍະພາກ, ລູກຄ້າຈະຕ້ອງສ້າງແຜນຍົກຍ້າຍ ທີ່ກວມເອົາຢ່າງໜ້ອຍສຸດເງື່ອນໄຂທີ່ສາມາດນຳໃຊ້ໄດ້ພາຍໃຕ້ມາດຕະຖານການດຳເນີນງານນີ້ໂດຍບໍ່ກ່ຽວກັບຈຳນວນຜູ້ທີ່ໄດ້ຮັບຜົນກະທົບເຊິ່ງອາດຈະລວມເອົາການຊົດເຊີຍຄົບຖ້ວນຕາມມູນຄ່າການຍົກຍ້າຍສຳລັບທີ່ດິນ ແລະ ຊັບສິນອື່ນໆທີ່ຖືກສູນເສຍ. ແຜນດັ່ງກ່າວແມ່ນຈະຖືກອອກແບບມາເພື່ອຫຼຸດຜ່ອນຜົນກະທົບທາງລົບຈາກການຍົກຍ້າຍ; ກຳນົດໂອກາດດ້ານການພັດທະນາ; ສ້າງງົບປະມານ ແລະ ຕາຕະລາງເວລາສຳລັບການຍົກຍ້າຍ; ແລະ ກຳນົດສິດທີ່ຄວນຈະໄດ້ຮັບຂອງຜູ້ຖືກກະທົບທຸກປະເພດ (ເຊິ່ງລວມທັງຊຸມຊົນເຈົ້າພາບ). ຈະເອົາໃຈໃສ່ເປັນພິເສດຕໍ່ຄວາມຕ້ອງການຂອງຄົນທຸກ ແລະ ຜູ້ທີ່ບໍ່ສາມາດປົກປ້ອງຕົນເອງໄດ້. ລູກຄ້າຈະຕ້ອງບັນທຶກເປັນເອກະສານຂອງທຸກທຸລະກຳກ່ຽວກັບການໄດ້ມາຂອງສິດຕໍ່ທີ່ດິນ

[19] ການກ່າວທວງສິດໃນລັກສະນະດັ່ງກ່າວ ສາມາດເຮັດໄດ້ຕາມລະບົບກຳນົດສາຍພົວພັນສິດເປັນເຈົ້າຂອງຕາມປະເພນີ ຫຼື ລະບົບທີ່ອະນຸຍາດໃຫ້ຜູ້ນຳໃຊ້ຂໍສິດຕໍ່ທີ່ດິນທີ່ຕົນນຳໃຊ້.

[20] ກໍລະນີໂຄງການເປັນຜົນເຮັດໃຫ້ມີການຍົກຍ້າຍທັງກາຍະພາກ ແລະ ທາງເສດຖະກິດ, ເງື່ອນໄຂຂອງວັກທີ 25 ແລະ 26 (ການເຄື່ອນຍ້າຍທາງເສດຖະກິດ) ຄວນຖືກລວມເອົາເຂົ້າໃນແຜນຍົກຍ້າຍ ຫຼື ຂອບຄຸ້ມຄອງການຍົກຍ້າຍ (ໝາຍວ່າ: ບໍ່ຈຳເປັນຕ້ອງມີແຜນຍົກຍ້າຍ ແລະ ແຜນປົວແປງຊີວິດການເປັນຢູ່ ແຍກສະເພາະແຜນໃຜລາວ).

ກໍ່ຄື ມາດຕະຖານຊົດເຊີຍ ແລະ ກິດຈະກຳຍົກຍ້າຍ.

20. ຖ້າປະຊາຊົນທີ່ດຳລົງຊີວິດຢູ່ຕາມເຂດສະຖານທີ່ຕັ້ງຂອງໂຄງການຫາກຕ້ອງຍ້າຍໄປສູ່ສະຖານທີ່ຕັ້ງໃໝ່, ລູກຄ້າຈະຕ້ອງ (i)ສະໜອງບັນດາທາງເລືອກໃນການຍົກຍ້າຍທີ່ເປັນໄປໄດ້ໃຫ້ຜູ້ທີ່ຖືກຍົກຍ້າຍ, ເຊິ່ງລວມທັງທີ່ຢູ່ອາໄສທົດແທນທີ່ພຽງພໍ ຫຼື ການຊົດເຊີຍເປັນເງິນສົດຕາມຄວາມເໝາະສົມ; ແລະ (ii) ສະໜອງການຊ່ວຍເຫຼືອການຍົກຍ້າຍທີ່ເໝາະສົມກັບຄວາມຕ້ອງການຂອງແຕ່ລະກຸ່ມຄົນທີ່ຖືກຍົກຍ້າຍ. ເຂດຍົກຍ້າຍຈັດສັນໃໝ່ທີ່ສ້າງຂຶ້ນສຳລັບຜູ້ຖືກຍົກຍ້າຍຕ້ອງສະໜອງເງື່ອນໄຂການດຳລົງຊີວິດທີ່ດີກ່ວາເດີມ. ຄວາມມັກ ຫຼື ຄວາມນິຍົມຂອງຜູ້ຖືກຍົກຍ້າຍທີ່ມີກ່ຽວກັບການຍົກຍ້າຍໄປຢູ່ນຳຊຸມຊົນ ແລະ ກຸ່ມຄົນທີ່ມີຢູ່ແລ້ວຈະຕ້ອງໄດ້ຮັບ ການພິຈາລະນາ. ສະຖາບັນດ້ານສັງຄົມແລະວັດທະທຳທີ່ມີຢູ່ຂອງຜູ້ຖືກຍົກຍ້າຍ ແລະ ຊຸມຊົນເຈົ້າພາບຈະຕ້ອງໄດ້ຮັບຄວາມເຄົາລົບ.

21. ໃນກໍລະນີຂອງຜູ້ຖືກຍົກຍ້າຍທາງກາຍະພາກພາຍໃຕ້ວັກ 17 (i) ຫຼື (ii), ລູກຄ້າຈະຕ້ອງສະໜອງທາງເລືອກຂອງຊັບສິນປ່ຽນແທນທີ່ມີມູນຄ່າເທົ່າກັນ ຫຼື ສູງກ່ວາ, ການຄໍ້າປະກັນກຳມະສິດເປັນເຈົ້າຂອງທີ່ດິນທີ່ມີຄຸນລັກສະນະເທົ່າທຽມກັນ ຫຼື ດີກ່ວາ, ແລະ ຄວາມໄດ້ປຽບຂອງສະຖານທີ່ຕັ້ງ ຫຼື ການຊົດເຊີຍເປັນເງິນສົດຕາມຄວາມເໝາະສົມ. ຄວນພິຈາລະນາການຊົດເຊີຍເປັນວັດຖຸແທນການຊົດເຊີຍເປັນເງິນ. ລະດັບການຊົດເຊີຍເປັນເງິນຄວນພຽງພໍເພື່ອທົດແທນທີ່ດິນທີ່ເສຍໄປ ແລະ ຊັບສິນອື່ນໆໃນມູນຄ່າທົດແທນເຕັມຕາມລາຄາຕະຫຼາດທ້ອງຖິ່ນ.[21]

22. ກໍລະນີເປັນຜູ້ທີ່ຖືກຍົກຍ້າຍທາງກາຍະພາກພາຍໃຕ້ວັກ 17(iii), ລູກຄ້າຈະຕ້ອງສະໜອງທາງເລືອກສຳລັບການທີ່ມີ ທີ່ຢູ່ອາໄສພຽງພໍ ພ້ອມດ້ວຍການຄໍ້າປະກັນກຳມະສິດເປັນເຈົ້າຂອງເພື່ອໃຫ້ເຂົາເຈົ້າສາມາດຍ້າຍໄປຢູ່ຢ່າງຖືກຕ້ອງຕາມກົດໝາຍໂດຍປາສະຈາກການສ່ຽງຖືກບັງຄັບໃຫ້ອອກຈາກທີ່ດິນ. ກໍລະນີທີ່ຜູ້ຖືກຍົກຍ້າຍເປັນເຈົ້າຂອງ ແລະ ຄອບຄອງໂຄງສ້າງ, ລູກຄ້າຈະຕ້ອງຊົດເຊີຍເຂົາເຈົ້າສຳລັບການສູນເສຍຊັບສິນອື່ນໆ ນອກຈາກທີ່ດິນເຊັ່ນ: ເຮືອນຢູ່ອາໄສ ແລະ ການປັບປຸງອື່ນໆທີ່ເຂົາເຈົ້າໄດ້ເຮັດໃນດິນຕອນນັ້ນຕາມລາຄາທົດແທນເຕັມສ່ວນບົນພື້ນຖານເງື່ອນໄຂທີ່ວ່າ ບຸກຄົນເຫຼົ່ານັ້ນໄດ້ຄອບຄອງດິນໃນເຂດສະຖານທີ່ຕັ້ງຂອງໂຄງການກ່ອນວັນທີໝົດສິດຄົບເງື່ອນໄຂໄດ້ຮັບການຊົດເຊີຍ. ບົນພື້ນຖານການຂໍຄຳປຶກສາກັບຜູ້ທີ່ຖືກຍົກຍ້າຍ, ລູກຄ້າຈະຕ້ອງສະໜອງການຊ່ວຍເຫຼືອໃນການຍົກຍ້າຍໃນລະດັບພຽງພໍໃຫ້ເຂົາເຈົ້າເພື່ອໃຫ້ສາມາດປົວແປງມາດຕະຖານການດຳລົງຊີວິດໃນລະດັບພຽງພໍຢູ່ສະຖານທີ່ອື່ນເປັນທາງເລືອກ.[22]

[21] ການຊົດເຊີຍເປັນເງິນສົດ ອາດຈະເໝາະສົມ ໃນກໍລະນີ (i) ການຫາລ້ຽງຊີບບໍ່ໄດ້ຢູ່ບົນພື້ນຖານການນຳໃຊ້ທີ່ດິນ (ii) ການຫາລ້ຽງຊີບບົນພື້ນຖານການນຳໃຊ້ທີ່ດິນ, ແຕ່ວ່າສ່ວນ ທີ່ດິນຖືກໂຄງການນັ້ນ ເປັນສ່ວນນ້ອຍຂອງຊັບສິນທີ່ຖືກກະທົບ ແລະ ສ່ວນທີ່ດິນຍັງເຫຼືອ ນັ້ນມີຄວາມເປັນໄປໄດ້ທາງເສດຖະກິດ; ຫຼື (iii) ມີຕະຫຼາດທີ່ເກີດຂຶ້ນສຳລັບທີ່ດິນ, ເຮືອນ ຢູ່ອາໄສ ແລະ ແຮງງານ, ຜູ້ຖືກຍົກຍ້າຍ ນຳໃຊ້ກົນໄກຕະຫຼາດດັ່ງກ່າວ, ໂດຍມີການສະໜອງທີ່ພຽງພໍຂອງທີ່ດິນແລະເຮືອນຢູ່ອາໄສ ພາຍໃນຕະຫຼາດທີ່ມີຢູ່.

23. ລູກຄ້າ ບໍ່ຕ້ອງຊົດເຊີຍ ຫຼື ຊ່ວຍເຫຼືອຜູ້ທີ່ບຸກລຸກເນື້ອທີ່ດິນໃນເຂດສະຖານທີ່ຕັ້ງຂອງໂຄງການພາຍຫຼັງວັນທີໝົດສິດໄດ້ຮັບການຊົດເຊີຍ ຫາກເງື່ອນໄຂວັນທີໝົດສິດໄດ້ຮັບການຊົດເຊີຍ ໄດ້ຖືກກຳນົດຢ່າງຈະແຈ້ງ ແລະ ເຜີຍແຜ່ໃຫ້ສັງຄົມໄດ້ຮັບຮູ້.

24. ການບັງຄັບໃຫ້ອອກຈາກທີ່ດິນ[23] ຈະບໍ່ຖືກຈັດຕັ້ງປະຕິບັດ ເວັ້ນເສຍແຕ່ວ່າເປັນການປະຕິບັດຕາມກົດໝາຍແລະເງື່ອນໄຂຕ່າງໆທີ່ມີໃນມາດຕະຖານການດຳເນີນງານນີ້.

### *ການຍົກຍ້າຍທາງເສດຖະກິດ*

25. ກໍລະນີໂຄງການມີການຍົກຍ້າຍທາງເສດຖະກິດພຽງຢ່າງດຽວ, ລູກຄ້າຈະຕ້ອງສ້າງແຜນປົວແປງຊີວິດການເປັນຢູ່ເພື່ອຊົດເຊີຍໃຫ້ຜູ້ທີ່ຖືກກະທົບ ແລະ/ຫຼື ຊຸມຊົນທີ່ຖືກກະທົບ ແລະ ສະໜອງການຊ່ວຍເຫຼືອອື່ນໆທີ່ຕອບສະໜອງໄດ້ຕາມຈຸດປະສົງຂອງມາດຕະຖານການດຳເນີນງານນີ້. ແຜນປົວແປງຊີວິດການເປັນຢູ່ຈະກຳນົດສິດທີ່ຄວນໄດ້ຮັບຂອງຜູ້ໄດ້ຮັບຜົນກະທົບ ແລະ/ຫຼື ຊຸມຊົນທີ່ຖືກກະທົບ ແລະ ຮັບປະກັນວ່າສິດເຫຼົ່ານັ້ນໄດ້ຮັບການສະໜອງໃນລັກສະທີ່ໂປ່ງໃສ, ສອດຄ່ອງ ແລະ ສະເໝີພາບ. ການບັນເທົາຜົນກະທົບຈາກການຍົກຍ້າຍທາງເສດຖະກິດຈະຖືວ່າສຳເລັດແລ້ວເມື່ອຜູ້ໄດ້ຮັບຜົນກະທົບ ຫຼື ຊຸມຊົນທີ່ຖືກກະທົບໄດ້ຮັບການຊົດເຊີຍ ແລະ ການຊ່ວຍເຫຼືອອື່ນໆຕາມເງື່ອນໄຂຂອງແຜນປົວແປງຊີວິດການເປັນຢູ່ ແລະ ມາດຕະຖານການຈັດຕັ້ງປະຕິບັດນີ້ ແລະ ເມື່ອເຫັນວ່າ: ໄດ້ຮັບການສະໜອງໂອກາດທີ່ພຽງພໍໃນການຫາລ້ຽງຊີບຂອງເຂົາເຈົ້າ.

[22] ການຍົກຍ້າຍຈັດສັນຜູ້ເຂົ້າມາຕັ້ງຖິ່ນຖານແບບບໍ່ຖືກຕ້ອງຕາມທາງການໃນບັນດາເຂດຕົວເມືອງ ອາດຈະມີບັນຫາການເລືອກໄດ້-ເລືອກເສຍ. ຕົວຢ່າງ: ຄອບຄົວທີ່ຖືກຍົກຍ້າຍອາດຈະໄດ້ຮັບການຄໍ້າປະກັນກຳມະສິດຕໍ່ທີ່ດິນ, ແຕ່ເຂົາເຈົ້າອາດຈະເສຍຄວາມໄດ້ປຽບຂອງສະຖານທີ່ຕັ້ງເຊິ່ງເປັນເຂດທີ່ຢູ່ອາໄສ. ການປ່ຽນແປງຕໍ່ສະຖານທີ່ຕັ້ງທີ່ອາດຈະສົ່ງຜົນຕໍ່ໂອກາດໃນການຫາລ້ຽງຊີບຄວນຈະໄດ້ຮັບການແກ້ໄຂຕາມຫຼັກການຂອງມາດຕະຖານການດຳເນີນງານນີ້ (ລະອຽດເບິ່ງວັກ 25).

[23] ເປັນການໃຫ້ສ່ວນບຸກຄົນ, ຄອບຄົວ ແລະ/ຫຼື ຊຸມຊົນຍ້າຍອອກຈາກເຮືອນ ແລະ/ຫຼື ທີ່ດິນທີ່ເຂົາເຈົ້າຄອບຄອງໂດຍປາສະຈາກການສະໜອງ, ການເຂົ້າເຖິງການປົກປ້ອງທາງ ກົດໝາຍໃນຮູບການທີ່ເໝາະສົມ ແລະ ການປົກປ້ອງໃນຮູບການອື່ນໆ ເຊິ່ງເປັນການໃຫ້ອອກແບບຖາວອນ ຫຼື ຊົ່ວຄາວ ໃນລັກສະນະທີ່ຂັດກັບຈິດໃຈຂອງເຂົາເຈົ້າ.

26. ຖ້າການໄດ້ມາຂອງທີ່ດິນ ຫຼື ການຈຳກັດຕໍ່ສິດການນຳໃຊ້ທີ່ດິນເປັນຜົນນຳໄປສູ່ການຍົກຍ້າຍທາງເສດຖະກິດທີ່ຖືກກຳນົດວ່າເປັນການສູນເສຍຊັບສິນ ແລະ/ຫຼື ວິທີການຫາລ້ຽງຊີບໂດຍບໍ່ກ່ຽວກັບວ່າ: ຜູ້ຖືກກະທົບຖືກຕ້ອງຍົກຍ້າຍທາງກາຍະພາກ ຫຼື ບໍ່, ລູກຄ້າຈະຕ້ອງຕອບສະໜອງຕາມເງື່ອນໄຂຕ່າງໆທີ່ສາມາດນຳໃຊ້ໄດ້ໃນວັກທີ 27–29 ຂ້າງລຸ່ມນີ້.

27. ຜູ້ທີ່ຖືກຍົກຍ້າຍທາງເສດຖະກິດທີ່ປະເຊີນກັບການສູນເສຍຊັບສິນ ຫຼື ການເຂົ້າເຖິງຊັບສິນຈະຕ້ອງໄດ້ຮັບການຊົດເຊີຍສຳລັບການສູນເສຍດັ່ງກ່າວຕາມມູນຄ່າທົດແທນເຕັມ.

- ກໍລະນີທີ່ການໄດ້ມາຂອງທີ່ດິນ ຫຼື ການຈຳກັດຕໍ່ການນຳໃຊ້ທີ່ດິນຫາກສົ່ງຜົນກະທົບຕໍ່ໂຄງສ້າງທາງທຸລະກິດ, ເຈົ້າຂອງທຸລະກິດທີ່ຖືກກະທົບຈະໄດ້ຮັບການຊົດເຊີຍໃນມູນຄ່າການດຳເນີນທຸລະກິດຂອງຕົນຢູ່ບ່ອນອື່ນ,ໄດ້ຮັບການຊົດເຊີຍການສູນເສຍລາຍໄດ້ສຸດທິໃນໄລຍະຂ້າມຜ່ານ, ແລະ ມູນຄ່າການເຄື່ອນຍ້າຍແລະການຕິດຕັ້ງຄືນຂອງໂຮງຈັກໂຮງງານ, ເຄື່ອງກົນຈັກ ແລະ ອຸປະກອນອື່ນໆ.
- ກໍລະນີຜູ້ຖືກກະທົບມີສິດທີ່ຖືກຕ້ອງຕາມກົດໝາຍ ຫຼື ສາມາດກ່າວທວງສິດທີ່ຖືກຕ້ອງຕາມກົດໝາຍຕໍ່ທີ່ດິນ ເຊິ່ງກົດໝາຍພາຍໃນຮັບຮູ້ ຫຼື ສາມາດຮັບຮູ້ (ລະອຽດເບິ່ງວັກ 17 (i) ແລະ (ii)), ທີ່ດິນທົດແທນ (ຕ.ຢ:ສະຖານທີ່ຕັ້ງຂອງບ່ອນຜະລິດກະສິ ກຳ ຫຼື ບ່ອນເຮັດທຸລະກິດ) ທີ່ມີມູນຄ່າເທົ່າກັນ ຫຼື ສູງກ່ວາ ຈະຕ້ອງຖືກສະໜອງໃຫ້ ຫຼື ຕາມຄວາມເໝາະສົມຕ້ອງຊົດເຊີຍເປັນເງິນສົດຕາມມູນຄ່າທົດແທນເຕັມ.
- ຜູ້ທີ່ຖືກຍົກຍ້າຍທາງເສດຖະກິດທີ່ບໍ່ສາມາດທວງສິດຕາມກົດໝາຍຕໍ່ທີ່ດິນ (ລະອຽດເບິ່ງວັກ 17 (iii)) ແມ່ນຈະໄດ້ຮັບການຊົດເຊີຍຕາມມູນຄ່າຂອງຊັບສິນທີ່ສູນເສຍແທນທີ່ຈະເອົາຕາມມູນຄ່າຂອງທີ່ດິນ (ເຊັ່ນ: ພືດຜົນລະປູກ,ພື້ນຖານໂຄງລ່າງຊົນລະປະທານ ແລະ ການປັບປຸງອື່ນໆທີ່ໄດ້ເຮັດຢູ່ໃນຕອນດິນດັ່ງກ່າວ) ຕາມມູນຄ່າທົດແທນເຕັມ. ລູກຄ້າບໍ່ຕ້ອງຊົດເຊີຍ ຫຼື ຊ່ວຍເຫຼືອຜູ້ສວຍໂອກາດເຂົ້າມາຕັ້ງຖິ່ນຖານທີ່ບຸກລຸກເອົາດິນທີ່ນອນໃນເຂດສະຖານທີ່ຕັ້ງຂອງໂຄງການພາຍຫຼັງວັນທີໝົດສິດຄົບເງື່ອນໄຂໄດ້ຮັບການຊົດເຊີຍ.

28. ນອກຈາກການຊົດເຊີຍສຳລັບການສູນເສຍຊັບສິນແລ້ວ (ຖ້າມີ) ຕາມເງື່ອນໄຂທີ່ມີພາຍໃຕ້ວັກ 27, ຜູ້ທີ່ຖືກຍົກຍ້າຍທາງເສດຖະກິດ ເຊິ່ງລະດັບການຫາລ້ຽງຊີບ ຫຼື ລາຍໄດ້ຂອງເຂົາເຈົ້າຖືກກະທົບໃນທາງລົບແມ່ນຈະໄດ້ຮັບການສະໜອງໂອກາດເພື່ອປັບປຸງ ຫຼື ຢ່າງໜ້ອຍສຸດຮັກສາຄວາມສາມາດໃນການຫາລາຍໄດ້ຂອງເຂົາເຈົ້າ, ລະດັບການຜະລິດແລະມາດຕະຖານການດຳລົງຊີວິດຂອງເຂົາເຈົ້າ:

- ສຳລັບຜູ້ທີ່ມີການຫາລ້ຽງຊີບບົນພື້ນຖານການນຳໃຊ້ທີ່ດິນ, ຄວນຈະໄດ້ຮັບການສະໜອງທີ່ດິນທົດແທນທີ່ມີທ່າແຮງໃນການ ຜະລິດ,ມີຂໍ້ໄດ້ປຽບທາງສະຖານທີ່ຕັ້ງ ແລະ ປັດໄຈອື່ນໆ ຢ່າງໜ້ອຍທຽບເທົ່າກັບທີ່ດິນທີ່ຖືກສູນເສຍເປັນບູລິມະສິດ.
- ສຳລັບຜູ້ທີ່ການຫາລ້ຽງຊີບຢູ່ບົນພື້ນຖານການເພິ່ງພາຊັບພະຍາກອນທຳມະຊາດ ແລະ ການທີ່ໂຄງການຈຳກັດການເຂົ້າເຖິງ ຊັບພະຍາກອນດັ່ງກ່າວຕາມທີ່ສົນທະນາໃນວັກ 5, ແມ່ນຈະມີການຈັດຕັ້ງປະຕິບັດມາດຕະການເພື່ອສືບຕໍ່ອະນຸຍາດໃຫ້ເຂົາເຈົ້າ ເຂົ້າເຖິງຊັບພະຍາກອນທີ່ຖືກກະທົບ ຫຼື ສະໜອງການເຂົ້າເຖິງຊັບພະຍາກອນທາງເລືອກທີ່ມີທ່າແຮງໃນການຫາ ລ້ຽງຊີບແລະຄວາມສາມາດໃນການເຂົ້າເຖິງເທົ່າທຽມກັນ.ຕາມທີ່ເຫັນວ່າເໝາະສົມ, ການສະໜອງຜົນປະໂຫຍດ ແລະ ການຊົດເຊີຍທີ່ພົວພັນກັບການນຳໃຊ້ຊັບພະຍາກອນທຳມະຊາດອາດຈະມີລັກສະນະລວມໝູ່ແທນທີ່ຈະເປັນການສະໜອງ ໃຫ້ບຸກ ຄົນ ຫຼື ຄົວເຮືອນໂດຍກົງ.
- ຖ້າສະພາບເງື່ອນໄຂ ຫາກຈຳກັດລູກຄ້າບໍ່ໃຫ້ສາມາດສະໜອງທີ່ດິນ ຫຼື ຊັບພະຍາກອນທີ່ຄ້າຍຄືກັນຕາມທີ່ອະທິບາຍໄວ້ຂ້າງ ເທິງ, ອາດຈະຖືກສະໜອງໂອກາດສ້າງລາຍໄດ້ທີ່ເປັນທາງເລືອກໃຫ້ແທນເຊັ່ນ: ກົນໄກໃຫ້ສິນເຊື່ອ, ຝຶກອົບຮົມວິຊາຊີບ ຫຼື ສີມືແຮງງານ, ຊົດເຊີຍເປັນເງິນສົດ, ຫຼື ສະໜອງໂອກາດໃນການປະກອບອາຊີບ. ຢ່າງໃດກໍ່ດີໂດຍປົກກະຕິແລ້ວການຊົດເຊີຍເປັນເງິນສົດພຽງຢ່າງດຽວແມ່ນບໍ່ພຽງພໍໃນການປົວແປງຊີວິດການເປັນຢູ່.

29. ຕາມຄວາມຈຳເປັນ, ຄວນຈະສະໜອງການຊ່ວຍເຫຼືອໃນໄລຍະຂ້າມຜ່ານ ໃຫ້ທຸກຄົນທີ່ຖືກຍົກຍ້າຍທາງເສດຖະກິດ ບົນພື້ນຖານກຳນົດເວລາທີ່ສົມເຫດສົມຜົນ ເຊິ່ງຈຳເປັນໃນການປົວແປງຄວາມສາມາດໃນການຫາລາຍໄດ້, ລະດັບການຜະລິດ ແລະ ມາດຕະຖານການດຳລົງຊີວິດຂອງເຂົາເຈົ້າ.

## ໜ້າທີ່ຮັບຜິດຊອບຂອງພາກເອກະຊົນໃນການຍົກຍ້າຍຈັດສັນທີ່ຄຸ້ມຄອງໂດຍລັດຖະບານ

30. ໃນກໍລະນີການໄດ້ມາຂອງທີ່ດິນ ແລະ ການຍົກຍ້າຍຈັດສັນທີ່ເປັນໜ້າທີ່ຮັບຜິດຊອບຂອງລັດຖະບານ ລູກຄ້າຈະປະສານສົມທົບກັບອົງ ການຂອງລັດທີ່ກ່ຽວຂ້ອງຕາມລະດັບທີ່ອະນຸຍາດພາຍໃຕ້ອົງການດັ່ງກ່າວ ເພື່ອບັນລຸຕາມຜົນໄດ້ຮັບທີ່ສອດຄ່ອງກັບມາດຕະຖານການດຳເນີນງານ. ນອກຈາກນີ້, ໃນກໍລະນີທີ່ຄວາມສາມາດຂອງລັດຖະບານມີຈຳກັດ, ລູກຄ້າຈະເຮັດບົດບາດທີ່ຕັ້ງໜ້າໃນການວາງແຜນ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາໃນລະຫວ່າງການຍົກຍ້າຍຈັດສັນດັ່ງທີ່ໄດ້ອະທິບາຍໄວ້ຂ້າງລຸ່ມນີ້.

31. ໃນກໍລະນີຂອງການໄດ້ມາຂອງສິດນຳໃຊ້ທີ່ດິນ ຫຼື ການເຂົ້າເຖິງທີ່ດິນໂດຍຜ່ານວິທີການບັງຄັບ ແລະ ການຍົກຍ້າຍຈັດສັນທີ່ໄດ້ເຈລະຈາເຊິ່ງປະກອບມີການຍົກຍ້າຍທາງກາຍະພາກ, ລູກຄ້າຈະກຳນົດ ແລະ ອະທິບາຍ [24] ມາດຕະການຍົກຍ້າຍຈັດສັນຂອງລັດຖະບານ. ຖ້າຫາກມາດຕະການເຫຼົ່ານີ້ບໍ່ໄດ້ຕາມເງື່ອນໄຂທີ່ກ່ຽວຂ້ອງໃນມາດຕະຖານການດຳເນີນງານດັ່ງກ່າວນີ້ (ເງື່ອນໄຂທົ່ວໄປ ແລະ ຂໍ້ກຳນົດຂອງການຍົກຍ້າຍທາງກາຍະພາກ ແລະ ການຍົກຍ້າຍທາງເສດຖະກິດຂ້າງເທິງນີ້). ລູກຄ້າຈະຕ້ອງໄດ້ເອົາເຂົ້າແຜນຍົກຍ້າຍຈັດສັນເພີ່ມເຕີມຢ່າງຕໍ່າສຸດໃຫ້ມີ (i) ການກຳນົດຄົນທີ່ໄດ້ຮັບຜົນກະທົບ ແລະ ບັນດາຜົນກະທົບ; (ii) ລາຍລະອຽດຂອງກິດຈະກຳທີ່ມີການຄຸ້ມຄອງລວມທັງສິດທີ່ຄວນໄດ້ຮັບຂອງຄົນທີ່ຖືກຍົກຍ້າຍຈັດສັນຕາມທີ່ໄດ້ກຳນົດພາຍໃຕ້ກົດໝາຍ ແລະ ລະບຽບການແຫ່ງຊາດທີ່ ກ່ຽວຂ້ອງ; (iii) ມາດຕະການເພີ່ມເຕີມເພື່ອບັນລຸຕາມ ຂໍ້ກຳນົດໃນມາດຕະຖານການດຳເນີນງານດັ່ງທີ່ໄດ້ໃຫ້ລາຍລະອຽດໄວ້ໃນວັກທີ 19 – 29 ຕາມທີ່ໄດ້ອະນຸມັດໂດຍອົງການທີ່ຮັບຜິດຊອບ ແລະ ຈັດຕັ້ງປະຕິບັດຕາຕະລາງເວລາ; ແລະ (iv) ໜ້າທີ່ຮັບຜິດຊອບທາງດ້ານການເງິນ ແລະ ການຈັດຕັ້ງປະຕິບັດຂອງລູກຄ້າໃນການປະຕິບັດແຜນການຍົກຍ້າຍຈັດສັນເພີ່ມເຕີມ.

32. ໃນກໍລະນີຂອງໂຄງການທີ່ກ່ຽວຂ້ອງກັບການຍົກຍ້າຍທາງດ້ານເສດຖະກິດພຽງຢ່າງດຽວ, ລູກຄ້າຈະກຳນົດ ແລະອະທິບາຍມາດຕະການທີ່ອົງການຂອງລັດທີ່ມີໜ້າທີ່ຮັບຜິດຊອບວາງແຜນທີ່ຈະນຳໃຊ້ເພື່ອຊົດເຊີຍໃຫ້ຊຸມຊົນ ແລະ ບຸກຄົນທີ່ໄດ້ຮັບຜົນກະທົບ. ຖ້າຫາກມາດຕະການເຫຼົ່ານີ້ບໍ່ໄດ້ຕາມເງື່ອນໄຂຂອງມາດຕະຖານການດຳເນີນງານນີ້ ລູກຄ້າຈະຕ້ອງສ້າງແຜນດຳເນີນງານທາງດ້ານສິ່ງແວດລ້ອມ ແລະ ສັງຄົມເພື່ອສະໜັບສະໜູນເສີມໃຫ້ກິດຈະກຳຂອງລັດຖະບານ. ສິ່ງດັ່ງກ່າວອາດລວມເອົາການຊົດເຊີຍເພີ່ມເຕີມສຳລັບຊັບສິນທີ່ຖືກສູນເສຍໄປ ແລະ ຄວາມພະຍາຍາມເພີ່ມເຕີມເພື່ອຟື້ນຟູຊີວິດການເປັນຢູ່ໃນກໍລະນີທີ່ມີຄວາມສອດຄ່ອງ.

[24] ຖ້າມີອາດຈະນຳໃຊ້ເອກະສານຂອງລັດຖະບານເພື່ອກຳນົດມາດຕະການເຫຼົ່ານັ້ນ.

ມາດຕະຖານການດຳເນີນງານທີ 6

# ການອະນຸລັກຊີວະນາໆພັນ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດທີ່ມີຊີວິດ ແບບຍືນຍົງ

## ພາກສະເໜີ

1. ມາດຕະຖານການດຳເນີນງານທີ 6 ຮັບຮູ້ວ່າ: ການປົກປັກຮັກສາ ແລະ ການອະນຸລັກຊີວະນາໆພັນໆ, ການຮັກສາບໍລິການດ້ານລະບົບນິເວດ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດທີ່ມີຊີວິດ ແບບຍືນຍົງ ຖືເປັນພື້ນຖານຂອງການພັດທະນາແບບຍືນຍົງ. ບັນດາເງື່ອນໄຂທີ່ກຳນົດໄວ້ໃນມາດຕະຖານການດຳເນີນງານຂໍ້ນີ້ ແມ່ນຢູ່ພາຍໃຕ້ກອບຂອງສົນທິສັນຍາວ່າດ້ວຍຄວາມຫຼາກຫຼາຍດ້ານຊີວະນາໆພັນ ເຊິ່ງໄດ້ນິຍາມຄຳວ່າຊີວະນາໆພັນວ່າແມ່ນ “ຄວາມຫຼາກຫຼາຍຂອງສິ່ງທີ່ມີຊີວິດຈາກທຸກແຫຼ່ງ ເຊິ່ງລວມທັງ (ແຕ່ບໍ່ໄດ້ຈຳກັດພຽງແຕ່) ລະບົບນິເວດຂອງດິນ, ທະເລ ແລະ ບັນດາລະບົບນິເວດທາງນ້ຳອື່ນໆ ຕະຫຼອດເຖິງບັນດາຄວາມສະຫຼັບຊັບຊ້ອນທາງລະບົບນິເວດ ເຊິ່ງສິ່ງທີ່ມີຊີວິດປະກອບເປັນສ່ວນໜຶ່ງໃນນັ້ນ; ເຊິ່ງລວມເອົາຄວາມຫຼາກຫຼາຍພາຍໃນຊະນິດພັນ, ລະຫວ່າງຊະນິດພັນ ແລະ ຂອງລະບົບນິເວດຕ່າງໆ.”

2. ການບໍລິການດ້ານລະບົບນິເວດ ແມ່ນຜົນປະໂຫຍດທີ່ປະຊາຊົນ ເຊິ່ງລວມທັງທຸລະກິດຕ່າງໆທີ່ໄດ້ຮັບຈາກບັນດາລະບົບນິເວດຕ່າງໆ. ການບໍລິການດ້ານລະບົບນິເວດ ຖືກແບ່ງອອກເປັນສີ່ປະເພດຄື: (i) ການບໍລິການເພື່ອສະໜອງເຊິ່ງໝາຍເຖິງຜະລິດຕະພັນຕ່າງໆທີ່ປະຊາຊົນໄດ້ຮັບຈາກບັນດາລະບົບນິເວດ; (ii) ການບໍລິການທີ່ຄຸ້ມຄອງດັດສົມ ໝາຍເຖິງບັນດາຜົນປະໂຫຍດທີ່ປະຊາຊົນໄດ້ຮັບຈາກການຄຸ້ມຄອງ ດັດສົມຂະບວນການທາງລະບົບນິເວດ (iii) ການບໍລິການດ້ານວັດທະນະທຳ ໝາຍເຖິງ ບັນດາຜົນປະໂຫຍດທີ່ບໍ່ແມ່ນວັດຖຸ ທີ່ປະຊາຊົນໄດ້ຮັບຈາກບັນດາລະບົບນິເວດ; ແລະ (iv) ການບໍລິການເພື່ອຄ້ຳຊູຊ່ວຍເຫຼືອ ໝາຍເຖິງບັນດາຂະບວນການທາງທຳມະຊາດທີ່ບຳລຸງຮັກສາການບໍລິການອື່ນໆ.[1]

3. ໂດຍປົກກະຕິແລ້ວ, ການບໍລິການດ້ານລະບົບນິເວດທີ່ມະນຸດໃຫ້ຄວາມສຳຄັນນັ້ນແມ່ນໄດ້ຮັບການຄ້ຳຊູໂດຍຊີວະນາໆພັນ. ດ້ວຍເຫດນັ້ນ, ຜົນກະທົບຕໍ່ຊີວະນາໆພັນໂດຍປົກກະຕິແລ້ວ ສາມາດສົ່ງຜົນກະທົບໃນທາງລົບຕໍ່ການສະໜອງການບໍລິການຕ່າງໆຂອງລະບົບນິເວດ. ມາດຕະຖານການດຳເນີນງານນີ້ໄດ້ເວົ້າເຖິງວິທີທີ່ລູກຄ້າຈະສາມາດຄຸ້ມຄອງແບບຍືນຍົງ ແລະ ຫຼຸດຜ່ອນຜົນກະທົບ ຕໍ່ຊີວະນາໆພັນ ແລະ ການບໍລິການລະບົບນິເວດຕະຫຼອດໄລຍະຮອບວຽນອາຍຸຂອງໂຄງການ.

- ເພື່ອປົກປັກຮັກສາ ແລະ ອະນຸລັກຊີວະນາໆພັນ.
- ເພື່ອບຳລຸງຮັກສາບັນດາຜົນປະໂຫຍດຕ່າງໆຈາກການບໍລິການລະບົບນິເວດ.
- ເພື່ອສົ່ງເສີມການຄຸ້ມຄອງຊັບພະຍາກອນທຳມະຊາດທີ່ມີຊີວິດແບບຍືນຍົງຜ່ານການຮັບຮອງເອົາແບບວິທີປະຕິບັດ ທີ່ເຊື່ອມສານຄວາມຕ້ອງການດ້ານການອະນຸລັກ ແລະ ບູລິມະສິດດ້ານການພັດທະນາ.

## ຂອບເຂດການນຳໃຊ້

4. ຄວາມສາມາດໃນການນຳໃຊ້ມາດຕະຖານການດຳເນີນງານຂໍ້ນີ້ ແມ່ນກຳນົດໃຫ້ນຳໃຊ້ໃນຂະບວນການກຳນົດຜົນກະທົບ ແລະ ຄວາມ ສ່ຽງທາງດ້ານສິ່ງແວດລ້ອມ ແລະ ສັງຄົມ. ການຈັດຕັ້ງປະຕິບັດບັນດາກິດຈະກຳທີ່ຈຳເປັນເພື່ອຕອບສະໜອງໃຫ້ໄດ້ຕາມບັນດາເງື່ອນໄຂຕ່າງໆຂອງມາດຕະຖານການດຳເນີນງານດັ່ງກ່າວແມ່ນຢູ່ພາຍໃຕ້ການຄຸ້ມຄອງພາຍໃນລະບົບຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMS) ຂອງລູກຄ້າ, ບັນດາອົງປະກອບຂອງລະບົບດັ່ງກ່າວແມ່ນຖືກກຳນົດໄວ້ໃນມາດຕະຖານການດຳເນີນງານທີ 1.

5. ບົນພື້ນຖານຂະບວນການກຳນົດຄວາມສ່ຽງ ແລະ ຜົນກະທົບ, ບັນດາເງື່ອນໄຂຂອງມາດຕະຖານການດຳເນີນງານຂໍ້ນີ້ແມ່ນນຳໃຊ້ກັບບັນດາໂຄງການຕ່າງໆ (i) ທີ່ຕັ້ງຢູ່ໃນເຂດທີ່ຢູ່ອາໄສທີ່ຖືກດັດປັບ, ເຂດທີ່ຢູ່ອາໄສທາງທຳມະຊາດ ແລະ ເຂດທີ່ຢູ່ອາໄສຈຳເປັນ; (ii) ທີ່ມີທ່າແຮງສົ່ງຜົນກະທົບຕໍ່ ຫຼື ທີ່ເພິ່ງພາອາໄສບໍລິການລະບົບນິເວດ ເຊິ່ງເປັນຂົງເຂດທີ່ລູກຄ້າມີການຄວບຄຸມຄຸ້ມຄອງໂດຍກົງ ຫຼື ມີບົດບາດສູງ; ຫຼື (iii) ທີ່ລວມເອົາການຜະລິດຊັບພະຍາກອນທຳມະຊາດທີ່ມີຊີວິດ (ຕົວຢ່າງ: ການປູກຝັງ, ການລ້ຽງສັດ, ການປະມົງ, ການປ່າໄມ້).

## ເງື່ອນໄຂ

### ເງື່ອນໄຂທົ່ວໄປ

6. ຂະບວນການກຳນົດຜົນກະທົບ ແລະ ຄວາມສ່ຽງທີ່ຖືກກຳນົດໄວ້ໃນມາດຕະຖານການດຳເນີນງານທີ 1 ຄວນພິຈາລະນາບັນດາຜົນກະທົບທາງກົງແລະທາງອ້ອມຂອງໂຄງການທີ່ມີຕໍ່ຊີວະນາໆພັນ ແລະ ບໍລິການລະບົບນິເວດ, ແລະ ກຳນົດທຸກຜົນກະທົບຕົກຄ້າງໃນລະດັບສູງ. ຂະບວນການດັ່ງກ່າວຈະພິຈາລະນາບັນດາໄພຂົ່ມຂູ່ທີ່ກ່ຽວຂ້ອງຕໍ່ຊີວະນາໆພັນ ແລະ ການບໍລິການດ້ານລະບົບນິເວດໂດຍສະເພາະແມ່ນສຸມໃສ່ການສູນເສຍເຂດທີ່ຢູ່ອາໄສ, ການເຊື່ອມໂຊມ ແລະ ການຕັດແຍກ, ຊະນິດພັນຕ່າງຖິ່ນທີ່ຄຸກຄາມ, ການຂຸດຄົ້ນເກີນຄວາມສາມາດທົດແທນ, ການປ່ຽນແປງທາງອຸທົກກະສາດ, ການສະສົມປະລິມານຂອງຈຸລະສານອາຫານ ແລະ ມົນລະພິດ. ຂະບວນການດັ່ງກ່າວຍັງພິຈາລະນາລວມເອົາບັນດາຄ່າຕ່າງໆທີ່ພົວພັນກັບຊີວະນາໆພັນ ແລະ ບໍລິການລະບົບນິເວດ ຕາມຊຸມຊົນທີ່ຖືກກະທົບ ແລະ ພາກສ່ວນກ່ຽວຂ້ອງອື່ນໆຕາມຄວາມເໝາະສົມ. ໃນຂອດທີ່ວັກທີ 13–19 ສາມາດນຳໃຊ້ໄດ້, ລູກຄ້າຄວນພິຈາລະນາເບິ່ງບັນດາຜົນກະທົບຕ່າງໆຈາກໂຄງການຕໍ່ທົ່ວພູມມິທັດ ຫຼື ພູມມິທັດທາງທະເລທີ່ມີທ່າແຮງຖືກກະທົບ.

7. ອີງຕາມບູລິມະສິດ, ລູກຄ້າຄວນຊອກຫາວິທີຫຼີກເວັ້ນຜົນກະທົບຕໍ່ຊີວະນາໆພັນ ແລະ ການບໍລິການດ້ານລະບົບນິເວດ. ຫາກບໍ່ສາມາດຫຼີກເວັ້ນຜົນກະທົບໄດ້, ຄວນຈັດຕັ້ງປະຕິບັດບັນດາມາດຕະການເພື່ອຫຼຸດຜ່ອນຜົນກະທົບ ແລະ ຟື້ນຟູຊີວະນາໆພັນ ແລະ ການບໍລິການດ້ານລະບົບນິເວດ. ໂດຍພິຈາລະນາຕາມຄວາມສະຫຼັບຊັບຊ້ອນໃນການຄາດຄະເນຜົນກະທົບຈາກໂຄງການຕໍ່ຊີວະນາໆພັນ ແລະ ການບໍລິການດ້ານລະບົບນິເວດໃນໄລຍະຍາວ, ລູກຄ້າຄວນຮັບຮອງເອົາການຄຸ້ມຄອງແບບປັບປ່ຽນ ເຊິ່ງການຈັດຕັ້ງປະຕິບັດມາດຕະການຄຸ້ມຄອງ ແລະ ຫຼຸດຜ່ອນ ຜົນກະທົບສາມາດຕອບສະໜອງໄດ້ຕາມເງື່ອນໄຂທີ່ມີການປ່ຽນແປງ ແລະ ບັນດາຜົນໄດ້ຮັບຈາກການຕິດຕາມກວດກາຕະຫຼອດໄລຍະຮອບວຽນອາຍຸຂອງໂຄງການ.

8. ໃນຂອດທີ່ວັກທີ 13–15 ສາມາດນຳໃຊ້ໄດ້, ລູກຄ້າຈະຮັກສາພະນັກງານວິຊາການທີ່ມີຄວາມສາມາດເພື່ອຊ່ວຍໃນການຈັດຕັ້ງປະຕິບັດຂະບວນການກຳນົດຄວາມສ່ຽງ ແລະ ຜົນກະທົບຈາກໂຄງການ. ໃນຂອດທີ່ວັກທີ 16–19 ສາມາດນຳໃຊ້ໄດ້, ລູກຄ້າຄວນຮັກສາຊ່ຽວຊານສາກົນທີ່ມີປະສົບການເໝາະສົມໃນລະດັບພາກພື້ນເພື່ອຊ່ວຍສ້າງລະດັບຂັ້ນການຫຼຸດຜ່ອນຜົນກະທົບ ທີ່ປະຕິບັດໄດ້ຕາມມາດຕະຖານດຳເນີນງານນີ້ ແລະ ເພື່ອຊ່ວຍຢັ້ງຢືນການຈັດຕັ້ງປະຕິບັດບັນດາມາດຕະການຫຼຸດຜ່ອນຜົນກະທົບເຫຼົ່ານັ້ນ.

### ການປົກປັກຮັກສາ ແລະ ການອະນຸລັກຊີວະນາໆພັນ

9. ເຂດທີ່ຢູ່ອາໄສ ຖືກນິຍາມວ່າເປັນ: ເຂດດິນ, ນ້ຳຈືດ ຫຼື ຫົວໜ່ວຍພູມສາດຂອງນ້ຳທະເລ ຫຼື ທາງອາກາດທີ່ສະໜັບສະໜູນຄ້ຳຊູການລວມຕົວຂອງສິ່ງທີ່ມີຊີວິດ ແລະ ການປະຕິສຳພັນລະຫວ່າງສິ່ງທີ່ມີຊີວິດກັບສິ່ງແວດລ້ອມທີ່ບໍ່ມີຊີວິດ. ເພື່ອຮັບໃຊ້ຈຸດປະສົງຂອງມາດຕະຖານການດຳເນີນງານນີ້, ເຂດທີ່ຢູ່ອາໄສ ຖືກແບ່ງອອກເປັນເຂດທີ່ຢູ່ອາໄສທີ່ຖືກດັດປັບ, ເຂດທີ່ຢູ່ອາໄສຕາມທຳມະຊາດ ແລະ ເຂດທີ່ຢູ່ອາໄສຈຳເປັນ. ເຂດທີ່ຢູ່ອາໄສຈຳເປັນແມ່ນກຸ່ມຍ່ອຍຂອງເຂດທີ່ຢູ່ອາໄສທີ່ຖືກດັດປັບ ຫຼື ເຂດທີ່ຢູ່ອາໄສຕາມທຳມະຊາດ.

10. ເພື່ອປົກປັກຮັກສາ ແລະ ອະນຸລັກຊີວະນາໆພັນ, ລະດັບຂັ້ນຂອງການຫຼຸດຜ່ອນຜົນກະທົບຂອງໂຄງການລວມເອົາລະບົບການຊົດເຊີຍດ້ານຊີວະນາໆພັນ ທີ່ຖືກກະທົບເຊິ່ງອາດຈະພິຈາລະນາຈັດຕັ້ງປະຕິບັດສະເພາະ

[1] ຕົວຢ່າງມີຄື: (i) ການບໍລິການເພື່ອສະໜອງ ອາດຈະລວມເອົາສະບຽງອາຫານ, ນ້ຳຈືດ, ໄມ້, ເສັ້ນໄຍພືດ, ພືດທີ່ເປັນຢາປົວພະຍາດ; (ii) ການບໍລິການດ້ານການຄຸ້ມຄອງດັດສົມ ອາດຈະລວມເອົາການກັ່ນຕອງນ້ຳເທິງໜ້າດິນ, ການເກັບກັກ ແລະ ການດູດຊັບທາດອາຍກາກບອນ, ການຄຸ້ມຄອງດັດສົມສະພາບດິນຟ້າອາກາດ, ການປົກປ້ອງຈາກໄພອັນຕະລາຍທາງທຳມະຊາດ; (iii) ການບໍລິການດ້ານວັດທະນະທຳ ອາດຈະລວມເອົາຂອບເຂດທາງທຳມະຊາດທີ່ເປັນສະຖານທີ່ສັກສິດ ແລະ ຂົງເຂດທີ່ມີຄວາມສຳຄັນທາງດ້ານກິດຈະກຳພັກຜ່ອນ, ສັງສັນ ແລະ ຊື່ນຊົມຄວາມສວຍງາມ; (iv) ການບໍລິການເພື່ອອຸ້ມຊູຊ່ວຍເຫຼືອອາດຈະລວມເອົາການປະກອບເປັນດິນ, ຮອບວຽນຈຸລະສານອາຫານ, ການຜະລິດຕົ້ນຕໍ.

ໃນກໍລະນີຫຼັງຈາກທີ່ໄດ້ນຳໃຊ້ [2] ບັນດາມາດຕະການທີ່ເໝາະສົມໃນດ້ານການຫຼີກເວັ້ນຜົນກະທົບ, ການຫຼຸດຜ່ອນຜົນກະທົບ ແລະ ການຟື້ນຟູ. ລະບົບການຊົດເຊີຍດ້ານຊີວະນາໆພັນທີ່ຖືກກະທົບຄວນຖືກອອກແບບແລະຈັດຕັ້ງປະຕິບັດເພື່ອບັນລຸບັນດາຜົນໄດ້ຮັບ[3] ດ້ານການອະນຸລັກທີ່ສາມາດວັດແທກໄດ້ເຊິ່ງສາມາດຄາດຫວັງໄດ້ໃນລະດັບທີ່ສົມເຫດສົມຜົນວ່າຈະເປັນຜົນບໍ່ໃຫ້ມີການສູນເສຍ ສຸດທິ (no net loss) ແລະ ດີແທ້ຄືສ່ວນທີ່ໄດ້ເພີ່ມເຕີມຈາກການຊົດເຊີຍ (net gain) ທາງຊີວະນາໆພັນ; ຢ່າງໃດກໍ່ດີ, ການໄດ້ຜົນປະໂຫຍດສຸດທິຖືເປັນເງື່ອນໄຂທີ່ຕ້ອງບັນລຸໃນເຂດທີ່ຢູ່ອາໄສທີ່ຈຳເປັນ. ການອອກແບບລະບົບການສ້າງຄວາມສົມດຸນຄືນທາງຊີວະນາໆພັນ (biodiversity offset) ຕ້ອງປະຕິບັດຕາມຫຼັກການ[4] "ຊົດເຊີຍໃຫ້ຄືເກົ່າ ຫຼື ໃຫ້ດີກ່ວາເກົ່າ" ແລະ ຕ້ອງໄດ້ຮັບການຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບຂໍ້ມູນຂ່າວສານດີທີ່ສຸດທີ່ມີຢູ່ແລະແບບວິທີປະຕິບັດຫຼ້າສຸດ. ເມື່ອລູກຄ້າພິຈາລະນາສ້າງລະບົບສ້າງຄວາມສົມດຸນຄືນໃນຖານະເປັນສ່ວນໜຶ່ງຂອງຍຸດທະສາດຫຼຸດຜ່ອນຜົນກະທົບ, ແມ່ນຕ້ອງໄດ້ເອົາຊ່ຽວຊານສາກົນ ທີ່ມີຄວາມຮູ້ດ້ານການອອກແບບແລະການຈັດຕັ້ງປະຕິບັດລະບົບສ້າງຄວາມສົມດຸນຄືນທາງຊີວະນາໆພັນເຂົ້າມາມີສ່ວນຮ່ວມໃນຂະບວນການສ້າງລະບົບດັ່ງກ່າວ.

*ເຂດທີ່ຢູ່ອາໄສທີ່ຖືກດັດປັບ*

11. ເຂດທີ່ຢູ່ອາໄສທີ່ຖືກດັດປັບ ແມ່ນຂົງເຂດທີ່ອາດຈະມີສັດສ່ວນຂະໜາດກ້ວາງໃຫຍ່ຂອງພືດ ແລະ/ຫຼື ຊະນິດພັນສັດທີ່ມີແຫຼ່ງກຳເນີດຕ່າງຖິ່ນ, ແລະ/ຫຼື ເປັນກໍລະນີທີ່ກິດຈະກຳຂອງມະນຸດໄດ້ດັດປັບພາລະບົດບາດທາງລະບົບນິເວດຕົ້ນຕໍຢ່າງຫຼວງຫຼາຍ ແລະ ໂຄງປະກອບ[5] ຂອງຊະນິດພັນໃນເຂດດັ່ງກ່າວ. ເຂດທີ່ຢູ່ອາໄສທີ່ຖືກດັດປັບອາດຈະລວມເອົາບັນດາຂົງເຂດທີ່ຖືກຄຸ້ມຄອງສຳລັບການປູກຝັງ, ການປູກປ່າ, ເຂດຊາຍຝັ່ງທີ່ເກີດຈາກການເອົາດິນມາຖົມ[6] ແລະ ເຂດດິນບໍລິເວນນ້ຳທີ່ເກີດຈາກການເອົາດິນມາຖົມ.

12. ມາດຕະຖານການດຳເນີນງານນີ້ ແມ່ນນຳໃຊ້ຕໍ່ບັນດາເຂດທີ່ຢູ່ອາໄສທີ່ຖືກດັດປັບ ເຊິ່ງລວມເອົາຄູນຄ່າທາງຊີວະນາໆພັນທີ່ສຳຄັນ ດັ່ງທີ່ຖືກກຳນົດໄວ້ພາຍໃຕ້ຂະບວນການກຳນົດຄວາມສ່ຽງ ແລະ ຜົນກະທົບເຊິ່ງເປັນເງື່ອນໄຂທີ່ຕ້ອງເຮັດໃນມາດຕະຖານການດຳເນີນງານທີ 1. ລູກຄ້າຄວນຫຼຸດຜ່ອນຜົນກະທົບທີ່ຈະມີຕໍ່ຊີວະນາໆພັນໃນລັກສະນະດັ່ງກ່າວ ແລະ ຈັດຕັ້ງປະຕິບັດມາດຕະການຫຼຸດຜ່ອນຜົນກະທົບຕາມຄວາມເໝາະສົມ.

*ເຂດທີ່ຢູ່ອາໄສຕາມທຳມະຊາດ*

13. ເຂດທີ່ຢູ່ອາໄສຕາມທຳມະຊາດ ແມ່ນເຂດທີ່ປະກອບດ້ວຍບັນດາຊະນິດພັນພືດ ແລະ/ຫຼື ຊະນິດພັນສັດທີ່ສາມາດມີຊີວິດຢູ່ລອດ ເຊິ່ງສ່ວນໃຫຍ່ແມ່ນເປັນຊະນິດພັນທ້ອງຖິ່ນ, ແລະ/ຫຼື ເປັນກໍລະນີທີ່ກິດຈະກຳມະນຸດ ບໍ່ໄດ້ດັດປັບຢ່າງຫຼວງຫຼາຍຕໍ່ພາລະບົດບາດ ທາງລະບົບນິເວດຕົ້ນຕໍແລະອົງປະກອບຊະນິດພັນຂອງເຂດດັ່ງກ່າວ.

14. ລູກຄ້າຈະບໍ່ປ່ຽນ ຫຼື ສ້າງຄວາມເຊື່ອມໂຊມ[7] ໃນລະດັບສູງຕໍ່ເຂດທີ່ຢູ່ອາໄສຕາມທຳມະຊາດ ເວັ້ນເສຍແຕ່ສາມາດສະແດງໃຫ້ເຫັນໄດ້ບັນດາຂົງເຂດຕ່າງໆດັ່ງຕໍ່ໄປນີ້:

- ບໍ່ມີທາງເລືອກອື່ນທີ່ເປັນໄປໄດ້ແລ້ວພາຍໃນເຂດດັ່ງກ່າວສຳລັບການພັດທະນາໂຄງການຕາມເຂດທີ່ຢູ່ອາໄສທີ່ຖືກດັດປັບ;
- ໄດ້ມີການຂໍຄຳປຶກສາກັບບັນດາພາກສ່ວນກ່ຽວຂ້ອງເຊິ່ງລວມທັງຊຸມຊົນທີ່ຖືກກະທົບເພື່ອແລກປ່ຽນທັດສະນະກ່ຽວກັບ ຂອບເຂດຂອງການປ່ຽນແປງ

[2] ການ ຊົດເຊີຍດ້ານຊີວະນາໆພັນທີ່ຖືກຜົນກະທົບ (biodiversity offset) ແມ່ນຜົນໄດ້ຮັບດ້ານການອະນຸລັກທີ່ສາມາດວັດແທກໄດ້ ອັນເປັນຜົນເນື່ອງມາຈາກບັນດາມາດຕະການທີ່ຖືກອອກແບບມາ ເພື່ອຊົດເຊີຍບັນດາຜົນກະທົບຄົງຄ້າງທາງລົບໃນລະດັບສູງຕໍ່ຊີວະນາໆພັນ ເຊິ່ງເກີດຈາກການພັດທະນາໂຄງການ ແລະ ການສືບຕໍ່ຈັດຕັ້ງປະຕິບັດໂຄງການ ຫຼັງຈາກທີ່ໄດ້ຈັດຕັ້ງປະຕິບັດບັນດາມາດຕະການທີ່ເໝາະສົມໃນດ້ານການຫຼີກເວັ້ນຜົນກະທົບ, ການຫຼຸດຜ່ອນຜົນກະທົບ ແລະ ການຟື້ນຟູແລ້ວ.

[3] ຜົນໄດ້ຮັບດ້ານການອະນຸລັກທີ່ສາມາດວັດແທກໄດ້ສຳລັບການອະນຸລັກຊີວະນາໆພັນ ຕ້ອງຖືກສະແດງໃຫ້ເຫັນໃນລະດັບຈຸລັງ (ຂັ້ນຮາກຖານ) ແລະ ໃນຂະໜາດພູມສາດທີ່ເໝາະສົມໃດໜຶ່ງ (ຕ.ຢ: ລະດັບທ້ອງຖິ່ນ, ລະດັບພູມມີທັດ, ລະດັບຊາດ, ລະດັບພາກພື້ນ).

[4] ຫຼັກການວ່າດ້ວຍ "ຊົດເຊີຍໃຫ້ຄືເກົ່າ ຫຼື ໃຫ້ດີກ່ວາເກົ່າ" ສະແດງໃຫ້ເຫັນວ່າ: ລະບົບການຊົດເຊີຍດ້ານຊີວະນາໆພັນທີ່ຖືກຜົນກະທົບຕ້ອງໄດ້ຮັບການອອກແບບເພື່ອອະນຸລັກຄຸນຄ່າທາງຊີວະນາໆພັນທີ່ຖືກກະທົບຈາກໂຄງການ ໃຫ້ຄືເກົ່າ (ການຊົດເຊີຍ"ໃນເຂດພື້ນທີ່ຖືກກະທົບ"). ຢ່າງໃດກໍ່ຕາມ, ໃນບາງສະພາບເງື່ອນໄຂ, ຂົງເຂດຊີວະນາໆພັນທີ່ຈະຖືກກະທົບຈາກໂຄງການອາດຈະບໍ່ແມ່ນບູລິມະສິດໃນລະດັບຊາດ ຫຼື ໃນລະດັບທ້ອງຖິ່ນ, ແລະ ອາດຈະມີຂົງເຂດຊີວະນາໆພັນອື່ນໆທີ່ມີຄຸນຄ່າຄືກັນ ແຕ່ພັດມີບູລິມະສິດສູງກ່ວາ ສຳລັບການອະນຸລັກ ແລະ ການນຳໃຊ້ແບບຍືນຍົງ, ຖືກໄພຂົ່ມຂູ່ອັນໃຫຍ່ຫຼວງ ຫຼື ມີຄວາມຈຳເປັນຕ້ອງໄດ້ຮັບການປົກປັກຮັກສາ ຫຼື ການຄຸ້ມຄອງທີ່ມີປະສິດທິຜົນ. ພາຍໃຕ້ສະພາບທີ່ກ່າວ ນີ້, ອາດຈະເໝາະສົມທີ່ຕ້ອງພິຈາລະນາການຊົດເຊີຍດ້ານຊີວະນາໆພັນທີ່ "ຢູ່ນອກພື້ນທີ່ຖືກກະທົບ" ໂດຍ "ມີການແລກປ່ຽນເອົາ" (ເຊັ່ນ: ກໍລະນີທີ່ການຊົດເຊີຍດ້ານຊີວະນາໆພັນໄດ້ ເລັງເປົ້າໝາຍໃສ່ຊີວະນາໆພັນທີ່ມີບູລິມະສິດສູງກ່ວາຊີວະນາໆພັນທີ່ຖືກກະທົບໂດຍໂຄງການ) ກໍລະນີນີ້, ຖ້າຫາກເປັນເຂດທີ່ຢູ່ອາໄສທີ່ຈຳເປັນ, ແມ່ນຕອບສະໜອງໄດ້ຕາມເງື່ອນໄຂຂອງວັກ 17 ໃນມາດຕະຖານການດຳເນີນງານນີ້.

[5] ບໍ່ໄດ້ລວມເອົາເຂດທີ່ຢູ່ອາໄສທີ່ຖືກປ່ຽນແປງ ຍ້ອນການຄາດກະກ່ຽວກັບການພັດທະນາໂຄງການ.

[6] ການຖົມດິນ ທີ່ຖືກນຳໃຊ້ໃນສະພາບເງື່ອນໄຂດັ່ງກ່າວນີ້ ແມ່ນຂະບວນການສ້າງດິນໃໝ່ຈາກເຂດທີ່ເປັນທະເລ ຫຼື ເຂດທີ່ເປັນນ້ຳເພື່ອຮັບໃຊ້ຈຸດປະສົງຂອງການຜະລິດ.

[7] ການປ່ຽນແປງ ຫຼື ການສ້າງຄວາມເຊື່ອມໂຊມໃນລະດັບສູງ ແມ່ນ (i) ການເຮັດໃຫ້ສູນເສຍ ຫຼື ຫຼຸດລົງໃນລະດັບຮ້າຍແຮງຕໍ່ຄວາມສົມບູນຂອງເຂດທີ່ຢູ່ອາໄສ ອັນເປັນເຫດ ຈາກການປ່ຽນແປງຂະໜາດໃຫຍ່ແລະ/ຫຼືໄລຍະຍາວຕໍ່ການນຳໃຊ້ທີ່ດິນ ຫຼື ນ້ຳ; (ii) ການດັດປັບທີ່ຈຳກັດໃນລະດັບສູງຕໍ່ຄວາມສາມາດຂອງເຂດຢູ່ອາໄສໃນການຮັກສາປະຊາກອນ ຂອງຊະນິດພັນທ້ອງຖິ່ນໃຫ້ສາມາດມີຊີວິດຢູ່ລອດໄດ້.



ແລະການເຊື່ອມໂຊມ[8]; ແລະ

- ທຸກການປ່ຽນແປງ ຫຼື ທຸກຄວາມເຊື່ອມໂຊມ ແມ່ນໄດ້ຖືກຫຼຸດຜ່ອນບັນເທົາຕາມລະດັບຂັ້ນຂອງການຫຼຸດຜ່ອນຜົນກະທົບແລ້ວ.

15. ໃນບັນດາເຂດທີ່ເປັນເຂດທີ່ຢູ່ອາໄສຕາມທຳ ມະຊາດ, ມາດຕະການຫຼຸດຜ່ອນຜົນກະທົບຈະຖືກອອກແບບມາເພື່ອບໍ່ໃຫ້ມີການສູນເສຍສຸດທິ[9]ຂອງຊີວະນາໆພັນໃນບ່ອນທີ່ສາມາດເຮັດໄດ້. ບັນດາມາດຕະຖານທີ່ເໝາະສົມລວມມີ:

- ຫຼີກເວັ້ນຜົນກະທົບທີ່ມີຕໍ່ຊີວະນາໆພັນຜ່ານການກຳນົດ ແລະ ການປົກປ້ອງບັນດາເຂດທີ່ຖືກແຍກອອກຈາກການພັດທະນາ;[10]
- ຈັດຕັ້ງປະຕິບັດບັນດາມາດຕະການເພື່ອຈຳກັດການແບ່ງແຍກເຂດທີ່ຢູ່ອາໄສເຊັ່ນ:ເຂດເຊື່ອມຕໍ່ດ້ານຊີວະນາໆພັນ;
- ຟື້ນຟູເຂດທີ່ຢູ່ອາໄສໃນໄລຍະການຜະລິດ ແລະ/ຫຼື ຫຼັງໄລຍະການຜະລິດ; ແລະ
- ຈັດຕັ້ງປະຕິບັດການຊົດເຊີຍດ້ານຊີວະນາໆພັນທີ່ຖືກກະທົບ.

*ເຂດທີ່ຢູ່ອາໄສຈຳເປັນ*

16. ເຂດທີ່ຢູ່ອາໄສຈຳເປັນແມ່ນເຂດທີ່ມີຄຸນຄ່າຊີວະນາໆພັນສູງ ເຊິ່ງລວມທັງ (i) ເຂດທີ່ຢູ່ອາໄສທີ່ມີຄວາມສຳຄັນຫຼາຍຕໍ່ຊະນິດພັນທີ່ສ່ຽງໃກ້ຈະສູນພັນສູງ ແລະ/ຫຼື ທີ່ໃກ້ຈະສູນພັນ[11] ; (ii) ເຂດທີ່ຢູ່ອາໄສທີ່ມີຄວາມສຳຄັນລະດັບສູງຕໍ່ຊະນິດພັນທີ່ມີສະເພາະໃນທ້ອງຖິ່ນນັ້ນ ແລະ/ຫຼື ທີ່ມີຂອບເຂດຈຳກັດໃນທ້ອງຖິ່ນນັ້ນ; (iii) ເຂດທີ່ຢູ່ອາໄສທີ່ຄ້ຳຊູການຈຸ້ມຕົວໃນລະດັບສູງຂອງຊະນິດພັນ ທີ່ເຄື່ອນຍ້າຍຖິ່ນຖານຕາມລະດູການໃນລະດັບໂລກ ແລະ/ຫຼື ຊະນິດພັນທີ່ລວມຕົວກັນເປັນຝູງໃຫຍ່; (iv) ລະບົບນິເວດທີ່ຖືກໄພຂົ່ມຂູ່ຄຸກຄາມໃນລະດັບສູງ ແລະ/ຫຼື ລະບົບນິເວດທີ່ມີລັກສະນະສະເພາະ; ແລະ/ຫຼື (v) ບັນດາເຂດທີ່ພົວພັນກັບຂະບວນການວິວັດທີ່ສຳຄັນຕ່າງໆ.

17. ໃນບັນດາເຂດທີ່ເປັນເຂດທີ່ຢູ່ອາໄສຈຳເປັນ, ລູກຄ້າຈະບໍ່ຈັດຕັ້ງປະຕິບັດກິດຈະກຳໃດໆຂອງໂຄງການເວັ້ນເສຍແຕ່ວ່າ ສາມາດສະແດງໃຫ້ເຫັນຄົບຖ້ວນທຸກເງື່ອນໄຂດັ່ງຕໍ່ໄປນີ້:

- ບໍ່ມີທາງເລືອກອື່ນທີ່ເປັນໄປໄດ້ພາຍໃນເຂດດັ່ງກ່າວໃນການທີ່ຈະພັດທະນາໂຄງການໃສ່ເຂດທີ່ຢູ່ອາໄສທີ່ຖືກດັດປັບ ຫຼື ເຂດທີ່ ຢູ່ອາໄສຕາມທຳມະຊົດທີ່ບໍ່ແມ່ນເຂດທີ່ຢູ່ອາໄສຈຳເປັນ;
- ໂຄງການ ບໍ່ໄດ້ນຳໄປສູ່ການມີຜົນກະທົບໃນທາງລົບທີ່ສາມາດວັດແທກໄດ້ຕໍ່ບັນດາຄຸນຄ່າທາງຊີວະນາໆພັນ ເຊິ່ງຖືກຮອງຮັບ ໂດຍເຂດທີ່ຢູ່ອາໄສຈຳເປັນເຊິ່ງຖືກກຳນົດໄວ້ຮອງຮັບສະເພາະ; ແລະ ຕໍ່ບັນດາຂະບວນການທາງນິເວດທີ່ຄ້ຳຊູບັນດາຄຸນຄ່າທາງຊີວະນາໆພັນເຫຼົ່ານັ້ນ;[12]
- ໂຄງການບໍ່ໄດ້ນຳໄປສູ່ການຫຼຸດຜ່ອນສຸດທິໃນຈຳນວນປະຊາກອນໃນລະດັບໂລກ[13]/ລະດັບຊາດ/ລະດັບພາກຂອງທຸກຊະນິດພັນທີ່ສ່ຽງໃກ້ສູນພັນສູງ ຫຼື ທີ່ໃກ້ຈະສູນພັນຕາມໄລຍະເວລາທີ່ສົມເຫດສົມຜົນ [14]; ແລະ
- ໄດ້ມີການເຊື່ອມສານແຜນງານຕິດຕາມກວດກາ ແລະ ປະເມີນຜົນຊີວະນາໆພັນໃນໄລຍະຍາວທີ່ເຂັ້ມແຂງ, ແລະ ຖືກອອກແບບມາຢ່າງເໝາະສົມເຂົ້າໃນແຜນງານຄຸ້ມຄອງຂອງລູກຄ້າແລ້ວ.

[8] ຖືກຈັດຕັ້ງປະຕິບັດໃນຖານະເປັນສ່ວນໜຶ່ງຂອງຂະບວນການການມີສ່ວນຮ່ວມ ແລະ ຂໍຄຳປຶກສານຳພາກສ່ວນກ່ຽວຂ້ອງ ດັ່ງທີ່ອະທິບາຍໄວ້ໃນມາດຕະຖານການດຳເນີນງານ 1.

[9] ບໍ່ມີການສູນເສຍສຸດທິຖືກກຳນົດຍ້ອນຈຸດເວລາທີ່ຜົນກະທົບກ່ຽວຂ້ອງກັບໂຄງການມີຕໍ່ຊີວະນາໆພັນ ແມ່ນຖືກປັບສົມດຸນຄືນຜ່ານບັນດາມາດຕະການທີ່ໄດ້ຮັບການຈັດຕັ້ງປະຕິບັດເພື່ອຫຼີກເວັ້ນ ແລະ ຈຳກັດບັນດາຜົນກະທົບຈາກໂຄງການ, ເພື່ອຟື້ນຟູປົວແປງເຂດທີ່ຖືກກະທົບ ແລະ ສຸດທ້າຍເພື່ອສ້າງຄວາມສົມດຸນຄືນຕໍ່ບັນດາຜົນກະທົບຄົງຄ້າງໃນລະດັບສູງ (ຖ້າມີ) ໃນຂະໜາດພູມສາດທີ່ເໝາະສົມ (ເຊັ່ນ: ລະດັບທ້ອງຖິ່ນ, ລະດັບພູມມີທັດ, ລະດັບຊາດ, ລະດັບພາກພື້ນ)

[10] ເຂດທີ່ແຍກຈາກການພັດທະນາແມ່ນເຂດທີ່ດິນພາຍໃນຂອບເຂດຂອງໂຄງການ ຫຼື ເຂດທີ່ລູກຄ້າມີສິດຄວບຄຸມຄຸ້ມຄອງເຊິ່ງບໍ່ໄດ້ຖືກລວມເຂົ້າໃນການພັດທະນາ ແລະ ເປັນເຂດເປົ້າໝາຍສຳລັບການຈັດຕັ້ງປະຕິບັດມາດຕະການປັບປຸງການອະນຸລັກ. ເຂດທີ່ແຍກຈາກການພັດທະນາມີຄວາມເປັນໄດ້ສູງທີ່ຈະມີຄຸນຄ່າຊີວະນາໆພັນໃນລະດັບສູງ ແລະ/ຫຼື ສະໜອງບໍລິການລະບົບນິເວດທີ່ມີຄວາມສຳຄັນໃນລະດັບທ້ອງຖິ່ນ, ຊາດ ແລະ/ຫຼື ພາກພື້ນ. ເຂດທີ່ແຍກການພັດທະນາຄວນຖືກກຳນົດໂດຍນຳໃຊ້ວິທີການດຳເນີນງານ ຫຼື ວິທີການວິທະຍາທີ່ສາກົນຍອມຮັບ (ເຊັ່ນ: ຄຸນຄ່າການອະນຸລັກສູງ, ການວາງແຜນອະນຸລັກຢ່າງເປັນລະບົບ).

[11] ຕາມທີ່ໄດ້ຂຶ້ນບັນຊີແດງ, ບັນຊີຊະນິດພັນທີ່ຖືກຄຸກຄາມຂອງອົງການສາກົນເພື່ອການອະນຸລັກທຳມະຊາດ (IUCN). ການກຳນົດເຂດທີ່ຢູ່ອາໄສຈຳເປັນບົນພື້ນຖານບັນຊີອື່ນໆ ມີຄືດັ່ງນີ້: (i) ຖ້າຊະນິດພັນຖືກຂຶ້ນບັນຊີໃນລະດັບຊາດ/ລະດັບພາກພື້ນວ່າເປັນຊະນິດພັນທີ່ສ່ຽງໃກ້ຈະສູນພັນສູງ ຫຼື ໃກ້ຈະສູນພັນ ໃນບັນດາປະເທດທີ່ປະຕິບັດຕາມບົດແນະນຳຂອງອົງການ IUCN, ການກຳນົດເຂດທີ່ຢູ່ອາໄສຈຳເປັນ ແມ່ນຈະປະຕິບັດບົນພື້ນຖານຕາມແຕ່ລະກໍລະນີໂຄງການໂດຍມີການຂໍຄຳປຶກສາກັບບັນດາວິຊາການທີ່ມີຄວາມສາມາດ; ແລະ (ii) ໃນກໍລະນີ ທີ່ການຈັດປະເພດຊະນິດພັນທີ່ຂຶ້ນບັນຊີໄວ້ໃນລະດັບຊາດ ຫຼື ພາກພື້ນ ຫາກບໍ່ກົງກັບບັນຊີຂອງອົງການ IUCN (ເຊັ່ນ: ຕາມປົກກະຕິແລ້ວ, ບາງປະເທດຂຶ້ນບັນຊີຊະນິດພັນເປັນ "ຊະນິດພັນປົກປ້ອງ" ຫຼື "ຊະນິດພັນຈຳກັດ"), ແມ່ນຈະມີການເຮັດການປະເມີນເພື່ອກຳນົດເຫດຜົນ ແລະ ເປົ້າໝາຍຂອງການຂຶ້ນບັນຊີດັ່ງກ່າວ. ໃນກໍລະນີຄືເຊັ່ນນັ້ນ, ການກຳນົດເຂດທີ່ຢູ່ອາໄສຈຳເປັນ ແມ່ນຈະເອົາຕາມຜົນຂອງການປະເມີນດັ່ງກ່າວ.

[12] ຄູນຄ່າຊີວະນາໆພັນ ແລະ ຂະບວນການທາງນິເວດວິທະຍາທີ່ຄ້ຳຊູຄຸນຄ່າເຫຼົ່ານັ້ນຈະຖືກກຳນົດໃນລະດັບຂະໜາດທີ່ສອດຄ່ອງທາງນິເວດວິທະຍາ.

[13] ການຫຼຸດລົງສຸດທິເປັນການສູນເສຍດ່ຽວ ຫຼື ການສູນເສຍແບບສະສົມຂອງສ່ວນບຸກຄົນທີ່ສົ່ງຜົນກະທົບຕໍ່ຄວາມສາມາດຂອງຊະນິດພັນໃນການສືບຕໍ່ຄົງຢູ່ໃນລະດັບຂະໜາດສາກົນ ແລະ/ຫຼື ພາກພື້ນ/ລະດັບຊາດໄປອີກຫຼາຍເຊັ່ນຄົນ ຫຼື ເປັນໄລຍະຍາວ. ຂະໜາດ (ເຊັ່ນ: ລະດັບຂະໜາດສາກົນ ແລະ/ຫຼື ພາກພື້ນ/ລະດັບຊາດ) ຂອງການຫຼຸດລົງສຸດທິທີ່ອາດຈະເກີດຂຶ້ນແມ່ນຖືກກຳນົດບົນພື້ນຖານ ການຂຶ້ນບັນຊີຊະນິດພັນຕາມບັນຊີແດງຂອງອົງການ IUCN (ລະດັບສາກົນ) ແລະ/ຫຼື ບົນພື້ນຖານບັນຊີລະດັບພາກພື້ນ/ລະດັບຊາດ. ສຳລັບຊະນິດພັນທີ່ຂຶ້ນບັນຊີທັງໃນບັນຊີແດງຂອງອົງການ IUCN (ລະດັບສາກົນ) ແລະບັນຊີລະດັບພາກພື້ນ/ລະດັບຊາດ, ການຫຼຸດລົງສຸດທິດແມ່ນຈະຖືກກຳນົດບົນພື້ນຖານປະຊາກອນລະດັບຊາດ/ລະດັບພາກພື້ນ.

18. ກໍລະນີທີ່ລູກຄ້າສາມາດຕອບສະໜອງໄດ້ຕາມບັນດາເງື່ອນໄຂທີ່ກໍານົດໄວ້ໃນວັກທີ 17, ຍຸດທະສາດຫຼຸດຜ່ອນຜົນກະທົບຂອງໂຄງການຈະຖືກອະທິບາຍໄວ້ໃນແຜນດໍາເນີນງານວ່າດ້ວຍຊີວະນາໆພັນ ແລະ ຈະໄດ້ຮັບການອອກແບບເພື່ອຈັດຕັ້ງປະຕິບັດໃຫ້ສາມາດບັນລຸການເພີ່ມສຸດທິ[15] ຂອງບັນດາມູນຄ່າຊີວະນາໆພັນເຫຼົ່ານັ້ນເຊິ່ງຖືກຮອງຮັບໂດຍເຂດທີ່ຢູ່ອາໄສຈໍາເປັນທີ່ໄດ້ກໍານົດໄວ້ເພື່ອຮອງຮັບເປັນການສະເພາະ.

19. ໃນກໍລະນີມີການສະເໜີແຜນການສ້າງຄວາມສົມດຸນທາງຊີວະນາໆພັນໃນຖານະເປັນສ່ວນໜຶ່ງຂອງຍຸດທະສາດຫຼຸດຜ່ອນຜົນກະທົບຈາກໂຄງການ, ລູກຄ້າຕ້ອງສາມາດສະແດງໃຫ້ເຫັນໄດ້ຜ່ານການປະເມີນໃດໜຶ່ງທີ່ຜົນກະທົບຄົງຄ້າງໃນລະດັບສູງຈາກໂຄງການທີ່ມີຕໍ່ຊີວະນາໆພັນແມ່ນໄດ້ຈະໄດ້ຮັບການຫຼຸດຜ່ອນໃນລະດັບພຽງພໍເພື່ອຕອບສະໜອງໃຫ້ໄດ້ຕາມບັນດາເງື່ອນໄຂທີ່ກໍານົດໄວ້ໃນວັກທີ 17.

***ເຂດປ່າສະຫງວນຕາມກົດໝາຍ ແລະ ເຂດທີ່ຖືກຮັບຮູ້ໃນລະດັບສາກົນ***

20. ໃນກໍລະນີໂຄງການທີ່ຖືກສະເໜີ ຫາກຕັ້ງຢູ່ພາຍໃນເຂດປ່າສະຫງວນຕາມກົດໝາຍ[16] ຫຼື ເຂດທີ່ຖືກຮັບຮູ້ໃນລະດັບສາກົນ[17], ລູກຄ້າຈະຕ້ອງຕອບສະໜອງໃຫ້ໄດ້ຕາມບັນດາເງື່ອນໄຂໃນວັກທີ 13 ເຖິງ 19 ຂອງມາດຕະຖານການດໍາເນີນງານນີ້ຕາມທີ່ສາມາດນໍາໃຊ້ໄດ້. ນອກຈາກນັ້ນ, ລູກຄ້າຍັງຈະຕ້ອງ:

- ສະແດງໃຫ້ເຫັນວ່າ: ການສະເໜີພັດທະນາໃນເຂດດັ່ງກ່າວ ແມ່ນໄດ້ຮັບອະນຸຍາດຖືກຕ້ອງຕາມກົດໝາຍ;
- ປະຕິບັດໃນລັກສະນະທີ່ສອດຄ່ອງກັບບັນດາແຜນຄຸ້ມຄອງຂອງລັດຖະບານທີ່ມີສໍາລັບເຂດດັ່ງກ່າວ;
- ຂໍຄໍາປຶກສາກັບຜູ້ອຸປະຖໍາແລະຜູ້ຄຸ້ມຄອງເຂດປ່າສະຫງວນ, ຊຸມຊົນທີ່ຖືກກະທົບ, ຊົນເຜົ່າພື້ນເມືອງ ແລະ ພາກສ່ວນກ່ຽວ ຂ້ອງອື່ນໆກ່ຽວກັບໂຄງການທີ່ສະເໜີຈັດຕັ້ງປະຕິບັດຕາມຄວາມເໝາະສົມ ແລະ
- ຈັດຕັ້ງປະຕິບັດບັນດາແຜນງານເພີ່ມເຕີມຕາມຄວາມເໝາະສົມ ເພື່ອສົ່ງເສີມແລະປັບປຸງບັນດາເປົ້າໝາຍການອະນຸລັກ ແລະ ການຄຸ້ມຄອງທີ່ມີປະສິດທິຜົນຕໍ່ເຂດດັ່ງກ່າວ.[18]

***ຊະນິດພັນຕ່າງຖິ່ນທີ່ຮຸກຮານ***

21. ການນໍາເອົາຊະນິດພັນພືດ ແລະ ສັດຕ່າງຖິ່ນ ຫຼື ທີ່ບໍ່ແມ່ນຈາກທ້ອງຖິ່ນດັ່ງກ່າວເຂົ້າສູ່ເຂດທີ່ຕາມປົກກະຕິແລ້ວບໍ່ພົບເຫັນຊະນິດພັນເຫຼົ່ານັ້ນ ອາດຈະເປັນເຮັດໃຫ້ເກີດມີໄພຂົ່ມຂູ່ຄຸກຄາມໃນລະດັບສູງຕໍ່ຊີວະນາໆພັນຂອງເຂດດັ່ງກ່າວບໍ່ວ່າຈະເປັນການນໍາສະເໜີເຂົ້າມາແບບຕັ້ງໃຈ ຫຼື ແບບບໍ່ຕັ້ງໃຈກໍ່ຕາມ ຍ້ອນວ່າບາງຊະນິດພັນຕ່າງຖິ່ນສາມາດກາຍເປັນຊະນິດພັນຮຸກຮານ, ແຜ່ຂະຫຍາຍຢ່າງວ່ອງໄວ ແລະ ຄ່ອຍໆເຮັດໃຫ້ຊະນິດພັນທ້ອງຖິ່ນເດີມຖືກທໍາລາຍຫາຍໄປ.

22. ລູກຄ້າຈະຕ້ອງບໍ່ເຈດຕະນານໍາເອົາທຸກຊະນິດພັນຕ່າງຖິ່ນ (ທີ່ປະຈຸບັນບໍ່ມີຢູ່ໃນປະເທດ ຫຼື ພື້ນທີ່ຂອງໂຄງການ) ເຂົ້າໄປໃນເຂດໂຄງການເວັ້ນເສຍແຕ່ວ່າ: ເປັນການປະຕິບັດຕາມກອບລະບຽບກົດໝາຍທີ່ມີຢູ່ສໍາລັບການນໍາເອົາເຂົ້າມາດັ່ງກ່າວ. ໂດຍບໍ່ກ່ຽວກັບປະໂຫຍກກ່ອນໜ້ານີ້, ລູກຄ້າຈະຕ້ອງບໍ່ເຈດຕະນານໍາເອົາທຸກຊະນິດພັນຕ່າງຖິ່ນທີ່ມີຄວາມສ່ຽງສູງດ້ານພຶດຕິກໍາຮຸກຮານເວັ້ນເສຍແຕ່ວ່າ ການນໍາສະເໜີດັ່ງກ່າວໄດ້ຮັບອະນຸຍາດພາຍໃຕ້ກອບລະບຽບກົດໝາຍທີ່ມີຢູ່. ທຸກການນໍາເອົາຊະນິດພັນຕ່າງຖິ່ນເຂົ້າໃນເຂດໂຄງການຈະຕ້ອງຖືກປະເມີນຄວາມສ່ຽງ (ໃນຖານະເປັນສ່ວນໜຶ່ງຂອງຂະບວນການກໍານົດຄວາມສ່ຽງ ແລະ ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມຂອງລູກຄ້າ) ເພື່ອກໍານົດເບິ່ງທ່າແຮງຂອງພຶດຕິກໍາຮຸກຮານ. ລູກຄ້າຈະຕ້ອງຈັດຕັ້ງປະຕິບັດບັນດາມາດຕະການຕ່າງໆເພື່ອຫຼີກເວັ້ນຄວາມເປັນໄປໄດ້ທີ່ຈະເກີດມີການນໍາສະເໜີຊະນິດພັນຕ່າງຖິ່ນໃນລັກສະນະເປັນອຸບັດຕິເຫດ ຫຼື ບໍ່ເຈດຕະນາ ເຊິ່ງລວມທັງການຂົນສົ່ງທາດຕົ້ນ ແລະ ພາຫະຕ່າງໆ (ເຊັ່ນ: ດິນ, ແຮ່, ແລະ ທາດທີ່ເປັນສ່ວນປະກອບຂອງພືດ) ທີ່ອາດຈະເປັນບ່ອນຢູ່ອາໄສຂອງຊະນິດພັນຕ່າງຖິ່ນ.

23. ໃນກໍລະນີທີ່ຊະນິດພັນຕ່າງຖິ່ນ ຫາກມີຢູ່ພາຍໃນປະເທດ ຫຼື ເຂດທີ່ສະເໜີຈະຈັດຕັ້ງປະຕິບັດໂຄງການແລ້ວ, ລູກຄ້າຈະຕ້ອງຈັດຕັ້ງປະຕິບັດມາດຕະການທີ່ຮອບຄອບໃນການຈໍາກັດບໍ່ໃຫ້ຊະນິດພັນດັ່ງກ່າວແຜ່ໄປສູ່ເຂດອື່ນໆທີ່ບໍ່ເຄີຍພົບຊະນິດພັນ ດັ່ງກ່າວມາກ່ອນ. ເທົ່າທີ່ສາມາດຈັດຕັ້ງປະຕິບັດໄດ້, ລູກຄ້າຄວນດໍາເນີນມາດຕະການເພື່ອກໍາຈັດຊະນິດພັນຕ່າງຖິ່ນຈາກເຂດທີ່ຢູ່ອາໄສທາງທໍາມະຊາດທີ່ຢູ່ໃນເຂດຄວບຄຸມຄຸ້ມຄອງຂອງເຂົາເຈົ້າ.

## ການຄຸ້ມຄອງການບໍລິການດ້ານລະບົບນິເວດ

24. ໃນກໍລະນີທີ່ໂຄງການມີຄວາມເປັນໄປໄດ້ວ່າຈະສົ່ງຜົນກະທົບໃນທາງລົບຕໍ່ການບໍລິການດ້ານລະບົບນິເວດຕາມທີ່ໄດ້ຖືກກໍານົດໄວ້ໃນຂະບວນການກໍານົດຄວາມສ່ຽງ ແລະ ຜົນກະທົບ, ລູກຄ້າຈະຕ້ອງຈັດການທົບທວນຢ່າງເປັນລະບົບເພື່ອກໍານົດການບໍລິການດ້ານລະບົບນິເວດທີ່ເປັນບູລິມະສິດ. ການບໍລິການຂອງລະບົບນິເວດທີ່ເປັນບູລິມະສິດມີສອງຢ່າງຄື: (i) ການບໍລິການທີ່ການດໍາເນີນງານຂອງໂຄງການມີຄວາມເປັນໄປໄດ້ຫຼາຍສຸດທີ່ຈະສົ່ງຜົນກະທົບໃນທາງລົບຕໍ່ບັນດາຊຸມຊົນທີ່ຖືກກະທົບ; ແລະ/ຫຼື (ii) ການບໍລິການທີ່ໂຄງການຕ້ອງເພິ່ງພາອາໄສໂດຍກົງເພື່ອການດໍາເນີນງານຂອງໂຄງການ (ເຊັ່ນ: ນໍ້າ). ຫາກມີຄວາມເປັນໄປໄດ້ທີ່ຊຸມຊົນຈະຖືກກະທົບຈາກໂຄງການ, ເຂົາເຈົ້າຄວນເຂົ້າມີສ່ວນຮ່ວມໃນການກໍານົດການບໍລິການດ້ານລະບົບນິເວດທີ່ເປັນບູລິມະສິດຕາມຂະບວນການເອົາພາກສ່ວນກ່ຽວຂ້ອງເຂົ້າມີສ່ວນຮ່ວມດັ່ງທີ່ກໍານົດໄວ້ໃນມາດຕະຖານການດໍາເນີນງານທີ 1.

25. ກ່ຽວແກ່ກັບຜົນກະທົບຕ່າງໆທີ່ມີຕໍ່ບໍລິການລະບົບນິເວດທີ່ເປັນບູລິມະສິດທີ່ພົວພັນກັບຊຸມຊົນທີ່ຖືກກະທົບ ແລະ ໃນກໍລະນີທີ່ລູກ ຄ້າ ມີການຄວບຄຸມຄຸ້ມຄອງໂດຍກົງ ຫຼື ມີບົດບາດໃນລະດັບສູງຕໍ່ບໍລິການລະບົບນິເວດດັ່ງກ່າວ, ແມ່ນຄວນຈະຫຼີກເວັ້ນບໍ່ໃຫ້ເກີດມີຜົນກະທົບທາງລົບ. ຖ້າຫາກບໍ່ສາມາດຫຼີກເວັ້ນຜົນກະທົບເຫຼົ່ານັ້ນ, ລູກຄ້າຈະຕ້ອງຈໍາກັດຜົນກະທົບ ແລະ ຈັດຕັ້ງປະຕິບັດມາດຕະການຫຼຸດຜ່ອນຜົນກະທົບທີ່ມີເປົ້າໝາຍເພື່ອຮັກສາຄຸນຄ່າ ແລະ ໜ້າທີ່ຂອງການບໍລິການດ້ານລະບົບນິເວດທີ່ເປັນບູລິມະສິດ. ກ່ຽວແກ່ກັບຜົນກະທົບຕໍ່ລະບົບນິເວດທີ່ເປັນບູລິມະສິດ ເຊິ່ງໂຄງການຕ້ອງເພິ່ງພາອາໄສ, ລູກຄ້າຄວນຈໍາກັດຜົນກະທົບຕໍ່ການບໍລິການລະບົບນິເວດ ແລະ ຈັດຕັ້ງປະຕິບັດມາດຕະການເພື່ອເພີ່ມປະສິດທິພາບຊັບພະຍາກອນຂອງການດໍາເນີນງານຂອງລະບົບນິເວດ ດັ່ງທີ່ໄດ້ອະທິບາຍ ໄວ້ໃນມາດຕະຖານການດໍາເນີນງານທີ 3. ຂໍ້ກໍານົດເພີ່ມເຕີມສໍາລັບບໍລິການລະບົບນິເວດແມ່ນໄດ້ລວມໄວ້ໃນມາດຕະຖານການດໍາເນີນງານທີ 4, 5, 7 ແລະ 8.[19]

## ການຄຸ້ມຄອງຊັບພະຍາກອນທໍາມະຊາດທີ່ມີຊີວິດແບບຍືນຍົງ

26. ລູກຄ້າທີ່ມີສ່ວນຮ່ວມຕົ້ນຕໍໃນການສ້າງຊັບພະຍາກອນທໍາມະຊາດທີ່ມີຊີວິດເຊິ່ງລວມທັງປ່າທໍາມະຊາດ ແລະ ປ່າປູກ, ການປູກຝັງ, ການລ້ຽງສັດ, ການປູກພືດໃນນໍ້າ ແລະ ການປະມົງ ແມ່ນປະຕິບັດຕາມເງື່ອນໄຂຂອງວັກ 26 ຫາ 30 ນອກເໜືອຈາກເງື່ອນໄຂອື່ນໆ ທີ່ມີໃນມາດຕະຖານການດໍາເນີນງານນີ້. ເທົ່າທີ່ສາມາດເຮັດໄດ້, ລູກຄ້າຈະກໍານົດທີ່ຕັ້ງທຸລະກິດກະສິກໍາທີ່ຕ້ອງໃຊ້ທີ່ດິນ ແລະ ໂຄງການປ່າໄມ້ໃນເຂດທີ່ແມ່ນເຂດປ່າ ຫຼື ທີ່ດິນທີ່ຖືກປ່ຽນຮູບການນໍາໃຊ້ແລ້ວ. ລູກຄ້າທີ່ມີສ່ວນຮ່ວມໃນຂະແໜງທີ່ກ່າວມານັ້ນຈະຄຸ້ມຄອງຊັບພະຍາກອນທໍາມະຊາດທີ່ມີຊີວິດໃນລັກສະນະຍືນຍົງ ຜ່ານການນໍາໃຊ້ແບບວິທີການຄຸ້ມຄອງທີ່ດີສະເພາະແຕ່ລະຂະແໜງ ແລະ ເຕັກໂນໂລຊີທີ່ມີ. ໃນກໍລະນີການຜະລິດຕົ້ນຕໍ ຫາກຖືກກໍານົດລະຫັດໃນມາດຕະຖານທີ່ຮັບຮູ້ໂດຍສາກົນ, ພາກພື້ນ ຫຼື ລະດັບຊາດ, ລູກຄ້າຈະຕ້ອງຈັດຕັ້ງປະຕິບັດແບບວິທີການຄຸ້ມຄອງແບບຍືນຍົງຕາມໜຶ່ງ ຫຼື ຫຼາຍມາດຕະຖານທີ່ສອດຄ່ອງ ແລະ ມີຄວາມໜ້າເຊື່ອຖືດັ່ງທີ່ຖືກຢັ້ງຢືນໂດຍການຢັ້ງຢືນ ຫຼື ໃບຢັ້ງຢືນທີ່ເປັນເອກະລາດ.

27. ມາດຕະຖານທີ່ມີຄວາມໜ້າເຊື່ອຖືທີ່ຖືກຮັບຮູ້ໃນລະດັບສາກົນ, ພາກພື້ນ ຫຼື ລະດັບຊາດສໍາລັບການຄຸ້ມຄອງຕໍ່ຊັບພະຍາກອນທໍາມະຊາດທີ່ມີຊີວິດ ແບບຍືນຍົງແມ່ນມາດຕະຖານທີ່ (i) ພາວະວິໄສ ແລະ ສາມາດບັນລຸໄດ້; (ii) ຖືກສ້າງຂຶ້ນບົນພື້ນຖານຂະບວນການ ຂໍຄໍາປຶກສາກັບຫຼາກຫຼາຍພາກສ່ວນກ່ຽວຂ້ອງ; (iii) ຊຸກຍູ້ການປັບປຸງທີ່ເຮັດເປັນເທື່ອລະບາດກ້າວ ແລະ ຕໍ່ເນື່ອງ; ແລະ (iv) ສະໜອງ ການການຢັ້ງຢືນ ຫຼື ການອອກໃບຢັ້ງຢືນທີ່ເປັນເອກະລາດໂດຍອົງການ ຫຼື ຄະນະກໍາມະການທີ່ມີຄວາມສາມາດເໝາະສົມສໍາລັບມາດຕະຖານດັ່ງກ່າວ.[20]

---

14 ຂອບເຂດເວລາທີ່ລູກຄ້າຕ້ອງສະແດງໃຫ້ເຫັນວ່າ: "ບໍ່ມີການຫຼຸດລົງສຸດທິ ຫຼື no net loss" ຂອງຊະນິດພັນທີ່ໃກ້ສ່ຽງຈະສູນພັນສູງ ແລະ ສ່ຽງຈະສູນພັນໂດຍກໍານົດຕາມແຕ່ລະກໍລະນີຜ່ານຂະບວນການຂໍຄໍາປຶກສາກັບຊ່ຽວຊານສາກົນ.

15 ການເພີ່ມສຸດທິ ເປັນຜົນໄດ້ຮັບເພີ່ມເຕີມດ້ານການອະນຸລັກທີ່ສາມາດບັນລຸໄດ້ສໍາລັບຄຸນຄ່າຊີວະນາໆພັນທີ່ມີເຂດທີ່ຢູ່ອາໄສຈໍາເປັນ ຖືກກໍານົດໄວ້ຮອງຮັບສະເພາະ. ການເພີ່ມສຸດທິ ອາດຈະບັນລຸໄດ້ຜ່ານການສ້າງມາດຕະການສ້າງຄວາມສົມດຸນທາງຊີວະນາໆພັນ ແລະ/ຫຼື ໃນກໍລະນີທີ່ລູກຄ້າ ສາມາດຕອບສະໜອງໄດ້ຕາມເງື່ອນໄຂຂອງວັກ 17 ມາດຕະຖານການດໍາເນີນງານນີ້ໂດຍປາສະຈາກມາດຕະການສ້າງຄວາມສົມດຸນທາງຊີວະນາໆພັນ, ລູກຄ້າຄວນບັນລຸການເພີ່ມສຸດທິຜ່ານການຈັດຕັ້ງປະຕິບັດແຜນງານຕ່າງໆທີ່ສາມາດຈັດຕັ້ງປະຕິບັດໄດ້ໃນຂັ້ນຮາກຖານ ເພື່ອປັບປຸງເຂດທີ່ຢູ່ອາໄສ, ປົກປ້ອງ ແລະ ອະນຸລັກຊີວະນາໆພັນ.

16 ມາດຕະຖານການດໍາເນີນງານນີ້ ຮັບຮູ້ບັນດາເຂດປ່າສະຫງວນຕາມກົດໝາຍທີ່ຕອບສະໜອງໄດ້ຕາມຄໍານິຍາມຂອງອົງການ IUCN: "ຂອບເຂດເນື້ອທີ່ທາງພູມສາດທີ່ຖືກກໍານົດຢ່າງຈະແຈ້ງ, ຖືກຮັບຮູ້, ຖືກຈັດສັນ ແລະ ຄຸ້ມຄອງຜ່ານຮູບການທາງກົດໝາຍ ຫຼື ຮູບການທີ່ມີຜົນສັກສິດອື່ນໆ ເພື່ອບັນລຸການອະນຸລັກທໍາມະຊາດໃນໄລຍະຍາວພ້ອມດ້ວຍບໍລິການລະບົບນິເວດ ແລະ ຄຸນຄ່າທາງວັດທະນະທໍາ". ເພື່ອຮັບໃຊ້ຈຸດປະສົງຂອງມາດຕະຖານການດໍາເນີນງານນີ້, ຄໍານິຍາມດັ່ງກ່າວ ແມ່ນລວມເອົາບັນດາເຂດປ່າທີ່ ລັດຖະບານສະເໜີເພື່ອສ້າງຕັ້ງເປັນເຂດປ່າສະຫງວນ.

17 ຖືກກໍານົດເປັນການສະເພາະໂດຍອົງການ UNESCO ວ່າເປັນເຂດມໍລະດົກໂລກທາງທໍາມະຊາດ, ເຂດສະຫງວນເພື່ອປັບປຸງສາຍພົວພັນລະຫວ່າງມະນຸດກັບສິ່ງແວດລ້ອມ (MAB), ເຂດຊີວະນາໆພັນຕົ້ນຕໍ, ແລະ ເປັນເຂດດິນບໍລິເວນນໍ້າພາຍໃຕ້ສົນທິສັນຍາວ່າດ້ວຍດິນບໍລິເວນນໍ້າທີ່ມີຄວາມສໍາຄັນໃນລະດັບສາກົນ (ສົນທິສັນຍາຣໍາຊາ-Ramsar).

18 ການຈັດຕັ້ງປະຕິບັດບັນດາແຜນງານເພີ່ມເຕີມ ບໍ່ຈໍາເປັນວ່າແມ່ນແຕ່ສໍາລັບໂຄງການທີ່ບໍ່ສ້າງຮ່ອງຮອຍຜົນກະທົບໃໝ່ຕໍ່ສິ່ງແວດລ້ອມ (footprint).

19 ເອກະສານອ້າງອີງກ່ຽວກັບການບໍລິການດ້ານລະບົບນິເວດ ແມ່ນສາມາດເບິ່ງໄດ້ໃນມາດຕະຖານການດໍາເນີນງານທີ 4, ວັກ 8; ມາດຕະຖານການດໍາເນີນງານທີ 5, ວັກ 5 ແລະ ວັກ 25–29; ມາດຕະຖານການດໍາເນີນງານທີ 7, ວັກ 13–17 ແລະ 20; ແລະ ມາດຕະຖານການດໍາເນີນງານທີ 8, ວັກ 11

28. ໃນກໍລະນີທີ່ມີມາດຕະຖານສອດຄ່ອງ ແລະ ມີຄວາມ ໜ້າເຊື່ອຖື ແຕ່ລູກຄ້າ ຍັງບໍ່ທັນໄດ້ຮັບການຢັ້ງຢືນ ຫຼື ການອອກໃບຢັ້ງຢືນ ທີ່ເປັນເອກະລາດຕໍ່ມາດຕະຖານ ດັ່ງກ່າວ, ລູກຄ້າຈະຕ້ອງເຮັດການປະເມີນກ່ອນການຈັດ ຕັ້ງປະຕິບັດເພື່ອເບິ່ງຄວາມສອດຄ່ອງຂອງມາດຕະຖານ ດັ່ງກ່າວກັບ (ບັນດາ) ມາດຕະຖານທີ່ສາມາດນຳໃຊ້ ແລະ ດຳເນີນການເພື່ອໃຫ້ໄດ້ຮັບການຢັ້ງຢືນ ຫຼື ໃບຢັ້ງ ຢືນພາຍໃນກຳນົດເວລາທີ່ເໝາະສົມ.

29. ໃນກໍລະນີທີ່ບໍ່ມີມາດຕະຖານສອດຄ່ອງ ແລະ ມີຄວາມໜ້າເຊື່ອຖືໃນລະດັບສາກົນ, ພາກພື້ນ ຫຼື ລະດັບ ຊາດສຳລັບຊັບພະຍາກອນທຳມະຊາດທີ່ມີຊີວິດ ສະເພາະໃດໜຶ່ງໃນປະເທດທີ່ກ່ຽວຂ້ອງ, ລູກຄ້າ ຈະຕ້ອງ:

- ໃຫ້ຄຳໝັ້ນສັນຍາຕໍ່ການນຳໃຊ້ຫຼັກການດຳເນີນ ງານ, ແບບວິທີການຄຸ້ມຄອງ ແລະ ເຕັກໂນໂລຊີທີ່ ດີໃນລະດັບສາກົນສຳລັບຂະແໜງ ຫຼື ອຸດສາຫະກຳ ຂອງຕົນ; ແລະ
- ມີສ່ວນຮ່ວມແລະສະໜັບສະໜູນຢ່າງຫ້າວຫັນຕໍ່ ການສ້າງມາດຕະຖານລະດັບຊາດຕາມທີ່ເຫັນວ່າ ສອດຄ່ອງ ເຊິ່ງລວມທັງການສຶກ ສາຕ່າງໆທີ່ຈະ ປະກອບສ່ວນໃສ່ການກຳນົດແລະການສາທິດໃຫ້ ເຫັນເຖິງແບບວິທີການຄຸ້ມຄອງທີ່ຍືນຍົງ.

## ຕ່ອງໂສ້ການສະໜອງ

30. ໃນກໍລະນີທີ່ລູກຄ້າຊື້ການຜະລິດຕົ້ນຕໍ (ໂດຍສະ ເພາະຜະລິດຕະພັນທີ່ເປັນອາຫານ ແລະ ເສັ້ນໄຍພືດ ແຕ່ບໍ່ໄດ້ຈຳກັດແຕ່ພຽງເທົ່ານີ້) ເຊິ່ງເປັນທີ່ຮູ້ກັນວ່າ ຖືກ ຜະລິດຂຶ້ນໃນເຂດໃດໜຶ່ງທີ່ມີຄວາມສ່ຽງເກີດການປ່ຽນ ແປງສູງຕໍ່ເຂດທີ່ຢູ່ອາໄສຕາມທຳມະຊາດ ແລະ/ຫຼື ເຂດ ທີ່ຢູ່ອາໄສສຳຄັນ, ລູກຄ້າຈະຕ້ອງໄດ້ຮັບຮອງເອົາລະບົບ ແລະ ວິທີການຢັ້ງຢືນເພື່ອເປັນສ່ວນໜຶ່ງຂອງລະບົບຄຸ້ມ ຄອງສິ່ງແວດລ້ອມ ແລະ ສັງຄົມຂອງລູກຄ້າເພື່ອ ປະເມີນຜູ້ສະໜອງຕົ້ນຕໍ.[21] ລະບົບແລະວິທີການຢັ້ງ ຢືນຈະ (i) ກຳນົດແຫຼ່ງທີ່ມາຂອງຜະລິດຕະພັນ ແລະ ປະເພດເຂດທີ່ປູກຜະລິດຕະພັນດັ່ງກ່າວ; (ii) ຊ່ວຍໃນ ການທົບທວນຕ່ອງໂສ້ການສະໜອງຜະຕົ້ນຕໍຂອງລູກ ຄ້າຕໍ່ເນື່ອງ; (iii) ຈຳກັດການຈັດຊື້-ຈັດຈ້າງໄວ້ແຕ່ກັບ ຜູ້ສະໜອງຕົ້ນຕໍທີ່ສາມາດສະແດງໃຫ້ເຫັນວ່າເຂົາເຈົ້າ ບໍ່ໄດ້ປະກອບສ່ວນເຂົ້າໃນການປ່ຽນແປງຄັ້ງໃຫຍ່ຕໍ່ເຂດ ທີ່ຢູ່ອາໄສຕາມທຳມະຊາດ ແລະ/ຫຼື ເຂດທີ່ຢູ່ອາໄສ ຈຳເປັນ (ເຊິ່ງອາດຈະ ສາມາດສາທິດໃຫ້ເຫັນໄດ້ໂດຍ ການສະໜອງຜະລິດຕະພັນທີ່ມີໃບຢັ້ງຢືນ, ຫຼື ຄວາມ ຄືບໜ້າໃນການໄດ້ຮັບການຢັ້ງຢືນ ຫຼື ໃບຢັ້ງຢືນ ພາຍໃນ ລະບົບທີ່ມີຄວາມໜ້າເຊື່ອຖືສຳລັບຜະລິດຕະພັນບາງຈຳ ນວນ ແລະ/ຫຼື ສະຖານທີ່ຕັ້ງ); ແລະ (iv) ຕາມທີ່ເຫັນວ່າ ເໝາະສົມ, ຮຽກຮ້ອງໃຫ້ມີມາດຕະການເພື່ອຫັນປ່ຽນ ຕ່ອງໂສ້ການສະໜອງຕົ້ນຕໍຂອງລູກຄ້າຕາມໄລຍະເວລາ ໄປສູ່ຜູ້ສະໜອງອື່ນທີ່ສາມາດສາ ທິດເຫັນໄດ້ວ່າເຂົາເຈົ້າ ບໍ່ໄດ້ສ້າງຜົນກະທົບທາງລົບໃນລະດັບສູງຕໍ່ເຂດດັ່ງກ່າວ. ຄວາມສາມາດຂອງລູກຄ້າໃນການແກ້ໄຂບັນດາຄວາມ ສ່ຽງເຫຼົ່ານີ້ໃຫ້ໄດ້ຢ່າງຄົບຖ້ວນແມ່ນຂຶ້ນກັບລະດັບການ ຄວບຄຸມ-ຄຸ້ມຄອງ ຫຼື ບົດບາດອິດທິພົນຂອງລູກຄ້າທີ່ ມີຕໍ່ຜູ້ສະໜອງຕົ້ນຕໍຂອງເຂົາເຈົ້າ.

20 ລະບົບການອອກໃບຢັ້ງຢືນທີ່ໜ້າເຊື່ອຖື ແມ່ນລະບົບທີ່ມີຄວາມເປັນເອກະລາດ, ປະຢັດຕົ້ນທຶນ, ບົນພື້ນຖານມາດຕະຖານການດຳເນີນງານທີ່ພາວະວິໄສ ແລະ ສາມາດວັດແທກໄດ້ ແລະ ໄດ້ຮັບການສ້າງຂຶ້ນຜ່ານການຂໍຄຳປຶກສາກັບບັນດາ ພາກສ່ວນກ່ຽວຂ້ອງເຊັ່ນ: ປະຊາຊົນ ແລະ ຊຸມຊົນທ້ອງຖິ່ນ, ຊົນເຜົ່າພື້ນເມືອງ, ແລະ ອົງການຈັດຕັ້ງທາງສັງຄົມທີ່ເປັນຕົວແທນຂອງຜູ້ຊົມໃຊ້, ຜູ້ຜະລິດ ແລະ ເພື່ອຜົນປະໂຫຍດ ໃນການອະນຸລັກ. ລະບົບໃນລັກສະນະດັ່ງກ່າວມີຂັ້ນຕອນການ ຕັດສິນບັນຫາທີ່ເປັນທຳ, ໂປ່ງໃສ ແລະ ເປັນເອກະລາດ ເຊິ່ງຫຼີກເວັ້ນບັນຫາຂອງ ການມີຜົນປະໂຫຍດທັບຊ້ອນ.

21 ຜູ້ສະໜອງຕົ້ນຕໍ ແມ່ນຜູ້ສະໜອງປົກກະຕິທີ່ສະໜອງຊັບພະຍາກອນ ທຳມະຊາດທີ່ມີຊີວິດ, ສິນຄ້າ ແລະ ທາດວັດຖຸຕ່າງໆໃນສັດສ່ວນໃຫຍ່ທີ່ຈຳເປັນ ຕໍ່ຂະບວນການເຮັດວຽກໃຈກາງ ຫຼື ດຳເນີນທຸລະກິດໃຈກາງຂອງໂຄງການ.



## ມາດຕະຖານການດຳເນີນງານທີ 7

# ຊົນເຜົ່າພື້ນເມືອງ

### ພາກສະເໜີ

1. ມາດຕະຖານການດຳເນີນງານທີ 7 ຮັບຮູ້ວ່າ: ຊົນເຜົ່າພື້ນເມືອງເປັນກຸ່ມສັງຄົມທີ່ມີເອກະລັກສະເພາະເຊິ່ງແຕກ ຕ່າງຈາກບັນດາກຸ່ມຄົນຫຼັກທີ່ເປັນສ່ວນປະກອບໃນສັງຄົມ ຂອງຊາດ ແລະ ໂດຍປົກກະຕິແລ້ວ ຊົນເຜົ່າພື້ນເມືອງ ເປັນກຸ່ມປະຊາກອນທີ່ໂດດດ່ຽວ ຫຼາຍສຸດ ແລະ ບໍ່ສາມາດ ປົກປ້ອງຕົນເອງໄດ້. ໃນຫຼາຍກໍລະນີ, ສະຖານະພາບທາງ ດ້ານເສດຖະກິດ, ສັງຄົມ ແລະ ກົດໝາຍຂອງເຂົາເຈົ້າ ຈຳກັດຄວາມສາມາດຂອງເຂົາເຈົ້າໃນການປົກປ້ອງສິດທິ ຕ່າງໆຂອງຕົນ, ແລະ ຜົນປະໂຫຍດຂອງຕົນ, ຕະຫຼອດ ເຖິງຊັບພະຍາກອນທີ່ດິນ, ຊັບພະຍາກອນທຳມະຊາດ ແລະ ຊັບພະຍາກອນທາງດ້ານວັດທະນະທຳ; ແລະ ອາດ ຈະຈຳກັດຄວາມສາມາດຂອງເຂົາເຈົ້າໃນການເຂົ້າ ມີສ່ວນຮ່ວມ ແລະ ໄດ້ຮັບຜົນປະໂຫຍດຈາກການ ພັດທະນາ. ຊົນເຜົ່າພື້ນເມືອງ ຍິ່ງຈະຂາດຄວາມສາມາດ ປົກປ້ອງຕົນເອງຫຼາຍກ່ວາເກົ່າຫາກທີ່ດິນ ແລະ ຊັບພະ ຍາກອນຕ່າງໆຂອງເຂົາເຈົ້າຖືກປ່ຽນຮູບ, ຖືກບຸກລຸກ ອ້ອມຮົ້ວເອົາ ຫຼື ຖືກເຮັດໃຫ້ເຊື່ອມໂຊມ. ຫາກເປັນເຊັ່ນນັ້ນ ພາສາ, ວັດທະນະທຳ, ສາສະໜາ, ຄວາມເຊື່ອທາງຈິດ ວິນຍານ, ແລະ ສະຖາບັນຕ່າງໆຂອງເຂົາເຈົ້າກໍ່ຍັງອາດ ຈະຖືກໄພຂົ່ມຂູ່ຄຸກຄາມໄດ້. ຜົນສະທ້ອນທີ່ອາດຕາມ ມາມີຄື: ຊົນເຜົ່າພື້ນເມືອງດັ້ງເດີມອາດຈະຍິ່ງບໍ່ສາມາດ ປົກປ້ອງຕົນເອງໄດ້ຈາກຜົນກະທົບທາງລົບທີ່ພົວພັນກັບ ການພັດທະນາໂຄງການ ເມື່ອສົມທຽບໃສ່ຊຸມຊົນອື່ນທີ່ ບໍ່ແມ່ນຊົນເຜົ່າພື້ນເມືອງ. ຄວາມບໍ່ສາມາດປົກປ້ອງຕົນ ເອງໄດ້ດັ່ງກ່າວນີ້ ອາດຈະລວມເອົາການສູນເສຍເອກະ ລັກສະເພາະ, ວັດທະນະທຳ ແລະ ວິຖີການຫາລ້ຽງຊີບ ທີ່ຕິດແທດກັບຊັບພະຍາກອນທຳມະຊາດ ກໍ່ຄື ຄວາມ ສ່ຽງຖືກກະທົບຈາກຄວາມທຸກຍາກ ແລະ ພະຍາດຕ່າງໆ.

2. ບັນດາໂຄງການຂອງພາກເອກະຊົນ ສາມາດສ້າງ ໂອກາດໃຫ້ຊົນເຜົ່າພື້ນເມືອງເຂົ້າມີສ່ວນຮ່ວມ ແລະ ໄດ້ ຮັບຜົນປະໂຫຍດຈາກບັນດາກິດຈະກຳຕ່າງໆທີ່ພົວພັນ ກັບໂຄງການ ທີ່ອາດຈະຊ່ວຍເຂົາເຈົ້າບັນລຸໄດ້ຕາມຄວາມ ມຸ່ງຫວັງໃນການພັດທະນາສະພາບເສດຖະກິດ-ສັງຄົມ ຂອງຕົນ. ນອກຈາກນັ້ນ, ຊົນເຜົ່າພື້ນເມືອງອາດຈະຍັງມີ ບົດບາດໃນການພັດທະນາແບບຍືນຍົງດ້ວຍການສົ່ງເສີມ ແລະ ຄຸ້ມຄອງບັນດາກິດຈະກຳແລະວິສາຫະກິດຕ່າງໆ ໃນຖານະເປັນຄູ່ຮ່ວມງານໃນການພັດທະນາ. ພົບເລື້ອຍໆ ວ່າ ລັດຖະບານມີບົດບາດໃຈກາງໃນການຄຸ້ມຄອງແກ້ໄຂ ບັນຫາຕ່າງໆຂອງຊົນເຜົ່າພື້ນເມືອງ ແລະ ລູກຄ້າຄວນ ປະສານສົມທົບກັບບັນດາອົງການທີ່ຮັບຜິດຊອບໃນ ການຄຸ້ມຄອງຄວາມສ່ຽງ ແລະ ຫຼຸດຜ່ອນບັນດາຜົນກະ ທົບຕ່າງໆທີ່ເກີດຈາກກິດຈະກຳຂອງຕົນ.[1]

### ວັດຖຸປະສົງ

- ເພື່ອຮັບປະກັນວ່າ ຂະບວນການພັດທະນາເສີມສ້າງ ຄວາມເຄົາລົບເປັນຢ່າງສູງຕໍ່ສິດທິມະນຸດ, ກຽດສັກສີ, ຄວາມມຸ່ງຫວັງ, ວັດທະນະທຳ ແລະ ວິຖີການຫາ ລ້ຽງຊີບທີ່ອາໄສທຳມະຊາດຂອງຊົນເຜົ່າພື້ນເມືອງ.
- ເພື່ອຄາດຄະເນ ແລະ ຫຼີກເວັ້ນບັນດາຜົນກະທົບ ທາງລົບຈາກບັນດາໂຄງການຕ່າງໆທີ່ອາດຈະເກີດ ຂຶ້ນຕໍ່ຊຸມຊົນຂອງຊົນເຜົ່າພື້ນເມືອງ ຫຼື ໃນກໍ ລະນີທີ່ ບໍ່ສາມາດເຮັດໄດ້ແມ່ນເພື່ອຈຳກັດ ແລະ/ຫຼື ຊົດເຊີຍ ບັນດາຜົນກະທົບ ດັ່ງກ່າວ.
- ເພື່ອສົ່ງເສີມໃຫ້ມີຜົນປະໂຫຍດ ແລະ ໂອກາດຈາກ ການພັດທະນາແບບຍືນຍົງໃຫ້ຊົນເຜົ່າພື້ນເມືອງໃນ ລັກສະນະທີ່ເໝາະສົມທາງດ້ານວັດທະນະທຳ.

1 ນອກຈາກການຕອບສະໜອງໃຫ້ໄດ້ຕາມເງື່ອນໄຂຕ່າງໆພາຍໃຕ້ມາດ ຕະຖານການດຳເນີນງານນີ້ແລ້ວ, ລູກຄ້າ ຕ້ອງປະຕິບັດຕາມກົດໝາຍທີ່ ນຳໃຊ້ພາຍໃນປະເທດ ເຊິ່ງ ລວມທັງກົດໝາຍທີ່ຈັດຕັ້ງປະຕິບັດພັນທະຂອງ ປະເທດເຈົ້າພາບພາຍໃຕ້ກົດໝາຍສາກົນ.

- ເພື່ອສ້າງ ແລະ ຮັກສາສາຍພົວພັນຕໍ່ເນື່ອງບົນພື້ນຖານການຂໍຄໍາປຶກສາ ແລະ ມີສ່ວນຮ່ວມກັບຄົນພື້ນເມືອງດັ້ງເດີມທີ່ຖືກກະທົບຈາກໂຄງການຕະລອດໄລຍະຮອບວຽນອາຍຸຂອງໂຄງການ.
- ເພື່ອຮັບປະກັນໃຫ້ໄດ້ຮັບການເຫັນດີເຫັນພ້ອມດ້ວຍຄວາມສະໝັກໃຈ ໂດຍໄດ້ຮັບຂໍ້ມູນລ່ວງໜ້າ ແລະ ພຽງພໍ (FPIC) ຈາກຊຸມຊົນຂອງຊົນເຜົ່າພື້ນເມືອງທີ່ໄດ້ຮັບຜົນກະທົບ ຫາກເກີດມີສະພາບເງື່ອນໄຂຄືດັ່ງທີ່ໄດ້ອະທິບາຍໄວ້ໃນມາດຕະຖານການຈັດຕັ້ງປະຕິບັດນີ້.
- ເພື່ອເຄົາລົບ ແລະ ອະນຸລັກວັດທະນະທໍາ, ຄວາມຮູ້ ແລະ ແບບວິທີປະຕິບັດຂອງຊົນເຜົ່າພື້ນເມືອງ.

## ຂອບເຂດການນໍາໃຊ້

3. ຄວາມສາມາດໃນການນໍາໃຊ້ມາດຕະຖານການດໍາເນີນງານນີ້ ແມ່ນຖືກກໍານົດຂຶ້ນໃນຂະບວນການກໍານົດຄວາມສ່ຽງ ແລະ ຜົນກະທົບທາງດ້ານສິ່ງແວດລ້ອມ ແລະສັງຄົມ. ການຈັດຕັ້ງປະຕິບັດບັນດາກິດຈະກໍາທີ່ຈໍາເປັນເພື່ອຕອບສະໜອງໃຫ້ໄດ້ຕາມເງື່ອນໄຂຕ່າງໆຂອງມາດຕະຖານການດໍາເນີນງານນີ້ແມ່ນຖືກຄຸ້ມຄອງຜ່ານລະບົບການຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງລູກຄ້າເຊິ່ງບັນດາອົງປະກອບຂອງລະບົບດັ່ງກ່າວແມ່ນຖືກກໍານົດໄວ້ໃນມາດຕະຖານການດໍາເນີນງານທີ 1.

4. ຍັງບໍ່ທັນມີຄໍານິຍາມກ່ຽວກັບ "ຊົນເຜົ່າພື້ນເມືອງ" ອັນເປັນທີ່ຍອມຮັບຢ່າງເປັນເອກະພາບທົ່ວສາກົນ. ຫຼາຍປະເທດ ອາດຈະອ້າງອີງເຖິງຊົນເຜົ່າພື້ນເມືອງດ້ວຍຄໍາສັບຕ່າງໆເຊັ່ນ: "ຊົນເຜົ່າພື້ນເມືອງສ່ວນນ້ອຍ", "ຄົນອາບໍລິຈິນຂອງອົດສະຕາລີ", "ຊົນເຜົ່າພູດອຍ", "ຄົນເຊື້ອຊາດສ່ວນນ້ອຍ", "ເຜົ່າວັນນະຕໍ່າໃນອິນເດຍ", "ຊົນຊາດບຸກເບີກ ຫຼື ເຟີດສ໌ເນເຊິນຢູ່ຄານາດາ" ຫຼື "ກຸ່ມເຜົ່າຕ່າງໆ".

5. ໃນມາດຕະຖານການດໍາເນີນງານນີ້, ຄໍາວ່າ: "ຊົນເຜົ່າພື້ນເມືອງ" ແມ່ນນໍາໃຊ້ໃນລັກສະນະທົ່ວໄປເພື່ອໝາຍເຖິງກຸ່ມຄົນທີ່ມີລັກສະນະສະເພາະທາງດ້ານສັງຄົມ ແລະ ວັດທະນະທໍາ ທີ່ມີຄຸນລັກສະນະແຕກຕ່າງໃນຫຼາຍລະດັບຄືດັ່ງຕໍ່ໄປນີ້:

- ມີເອກະລັກສະເພາະຕົວໃນຖານະເປັນສະມາຊິກຂອງກຸ່ມວັດທະນະທໍາພື້ນເມືອງດັ້ງເດີມສະເພາະ ແລະ ກຸ່ມອື່ນໆ ຮັບຮູ້ຕໍ່ເອກະລັກສະນະສະເພາະດັ່ງກ່າວ;
- ມີຄວາມຜູກພັນລວມໝູ່ກັບເຂດທີ່ຢູ່ອາໄສທີ່ມີລັກສະນະສະເພາະທາງພູມສາດ ຫຼື ອະນາເຂດທີ່ຢູ່ອາໄສສືບກັນມາແຕ່ບັນພະບູລຸດໃນເຂດທີ່ຕັ້ງຂອງໂຄງການ ແລະ ຜູກພັນກັບຊັບພະຍາກອນທໍາມະຊາດໃນເຂດທີ່ຢູ່ອາໄສ ແລະ ອະນາເຂດເຫຼົ່ານັ້ນ; ບັນດາສະຖາບັນທາງວັດທະນະທໍາປະເພນີ, ເສດຖະກິດ, ສັງຄົມ ຫຼື ການເມືອງທີ່ຕ່າງຈາກສິ່ງທີ່ມີຢູ່ໃນສັງຄົມ ຫຼື ວັດທະນະ ທໍາຫຼັກ; ຫຼື
- ມີພາສາ ຫຼື ພາສາທ້ອງຖິ່ນທີ່ມີລັກສະນະສະເພາະ ເຊິ່ງພົບເລື້ອຍໆວ່າຕ່າງຈາກພາສາທາງການຂອງປະເທດ ຫຼື ເຂດທີ່ເຂົາເຈົ້າອາໄສຢູ່.

6. ມາດຕະຖານການດໍາເນີນງານດັ່ງກ່າວນີ້ນໍາໃຊ້ກັບບັນດາຊຸມຊົນ ຫຼື ກຸ່ມຄົນຂອງຊົນເຜົ່າພື້ນເມືອງທີ່ຮັກສາຄວາມຜູກພັນລວມໝູ່ຂອງເຂົາເຈົ້າ ໝາຍເຖິງເອກະລັກສະເພາະໃນຖານະເປັນກຸ່ມ ຫຼື ຊຸມຊົນ ມີຄວາມເຊື່ອມໂຍງກັບເຂດທີ່ຢູ່ອາໄສທີ່ມີ ລັກສະນະສະເພາະ ຫຼື ອະນາເຂດທີ່ຢູ່ສືບກັນມາແຕ່ບັນພະບູລຸດ ແລະ ຊັບພະຍາກອນທໍາມະຊາດທີ່ມີໃນເຂດນັ້ນ. ມາດຕະຖານນີ້ ຍັງອາດຈະນໍາໃຊ້ກັບຊຸມຊົນ ຫຼື ກຸ່ມທີ່ສູນເສຍຄວາມຜູກພັນລວມໝູ່ຂອງເຂົາເຈົ້າທີ່ມີຕໍ່ເຂດທີ່ຢູ່ອາໄສທີ່ມີລັກສະນະສະເພາະ ຫຼື ອະນາເຂດທີ່ຢູ່ສືບກັນມາແຕ່ບັນພະບູລຸດພາຍໃນເຂດທີ່ຕັ້ງຂອງໂຄງການເຊິ່ງເກີດຂຶ້ນໃນຊົ່ວໄລຍະຊີວິດໜຶ່ງເຊັ່ນຄົນພາຍໃນກຸ່ມກ່ຽວຂ້ອງດັ່ງກ່າວຍ້ອນແຜນງານຍົກຍ້າຍທີ່ຢູ່ອາໄສຂອງລັດທີ່ບັງຄັບໃຫ້ອອກໄປ, ທີ່ມີຂໍ້ຂັດແຍ່ງ, ຍ້ອນມີການຢຶດຄອງເອົາດິນຂອງເຂົາເຈົ້າ, ຍ້ອນໄພພິບັດທໍາມະຊາດ ຫຼື ຍ້ອນການລວມເອົາເຂດຢູ່ອາໄສຂອງເຂົາເຈົ້າເຂົ້າເປັນເຂດຕົວເມືອງ.

7. ລູກຄ້າອາດຈະຕ້ອງຂໍຄໍາເຫັນຈາກວິຊາການອາຊີບທີ່ມີຄວາມຮູ້ຄວາມສາມາດ ເພື່ອຢັ້ງຢືນວ່າກຸ່ມສະເພາະໃດໜຶ່ງຈະຖືເປັນຊົນເຜົ່າພື້ນເມືອງ ຫຼື ບໍ່ ເພື່ອຕອບສະໜອງໃຫ້ໄດ້ຕາມຈຸດປະສົງເປົ້າໝາຍຂອງມາດຕະຖານການດໍາເນີນງານນີ້.

## ເງື່ອນໄຂ

### ເງື່ອນໄຂທົ່ວໄປ

***ຫຼີກເວັ້ນການເກີດຜົນກະທົບທາງລົບ***

8. ຜ່ານການຈັດຕັ້ງປະຕິບັດຂະບວນການກໍານົດຄວາມສ່ຽງ ແລະ ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ, ລູກຄ້າຈະຕ້ອງກໍານົດເອົາທຸກຊຸມຊົນຂອງຊົນເຜົ່າດັ້ງເດີມພາຍໃນເຂດທີ່ຕັ້ງຂອງໂຄງການທີ່ອາດຈະຖືກກະທົບຈາກໂຄງການກໍ່ຄືທາດແທ້ ແລະ ລະດັບຂອງຜົນກະທົບທາງເສດຖະກິດ, ສັງຄົມ ແລະ ວັດທະນະທໍາ



(ເຊິ່ງລວມເອົາທັງມໍລະດົກທາງວັດທະນະທໍາ[2] ) ແລະ ສິ່ງແວດລ້ອມທາງກົງ ແລະ ທາງອ້ອມທີ່ຄາດວ່າຈະສົ່ງຜົນຕໍ່ເຂົາເຈົ້າ.

9. ຄວນພະຍາຍາມຫຼີກເວັ້ນຜົນກະທົບທາງລົບຕໍ່ຊຸມຊົນຂອງຊົນເຜົ່າພື້ນເມືອງເທົ່າທີ່ສາມາດເຮັດໄດ້ . ຫາກມີການສຶກສາເບິ່ງທາງເລືອກອື່ນແລ້ວແຕ່ບໍ່ສາມາດຫຼີກເວັ້ນຜົນກະທົບທາງລົບໄດ້, ລູກຄ້າຈະຕ້ອງຈໍາກັດ, ປົວແປງ, ແລະ/ຫຼື ຊົດເຊີຍຕໍ່ບັນດາຜົນກະທົບເຫຼົ່ານັ້ນ ໃນລັກສະນະທີ່ເໝາະສົມທາງວັດທະນະທໍາໂດຍສົມສ່ວນກັບທາດແທ້ ແລະ ຂະໜາດຂອງຜົນກະທົບດັ່ງກ່າວ ແລະ ຄວາມບອບບາງ ຫຼື ຄວາມບໍ່ສາມາດປົກປ້ອງຕົນເອງໄດ້ຂອງຊຸມຊົນຂອງຊົນເຜົ່າພື້ນເມືອງທີ່ໄດ້ຮັບຜົນກະທົບ. ກິດຈະກໍາທີ່ສະເໜີໂດຍລູກຄ້າ ຈະຕ້ອງຖືກສ້າງຂຶ້ນຈາກການປຶກສາຫາລື ແລະ ການມີສ່ວນຮ່ວມທີ່ມີຂໍ້ມູນຄົບຖ້ວນຂອງຊຸມຊົນຂອງຊົນເຜົ່າພື້ນເມືອງທີ່ໄດ້ຮັບຜົນກະທົບ ແລະ ຖືກລວມເຂົ້າໃນແຜນທີ່ມີກໍານົດເວລາຈັດຕັ້ງປະຕິບັດຄັກແນ່ ເຊັ່ນ: ແຜນວ່າດ້ວຍຊົນເຜົ່າພື້ນເມືອງ ຫຼື ແຜນພັດທະນາຊຸມຊົນໂດຍລວມ ເຊິ່ງປະກອບອົງປະກອບຍ່ອຍ ສະເພາະຕ່າງຫາກສໍາລັບຊົນເຜົ່າພື້ນເມືອງ.[3]

***ການມີສ່ວນຮ່ວມ ແລະ ການເຫັນດີເຫັນພ້ອມ***

10. ລູກຄ້າຈະຕ້ອງດໍາເນີນຂະບວນການເອົາຊຸມຊົນຂອງຊົນເຜົ່າພື້ນເມືອງທີ່ໄດ້ຮັບຜົນກະທົບໃຫ້ເຂົ້າມີສ່ວນຮ່ວມຕາມເງື່ອນໄຂທີ່ກໍານົດໄວ້ໃນມາດຕະຖານການດໍາເນີນງານທີ 1. ຂະບວນການເອົາເຂົ້າມາມີສ່ວນຮ່ວມດັ່ງກ່າວ ລວມເອົາການວິເຄາະພາກສ່ວນກ່ຽວຂ້ອງ ແລະ ການວາງແຜນທີ່ມີສ່ວນຮ່ວມ, ການເປີດເຜີຍຂໍ້ມູນຂ່າວສານ, ການຂໍຄໍາປຶກສາ ແລະ ການມີສ່ວນຮ່ວມໃນລັກສະນະທີ່ເໝາະສົມທາງວັດທະນະທໍາ. ນອກຈາກນັ້ນ, ຂະບວນການດັ່ງກ່າວຈະຕ້ອງ:

- ລວມເອົາບັນດາຄະນະກໍາມະການ ແລະ ອົງກອນທີ່ຕາງໜ້າຊົນເຜົ່າພື້ນເມືອງ (ຕົວຢ່າງ: ຄະນະເຖົ້າແກ່ແນວໂຮມ ຫຼື ຄະນະອໍານາດການປົກຄອງບ້ານ) ກໍ່ຄື ສາມະຊິກຂອງຊຸມຊົນຂອງຊົນເຜົ່າພື້ນເມືອງທີ່ໄດ້ຮັບຜົນກະທົບ; ແລະ
- ສະໜອງກໍານົດເວລາທີ່ພຽງພໍໃຫ້ຂະບວນການຕັດສິນບັນຫາ[4] ຂອງຊົນເຜົ່າພື້ນເມືອງ.

11. ຊຸມຊົນຂອງຊົນເຜົ່າພື້ນເມືອງທີ່ໄດ້ຮັບຜົນກະທົບອາດຈະມີຄວາມບອບບາງເປັນພິເສດຕໍ່ການສູນເສຍ, ຖືກກີດກັນຈາກ ຫຼື ຫ້າມນໍາໃຊ້ທີ່ດິນຂອງເຂົາເຈົ້າ ແລະ ເຂົ້າເຖິງຊັບພະຍາກອນທໍາມະຊາດ ແລະ ວັດທະນະທໍາ.[5] ໂດຍຮັບຮູ້ຕໍ່ເຖິງຄວາມບອບບາງດັ່ງກ່າວ, ນອກຈາກເງື່ອນໄຂທົ່ວໄປຂອງມາດຕະຖານການດໍາເນີນງານນີ້ແລ້ວ, ລູກຄ້າຈະຕ້ອງໄດ້ຮັບການເຫັນດີເຫັນພ້ອມຢ່າງສະໝັກໃຈໂດຍໄດ້ຮັບຂໍ້ມູນລ່ວງໜ້າຢ່າງພຽງພໍ (FPIC) ຈາກ ຊຸມຊົນຂອງຊົນເຜົ່າພື້ນເມືອງທີ່ໄດ້ຮັບຜົນກະທົບຕາມສະພາບເງື່ອນໄຂທີ່ອະທິບາຍໄວ້ ໃນວັກທີ 13–17 ຂອງມາດຕະຖານການດໍາເນີນງານນີ້. ການເຫັນດີເຫັນພ້ອມດັ່ງກ່າວແມ່ນຖືກນໍາໃຊ້ກັບການອອກແບບ, ການຈັດຕັ້ງປະຕິບັດໂຄງການ ແລະ ຄາດໝາຍຜົນໄດ້ຮັບຂອງໂຄງການທີ່ພົວພັນກັບຜົນກະທົບຕ່າງໆທີ່ມີຕໍ່ຊຸມຊົນຂອງຊົນເຜົ່າພື້ນເມືອງ. ກໍລະນີທີ່ເງື່ອນໄຂໃດໜຶ່ງທີ່ກ່າວເຖິງນັ້ນຫາກຖືກນໍາໃຊ້, ລູກຄ້າຈະນໍາໃຊ້ຊ່ຽວຊານທີ່ເປັນບຸກຄົນພາຍນອກເພື່ອຊ່ວຍການກໍານົດຄວາມສ່ຽງ ແລະ ຜົນກະທົບຕ່າງໆຂອງໂຄງການ.

12. ຍັງບໍ່ທັນມີຄໍານິຍາມກ່ຽວກັບການເຫັນດີເຫັນພ້ອມຢ່າງສະໝັກໃຈໂດຍໄດ້ຮັບຂໍ້ມູນລ່ວງໜ້າ ແລະ ພຽງພໍ (FPIC) ທີ່ເປັນທີ່ຍອມຮັບທົ່ວໂລກເທື່ອ. ເຖິງຢ່າງໃດກໍ່ຕາມ, ເພື່ອຮັບໃຊ້ຈຸດປະສົງຂອງມາດຕະຖານການດໍາເນີນງານທີ 1, 7 ແລະ 8, ຄວາມໝາຍຂອງ "FPIC" ແມ່ນຖືກອະທິບາຍໄວ້ໃນວັກນີ້. ການເຫັນດີເຫັນພ້ອມຢ່າງສະໝັກໃຈໂດຍໄດ້ຮັບຂໍ້ມູນລ່ວງໜ້າຢ່າງພຽງພໍ (FPIC) ເປັນການສານຕໍ່ ແລະ ຂະຫຍາຍຂະບວນການການປຶກສາຫາລືທີ່ ໄດ້ອະທິບາຍໄວ້ໃນມາດຕະຖານການດໍາເນີນງານທີ 1 ແລະ ຈະຖືກກໍານົດຂຶ້ນໂດຍຜ່ານການເຈລະຈາທີ່ມີຄວາມຈິງໃຈລະຫວ່າງລູກຄ້າ ແລະ ຊຸມຊົນຂອງຊົນເຜົ່າພື້ນເມືອງທີ່ໄດ້ຮັບຜົນກະທົບ. ລູກຄ້າຈະບັນທຶກເປັນເອກະສານກ່ຽວກັບ: (i) ຂະບວນການເຈລະຈາທີ່ເປັນທີ່ຍອມຮັບໄດ້ລະຫວ່າງລູກຄ້າ ແລະ ຊຸມຊົນຂອງຊົນເຜົ່າພື້ນເມືອງທີ່ໄດ້ຮັບຜົນກະທົບ ແລະ (ii) ຫຼັກຖານທີ່ເປັນຂໍ້ຕົກລົງລະຫວ່າງຄູ່ຮ່ວມເຈລະຈາໃນຖານະເປັນຜົນໄດ້ຮັບຂອງການເຈລະຈາ. ການເຫັນດີເຫັນພ້ອມ

[2] ເງື່ອນໄຂເພີ່ມເຕີມທີ່ມີຕໍ່ການປົກປ້ອງມໍລະດົກທາງວັດທະນະທໍາ ແມ່ນຖືກກໍານົດໄວ້ໃນມາດຕະຖານການດໍາເນີນງານທີ 8.

[3] ການກໍານົດແຜນທີ່ເໝາະສົມ ອາດຈະຕ້ອງການຄໍາເຫັນຂອງວິຊາການທີ່ມີຄວາມຮູ້ຄວາມສາມາດ. ແຜນພັດທະນາຊຸມຊົນອາດຈະເໝາະສົມໃນສະພາບເງື່ອນໄຂທີ່ ຊົນເຜົ່າພື້ນເມືອງ ເປັນສ່ວນໜຶ່ງຂອງຊຸມຊົນຂະໜາດໃຫຍ່ທີ່ໄດ້ຮັບຜົນກະທົບ.

[4] ຂະບວນການຕັດສິນບັນຫາພາຍໃນ ໂດຍລວມແລ້ວ ມີລັກສະນະເປັນການຕັດສິນແບບເປັນໝູ່ຄະນະ ແຕ່ ກໍ່ບໍ່ໝາຍວ່າຈະເປັນເຊັ່ນນັ້ນສະເໝີໄປ. ອາດຈະມີທັດສະນະຄໍາເຫັນຕ່າງກັນ ພາຍໃນ, ແລະ ຜົນການຕັດສິນບັນຫາອາດຈະຖືກທ້າທາຍຈາກບາງຄົນ ຫຼື ບາງກຸ່ມພາຍໃນຊຸມຊົນ. ຂະບວນການຂໍຄໍາປຶກສາ ຄວນຈະມີຄວາມລະອຽດອ່ອນຕໍ່ສະພາບໃນລັກ ສະນະດັ່ງກ່າວ ແລະ ຄວນສະໜອງເວລາທີ່ພຽງພໍສໍາລັບຂະບວນການຕັດສິນບັນຫາພາຍໃນ ເພື່ອໃຫ້ບັນລຸຂໍ້ສະຫຼຸບເອກະພາບທີ່ຊອບທໍາໂດຍສຽງສ່ວນໃຫຍ່ຂອງຜູ້ມີສ່ວນຮ່ວມທຸກຄົນທີ່ກ່ຽວຂ້ອງ.

[5] ຊັບພະຍາກອນທໍາມະຊາດ ແລະ ຂົງເຂດທາງທໍາມະຊາດທີ່ມີຄຸນຄ່າທາງວັດທະນະທໍາທີ່ອ້າງອີງເຖິງໃນມາດຕະຖານການດໍາເນີນງານນີ້ ແມ່ນທຽບເທົ່າກັບການສະໜອງການ ບໍລິການດ້ານ ລະບົບນິເວດ ແລະ ບໍລິການດ້ານວັດທະນະທໍາ ດັ່ງທີ່ອະທິບາຍໄວ້ໃນມາດຕະຖານການດໍາເນີນງານທີ 6.

ບໍ່ຈຳເປັນຕ້ອງມີເປັນຄວາມເອກະພາບ ແລະ ອາດສາມາດບັນລຸໄດ້ ເຖິງວ່າບາງບຸກຄົນ ຫຼື ບາງກຸ່ມຄົນພາຍໃນຊຸມຊົນຈະບໍ່ເຫັນດີເປັນເອກະພາບນຳຢ່າງເຫັນໄດ້ຢ່າງຊັດເຈນກໍ່ຕາມ.

## ສະພາບເງື່ອນໄຂທີ່ຕ້ອງໃຫ້ມີການຍິນຍອມດ້ວຍຄວາມສະໝັກໃຈ, ລ່ວງໜ້າ ແລະ ໄດ້ຮັບຂໍ້ມູນພຽງພໍ

***ຜົນກະທົບຕໍ່ທີ່ດິນ ແລະ ຊັບພະຍາກອນທຳມະຊາດພາຍໃຕ້ສິດເປັນເຈົ້າຂອງຕາມປະເພນີ ຫຼື ການນຳໃຊ້ຕາມປະເພນີ***

13. ໂດຍປົກກະຕິແລ້ວຊົນເຜົ່າພື້ນເມືອງແມ່ນມີຄວາມໃກ້ຊິດ ແລະ ຜູກພັນກັບທີ່ດິນຂອງເຂົາເຈົ້າ ແລະ ຊັບພະຍາກອນທຳມະຊາດທີ່ກ່ຽວຂ້ອງ[6]. ສ່ວນໃຫຍ່, ທີ່ດິນເຫຼົ່ານີ້ແມ່ນຢູ່ພາຍໃຕ້ສິດເປັນເຈົ້າຂອງຕາມປະເພນີ ຫຼື ສິດນຳໃຊ້ຕາມປະເພນີ.[7] ເຖິງວ່າຊົນເຜົ່າພື້ນເມືອງອາດຈະບໍ່ມີໃບຕາດິນທີ່ຖືກຕ້ອງຕາມກົດໝາຍຕໍ່ທີ່ດິນເຫຼົ່ານັ້ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍຂອງປະເທດ ແຕ່ໂດຍປົກກະຕິແລ້ວການນຳໃຊ້ທີ່ດິນຂອງເຂົາເຈົ້າ (ເຊິ່ງລວມທັງການນຳໃຊ້ຕາມລະດູການ ຫຼື ຕາມຮອບວຽນ) ເພື່ອຫາລ້ຽງຊີບ ຫຼື ເພື່ອຮັບໃຊ້ຈຸດປະສົງທາງວັດທະນະທຳ, ທາງພິທີກຳ ແລະ ທາງຈິດວິນຍານທີ່ກຳນົດເອກະລັກສະເພາະຕົວ ແລະ ຊຸມຊົນຂອງເຂົາເຈົ້າ ແມ່ນສາມາດຈຳແນກ ແລະ ບັນທຶກເປັນລາຍລັກອັກສອນໄດ້.

14. ຖ້າລູກຄ້າຫາກສະເໜີທີ່ຕັ້ງຂອງໂຄງການໃດໜຶ່ງ ຫຼື ພັດທະນາຊັບພະຍາກອນທຳມະຊາດໃດໜຶ່ງໃຫ້ເປັນສິນຄ້າຢູ່ຕອນດິນທີ່ຊົນເຜົ່າພື້ນເມືອງມີສິດ ເປັນເຈົ້າຂອງຕາມປະເພນີ ຫຼື ນຳໃຊ້ຕາມປະເພນີ ເຊິ່ງການຈັດຕັ້ງປະຕິບັດໂຄງການດັ່ງກ່າວຄາດວ່າ ຈະມີຜົນກະທົບທາງລົບ[8] ເກີດຂຶ້ນ, ທາງລູກຄ້າຈະຕ້ອງປະຕິບັດຕາມບາດກ້າວດັ່ງຕໍ່ໄປນີ້:

- ບັນທຶກຄວາມພະຍາຍາມເພື່ອຫຼີກເວັ້ນ ຫຼື ຖ້າບໍ່ດັ່ງນັ້ນ ຫຼຸດຜ່ອນຂອບເຂດເນື້ອທີ່ຂອງຕອນດິນທີ່ຖືກສະເໜີເພື່ອຈັດຕັ້ງປະຕິບັດໂຄງການດັ່ງກ່າວ;
- ບັນທຶກຄວາມພະຍາຍາມເພື່ອຫຼີກເວັ້ນ ຫຼື ຖ້າບໍ່ດັ່ງນັ້ນຫຼຸດຜ່ອນຜົນກະທົບທີ່ມີຕໍ່ຊັບພະຍາກອນທຳມະຊາດ ແລະ ຂົງເຂດ ທາງທຳມະຊາດທີ່ມີຄວາມສຳຄັນ[9] ຕໍ່ຊົນເຜົ່າພື້ນເມືອງ;
- ກຳນົດ ແລະ ທົບທວນທຸກຜົນປະໂຫຍດທີ່ພົວພັນກັບທີ່ດິນ ແລະ ການນຳໃຊ້ຊັບພະຍາກອນຕາມປະເພນີກ່ອນທີ່ຈະຊື້ ຫຼື ເຊົ່າ ຕອນດິນໃດໜຶ່ງ;
- ປະເມີນ ແລະ ບັນທຶກການນຳໃຊ້ຊັບພະຍາກອນຂອງຊຸມຊົນຂອງຊົນເຜົ່າພື້ນເມືອງທີ່ໄດ້ຮັບຜົນກະທົບ ໂດຍປາດສະຈາກທັດສະນະອ່ຽງເອນ ແລະ ບໍ່ເປັນທຳຕໍ່ທຸກການກ່າວທວງສິດເປັນເຈົ້າຂອງທີ່ດິນຂອງຊົນເຜົ່າພື້ນເມືອງ[10]. ການປະເມີນທີ່ດິນ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດຄວນມີການລວມເອົາບາດບາດຍິງ-ຊາຍ ແລະ ໃຫ້ການພິຈາລະນາເປັນພິເສດຕໍ່ບົດບາດຂອງແມ່ຍິງໃນການຄຸ້ມຄອງ ແລະ ການນຳໃຊ້ຊັບພະຍາກອນເຫຼົ່ານັ້ນ;
- ຮັບປະກັນວ່າ: ຊຸມຊົນຂອງຊົນເຜົ່າພື້ນເມືອງທີ່ໄດ້ຮັບຜົນກະທົບແມ່ນໄດ້ຮັບຂໍ້ມູນເປັນຢ່າງດີກ່ຽວກັບສິດຕໍ່ທີ່ດິນຂອງເຂົາເຈົ້າພາຍໃຕ້ກົດໝາຍພາຍໃນຂອງປະເທດ ເຊິ່ງລວມທັງທຸກກົດໝາຍພາຍໃນທີ່ຮັບຮູ້ສິດການນຳໃຊ້ຕາມປະເພນີ; ແລະ
- ມີການຊົດເຊີຍ ແລະ ຂະບວນການທີ່ຮັບປະກັນຄວາມເປັນທຳໃຫ້ຊຸມຊົນຂອງຊົນເຜົ່າພື້ນເມືອງທີ່ໄດ້ຮັບ ຜົນກະທົບໃນກໍລະນີມີການພັດທະນາທາງທຸລະກິດຕໍ່ທີ່ດິນ ແລະ ຊັບພະຍາກອນທຳມະຊາດຂອງເຂົາເຈົ້າໄປຄຽງຄູ່ກັບການສະໜອງໂອກາດໃນການພັດທະນາແບບຍືນຍົງທີ່ມີຄວາມເໝາະສົມທາງວັດທະນະທຳເຊິ່ງລວມທັງ:
  - ການສະໜອງການຊົດເຊີຍລັກສະນະດິນປ່ຽນເອົາດິນ ຫຼືເປັນການມອບໃຫ້ເປັນການປະກອບສ່ວນແທນການຊົດເຊີຍເປັນເງິນເທົ່າທີ່ສາມາດເປັນໄປໄດ້[11]

[6] ຕົວຢ່າງລວມເອົາຊັບພະຍາກອນທາງທະເລ ແລະ ທາງນ້ຳ, ໄມ້, ເຄື່ອງປ່າຂອງດົງ, ພືດທີ່ເປັນຢາປົວພະຍາດ, ເຂດລ່າສັດ ແລະ ເຂດຫາອາຫານ ແລະ ເກັບເຄື່ອງປ່າຂອງດົງ ແລະ ເຂດລ້ຽງສັດ ແລະ ເຂດປູກຝັງ. ຊັບສິນທີ່ເປັນຊັບພະຍາກອນທຳມະຊາດ ດັ່ງທີ່ອ້າງອີງໄວ້ໃນມາດຕະຖານການດຳເນີນງານນີ້ ແມ່ນທຽບເທົ່າກັບ ການສະໜອງການບໍລິການດ້ານລະບົບນິເວດດັ່ງທີ່ໄດ້ອະທິບາຍໄວ້ໃນມາດຕະຖານການດຳເນີນງານທີ່ 6.

[7] ການໄດ້ມາ ແລະ/ຫຼື ການເຊົ່າທີ່ດິນ ໂດຍມີໃບຕາດິນຖືກຕ້ອງຕາມກົດໝາຍແມ່ນໄດ້ອະທິບາຍໄວ້ໃນມາດຕະຖານການດຳເນີນງານທີ 5: ການໄດ້ມາຂອງທີ່ດິນ ແລະ ການຍົກຍ້າຍແບບບໍ່ສະໝັກໃຈ.

[8] ຜົນກະທົບທາງລົບໃນລັກສະນະດັ່ງກ່າວ ອາດຈະລວມເອົາບັນດາຜົນກະທົບຕ່າງໆຈາກການສູນເສຍການເຂົ້າເຖິງຊັບສິນ ຫຼື ຊັບພະຍາກອນທຳມະຊາດ ຫຼື ຂໍ້ຈຳກັດຕໍ່ການນຳໃຊ້ທີ່ດິນ ເຊິ່ງເປັນຜົນມາຈາກບັນດາກິດຈະກຳຕ່າງໆຂອງໂຄງການ.

[9] "ຊັບພະຍາກອນທຳມະຊາດ ແລະ ຊັບພະຍາກອນທຳມະຊາດທີ່ມີຄວາມສຳຄັນ" ຄືທີ່ອ້າງອີງໄວ້ໃນມາດຕະຖານການດຳເນີນງານນີ້ ແມ່ນທຽບເທົ່າກັບບໍລິການລະບົບນິເວດທີ່ເປັນບູລິມະສິດ ດັ່ງທີ່ໄດ້ກຳນົດໄວ້ໃນມາດຕະຖານການດຳເນີນງານທີ 6 ເຊິ່ງໝາຍເຖິງບໍລິການທີ່ລູກຄ້າມີການຄວບຄຸມຄຸ້ມຄອງໂດຍກົງ ຫຼື ມີບົດບາດອິດທິພົນໃນລະດັບສູງ ຕໍ່ບໍ ລິການເຫຼົ່ານັ້ນ ເຊິ່ງບໍລິການເຫຼົ່ານັ້ນມີຄວາມເປັນໄປໄດ້ສູງທີ່ຈະກາຍເປັນແຫຼ່ງຄວາມສ່ຽງດ້ານຜົນກະທົບຕໍ່ຊຸມຊົນຄົນພື້ນເມືອງດັ້ງເດີມທີ່ໄດ້ຮັບຜົນກະທົບ.

[10] ຂະນະທີ່ມາດຕະຖານການດຳເນີນງານນີ້ຮຽກຮ້ອງໃຫ້ມີການຢັ້ງຢືນຫຼັກຖານ ແລະ ເອກະສານພິສູດການນຳໃຊ້ທີ່ດິນ ໃນລັກສະນະດັ່ງກ່າວ, ລູກຄ້າຄວນຮັບຮູ້ວ່າ: ທີ່ດິນອາດ ຈະຖືກຈັດສັນສຳລັບ ການນຳໃຊ້ໃນຮູບແບບອື່ນຕາມການກຳນົດຈັດສັນຂອງລັດຖະບານປະເທດເຈົ້າພາບ.

[11] ຖ້າສະພາບເງື່ອນໄຂຫາກຈຳກັດລູກຄ້າໃນການສະໜອງທີ່ດິນທົດແທນທີ່ເໝາະສົມ, ລູກຄ້າຕ້ອງສະໜອງເຫດຜົນຢັ້ງຢືນວ່າເປັນກໍລະນີເຊັ່ນນັ້ນແທ້. ພາຍໃຕ້ສະພາບເງື່ອນໄຂດັ່ງກ່າວ, ລູກຄ້າຈະຕ້ອງສະໜອງໂອກາດໃນການສ້າງລາຍໄດ້ທີ່ບໍ່ພົວພັນກັບການນຳໃຊ້ທີ່ດິນ ແທນການຊົດເຊີຍດ້ວຍເງິນສົດໃຫ້ຊຸມຊົນຂອງຊົນເຜົ່າພື້ນເມືອງທີ່ໄດ້ຮັບຜົນກະທົບ.



  - ຮັບປະກັນຄວາມຕໍ່ເນື່ອງໃນການເຂົ້າເຖິງຊັບພະຍາກອນທຳມະຊາດ, ກຳນົດຊັບພະຍາກອນທົດແທນທີ່ທຽບເທົ່າ ຫຼື ທາງ ເລືອກສຸດທ້າຍແມ່ນໃຫ້ສະໜອງຄ່າຊົດເຊີຍ ແລະ ຊອກຫາອາຊີບທີ່ເປັນທາງເລືອກໃໝ່ໃຫ້ເຂົາເຈົ້າຖ້າການພັດທະນາໂຄງການສົ່ງຜົນເຮັດໃຫ້ເຂົາເຈົ້າບໍ່ສາມາດເຂົ້າເຖິງ ແລະ ສູນເສຍຊັບພະຍາກອນທຳມະຊາດທີ່ບໍ່ກ່ຽວຂ້ອງກັບການໄດ້ມາຂອງທີ່ດິນໂຄງການ.
  - ຮັບປະກັນການແບ່ງປັນຜົນປະໂຫຍດທີ່ໄດ້ຈາກການນຳໃຊ້ຊັບພະຍາກອນໂດຍໂຄງການໃນລັກສະນະທີ່ເປັນທຳ ແລະ ສະເໝີພາບ ໃນກໍລະນີທີ່ລູກຄ້າຕັ້ງໃຈຈະນຳໃຊ້ປະໂຫຍດຈາກຊັບພະຍາກອນທຳມະຊາດທີ່ເປັນໃຈກາງຕໍ່ເອກະລັກສະເພາະ ແລະ ການຫາລ້ຽງຊີບຂອງຊຸມຊົນ ດັ່ງກ່າວ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດພາຍໃນຊຸມຊົນເຂົາເຈົ້າເພາະສະນັ້ນເຮັດໃຫ້ການຫາລ້ຽງຊີບຂອງເຂົາເຈົ້າມີຄວາມສ່ຽງເພີ່ມສູງຂຶ້ນທີ່ຈະຖືກກະທົບ.
  - ໃຫ້ຊຸມຊົນຂອງຊົນເຜົ່າພື້ນເມືອງໄດ້ເຂົ້າເຖິງ, ນຳໃຊ້ ແລະ ຜ່ານ ທີ່ດິນທີ່ລູກຄ້າກຳລັງພັດທະນາພາຍໃຕ້ເງື່ອນໄຂທີ່ບໍ່ເປັນອັນຕະລາຍຕໍ່ສຸຂະພາບ, ຄວາມປອດໄພ ແລະ ການປ້ອງກັນຄວາມສະຫງົບ.

***ການຍົກຍ້າຍຊົນເຜົ່າພື້ນເມືອງຈາກທີ່ດິນ ແລະ ຊັບພະຍາກອນທຳມະຊາດທີ່ຢູ່ພາຍໃຕ້ສິດເປັນເຈົ້າຂອງຕາມປະເພນີ ຫຼື ສິດນຳໃຊ້ ຕາມປະເພນີ***

15. ລູກຄ້າຈະຕ້ອງພິຈາລະນາການອອກແບບໂຄງການທີ່ເປັນທາງເລືອກທີ່ເປັນໄປໄດ້ ເພື່ອຫຼີກເວັ້ນການຍົກຍ້າຍຈັດສັນຊົນເຜົ່າພື້ນເມືອງຈາກທີ່ດິນ ແລະ ຊັບພະຍາກອນລວມໝູ່ຂອງ[12] ຊຸມຊົນທີ່ເຂົາເຈົ້າຖື ສິດເປັນເຈົ້າຂອງຕາມປະເພນີ ຫຼື ສິດນຳໃຊ້ຕາມປະເພນີ. ຖ້າການຍົກຍ້າຍຈັດສັນດັ່ງກ່າວຫາກບໍ່ສາມາດຫຼີກເວັ້ນໄດ້, ລູກຄ້າຈະຕ້ອງບໍ່ສືບຕໍ່ດຳເນີນການຈັດຕັ້ງປະຕິບັດໂຄງການຈົນກ່ວາວ່າຈະໄດ້ຮັບການເຫັນດີເຫັນພ້ອມຢ່າງສະໝັກໃຈໂດຍໄດ້ຮັບຂໍ້ມູນລ່ວງໜ້າ ແລະ ພຽງພໍ (FPIC) ດັ່ງທີ່ໄດ້ອະທິບາຍໄວ້ຂ້າງເທິງນັ້ນ. ທຸກການຍົກຍ້າຍຊົນເຜົ່າພື້ນເມືອງດັ້ງເດີມຈະຕ້ອງສອດຄ່ອງກັບບັນດາເງື່ອນໄຂຕ່າງໆໃນມາດຕະຖານການດຳເນີນງານທີ 5. ເທົ່າທີ່ສາມາດເຮັດໄດ້, ຊົນເຜົ່າພື້ນເມືອງທີ່ຖືກຍົກຍ້າຍຈັດສັນອອກຈາກບ່ອນທີ່ຢູ່ອາໄສເດີມຄວນສາມາດກັບຄືນໄປຫາທີ່ດິນທີ່ເຂົາເຈົ້າມີສິດຕາມປະເພນີ ຫຼື ຕາມຮີດຄອງຖ້າສາຍເຫດທີ່ເຮັດມີການຍົກຍ້າຍຈັດສັນຂອງເຂົາເຈົ້າຫາກສິ້ນສຸດລົງ.

***ມໍລະດົກທາງວັດທະນະທຳທີ່ສຳຄັນເປັນພິເສດ***

16. ຖ້າໂຄງການອາດຈະສົ່ງຜົນກະທົບໃນລະດັບສູງຕໍ່ມໍລະດົກ[13] ທາງວັດທະນະທຳທີ່ສຳຄັນພິເສດ ເຊິ່ງມີຄວາມຈຳເປັນຕໍ່ການຍືນຍົງຄົງຕົວຂອງເອກະລັກ ແລະ /ຫຼື ວັດທະນະທຳ, ພິທີກຳ ຫຼື ຈິດວິນຍານຂອງຊົນເຜົ່າພື້ນເມືອງທີ່ດຳລົງຊີວິດຢູ່ໃນເຂດນັ້ນ, ແມ່ນຈະຕ້ອງໃຫ້ບູລິມະສິດໃນການຫຼີກເວັ້ນບໍ່ໃຫ້ເກີດມີຜົນກະທົບໃນລັກສະນະດັ່ງກ່າວ. ຖ້າຜົນກະທົບໃນລະດັບສູງຂອງໂຄງການທີ່ມີຕໍ່ມໍລະດົກທາງວັດທະທຳທີ່ສຳຄັນພິເສດຫາກບໍ່ສາມາດຫຼີກເວັ້ນໄດ້, ລູກຄ້າຈະຕ້ອງໃຫ້ໄດ້ຮັບການເຫັນດີເຫັນພ້ອມຈາກຊຸມຊົນຂອງຊົນເຜົ່າພື້ນເມືອງທີ່ໄດ້ຮັບຜົນກະທົບເສຍກ່ອນ.

17. ໃນກໍລະນີໂຄງການຫາກສະເໜີນຳໃຊ້ມໍລະດົກທາງວັດທະນະທຳດັ່ງກ່າວເຊິ່ງລວມເອົາທັງຄວາມຮູ້, ຫົວຄິດປະດິດສ້າງ ຫຼື ແບບວິທີປະຕິບັດຂອງຊົນເຜົ່າພື້ນເມືອງ ເພື່ອຮັບໃຊ້ຈຸດປະສົງທາງທຸລະກິດຂອງລູກຄ້າ, ລູກຄ້າຈະຕ້ອງແຈ້ງໃຫ້ຊຸມຊົນຂອງຊົນເຜົ່າພື້ນເມືອງທີ່ໄດ້ຮັບຜົນກະທົບນັ້ນຮັບຮູ້ກ່ຽວກັບ (i) ສິດທິຕ່າງໆຂອງເຂົາເຈົ້າພາຍໃຕ້ກົດໝາຍຂອງປະເທດ; (ii) ຂອບເຂດ ແລະ ລັກສະນະ ທາດແທ້ຂອງບົດສະເໜີການພັດທະນາທາງທຸລະກິດດັ່ງກ່າວ; (iii) ຜົນກະທົບທີ່ອາດຈະເກີດຂຶ້ນຈາກການພັດທະນາດັ່ງກ່າວ; (iv) ໄດ້ຮັບເຫັນດີເຫັນພ້ອມຢ່າງສະໝັກໃຈໂດຍໄດ້ຮັບຂໍ້ມູນລ່ວງໜ້າ ແລະ ພຽງພໍ (FPIC)ຈາກເຂົາເຈົ້າ. ລູກຄ້າຈະຕ້ອງຮັບປະກັນໃຫ້ມີການແບ່ງປັນຜົນປະໂຫຍດຈາກການນຳໃຊ້ຄວາມຮູ້, ຫົວຄິດປະດິດສ້າງ ຫຼື ແບບວິທີປະຕິບັດຂອງຊົນເຜົ່າພື້ນເມືອງເພື່ອປະໂຫຍດທາງທຸລະກິດຂອງຕົນໃນລັກສະນະທີ່ເປັນທຳ ແລະ ສະເໝີພາບໂດຍສອດຄ່ອງກັບຮີດຄອງປະເພນີ ຂອງຊົນເຜົ່າພື້ນເມືອງ.

[12] ຕາມປົກກະຕິແລ້ວ, ຊົນເຜົ່າພື້ນເມືອງແມ່ນ ມີສິດເຂົ້າເຖິງ ແລະ ນຳໃຊ້ທີ່ດິນ ແລະ ຊັບພະຍາກອນຜ່ານລະບົບຮັບຮູ້ສິດເປັນເຈົ້າຂອງຕາມປະເພນີ ຫຼື ຮີດຄອງເຊິ່ງໃນຫຼາຍກໍລະນີແມ່ນໃນຮູບກຳມະສິດລວມໝູ່. ການທວງສິດເປັນເຈົ້າຂອງຕາມປະເພນີຕໍ່ທີ່ດິນ ແລະ ຊັບພະຍາກອນອາດຈະບໍ່ຖືກຮັບຮູ້ໂດຍກົດໝາຍພາຍໃນປະເທດໃດໜຶ່ງ. ໃນກໍລະນີທີ່ຄົນໃນຊຸມຊົນຂອງຊົນເຜົ່າພື້ນເມືອງທີ່ໄດ້ຮັບຜົນກະທົບຫາກມີໃບຕາດິນຖືກຕ້ອງຕາມກົດໝາຍໃນລະດັບສ່ວນບຸກຄົນ ຫຼື ໃນກໍລະນີກົດໝາຍກ່ຽວຂ້ອງພາຍໃນຫາກຮັບຮູ້ສິດຕາມປະເພນີຂອງສ່ວນບຸກຄົນເຫຼົ່ານັ້ນ, ບັນດາເງື່ອນໄຂຕ່າງໆຂອງມາດຕະຖານການດຳເນີນງານທີ 5 ຕ້ອງນຳໃຊ້ແທນເງື່ອນໄຂພາຍໃຕ້ວັກທີ 17 ຂອງມາດຕະຖານການດຳເນີນງານນີ້.

[13] ລວມເອົາບັນດາເຂດທຳມະຊາດທີ່ມີຄຸນຄ່າທາງວັດທະນະທຳ ແລະ/ຫຼື ທາງຈິດວິນຍານເຊັ່ນ: ເຂດປ່າສັກສິດ, ນ້ຳ ແລະ ສາຍນ້ຳສັກສິດ, ຕົ້ນໄມ້ສັກສິດ, ແລະ ຫີນສັກສິດ. ເຂດທາງທຳມະຊາດທີ່ມີຄຸນຄ່າທາງວັດທະນະທຳແມ່ນທຽບເທົ່າກັບບໍລິການທາງວັດທະນະທຳຈາກລະບົບນິເວດທີ່ເປັນບູລິມະສິດດັ່ງທີ່ກຳນົດໄວ້ໃນມາດຕະຖານການດຳເນີນງານທີ 6.

## ການຫຼຸດຜ່ອນຜົນກະທົບ ແລະ ຜົນປະໂຫຍດຈາກການພັດທະນາ

18. ລູກຄ້າ ແລະ ຊຸມຊົນຂອງຊົນເຜົ່າພື້ນເມືອງທີ່ໄດ້ຮັບຜົນກະທົບຈະກຳນົດມາດຕະການຫຼຸດຜ່ອນຜົນກະທົບໂດຍໃຫ້ສອດຄ່ອງກັບລະດັບຂັ້ນຂອງການຫຼຸດຜ່ອນຜົນກະທົບຕາມທີ່ໄດ້ອະທິບາຍໄວ້ໃນມາດຕະຖານການດຳເນີນງານທີ 1 ກໍ່ຄືໂອກາດສຳລັບການໄດ້ຮັບຜົນປະໂຫຍດຈາກການພັດທະນາຢ່າງຍືນຍົງ ແລະ ມີຄວາມເໝາະສົມທາງວັດທະນະທຳ. ລູກຄ້າຈະຮັບປະກັນໃຫ້ມີການຈັດຕັ້ງປະຕິບັດມາດຕະການທີ່ໄດ້ຕົກລົງກັນໃນລັກສະນະທີ່ທັນຕາມກຳນົດເວລາ ແລະ ສະເໜີພາບຕໍ່ຊຸມຊົນຂອງຊົນເຜົ່າພື້ນເມືອງທີ່ໄດ້ຮັບຜົນກະທົບ.

19. ການກຳນົດ, ນຳສົ່ງ ແລະ ມອບຄ່າຊົດເຊີຍ ແລະ ຜົນປະໂຫຍດອື່ນໆຈາກວິທີການແບ່ງປັນຜົນປະໂຫຍດໃຫ້ຊຸມຊົນຂອງຊົນເຜົ່າພື້ນເມືອງທີ່ໄດ້ຮັບຜົນກະທົບຈະຕ້ອງໄດ້ມີການພິຈາລະນາເອົາກົດໝາຍ, ສະຖາບັນ ແລະ ປະເພນີຂອງຊຸມຊົນເຫຼົ່ານັ້ນ ກໍ່ຄືລະດັບປະຕິສຳພັນ ຫຼື ການຕິດຕໍ່ພົວພັນລະຫວ່າງຊຸມຊົນຂອງເຂົາເຈົ້າກັບສັງຄົມຫຼັກ. ຄວາມຄົບຖ້ວນຕາມເງື່ອນໄຂການຊົດເຊີຍແມ່ນອາດຈະຢູ່ໃນຮູບແບບສ່ວນບຸກຄົນ ຫຼື ລວມໝູ່ ຫຼື ທັງສອງແບບປະສົມປະສານກັນ.[14]ໃນກໍລະນີການຊົດເຊີຍຫາກເກີດຂຶ້ນບົນພື້ນຖານລວມໝູ່, ຈະຕ້ອງໄດ້ມີການສ້າງ ແລະ ຈັດຕັ້ງປະຕິບັດບັນດາກົນໄກທີ່ສົ່ງເສີມການນຳສົ່ງ ແລະ ມອບຄ່າຊົດເຊີຍຢ່າງມີປະສິດທິຜົນໃຫ້ແກ່ທຸກຄົນທີ່ຄົບຕາມເງື່ອນໄຂທີ່ໄດ້ຮັບ.

20. ບັນດາປັດໄຈຕ່າງໆ ເຊິ່ງລວມທັງ (ແຕ່ບໍ່ໄດ້ຈຳກັດສະເພາະແຕ່ໃນຂອບເຂດທີ່ເວົ້າເຖິງນີ້) ລັກສະນະທາດແທ້ຂອງໂຄງການ, ສະພາບເງື່ອນໄຂຂອງໂຄງການ ແລະ ຄວາມບອບບາງຂອງຊຸມຊົນຂອງຊົນເຜົ່າພື້ນເມືອງທີ່ໄດ້ຮັບຜົນກະທົບຈະເປັນຕົວກຳນົດວິທີການທີ່ຊຸມຊົນຈະໄດ້ຮັບຜົນປະໂຫຍດຈາກໂຄງການ. ໂອກາດທີ່ຖືກກຳນົດຂຶ້ນມານັ້ນຄວນມີເປົ້າໝາຍແນໃສ່ແກ້ໄຂບັນດາເປົ້າໝາຍ ແລະ ທາງເລືອກຂອງຊົນເຜົ່າພື້ນເມືອງ ເຊິ່ງລວມທັງການປັບປຸງມາດຕະຖານການດຳລົງຊີວິດ ແລະ ການຫາລ້ຽງຊີບຂອງເຂົາເຈົ້າໃນລັກສະນະທີ່ແທດເໝາະທາງວັດທະນະທຳ ແລະ ເພື່ອສ້າງຄວາມຍືນຍົງໃນໄລຍະຍາວໃຫ້ຊັບພະຍາກອນທຳມະຊາດທີ່ເຂົາເຈົ້າເພິ່ງພາອາ ໄສຢູ່ນຳ.

[14] ໃນກໍລະນີການຄວບຄຸມຊັບພະຍາກອນ, ຊັບສິນແລະການຕັດສິນບັນຫາແມ່ນສ່ວນໃຫຍ່ດຳເນີນໄປແບບລວມໝູ່, ຈະຕ້ອງດຳເນີນຄວາມພະຍາຍາມຕ່າງໆເພື່ອຮັບປະກັນວ່າ: ຜົນປະໂຫຍດແລະການຊົດເຊີຍ ແມ່ນມີລັກສະນະລວມໝູ່ ແລະ ໃຫ້ພິຈາລະນາເບິ່ງຄວາມແຕກຕ່າງແລະຄວາມຕ້ອງການຂອງຄົນລະຫວ່າງຮຸ້ນຕາມທີ່ເຫັນວ່າເໝາະສົມ.

## ໜ້າທີ່ຮັບຜິດຊອບຂອງພາກເອກະຊົນໃນກໍລະນີທີ່ລັດຖະບານຮັບຜິດຊອບການຄຸ້ມຄອງບັນຫາຕ່າງໆຂອງຊົນເຜົ່າພື້ນເມືອງ

21. ກໍລະນີທີ່ລັດຖະບານ ຫາກກຳນົດບົດບາດໃນການຄຸ້ມຄອງບັນຫາຕ່າງໆຂອງຊົນເຜົ່າພື້ນເມືອງທີ່ກ່ຽວຂ້ອງກັບໂຄງການ, ລູກຄ້າຈະຕ້ອງປະສານສົມທົບກັບອົງກອນທີ່ຮັບຜິດຊອບຂອງລັດ (ໃນຂອບເຂດທີ່ສາມາດເຮັດໄດ້ ແລະ ໄດ້ຮັບອະນຸຍາດຈາກອົງກອນກ່ຽວຂ້ອງ) ເພື່ອບັນລຸຜົນໄດ້ຜົນທີ່ສອດຄ່ອງກັບຈຸດປະສົງຂອງມາດຕະຖານການດຳເນີນງານນີ້. ນອກຈາກນັ້ນ, ໃນກໍລະນີທີ່ຄວາມສາມາດຂອງລັດຫາກມີຈຳກັດ, ລູກຄ້າຈະຕ້ອງດຳເນີນບົດບາດທີ່ຫ້າວຫັນໃນໄລຍະການວາງແຜນ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາກິດຈະກຳຕ່າງໆພາຍໃນຂອບເຂດທີ່ໄດ້ຮັບອະນຸຍາດຈາກອົງກອນກ່ຽວຂ້ອງ.

22. ລູກຄ້າຈະຕ້ອງໄດ້ສ້າງແຜນ (ຄຽງຄູ່ກັບເອກະສານຕ່າງໆທີ່ຖືກສ້າງຂຶ້ນໂດຍອົງກອນທີ່ຮັບຜິດຊອບຂອງລັດ) ເພື່ອແກ້ໄຂເງື່ອນໄຂຕ່າງໆຂອງມາດຕະຖານການດຳເນີນງານນີ້. ລູກຄ້າອາດຈະຕ້ອງລວມເອົາ: (i) ແຜນ, ການຈັດຕັ້ງປະຕິບັດ, ແລະ ການບັນທຶກເປັນລາຍລັກອັກສອນໃຫ້ຄັກແນ່ກ່ຽວກັບຂະບວນການການປຶກສາຫາລື ແລະ ການມີສ່ວນຮ່ວມຢ່າງຄົບຖ້ວນ ແລະ ການເຫັນດີເຫັນພ້ອມຢ່າງສະໝັກໃຈໂດຍໄດ້ຮັບຂໍ້ມູນລ່ວງໜ້າ ແລະ ພຽງພໍ (FPIC)ຕາມທີ່ເຫັນວ່າເໝາະສົມ; (ii) ຄຳອະທິບາຍທີ່ທາງພາກລັດໄດ້ກຳນົດກ່ຽວກັບສິດທີ່ຄວນໄດ້ຮັບໂດຍຊົນເຜົ່າພື້ນເມືອງທີ່ຖືກກະທົບ (iii) ມາດຕະການທີ່ຈະອັດຊ່ອງຫວ່າງລະຫວ່າງສິດທີ່ຄວນໄດ້ຮັບເຫຼົ່ານັ້ນ; ແລະ ເງື່ອນໄຂຕ່າງໆຂອງມາດຕະຖານການດຳເນີນງານນີ້ ແລະ (iv) ໜ້າທີ່ຮັບຜິດຊອບທາງດ້ານການເງິນ ແລະ ການຈັດຕັ້ງປະຕິບັດຂອງອົງກອນໃດໜຶ່ງຂອງລັດ ແລະ/ຫຼື ຂອງ ລູກຄ້າ.



ມາດຕະຖານການດຳເນີນງານທີ 8

# ມໍລະດົກທາງວັດທະນະທຳ

### ພາກສະເໜີ

1. ມາດຕະຖານການດຳເນີນງານທີ 8 ໃຫ້ຄວາມສຳຄັນຕໍ່ມໍລະດົກທາງວັດທະນະທຳສຳລັບຄົນຍຸກປະຈຸບັນ ແລະ ໃນອະນາຄົດ. ໂດຍສອດຄ່ອງກັບສົນທິສັນຍາວ່າດ້ວຍການປົກປ້ອງມໍລະດົກທາງວັດທະນະທຳ ແລະ ທຳມະຊາດຂອງໂລກ, ມາດຕະຖານການດຳເນີນງານດັ່ງກ່າວນີ້ ມີເປົ້າໝາຍເພື່ອຮັບປະກັນວ່າລູກຄ້າປົກປ້ອງມໍລະດົກທາງວັດທະນະທຳໃນໄລຍະຂອງກິດຈະກຳໂຄງການຂອງເຂົາເຈົ້າ. ນອກຈາກນີ້, ເງື່ອນໄຂຂອງມາດຕະຖານການດຳເນີນງານຕໍ່ກັບການນຳໃຊ້ມໍລະດົກທາງວັດທະນະທຳຂອງໂຄງການ ສ່ວນໜຶ່ງແມ່ນຢູ່ບົນພື້ນຖານຂອງຊຸດມາດຕະຖານທີ່ໄດ້ກຳນົດໄວ້ໃນສົນທິສັນຍາວ່າດ້ວຍຊີວະນາໆພັນ.

### ວັດຖຸປະສົງ

- ເພື່ອປົກປ້ອງມໍລະດົກທາງວັດທະນະທຳຈາກຜົນກະທົບທາງລົບຂອງກິດຈະກຳຂອງໂຄງການ ແລະ ສະໜັບສະໜູນການອະນຸລັກມໍລະດົກທາງວັດທະນະທຳດັ່ງກ່າວ.
- ເພື່ອສົ່ງເສີມການແບ່ງປັນຜົນປະໂຫຍດທີ່ສະເໜີພາບກັນຈາກການນຳໃຊ້ມໍລະດົກທາງວັດທະນະທຳ.

### ຂອບເຂດການນຳໃຊ້

2. ຄວາມສາມາດໃນການນຳໃຊ້ມາດຕະຖານການດຳເນີນງານດັ່ງກ່າວນີ້ແມ່ນກຳນົດໃນລະຫວ່າງຂະບວນການກຳນົດຄວາມສ່ຽງ ແລະ ຜົນກະທົບທາງດ້ານສິ່ງແວດລ້ອມ ແລະສັງຄົມ. ການຈັດຕັ້ງປະຕິບັດກິດຈະກຳອັນຈຳເປັນເພື່ອປະຕິບັດຕາມເງື່ອນໄຂໃນມາດຕະຖານການດຳເນີນດັ່ງກ່າວນີ້ ແມ່ນຖືກຄຸ້ມຄອງຜ່ານລະບົບຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ເຊິ່ງອົງປະກອບຂອງລະບົບດັ່ງກ່າວໄດ້ມີການກຳນົດໄວ້ໃນມາດຕະຖານການດຳເນີນງານທີ 1. ໃນຕະຫຼອດໄລຍະຮອບວຽນອາຍຸຂອງໂຄງການ ລູກຄ້າຈະພິຈາລະນາທ່າແຮງຜົນກະທົບຂອງໂຄງການຕໍ່ກັບມໍລະດົກທາງວັດທະນະທຳ ແລະ ຈະນຳໃຊ້ຂໍ້ກຳນົດໃນມາດຕະຖານການດຳເນີນງານດັ່ງກ່າວນີ້.

3. ໃນຈຸດປະສົງຂອງມາດຕະຖານການດຳເນີນງານດັ່ງກ່າວນີ້, ມໍລະດົກທາງວັດທະນະທຳໝາຍເຖິງ (i) ມໍລະດົກທາງວັດທະນະທຳທີ່ສາມາດຈັບບາຍໄດ້ເຊັ່ນວັດຖຸສິ່ງຂອງທີ່ສາມາດເຄື່ອນຍ້າຍໄດ້ ແລະ ບໍ່ສາມາດເຄື່ອນຍ້າຍໄດ້, ຊັບສິນ, ສະຖານທີ່, ໂຄງສ້າງ, ຫຼື ກຸ່ມໂຄງສ້າງ, ມີຄຸນຄ່າທາງບູຮານນະຄະດີ (ຍຸກກ່ອນປະຫວັດສາດ), ທາງພືດ ແລະ ສັດຄົ້ນດຳບັນວິທະຍາ, ທາງປະຫວັດສາດ, ທາງວັດທະນະທຳ, ທາງສິນລະປະ ແລະ ທາງສາສະໜາ; (ii) ຄຸນລັກສະນະທຳມະຊາດ ແລະ ວັດຖຸສິ່ງຂອງທີ່ເປັນເອກະລັກເຊິ່ງມີຄຸນຄ່າທາງດ້ານວັດທະນະທຳ ເຊັ່ນ: ປ່າສັກສິດ, ຫີນສັກສິດ, ທະເລສາບສັກສິດ ແລະ ນ້ຳຕົກຕາດສັກສິດ; ແລະ (iii) ບາງລັກສະນະສະເພາະຂອງວັດທະນະທຳທີ່ບໍ່ສາມາດຈັບບາຍໄດ້ທີ່ຖືກສະເໜີໃຫ້ນຳໃຊ້ເພື່ອຈຸດປະສົງຂອງການຄ້າເຊັ່ນ ຄວາມຮູ້ທາງວັດທະນະທຳ, ນະວັດຕະກຳ ແລະ ກິດຈະກຳຂອງຊຸມຊົນທີ່ກ່ຽວຂ້ອງກັບປະເພນີວິຖີຊີວິດພື້ນບ້ານ.

4. ເງື່ອນໄຂຕໍ່ກັບມໍລະດົກທາງວັດທະນະທຳທີ່ເປັນສິ່ງທີ່ສາມາດຈັບບາຍໄດ້ແມ່ນຂຽນຢູ່ໃນວັດທີ 6 – 16. ສຳລັບຂໍ້ກຳນົດເງື່ອນໄຂກ່ຽວກັບລັກສະນະສະເພາະຂອງມໍລະດົກທາງວັດທະນະທຳທີ່ບໍ່ສາມາດຈັບບາຍໄດ້ທີ່ແມ່ນໄດ້ອະທິບາຍໄວ້ໃນວັກທີ 3 (iii) ໃຫ້ເບິ່ງວັກທີ 16.

5. ເງື່ອນໄຂຂອງມາດຕະຖານການດຳເນີນງານນີ້ນຳໃຊ້ກັບມໍລະດົກທາງວັດທະນະທຳທຸກຢ່າງໂດຍບໍ່ຄຳນຶງ

ວ່າມັນໄດ້ຮັບການປົກປ້ອງທາງກົດໝາຍຫຼືບໍ່ກໍ່ຕາມ ຫຼືຖືກຖຸກຄາມມາກ່ອນກໍ່ຕາມ. ເງື່ອນໄຂສໍາລັບມາດຕະຖານການດໍາເນີນງານດັ່ງກ່າວນີ້ບໍ່ນໍາ ໃຊ້ກັບມໍລະດົກທາງວັດທະນະທໍາຂອງບັນດາຊົນເຜົ່າພື້ນເມືອງຕ່າງໆ; ມາດຕະຖານການດໍາເນີນງານທີ 7 ໄດ້ອະທິບາຍຂໍ້ກໍານົດເງື່ອນໄຂເຫຼົ່ານັ້ນແລ້ວ.

## ເງື່ອນໄຂ

### ການປົກປ້ອງມໍລະດົກທາງວັດທະນະທໍາໃນການອອກແບບ ແລະ ດໍາເນີນໂຄງການ

6. ນອກຈາກການປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງໃນການປົກປ້ອງມໍລະດົກທາງວັດທະນະທໍາລວມທັງກົດໝາຍຂອງປະເທດໃນການຈັດຕັ້ງປະຕິບັດພັນທະຂອງປະເທດເຈົ້າພາບພາຍໃຕ້ສົນທະສັນຍາວ່າດ້ວຍການປົກປ້ອງມໍລະດົກທາງວັດທະນະທໍາແລະທໍາມະຊາດແລ້ວ, ລູກຄ້າຈະກໍານົດແລະປົກປ້ອງມໍລະດົກທາງວັດທະນະທໍາໂດຍການຮັບປະກັນວ່າຈະມີການຈັດຕັ້ງປະຕິບັດວິທີການປົກປ້ອງທີ່ເປັນມາດຕະຖານສາກົນ, ມີການສຶກສາຢູ່ພາກສະໜາມ, ແລະ ມີການບັນທຶກເອກະສານດ້ານມໍລະດົກທາງວັດທະນະທໍາ.

7. ໃນກໍລະນີທີ່ຂະບວນການກໍານົດຄວາມສ່ຽງໄດ້ກໍານົດວ່າມີໂອກາດທີ່ຈະສົ່ງຜົນກະທົບຕໍ່ມໍລະດົກທາງວັດທະນະທໍາລູກຄ້າຈະຈ້າງນັກວິຊາການທີ່ມີຄວາມສາມາດເພື່ອຊ່ວຍໃນການກໍານົດ ແລະ ປົກປ້ອງມໍລະດົກທາງວັດທະນະທໍາ. ການຮື້ຖອນມໍລະດົກທາງວັດທະນະທໍາທີ່ບໍ່ສາມາດສ້າງຄືນໃໝ່ໄດ້ແມ່ນຕ້ອງປະຕິບັດຕາມເງື່ອນໄຂເພີ່ມເຕີມໃນວັກທີ 10 ຂ້າງລຸ່ມນີ້. ໃນກໍລະນີຂອງມໍລະດົກທາງວັດທະນະທໍາ ທີ່ມີຄວາມສໍາຄັນພິເສດໃຫ້ນໍາໃຊ້ເງື່ອນໄຂໃນວັກທີ 13 – 15.

***ຂັ້ນຕອນກໍລະນີທີ່ຄົ້ນພົບມໍລະດົກທີ່ເປັນວັດຖຸໂດຍບັງເອີນ***

8. ລູກຄ້າມີໜ້າທີ່ຮັບຜິດຊອບໃນການກໍານົດເຂດໂຄງການ ແລະ ອອກແບບໂຄງການເພື່ອຫຼີກເວັ້ນຜົນກະທົບທາງລົບຕໍ່ກັບມໍລະດົກທາງວັດທະນະທໍາ. ຂະບວນການກໍານົດຄວາມສ່ຽງ ແລະ ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ຄວນກໍານົດວ່າທີ່ຕັ້ງຂອງໂຄງການທີ່ໄດ້ສະເໜີໄປນັ້ນແມ່ນນອນໃນເຂດທີ່ຄາດການວ່າຈະຄົ້ນພົບມໍລະດົກທາງວັດທະນະທໍາ ຫຼື ບໍ່, ອາດຈະໃນລະຫວ່າງທີ່ກໍ່ສ້າງໂຄງການ ຫຼື ດໍາເນີນໂຄງການ. ໃນກໍລະນີດັ່ງກ່າວ ໂດຍເປັນພາກສ່ວນໜຶ່ງຂອງລະບົບຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມຂອງລູກຄ້າ ລູກຄ້າຈະສ້າງຂໍ້ກໍານົດຕ່າງໆໃນການຄຸ້ມຄອງການຄົ້ນພົບມໍລະດົກວັດຖຸໂດຍບັງເອີນ[1] ໂດຍຜ່ານຂັ້ນຕອນກໍລະນີຄົ້ນພົບມໍລະດົກວັດຖຸໂດຍບັງເອີນ[2] ເຊິ່ງຈະນໍາໃຊ້ກັບກໍລະນີທີ່ໄດ້ຄົ້ນພົບມໍລະດົກທາງວັດທະນະທໍາໃນພາຍຫຼັງ. ລູກຄ້າຈະບໍ່ເຄື່ອນໄຫວລົບກວນການຄົ້ນພົບມໍລະດົກວັດຖຸ ໂດຍບັງເອີນຈົນກ່ວາຈະໄດ້ມີການປະເມີນຜົນໂດຍນັກວິຊາການທີ່ມີຄວາມສາມາດ ແລະ ໄດ້ກໍານົດກິດຈະກໍາຕ່າງໆທີ່ສອດຄ່ອງກັບຂໍ້ກໍານົດເງື່ອນໄຂໃນມາດຕະຖານການດໍາເນີນງານດັ່ງກ່າວນີ້.

***ການປຶກສາຫາລື***

9. ໃນກໍລະນີທີ່ໂຄງການອາດຈະມີຜົນກະທົບຕໍ່ມໍລະດົກທາງວັດທະນະທໍາ ລູກຄ້າຈະປຶກສາຫາລືກັບຊຸມຊົນທີ່ໄດ້ຮັບຜົນກະທົບທີ່ໃຊ້ ຫຼື ເຄີຍໃຊ້ມໍລະດົກທາງວັດທະນະທໍາດັ່ງກ່າວເພື່ອຈຸດປະສົງທາງດ້ານວັດທະນະທໍາທີ່ມີມາດົນນານຕາມເທົ່າທີ່ຍັງມີຄົນຈື່ໄດ້. ລູກຄ້າຈະປຶກສາຫາລືກັບຊຸມຊົນທີ່ໄດ້ຮັບຜົນກະທົບເພື່ອກໍານົດມໍລະດົກທາງວັດທະນະທໍາທີ່ມີຄວາມສໍາຄັນ ແລະ ພິຈາລະນາເອົາທັດສະນະຄວາມຄິດຂອງຊຸມຊົນທີ່ໄດ້ຮັບຜົນກະທົບຕໍ່ກັບມໍລະດົກທາງວັດທະນະທໍາດັ່ງກ່າວເຂົ້າໃນຂະບວນການຕັດສິນໃຈຂອງລູກຄ້າ. ການປຶກສາຫາລື ດັ່ງກ່າວຈະມີສ່ວນຮ່ວມຂອງຜູ້ອອກລະບຽບຄຸ້ມຄອງຂັ້ນສູນກາງ ຫຼື ທ້ອງຖິ່ນທີ່ກ່ຽວຂ້ອງທີ່ມີໜ້າທີ່ຮັບຜິດຊອບໃນການປົກປ້ອງມໍລະດົກທາງວັດທະນະທໍາ.

***ການເຂົ້າເຖິງຂອງຊຸມຊົນ***

10. ໃນກໍລະນີທີ່ສະໜາມໂຄງການກວມເອົາມໍລະດົກທາງວັດທະນະທໍາ ແລະ ສະກັດກັ້ນການເຂົ້າເຖິງເຂດມໍລະດົກທາງວັດທະນະທໍາດັ່ງກ່າວທີ່ເຄີຍເຂົ້າເຖິງໄດ້ໃນອະດີດ ແລະ ທີ່ກໍາລັງມີການນໍາໃຊ້ ຫຼື ໄດ້ນໍາໃຊ້ໂດຍຊຸມຊົນທີ່ໄດ້ຮັບຜົນກະທົບເພື່ອຈຸດປະສົງທາງດ້ານວັດທະນະທໍາທີ່ມີມາດົນນານຕາມເທົ່າທີ່ຍັງມີຄົນຈື່ໄດ້, ລູກຄ້າ ຈະຕ້ອງອະນຸຍາດໃຫ້ສືບຕໍ່ເຂົ້າເຖິງສະຖານທີ່ທາງວັດທະນະທໍາດັ່ງກ່າວໂດຍອີງຕາມການປຶກສາຫາລືທີ່ໄດ້ກໍານົດໄວ້ໃນວັກທີ 9 ແລະ ຈະສ້າງທາງເຂົ້າໃໝ່ໃຫ້ໂດຍຄໍານຶງປະເດັນທາງດ້ານສຸຂະພາບ, ຄວາມປອດໄພແລະການຮັກສາຄວາມປອດໄພເປັນຫຼັກ.

***ການຮື້ຖອນມໍລະດົກທາງວັດທະນະທໍາທີ່ສາມາດສ້າງຄືນໃໝ່ໄດ້***

11. ໃນກໍລະນີທີ່ລູກຄ້າໄດ້ພົບເຫັນມໍລະດົກທາງວັດທະນະທໍາທີ່ສາມາຈັບບາຍໄດ້ ແລະ ສ້າງຄືນໃໝ່ໄດ້ [3] ແລະ ບໍ່ສໍາຄັນພິເສດ ລູກຄ້າຈະນໍາໃຊ້ມາດຕະການຫຼຸດຜ່ອນຜົນກະທົບໂດຍເອົາໃຈໃສ່ການຫຼີກເວັ້ນຜົນກະທົບ. ໃນກໍລະນີທີ່ບໍ່ສາມາດຫຼີກເວັ້ນໄດ້ລູກຄ້າຈະນໍາໃຊ້ລໍາດັບຂັ້ນການຫຼຸດຜ່ອນຜົນກະທົບດັ່ງລຸ່ມນີ້:

- ຫຼຸດຜ່ອນຜົນກະທົບທາງລົບໃຫ້ໜ້ອຍສຸດ ແລະ ຈັດຕັ້ງປະຕິບັດມາດຕະການໃນການຟື້ນຟູໃນສະຖານທີ່ດັ້ງເດີມຂອງມໍລະດົກທາງວັດທະນະທໍາດັ່ງກ່າວເຊິ່ງຮັບປະກັນການຮັກສາຄຸນຄ່າ ແລະ ໜ້າທີ່ທາງວັດທະນະທໍາຂອງມໍລະດົກທາງວັດທະນະ ທໍາດັ່ງກ່າວ ລວມທັງການຟື້ນຟູຂະບວນການລະບົບນິເວດຕ່າງໆ[4] ທີ່ຈໍາເປັນໃນການສະໜັບສະໜູນມໍລະດົກດັ່ງກ່າວ;
- ໃນກໍລະນີທີ່ບໍ່ສາມາດດໍາເນີນການຟື້ນຟູໃນສະຖານທີ່ດັ້ງເດີມໄດ້ ໃຫ້ຟື້ນຟູໜ້າທີ່ຂອງມໍລະດົກທາງວັດທະນະທໍາດັ່ງກ່າວໃນສະຖານທີ່ອື່ນ ລວມທັງຂະບວນການລະບົບນິເວດທີ່ຈໍາເປັນເພື່ອສະໜັບສະໜູນມໍລະດົກທາງວັດທະນະທໍາດັ່ງກ່າວ;
- ການຮື້ຖອນວັດຖຸບູຮານ ແລະ ໂຄງສ້າງທາງປະຫວັດສາດ ແລະ ບູຮານນະຄະດີແມ່ນໃຫ້ດໍາເນີນຕາມຫຼັກການໃນວັກທີ 6 ແລະ 7 ຂ້າງເທິງນີ້; ແລະ
- ໃຫ້ຊົດເຊີຍຕໍ່ການສູນເສຍມໍລະດົກທາງວັດທະນະທໍາດັ່ງກ່າວພຽງແຕ່ໃນກໍລະນີທີ່ພິສູດວ່າບໍ່ສາມາດຫຼຸດຜ່ອນຜົນກະທົບທາງ ລົບ ແລະ ບໍ່ສາມາດຟື້ນຟູເພື່ອຮັບປະກັນການຮັກສາຄຸນຄ່າ ແລະ ໜ້າທີ່ຂອງມໍລະດົກທາງວັດທະນະທໍາດັ່ງກ່າວໄດ້ເທົ່ານັ້ນ.

***ການຮື້ຖອນມໍລະດົກທາງວັດທະນະທໍາທີ່ບໍ່ສາມາດສ້າງຄືນໃໝ່ໄດ້***

12. ການປົກປ້ອງມໍລະດົກທາງວັດທະນະທໍາທີ່ດີທີ່ສຸດແມ່ນການອະນຸລັກຮັກສາທີ່ຕັ້ງຂອງມັນໄວ້ຍ້ອນວ່າການຮື້ຖອນມີທ່າອ່ຽງທີ່ຈະສົ່ງຜົນເສຍຫາຍທີ່ບໍ່ສາມາດປີ້ວແປງຄືນໄດ້ ຫຼື ເປັນການທໍາລາຍມໍລະດົກທາງວັດທະນະທໍາດັ່ງກ່າວໄປເລີຍ. ລູກຄ້າຈະບໍ່ຮື້ຖອນມໍລະດົກທາງວັດທະນະທໍາທີ່ບໍ່ສາມາດສ້າງຄືນໃໝ່ໄດ້ໃດໆ[5] ເວັ້ນເສຍແຕ່ວ່າຈະໄດ້ສອດຄ່ອງຕາມເງື່ອນໄຂທັງໝົດດັ່ງລຸ່ມນີ້:

- ບໍ່ມີວິທີຮື້ຖອນທາງເລືອກທີ່ເປັນໄປໄດ້ທາງເຕັກນິກ ແລະ ການເງິນອື່ນໆ;
- ຜົນປະໂຫຍດໂດຍລວມຂອງໂຄງການມີເໜືອການສູນເສຍຂອງມໍລະດົກທາງວັດທະນະທໍາດັ່ງກ່າວຈາກການຮື້ຖອນ; ແລະ
- ນໍາໃຊ້ເຕັກນິກໃນການຮື້ຖອນທີ່ດີທີ່ສຸດໃນທຸກໆການຮື້ຖອນມໍລະດົກທາງວັດທະນະທໍາ.

***ມໍລະດົກທາງວັດທະນະທໍາທີ່ສໍາຄັນພິເສດ***

13. ມໍລະດົກທາງວັດທະນະທໍາທີ່ສໍາຄັນພິເສດປະກອບມີໜຶ່ງໃນສອງປະເພດຂອງມໍລະດົກທາງວັດທະນະທໍາຕໍ່ໄປນີ້: (i) ມໍລະດົກທີ່ຮັບຮູ້ ໃນລະດັບສາກົນຂອງຊຸມຊົນທີ່ໃຊ້ ຫຼື ໄດ້ໃຊ້ມໍລະດົກທາງວັດທະນະທໍາດັ່ງກ່າວເພື່ອຈຸດປະສົງທາງດ້ານວັດທະນະທໍາທີ່ມີມາດົນນານຕາມເທົ່າທີ່ຍັງມີຄົນຈື່ໄດ້; ຫຼື (ii) ເຂດມໍລະດົກທາງວັດທະນະທໍາທີ່ມີການປົກປ້ອງທາງດ້ານກົດໝາຍ ລວມທັງເຂດທີ່ສະເໜີໂດຍລັດທະບານໃນປະເທດເຈົ້າພາບໃຫ້ເປັນມໍລະດົກທາງວັດທະນະທໍາທີ່ສໍາຄັນພິເສດ.

14. ລູກຄ້າບໍ່ຄວນຮື້ຖອນ, ດັດແກ້ເກີນຄວນ ຫຼື ສ້າງຄວາມເສຍຫາຍໃຫ້ມໍລະດົກທາງວັດທະນະທໍາທີ່ສໍາຄັນພິເສດ. ກໍລະນີຍົກເວັ້ນໃນເວລາ ທີ່ບໍ່ສາມາດຫຼີກເວັ້ນຜົນກະທົບຕໍ່ມໍລະດົກທາງວັດທະນະທໍາທີ່ສໍາຄັນພິເສດດັ່ງກ່າວນັ້ນໄດ້, ລູກຄ້າຈະນໍາໃຊ້ຂະບວນການປຶກສາຫາລືແລະ ການມີສ່ວນຮ່ວມທີ່ມີຂໍ້ມູນຄົບຖ້ວນ (ICP) ຮ່ວມກັບຊຸມຊົນທີ່ໄດ້ຮັບຜົນກະທົບດັ່ງທີ່ໄດ້ອະທິບາຍໄດ້ໃນມາດຕະຖານການດໍາເນີນງານທີ 1 ແລະ ເປັນການທີ່ນໍາໃຊ້ຂະບວນການເຈລະຈາທີ່ມີຄວາມບໍລິສຸດໃຈເຊິ່ງມີຜົນໄດ້ຮັບທີ່ໄດ້ຖືກບັນທຶກໄວ້. ລູກຄ້າຈະວ່າຈ້າງຊ່ຽວຊານພາຍນອກເພື່ອຊ່ວຍໃນການດໍາເນີນການປະເມີນຜົນ ແລະ ການປົກປັກຮັກສາມໍລະດົກທາງວັດທະນະທໍາທີ່ສໍາຄັນພິເສດໄວ້.

---

1 ມໍລະດົກທາງວັດທະນະທໍາທີ່ຈັບບາຍໄດ້ທີ່ໄດ້ຄົ້ນພົບໂດຍບັງເອີນໃນລະຫວ່າງການກໍ່ສ້າງ ແລະ ການດໍາເນີນໂຄງການ.

2 ຂັ້ນຕອນກໍລະນີຄົ້ນພົບມໍລະດົກວັດຖຸໂດຍບັງເອີນ ແມ່ນຂັ້ນຕອນສະເພາະໂຄງການທີ່ກໍານົດກິດຈະກໍາທີ່ຕ້ອງໄດ້ດໍາເນີນຖ້າຫາກຄົ້ນພົບມໍລະດົກທາງວັດທະນະທໍາທີ່ບໍ່ເຄີຍຮູ້ຈັກມາກ່ອນ.

3 ມໍລະດົກທາງວັດທະນະທໍາທີ່ສາມາດສ້າງຄືນໄດ້ມີນິຍາມວ່າ ແມ່ນວັດຖຸສິ່ງຂອງດ້ານມໍລະດົກທາງວັດທະນະທໍາທີ່ສາມາດຈັບບາຍໄດ້ ເຊິ່ງສາມາດເຄື່ອນຍ້າຍໄປໄວ້ໃນສະຖານທີ່ ອື່ນ ຫຼື ປ່ຽນແທນໄດ້ໂດຍໃຊ້ໂຄງສ້າງ ຫຼື ລັກສະນະທໍາມະຊາດທີ່ຄ້າຍຄືກັນໂດຍສາມາດໂອນຄຸນຄ່າທາງດ້ານວັດທະນະທໍາດັ່ງກ່າວໄດ້ດ້ວຍມາດຕະການທີ່ເໝາະສົມໃດໜຶ່ງ. ສະຖານທີ່ ທາງບູຮານນະຄະດີ ຫຼື ປູສະນີຍະສະຖານຈະຖືວ່າສາມາດສ້າງຄືນໄດ້ ຖ້າຫາກຄຸນຄ່າຄວາມສໍາຄັນຂອງສະຖານທີ່ເຫຼົ່ານັ້ນແມ່ນມີຄືກັນກັບສະຖານທີ່ ແລະ/ຫຼື ໂຄງສ້າງຢູ່ບ່ອນອື່ນ.

4 ສອດຄ່ອງກັບເງື່ອນໄຂໃນມາດຕະຖານການດໍາເນີນງານທີ 6 ທີ່ກ່ຽວຂ້ອງກັບບໍລິການລະບົບນິເວດ ແລະ ການອະນຸລັກຊີວະນາໆພັນ.

5 ມໍລະດົກທາງວັດທະນະທໍາທີ່ບໍ່ສາມາດສ້າງຄືນໃໝ່ໄດ້ອາດຈະກ່ຽວພັນກັບເງື່ອນໄຂທາງດ້ານສັງຄົມ, ເສດຖະກິດ, ວັດທະນະທໍາ, ສິ່ງແວດລ້ອມ ແລະ ດິນຟ້າອາກາດຂອງຄົນໃນອະດີດ, ຂອງນິເວດທີ່ມີການວິວັດຂອງເຂົາເຈົ້າ, ຍຸດທະສາດໃນການປັບສະພາບຕົວ, ແລະ ຮູບການທໍາອິດໃນການຄຸ້ມຄອງສິ່ງແວດລ້ອມ ເຊິ່ງມີ (i) ມໍລະດົກທາງວັດທະນະທໍາ ທີ່ມີຄວາມເປັນເອກະລັກ ຫຼື ຂ້ອນຂ້າງເປັນເອກະລັກໃນຍຸກທີ່ສ້າງມໍລະດົກດັ່ງກ່າວ ຫຼື (ii) ມໍລະດົກທາງວັດທະນະທໍາທີ່ເປັນເອກະລັກ ຫຼື ຂ້ອນຂ້າງເປັນເອກະລັກໃນການເຊື່ອມໂຍງ ຍຸກສະໄໝຕ່າງໆໃນສະຖານທີ່ດັ່ງກ່າວ.

15. ເຂດມໍລະດົກທາງວັດທະນະທຳທີ່ໄດ້ຮັບການປົກປ້ອງທາງກົດໝາຍ[6] ແມ່ນສຳຄັນສຳລັບການປົກປ້ອງ ແລະ ການອະນຸລັກມໍລະດົກທາງວັດທະນະທຳ ແລະ ຕ້ອງມີມາດຕະການເພີ່ມເຕີມສຳລັບໂຄງການທີ່ໄດ້ຮັບອະນຸຍາດພາຍໃຕ້ກົດໝາຍຂອງປະເທດດັ່ງກ່າວໃນການດຳເນີນໂຄງການໃນເຂດດັ່ງກ່າວ. ໃນກໍລະນີທີ່ໂຄງການທີ່ໄດ້ສະເໜີນັ້ນຕັ້ງຢູ່ພາຍໃນເຂດທີ່ໄດ້ຮັບການປົກປ້ອງທາງກົດໝາຍ ຫຼື ເປັນເຂດກັນຊົນຕາມກົດໝາຍລູກຄ້າຈະຕ້ອງປະຕິບັດຕາມເງື່ອນໄຂດັ່ງລຸ່ມນີ້ ນອກຈາກເງື່ອນໄຂທີ່ໄດ້ຂຽນໄວ້ໃນວັກທີ 14:

- ປະຕິບັດໃຫ້ສອດຄ່ອງຕາມລະບຽບການຕ່າງໆ ຂອງມໍລະດົກທາງວັດທະນະທຳແຫ່ງຊາດ ຫຼື ແຜນການຄຸ້ມຄອງເຂດສະ ຫງວນ;
- ປຶກສາຫາລືກັບຜູ້ອຸປະຖຳ ແລະ ຜູ້ບໍລິຫານເຂດສະຫງວນດັ່ງກ່າວ, ຊຸມຊົນທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງຕົ້ນຕໍຕ່າງໆຕໍ່ກັບໂຄງການທີ່ສະເໜີ; ແລະ
- ຈັດຕັ້ງປະຕິບັດແຜນງານເພີ່ມເຕີມຕາມຄວາມເໝາະສົມເພື່ອສົ່ງເສີມ ແລະ ເສີມຂະຫຍາຍເປົ້າໝາຍຂອງການອະນຸລັກເຂດສະຫງວນດັ່ງກ່າວ.

## ການນຳໃຊ້ມໍລະດົກທາງວັດທະນະທຳຂອງໂຄງການ

16. ໃນກໍລະນີທີ່ໂຄງການສະເໜີການນຳໃຊ້ມໍລະດົກທາງດ້ານວັດທະນະທຳລວມທັງຄວາມຮູ້, ນະວັດຕະກຳ ຫຼື ວິທີປະຕິບັດຕ່າງໆຂອງຊຸມ ຊົນທ້ອງຖິ່ນເພື່ອຈຸດປະສົງທາງການຄ້າ[7] ລູກຄ້າຈະແຈ້ງຂໍ້ມູນໃຫ້ຊຸມຊົນຊາບຕໍ່ກັບ (i) ສິດຂອງເຂົາເຈົ້າພາຍໃຕ້ກົດໝາຍຂອງປະເທດ; (ii) ຂອບເຂດ ແລະ ລັກສະນະຂອງການພັດທະນາດ້ານການຄ້າທີ່ໄດ້ສະເໜີມາ; ແລະ (iii) ທ່າແຮງຜົນທີ່ຕາມມາຂອງການພັດທະນາດັ່ງ ກ່າວ. ລູກຄ້າຈະບໍ່ສືບຕໍ່ການຫັນເປັນການຄ້າດັ່ງກ່າວເວັ້ນເສຍແຕ່ວ່າລູກຄ້າຈະ (i) ເຂົ້າໃນຂະບວນການການປຶກສາຫາລື ແລະ ມີສ່ວນຮ່ວມ ດັ່ງທີ່ໄດ້ອະທິບາຍໄວ້ໃນມາດຕະຖານການດຳເນີນງານທີ 1 ແລະ ເປັນການທີ່ນຳໃຊ້ຂະບວນການເຈລະຈາທີ່ມີຄວາມບໍລິສຸດໃຈ ເຊິ່ງມີຜົນໄດ້ຮັບທີ່ຖືກບັນທຶກໄວ້ ແລະ (ii) ສະໜອງການແບ່ງປັນຜົນປະໂຫຍດທີ່ຍຸຕິທຳ ແລະ ເທົ່າທຽມກັນຈາກການຫັນເປັນການຄ້າຂອງຄວາມຮູ້, ນະວັດຕະກຳ ຫຼື ວິທີປະຕິບັດຕ່າງໆທີ່ສອດຄ່ອງກັບປະເພນີ ແລະ ມໍລະດົກຂອງເຂົາເຈົ້າ.

---

6 ຕົວຢ່າງລວມມີເຂດມໍລະດົກໂລກ ແລະ ເຂດສະຫງວນແຫ່ງຊາດ

7 ຕົວຢ່າງລວມເອົາແຕ່ບໍ່ຈຳກັດຢູ່ພຽງແຕ່ການຫັນເປັນການຄ້າຂອງຄວາມຮູ້ດ້ານການຢາພື້ນເມືອງ ຫຼື ເຕັກນິກທີ່ສັກສິດ ຫຼື ໃນດ້ານປະເພນີພື້ນເມືອງອື່ນໆໃນການປຸງແຕ່ງພືດ ພັນ, ເສັ້ນໄຍ ຫຼື ໂລຫະຕ່າງໆ.



# ດັດສະນີ ຄຳສັບ

ໝາຍເຫດ: ຢູ່ດ້ານໜ້າຂອງເຄື່ອງໝາຍ ¶ ແມ່ນ ເລກທີໜ້າເຈ້ຍ ແລະ ຢູ່ດ້ານຫຼັງຂອງເຄື່ອງໝາຍ ¶ ແມ່ນ ເລກທີຂອງວັກ.
ພາກທີ່ບໍ່ມີຕົວເລກຈະໝາຍວ່າ "ວັດຖຸປະສົງ" ແລະ ".n" ໝາຍເຖິງຂໍ້ມູນອ້າງອີງທ້າຍໜ້າ ເຈ້ຍ.


ບໍລິການທີ່ພັກເຊົາ - 17¶12
ແຜນດຳເນີນງານ - 9.n22, 9¶16, *ເບິ່ງຕື່ມ*
  ແຜນດຳເນີນງານທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ຊຸມຊົນທີ່ໄດ້ຮັບຜົນກະທົບ, ລາຍງານຫາ, 14¶36, ການເປີດເຜີຍຂໍ້ມູນ ຂອງ, 12¶29
ທີ່ຢູ່ອາໄສທີ່ພຽງພໍ - 31¶3,
  ການຄໍ້າປະກັນກຳມະສິດທີ່ດິນ 31.n5, 31.n8, 35¶21-22
ຊຸມຊົນທີ່ໄດ້ຮັບຜົນກະທົບ - 5¶1 *ເບິ່ງຕື່ມ*
  ຊົນເຜົ່າພື້ນເມືອງທີ່ ຖືກຜົນກະທົບ; ຊົນເຜົ່າພື້ນເມືອງ
  ແກ້ໄຂການຮ້ອງທຸກຈາກ, 6 ວັດຖຸປະສົງ, 14¶35, 31¶12, 33¶11. *ເບິ່ງຕື່ມ*
  ກົນໄກການຮ້ອງທຸກ
  ການຫຼີກເວັ້ນຄວາມສ່ຽງ ແລະ/ຫຼື ຜົນກະທົບຕໍ່ 13¶31, 27¶5, 27¶6, 43¶25, 46¶8, 47¶9
  ການປຶກສາຫາລື 13¶30, 13¶31, 33.n16, 33¶14, 35¶22, 40¶14, 42¶20, 47¶10, 52¶9, 54¶15
  ຖືກກຳນົດ 5¶1
  ການເປີດເຜີຍຂໍ້ມູນ 11¶21, 12¶29, 13¶30, 28¶11, 33¶10
ການມີສ່ວນຮ່ວມຂອງ, 6 ວັດຖຸປະສົງ, 9¶15, 10-11¶20-21, 12¶25, 13¶30, 13¶31, 33¶10
  ການເຈລະຈາທີ່ມີຄວາມຈິງໃຈ 47¶12, 53¶14
  ການກຳນົດ 12¶26, 12¶28
  ການປຶກສາຫາລື ແລະ ການມີສ່ວນຮ່ວມທີ່ມີຂໍ້ມູນຄົບຖ້ວນ 13¶31, 53¶14
  ການມີສ່ວນຮ່ວມໃນການກຳນົດການບໍລິການດ້ານລະບົບນິເວດທີ່ເປັນບູລິມະສິດ 43¶24
  ການມີສ່ວນຮ່ວມໃນກິດຈະກຳການຕິດຕາມກວດກາ 11¶22,
  ລາຍງານຫາ, 12¶25, 14¶36
  ຜູ້ຕາງໜ້າຂອງ, 11¶22, 12.n26, 12¶27
  ການກຳນົດຄວາມສ່ຽງ ແລະ ຜົນກະທົບ 8¶11, 9¶12, 9¶15, 26-27¶4-5, 27¶8
  ການແບ່ງປັນຜົນປະໂຫຍດ ແລະ ໂອກາດຂອງການພັດທະນາ 13¶31, 32¶9,
  ແຜນການມີສ່ວນຮ່ວມຂອງຜູ້ມີສ່ວນກ່ຽວຂ້ອງ 12¶27

ຊົນເຜົ່າພື້ນເມືອງທີ່ຖືກຜົນກະທົບ. *ເບິ່ງຕື່ມ* ຊົນເຜົ່າພື້ນເມືອງ.
  ການຫຼີກເວັ້ນຜົນກະທົບຕໍ່, 46¶8, 47¶9,
  ໂອກາດໃນການພັດທະນາແບບຍືນຍົງທີ່ມີຄວາມເໝາະສົມທາງວັດທະນະທຳ, 48-49¶14-15, 50¶18, 50¶20
    ນິຍາມ, 46¶5
  ຂະບວນການມີສ່ວນຮ່ວມ, 13¶32, 47.n4, 47¶10
  ການເຫັນດີເຫັນພ້ອມດ້ວຍຄວາມສະໝັກໃຈ, ໂດຍໄດ້ຮັບຂໍ້ມູນລ່ວງໜ້າ ແລະ ພຽງພໍ (FPIC), 47¶11, 47¶12, 48¶13-14, 49¶15-17
  ການປຶກສາຫາລື ແລະ ການມີສ່ວນຮ່ວມທີ່ມີຂໍ້ມູນຄົບຖ້ວນ (ICP), 13¶32, 45
  ວັດຖຸປະສົງ, 47¶9, 47¶12, 50¶22
  ຄະນະກຳມະການທີ່ຕາງໜ້າ, 47¶10
  ແບ່ງປັນຜົນປະໂຫຍດ, 45¶2, 45¶
  ວັດຖຸປະສົງ, 48-49¶14, 49¶17, 50¶19

ຊະນິດພັນຕ່າງຖິ່ນ, 39¶6, 42¶21, 42-43¶22-23
  ການນຳເອົາ, 42¶21
  ຂົ່ມຂູ່ຄຸກຄາມ, 42¶21, 42-43¶22-23

ເງື່ອນໄຂສະພາບແວດລ້ອມປົກກະຕິ
  ແກ້ໄຂທ່າອ່ຽງຜົນກະທົບທາງລົບຂອງໂຄງການຕໍ່, 23¶11
  ຄວາມສາມາດໃນການດູດຊຶມ, 23.n13, 23¶11
  ນິຍາມ, 24n.12

ການລ້ຽງສັດ, 39¶5, 43¶26

ສິ່ງອຳນວຍຄວາມສະດວກທີ່ກ່ຽວຂ້ອງ, 8¶8
ການກວດສອບ

ຜົນສຳເລັດ, 35.n18, 33-34¶15
ພາຍໃນ, 11¶23, 11¶23

ຂໍ້ມູນພື້ນຖານ
ສິ່ງແວດລ້ອມ ແລະ ສັງຄົມ, 7-8¶7,
ເສດຖະກິດ-ສັງຄົມ, 33¶12

ເງື່ອນໄຂບໍລິການພື້ນຖານ, 17¶12
ນິຍາມ, 17.n8

ຊີວະນາໆພັນ
ການຄຸ້ມຄອງແບບປັບປ່ຽນ, 39¶7
ການຫຼີກເວັ້ນຜົນກະທົບ, 39¶7, 41¶15,
ນິຍາມ, 38¶1
ການບໍລິການດ້ານລະບົບນິເວດ, 38¶3
ການກຳນົດຄວາມສ່ຽງ ແລະ ຜົນກະທົບ, 39¶6, 39¶8, 43¶24
ຜົນກະທົບຂອງໂຄງການຕໍ່ກັບ, 8¶8, 23¶11, 38¶3, 39¶6, 41¶15
ໄພຂົ່ມຂູ່ຕໍ່, 39¶6, 42¶21

ແຜນຈັດຕັ້ງປະຕິບັດຊີວະນາໆພັນ, 9.n23, 12n.26, 42¶18

ການຊົດເຊີຍດ້ານຊີວະນາໆພັນທີ່ຖືກຜົນກະທົບ, 40.n2, 40.n4, 39-40¶10, 41¶15
ການປະເມີນຜົນກະທົບຄົງຄ້າງ, 42¶19
ນິຍາມ, 40n.2
“ການຊົດເຊີຍ ໃນເຂດພື້ນທີ່ຖືກກະທົບ,” 40.n4
“ຫຼັກການວ່າດ້ວຍ ຊົດເຊີຍໃຫ້ຄືເກົ່າ ຫຼື ໃຫ້ດີກ່ວາເກົ່າ,” 39-40¶10
ນິຍາມ, 40.n2

ການປົກປັກຮັກສາ ແລະ ອະນຸລັກຊີວະນາໆພັນ 38¶1, 38¶ ວັດຖຸປະສົງ, 39-40¶10, 41.n15
ການຊົດເຊີຍດ້ານຊີວະນາໆພັນທີ່ຖືກຜົນກະທົບ, 40.n2, 40.n4, 39-40¶10, 41¶15
ເຂດທີ່ຖືກຮັບຮູ້ໃນລະດັບສາກົນ, 42¶20
ນິຍາມ, 42.n17
ເຂດປ່າສະຫງວນຕາມກົດໝາຍ, 44.n16, 42¶20
ຜົນໄດ້ຮັບດ້ານການອະນຸລັກທີ່ສາມາດວັດແທກໄດ້, 39¶10
ນິຍາມ, 40.n3
“ສ່ວນທີ່ໄດ້ເພີ່ມເຕີມຈາກການຊົດເຊີຍ,” 42¶18
ນິຍາມ, 41.n15
ບໍ່ມີການສູນເສຍສຸດທິ, 39-40¶10, 41¶15
ນິຍາມ, 41.n9

ຄຸນຄ່າຂອງຊີວະນາໆພັນ, 40.n4, 40¶12, 43n. 41.n10, 41¶16-17, 42¶18

ແຮງງານໃຊ້ໜີ້ 19¶22

ການສຳຫຼວດພົນລະເມືອງ, 32¶12, 34¶17

ຢາປາບສັດຕູພືດທີ່ເປັນສານເຄມີ, 24¶15

ແຮງງານເດັກ - 18¶21
ໃບຕ່ອງໂສ້ການສະໜອງຂັ້ນຕົ້ນ, 19¶27

ການຜະລິດທີ່ສະອາດຫຼາຍຂຶ້ນ, 22¶6

ລູກຄ້າ
ນິຍາມ, 2.n1
ຝ່າຍທີສາມ, 5¶2

ການປ່ຽນແປງຂອງສະພາບດິນຟ້າອາກາດ
ຜົນກະທົບຕໍ່ຊຸມຊົນ, 26¶1
ຜົນກະທົບຕໍ່ກັບການບໍລິການດ້ານລະບົບນິເວດທີ່ເປັນບູລິມະສິດ, 27¶8
ຂະບວນການກຳນົດຄວາມສ່ຽງ ແລະ ຜົນກະທົບ, 7-8¶7

ການເຈລະຈາຕໍ່ລອງລວມໝູ່
ສັນຍາ, 16¶10, 18¶18
ກົນໄກທາງເລືອກ, 17¶13
ບໍ່ຈຳແນກ ຫຼື ແກ້ແຄ້ນຕໍ່ກັບ, 17¶14
ກຳມະບານຂອງຜູ້ອອກແຮງງານ, 17¶13

ການຖອນພະນັກງານແບບລວມໝູ່, 18¶18, 18¶19
ນິຍາມ, 18.n10

ພະຍາດຕິດຕໍ່, 28¶9-10

ແຜນພັດທະນາຊຸມຊົນ, 47.n3, 47¶9

ການມີສ່ວນຮ່ວມຂອງຊຸມຊົນ, 33¶10. *ເບິ່ງຕື່ມ* ການມີສ່ວນຮ່ວມຂອງຜູ້ມີສ່ວນກ່ຽວຂ້ອງ
ເຊິ່ງເປັນພາກສ່ວນໜຶ່ງຂອງລະບົບການຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ (ESMS), 5¶1

ສຸຂະພາບ ແລະ ຄວາມປອດໄພຂອງຊຸມຊົນ
ແຜນສຸຂະພາບ ແລະ ຄວາມປອດໄພຂອງຊຸມຊົນ, 12.n26
ມາດຕະການໃນການສະກັດກັ້ນ ແລະ ຄວບຄຸມ, 27¶5
ຜົນກະທົບຂອງໂຄງການຕໍ່ກັບການບໍລິການດ້ານລະບົບນິເວດທີ່ເປັນບູລິມະສິດ, 27¶8
ບົດແນະນຳທາງດ້ານສິ່ງແວດລ້ອມ, ສຸຂະພາບ ແລະ ຄວາມປອດໄພ ຂອງກຸ່ມທະນາຄານໂລກ (EHS Guidelines), 27¶5

ຄ່າຕອບແທນສຳລັບແຮງງານ (ຜູ້ອອກແຮງງານ), 16¶9, 17¶15

ການຊົດເຊີຍ, ການໄດ້ມາຂອງ ທີ່ດິນ, ການຍົກຍ້າຍຈັດສັນແບບບໍ່ສະໝັກໃຈ, 31¶ ວັດຖຸປະສົງ, 32¶9
ໃນກໍລະນີເປັນການຍົກຍ້າຍຈັດສັນທີ່ລັດຖະບານເປັນຜູ້ຄຸ້ມຄອງ, 30¶2, 37¶32
ເງິນສົດ, 35.n21, 35¶20, 35¶21, 36¶27, 36¶27
ລວມໝູ່, 36¶28, 50¶19
ວັນທີໝົດສິດ, 33¶12, 35¶22, 35¶23, 36¶27
ສຳລັບການຍົກຍ້າຍທາງເສດຖະກິດ, 36¶27
ມີສິດ, 34n.17, 33¶12
ການປັບປຸງທີ່ເຮັດໃນດິນຕອນນັ້ນ, 36¶27
ເປັນວັດຖຸ, 33.n16, 35¶21, 48¶14
ບົນພື້ນຖານການນຳໃຊ້ທີ່ດິນ, 32¶9, 35.n21, 48-49¶14
ຜູ້ທີ່ສວຍໂອກາດມາຕັ້ງຖິ່ນຖານ, 33¶12
ປະຕິເສດໂດຍ, ຂອງຜູ້ໄດ້ຮັບຜົນກະທົບ, 33¶13
ຕາມມູນຄ່າທົດແທນ, 32¶ ວັດຖຸປະສົງ, 32¶9, 34¶19, 35¶21-22, 36¶27
ນິຍາມ, 31.n4
ການຊົດເຊີຍເປັນແຕ່ລະໄລຍະ, 32.n15
ກຳນົດເວລາ 32.n14, 32¶9, 32.n15

ການກວດສອບຜົນສຳເລັດ, 34.n.18, 34¶15

ການປຶກສາຫາລື
ກັບຊຸມຊົນທີ່ໄດ້ຮັບຜົນກະທົບ, 13¶30, 13¶31, 47¶10
ການປົກປັກຮັກສາ ແລະ ອະນຸລັກຊີວະນາໆພັນ, 40¶14, 41¶14, 42¶20
ມໍລະດົກທາງວັດທະນະທຳ, 52¶9, 54¶15
ປະສິດທິຜົນ, ຂະບວນການຂອງ, 13¶30
ການມີສ່ວນຮ່ວມທີ່ກວມເອົາທຸກຄົນໃນ, 13¶30
ການປຶກສາຫາລື ແລະ ການມີສ່ວນຮ່ວມທີ່ມີຂໍ້ມູນຄົບຖ້ວນ (ICP), 13¶31, 53¶14
ການໄດ້ມາຂອງທີ່ດິນ ແລະ ການຍົກຍ້າຍຈັດສັນ, 33.n16, 35¶22

ຜູ້ອອກແຮງງານສັນຍາຈ້າງ, 16¶6
ນິຍາມ, 16¶4
ກົນໄກການຮ້ອງທຸກ, ການເຂົ້າເຖິງ, 19¶26

ຜູ້ຮັບເໝົາ
ນິຍາມ, 5n.4
ແຜນງານການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ, 9¶14
ການກຳຈັດສິ່ງເສດເຫຼືອທີ່ເປັນອັນຕະລາຍ, 24¶12

ສົນທິສັນຍາວ່າດ້ວຍຄວາມຫຼາກຫຼາຍດ້ານຊີວະນາໆພັນ, 38¶1, 51¶1

ສົນທິສັນຍາວ່າດ້ວຍການປົກປ້ອງມໍລະດົກທາງວັດທະນະທຳ ແລະ ທຳມະຊາດຂອງໂລກ, 51¶1, 52¶6
ຂະບວນການທຸລະກິດທີ່ເປັນແກນຫຼັກ,
ນິຍາມ 16.n31

ກິດຈະກຳກວດແກ້, 11¶23, 34.n18, 33-34¶15

ມາດຕະຖານທີ່ມີຄວາມໜ້າເຊື່ອຖື, 7¶6, 43¶26, 43-44¶27-29
ການກະທຳຂອງລູກຄ້າ ໃນກໍລະນີທີ່ບໍ່ມີ, 44¶29
ນິຍາມ, 44.n20
ການຢັ້ງຢືນ ຫຼື ອອກໃບຢັ້ງຢືນ, 43¶26, 43¶27
ນິຍາມ ລະບົບອອກໃບຢັ້ງຢືນ, 44n.20
ບົດບາດໃນການຄຸ້ມຄອງຊັບພະຍາກອນທີ່ມີຊີວິດ, 43¶26, 43¶27

ເຂດທີ່ຢູ່ອາໄສຈຳເປັນ, 41¶16-17, 42¶18-19
ຊະນິດພັນທີ່ສ່ຽງໃກ້ຈະສູນພັນສູງ, 41.n11, 41¶16-17
ນິຍາມ, 39¶9, 41¶16
ຊະນິດພັນໃກ້ສູນພັນ, 41.n11, 41¶16-17

ຂໍ້ຈຳກັດຕໍ່ກິດຈະກຳໃນ, 41¶17
ການຫຼຸດລົງສຸດທີ
ຊະນິດພັນທີ່ສ່ຽງໃກ້ຈະສູນພັນສູງ ຫຼື ຊະນິດພັນທີ່ສ່ຽງໃກ້ຈະສູນພັນ, 41¶17
ນິຍາມ, 43.n13

ມໍລະດົກທາງວັດທະນະທຳ
ການຄົ້ນພົບໂດຍບັງເອີນ, 52¶8
ນິຍາມ, 52.n1
ຂັ້ນຕອນ, 52.n2, 52¶8
ການເຂົ້າເຖິງຂອງຊຸມຊົນ, 52¶10
ການປຶກສາຫາລືກັບຊຸມຊົນທີ່ໄດ້ຮັບຜົນກະທົບ, 52¶9, 53¶14, 54¶16
ສຳຄັນພິເສດ, 49.n13, 49¶16-17, 48¶13-14, 49¶15
ຊຸມຊົນໄດ້ຮັບຜົນກະທົບທີ່ເປັນຊົນເຜົ່າພື້ນເມືອງ, 49¶16-17
ນິຍາມ, 53¶13
ເຂດມໍລະດົກທາງວັດທະນະທຳທີ່ໄດ້ຮັບການປົກປ້ອງທາງກົດໝາຍ, 54.n6, 54¶15
ນິຍາມ, 51¶3
ການແບ່ງປັນຜົນປະໂຫຍດທີ່ຍຸດຕິທຳ ແລະ ເທົ່າທຽມກັນຈາກ, 54¶16
ບໍ່ສາມາດສ້າງຄືນໃໝ່ໄດ້, 53n.5
ຮື້ຖອນ, 53¶12
ການນຳໃຊ້ຂອງໂຄງການ, 49¶17, 54¶16
ສາມາດສ້າງຄືນໃໝ່ໄດ້, 53n.3
ຮື້ຖອນ, 53¶11
ທີ່ສາມາດຈັບບາຍໄດ້ ແລະ ບໍ່ສາມາດຈັບບາຍໄດ້, 51¶3-4
ທີ່ສາມາດຈັບບາຍໄດ້, ການຮື້ຖອນ, 53¶11

ຜົນກະທົບສະສົມ, 8¶8, 23¶11
ນິຍາມ, 8.n16

ຜູ້ອອກແຮງງານໂດຍກົງ, ລ17¶5
ນິຍາມ, 16¶4
ພະນັກງານປ້ອງກັນຄວາມສະຫງົບ, 28¶12

ກຸ່ມດ້ອຍໂອກາດ ແລະ ບໍ່ສາມາດປົກປ້ອງຕົນເອງໄດ້, 9¶12, 26 ¶1, 32¶8, 34¶19. *ເບິ່ງຕື່ມ* ປະຊາກອນທີ່ບໍ່ສາມາດປົກປ້ອງຕົນເອງໄດ້
ນິຍາມ, 8.n18

ການມີສ່ວນຮ່ວມຂອງຄົນທີ່ມີສ່ວນກ່ຽວຂ້ອງຢ່າງມີປະສິດທິຜົນ, 12¶27, 12.n27, 13¶30

ພະຍາດ
ທີ່ເກີດຂຶ້ນຈາກ ຫຼື ເກີດຂຶ້ນໃນລະຫວ່າງການເຮັດວຽກ, 19¶23
ຕິດຕໍ່, 28¶10
ຄວາມສ່ຽງຂອງຊຸມຊົນຕໍ່, 28¶9, 45¶1

ຄົນທີ່ຖືກຍົກຍ້າຍຈັດສັນ
ຈັດປະເພດ, 34¶17
ການຊົດເຊີຍ ແລະ ຜົນປະໂຫຍດສຳລັບ, 32¶9,
ການປຶກສາຫາລືກັບ, 33¶10, 36¶22
ຊຸມຊົນເຈົ້າພາບ, 30¶2

ການຍົກຍ້າຍ, 34¶17, 34¶18
ທາງເສດຖະກິດ, 35-36¶25-29,
ທຸລະກຳກ່ຽວກັບທີ່ດິນທີ່ເຮັດໃຫ້ເກີດມີ, ປະເພດຂອງ, 31¶5, 31¶5
ທາງກາຍະພາກ, 30¶1, 34-35¶19-24,

ການປະຕິບັດຕາມ, ສິດທິມະນຸດ, 6¶3, 7n.12

ການພັດທະນາຂອງເສດຖະກິດ, ການເຕີບໂຕຂອງເສດຖະກິດ, 15¶1

ການຍົກຍ້າຍທາງເສດຖະກິດ
ໂອກາດສ້າງລາຍໄດ້ທີ່ເປັນທາງເລືອກ, 36¶28
ການສູນເສຍຊັບສິນ ຫຼື ເຂົ້າເຖິງຊັບສິນ, 36¶27
ນິຍາມ, 30¶1, 36¶26
ແຜນປົວແປງຊີວິດການເປັນຢູ່, 35¶25
ຕາມຄວາມຈຳເປັນ, ການຊ່ວຍເຫຼືອໃນໄລຍະຂ້າມຜ່ານ, 36¶29
ທຸລະກຳກ່ຽວກັບທີ່ດິນທີ່ເຮັດໃຫ້ເກີດມີ, 31¶5, 32¶5

ລະບົບນິເວດ - 38¶1, 41¶16
ຂະບວນການລະບົບນິເວດ, 53¶11
ແຜນຟື້ນຟູລະບົບນິເວດ, 12.n27

*ເບິ່ງຕື່ມ* ການບໍລິການດ້ານລະບົບນິເວດບູລິມະສິດ ຊີວະນາໆພັນ ແລະ, 38¶1
ນິຍາມ, 38¶2
ບໍລິການທາງວັດທະນະທຳຂອງລະບົບນິເວດ, ຜົນກະທົບຂອງໂຄງການຕໍ່, 49.n13, 53¶11

ສິ່ງປະເພດຂອງ, 38¶2
ການຄຸ້ມຄອງ, 43¶24-25
ການຫາລ້ຽງຊີບບົນພື້ນຖານການນຳໃຊ້ຊັບພະຍາກອນທຳມະຊາດ, 30.n1, 36¶28
ຜົນກະທົບຂອງໂຄງການຕໍ່, 8¶8 27¶8, 43¶25
ການນຳໃຊ້ຂອງ ແລະ ການສູນເສຍ ການເຂົ້າເຖິງບໍລິການດ້ານລະບົບນິເວດຕ່າງໆ, 27-28¶8, 32.n9, 31¶5, 36¶28, 48.n6, 48.n9

ບົດແນະນຳ EHS. *ໃຫ້ເບິ່ງ* ບົດແນະນຳທາງດ້ານສິ່ງແວດລ້ອມ, ສຸຂະພາບ ແລະ ຄວາມປອດໄພ (ບົດແນະນຳ EHS)

ການກຽມພ້ອມ ແລະ ການຕອບໂຕ້ໄພພິບັດ, 10-11¶20-21
ການປະສານສົມທົບກັບຝ່າຍທີສາມ, 11¶21, 28¶11
ອຳນາດການປົກຄອງທ້ອງຖິ່ນ, ຄວາມສາມາດຂອງ, 11¶21, 28¶11
ເປັນສ່ວນໜຶ່ງຂອງ ລະບົບຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMS), 6¶5, 10¶20, 12.n27
ລະບົບ, ອົງປະກອບຂອງ, 10¶20

ຊະນິດພັນທີ່ສ່ຽງໃກ້ສູນພັນ, 41¶16, 41¶17
ສູງ, 41¶16, 42¶17

ອົງການສາກົນເພື່ອການອະນຸລັກທຳມະຊາດ (IUCN), ບັນຊີແດງຂອງຊະນິດພັນທີ່ຖືກຄຸກຄາມ, 41.n11
ການຫຼຸດລົງສຸດທີ, 41n.13

ບົດແນະນຳທາງດ້ານ ສິ່ງແວດລ້ອມ, ສຸຂະພາບ ແລະ ຄວາມປອດໄພ (ບົດແນະນຳ EHS)
ກົດໝາຍຂອງປະເທດທີ່ແຕກຕ່າງຈາກ, 3-4¶4-7
ເປັນແຫຼ່ງຂໍ້ມູນຂອງ ບົດຮຽນຂອງສາກົນທີ່ດີກ່ຽວກັບວຽກງານອຸດສາຫະກຳ
ສຸຂະພາບ ແລະ ຄວາມປອດໄພຂອງຊຸມຊົນ, 27¶5
ສຸຂະພາບ ແລະ ຄວາມປອດໄພແຮງງານ, 19¶23
ປະສິດທິພາບຂອງຊັບພະຍາກອນ ແລະ ການປ້ອງກັນມົນລະພິດ, 22¶5
ແຜນດຳເນີນງານທາງດ້ານສິ່ງແວດລ້ອມ ແລະ ສັງຄົມ (ESAP), 9-10¶16. *ເບິ່ງຕື່ມ* ແຜນການປົວແປງຊີວິດ; ແຜນການຍົກຍ້າຍຈັດສັນ
ແຜນສະເພາະ; ຕົວຢ່າງຂອງ, 9.n22, 12n.26

ການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ (ESIA), 7-8¶7

environmental and social impacts - ຜົນກະທົບທາງສິ່ງແວດລ້ອມ ແລະ ສັງຄົມ
ນິຍາມ, 5n.4
ຂະບວນການໃນການກຳນົດ 7-8¶7, 7-9¶7-11

Environmental and Social Management System (ESMS) - ລະບົບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMS)
ນິຍາມ, 5¶1
ອົງປະກອບຂອງ, 6¶5
Periodic performace reviews of effectiveness of - ການປະເມີນຜົນງານກ່ຽວກັບປະສິດທິພາບ ການຈັດຕັ້ງປະຕິບັດຂອງປະສິດທິຜົນ ເປັນແຕ່ລະໄລຍະ, 11¶24

ຄວາມສ່ຽງທາງດ້ານສິ່ງແວດລ້ອມ ແລະ ສັງຄົມ
ນິຍາມ, 5n.3
ການກຳນົດ, ວິທີການໂດຍລວມ, 7-9¶7-11, 9¶12
ມືໃນຕົວ, 19¶23

ໂອກາດທີ່ສະເໝີພາບກັນ, 17¶12. *ເບິ່ງຕື່ມ* ຄວາມບໍ່ຈຳແນກໃນການວ່າຈ້າງ

ອຸປະກອນ, ການອອກແບບ ແລະ ຄວາມປອດໄພ, 27¶6

*ເບິ່ງ* ແຜນດຳເນີນງານທາງດ້ານສິ່ງແວດລ້ອມ ແລະ ສັງຄົມ
*ເບິ່ງ* ການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ

*ເບິ່ງ* ລະບົບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMS)

ການເວນຄືນ, 30¶1, 31¶5, 33¶12
ການສື່ສານຂໍ້ມູນຂ່າວສານພາຍນອກ, 12¶26, 14¶34

ຄວາມເປັນໄປໄດ້ທາງດ້ານການເງິນ, ນິຍາມ, 9n.22
ຖືກບັງຄັບໃຫ້ອອກຈາກທີ່ດິນ
ມີທີ່ຢູ່ອາໄສພຽງພໍ ພ້ອມດ້ວຍການຄໍ້າປະກັນກຳ
ມະສິດເປັນເຈົ້າຂອງ, 35¶22
ການຫຼີກເວັ້ນ, 35¶24
ນິຍາມ, 35.n23
ຍົກຍ້າຍອັນເນື່ອງມາຈາກ, 31¶5

ແຮງງານທີ່ຖືກບັງຄັບ, 19¶22
ໃນຕ່ອງໂສ້ສະໜອງຂັ້ນຕົ້ນ, 19¶27,

ການເຫັນດີເຫັນພ້ອມດ້ວຍຄວາມສະໝັກໃຈ, ໂດຍ
ໄດ້ຮັບຂໍ້ມູນລ່ວງໜ້າ ແລະ ພຽງພໍ
ຊຸມຊົນທີ່ໄດ້ຮັບຜົນກະທົບທີ່ເປັນຊົນເຜົ່າພື້ນເມືອງ,
47¶11-12
ເງື່ອນໄຂຮຽກຮ້ອງໃຫ້, 48¶13-14, 49¶15-17
ນິຍາມ, 49-50¶12
ການປຶກສາຫາລື ແລະ ການມີສ່ວນຮ່ວມທີ່ມີຂໍ້ມູນ
ຄົບຖ້ວນ (ICP), 13¶32, 47¶12, 50¶22

ການປ່ອຍອາຍ GHG. ເບິ່ງ ອາຍພິດເຮືອນແກ້ວ
(GHG)

ການເຈລະຈາທີ່ມີຄວາມຈິງໃຈ
ການເຫັນດີເຫັນພ້ອມດ້ວຍຄວາມສະໝັກໃຈໂດຍ
ໄດ້ຮັບຂໍ້ມູນລ່ວງໜ້າ ແລະ ພຽງພໍ, ຊົນເຜົ່າ
ພື້ນເມືອງ, 49-47¶12
ຜົນກະທົບຂອງໂຄງການຕໍ່ ແລະ ການນຳໃຊ້ມໍລະ
ດົກທາງວັດທະນະທຳ, 53¶14, 54¶16

ບົດຮຽນຂອງສາກົນທີ່ດີຂອງກ່ຽວກັບວຽກງານ
ອຸດສາຫະກຳ , 7¶7
ນິຍາມ, 19.n14, 22.n4
ບົດແນະນຳວ່າທາງດ້ານສິ່ງແວດລ້ອມ,
ສຸຂະພາບ ແລະ ຄວາມປອດໄພຂອງກຸ່ມ
ທະນາຄານໂລກ, 19¶23, 22¶4, 27¶5

ລັດຖະບານ
ການປະເມີນ ແລະ ການຄຸ້ມຄອງຄວາມສ່ຽງ ແລະ
ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ,
ໜ້າທີ່ຮັບຜິດຊອບຂອງ, 5¶2, 7¶5, 11¶22
ການຍົກຍ້າຍຈັດສັນພາຍໃຕ້ການຄຸ້ມຄອງຂອງລັດ,
6.n8, 34.n15, 36-37¶30-32
ຄຸ້ມຄອງແກ້ໄຂບັນຫາຕ່າງໆຂອງຊົນເຜົ່າພື້ນເມືອງ,
45¶2, 50¶21

ຂະບວນການໄດ້ມາຂອງທີ່ດິນ ແລະ ການຍົກຍ້າຍ
ຈັດສັນ, ບົດບາດ, 30¶2, 31¶5

ການພັດທະນາທີ່ດິນທີ່ຍັງບໍ່ໄດ້ມີການພັດທະນາ,
ການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ
ແລະ ສັງຄົມຂອງ, 7n12

ການປ່ອຍທາດອາຍພິດເຮືອນແກ້ວ (GHG)
ທາງເລືອກໃນການຫຼຸດຜ່ອນ, ກ່ຽວຂ້ອງກັບໂຄງ
ການ, 22¶7
ການຄິດໄລ່ປະລິມານຂອງ, 23.n6, 23¶8
ຂະບວນການກຳນົດຄວາມສ່ຽງ ແລະ ຜົນກະທົບ,
8¶8

ກົນໄກການຮ້ອງທຸກ, 5¶2
ສຳລັບ ຊຸມຊົນທີ່ໄດ້ຮັບຜົນກະທົບ, 12¶29,
14¶35
ຂໍ້ກັງວົນກ່ຽວກັບການຊົດເຊີຍ ແລະ ການຍົກ
ຍ້າຍຈັດສັນ, 33¶11
ການປະຕິບັດຂອງພະນັກງານປ້ອງກັນຄວາມ
ສະຫງົບ, 28¶12
ການມີສ່ວນຮ່ວມຂອງຜູ້ມີສ່ວນກ່ຽວຂ້ອງ,
ອົງປະກອບຂອງ, 12¶25, 14¶35
ສຳລັບຜູ້ອອກແຮງງານ, 19¶20

ທີ່ຢູ່ອາໄສ
ຈຳເປັນ, 41¶16-17, 42¶18-19
ນິຍາມ, 41¶9
ທີ່ຖືກດັດປັບ, 40¶11-12
ທຳມະຊາດ, 40¶13-14, 42¶15

ວັດຖຸອັນຕະລາຍ
ການຄຸ້ມຄອງ, 24¶13
ຫຼຸດຜ່ອນຄວາມສ່ຽງຂອງຊຸມຊົນຕໍ່, 27¶7

ສິ່ງເສດເຫຼືອທີ່ເປັນອັນຕະລາຍ
ການກຳຈັດໂດຍຝ່າຍທີສາມ, 27¶7
ການເຄື່ອນຍ້າຍຂ້າມປະເທດ, 24.n15

ກິດຈະກຳວຽກທີ່ເປັນອັນຕະລາຍ
ແຮງງານເດັກ, 19¶21
ນິຍາມ, 20n.12
ຄຸນຄ່າການອະນຸລັກສູງ, 39.n10

ມົນລະພິດທີ່ມີມາກ່ອນ 23¶10

ຊຸມຊົນເຈົ້າພາບ
ນິຍາມ, 31.n3
ສຳລັບຄົນທີ່ຖືກຍົກຍ້າຍ, 30¶2
ສົນທິສັນຍາຂອງ ອົງການແຮງງານສາກົນ,
16.n30
ນິຍາມ, 6¶3
ການປະຕິບັດຕາມ, ສິດທິມະນຸດ, 6¶3,
8n.12
ຊົນເຜົ່າພື້ນເມືອງ, 47-48 ວັດຖຸປະສົງ
ໜ້າທີ່ຂອງທຸລະກິດໃນການເຄົາລົບ, 6¶3
ການປົກປ້ອງບຸກຄະລາກອນ ແລະ ຊັບສິນ,
ໂດຍອີງຕາມ, 32 ວັດຖຸປະສົງ

*ເບິ່ງ* ການປຶກສາຫາລື ແລະ ການມີສ່ວນຮ່ວມທີ່ມີ
ຂໍ້ມູນຄົບຖ້ວນ (ICP)

ການກຳນົດຄວາມສ່ຽງ ແລະ ຜົນກະທົບໃນຕ່ອງໂສ້
ການສະໜອງຕົ້ນຕໍ, 8¶10, 19-20¶27, 44¶30
ຂະບວນການ ແລະ ຂອບເຂດ, 7¶7
ຈາກການກະທຳຂອງຝ່າຍທີ່ສາມ, 8¶9

ກອບຄວາມຍືນຍົງຂອງ IFC, 2¶1

*ເບິ່ງ* ອົງການແຮງງານສາກົນ (ILO)

ແຮງງານຕາມສັນຍາ, 19¶22

*ເບິ່ງຕື່ມ* ຊຸມຊົນທີ່ໄດ້ຮັບຜົນກະທົບທີ່ເປັນຊົນເຜົ່າພື້ນເມືອງ
ຄວາມຜູກພັນລວມໝູ່, 46¶6
ມໍລະດົກທາງວັດທະນະທຳທີ່ສຳຄັນພິເສດ, 49¶16
ຂະບວນການຕັດສິນໃຈ, 47.n4, 47¶10
ນິຍາມ, 46¶4, 46¶5
ການເຫັນດີເຫັນພ້ອມດ້ວຍຄວາມສະໝັກໃຈ
ໂດຍໄດ້ຮັບຂໍ້ມູນລ່ວງໜ້າ ແລະ ພຽງພໍ (FPIC),
13¶32, 47¶11, 48¶13-14, 50¶15-17
ການປຶກສາຫາລື ແລະ ການມີສ່ວນຮ່ວມທີ່ມີຂໍ້ມູນ
ຄົບຖ້ວນ (ICP), 13¶32, 47
ວັດຖຸປະສົງ, 47¶9
ດິນ ແລະ ຊັບພະຍາກອນທຳມະຊາດ, ສິດເປັນ
ເຈົ້າຂອງຕາມປະເພນີ ຫຼື ນຳໃຊ້ຕາມປະເພນີ,
46¶3, 49¶15
ການຍົກຍ້າຍ, 49¶15
ຄວາມບໍ່ສາມາດປົກປ້ອງຕົນເອງໄດ້, 45¶1,
47¶9, 47¶11

ແຜນຊົນເຜົ່າພື້ນເມືອງ, 13.n26, 47¶9

ການປຶກສາຫາລື ແລະ ການມີສ່ວນຮ່ວມທີ່ມີຂໍ້ມູນ
ຄົບຖ້ວນ (ICP), 13¶31
ມໍລະດົກທາງວັດທະນະທຳທີ່ມີຄວາມສຳຄັນພິເສດ,
53¶14, 54¶16
ຊົນເຜົ່າພື້ນເມືອງ, 13¶32, 47 ວັດຖຸປະສົງ,
47¶9

ມໍລະດົກທາງວັດທະນະທຳບໍ່ສາມາດຈັບບາຍໄດ້,
51¶3, 54¶16

ການຄຸ້ມຄອງສັດຕູພືດແບບປະສົມປະສານ, 26¶4

ການຄຸ້ມຄອງພາຫະນຳເຊື້ອແບບປະສົມປະສານ,
24¶14

ອົງການແຮງງານສາກົນ, 15.n2, 15¶2

ເຂດທີ່ຖືກຮັບຮູ້ໃນລະດັບສາກົນ 42¶20
ນິຍາມ, 42.n17

ອົງການສາກົນເພື່ອການອະນຸລັກ ທຳມະຊາດ,
42n.13, 42.n16
ບັນຊີແດງຂອງຊະນິດພັນທີ່ຖືກຄຸກຄາມ, 41.n11

ທາງເດີນເຮືອລະຫວ່າງປະເທດ, ຜົນກະທົບຂ້າມປະເທດ,
7¶7

ຊະນິດພັນຕ່າງຖິ່ນທີ່ຮຸກຮານ, 42¶21, 42-43
¶22-23
ການຍົກຍ້າຍຈັດສັນແບບບໍ່ສະໝັກໃຈ
ນິຍາມ, 30¶1
ພາຍໃຕ້ການຄຸ້ມຄອງຂອງລັດ, 33.n15,
36-37¶30-32,
ຜົນກະທົບທາງເສດຖະກິດ-ສັງຄົມ ຂອງ,
30¶2
ແຜນຍົກຍ້າຍຈັດສັນເພີ່ມເຕີມ, 36-37¶30-31,
37¶32

*ເບິ່ງ* ການຄຸ້ມຄອງສັດຕູພືດແບບປະສົມປະສານ (IPM)
*ເບິ່ງ* ອົງການສາກົນເພື່ອການອະນຸລັກທຳມະຊາດ
*ເບິ່ງ* ການຄຸ້ມຄອງພາຫະນຳເຊື້ອແບບປະສົມປະສານ
(IVM)

ແຮງງານ
ເດັກ, 18¶21
ທີ່ຖືກບັງຄັບ, 19¶22
ການເຂົ້າມາເຮັດວຽກ, 28¶10

ທີ່ດິນ
ການເຂົ້າເຖິງ, ການຈຳກັດຕໍ່, 31¶5
ຄວາມຜູກພັນ ແລະ ການນຳໃຊ້ຂອງຊົນເຜົ່າພື້ນເມືອງດັ້ງເດີມ 48¶13
ສິດທີ່ຖືກຕ້ອງຕາມກົດໝາຍຕໍ່, 31¶5, 34¶17, 36¶27,
ບໍ່ມີ, 31.n7, 31.n8, 34¶17, 36¶27, 48¶13
ສິດເປັນເຈົ້າຂອງຕາມປະເພນີ ຫຼື ສິດນຳໃຊ້ຕາມປະເພນີ, 48¶13-14
ຮັບຮູ້ພາຍໃຕ້ກົດໝາຍຂອງປະເທດ, 49.n12
ຍົກຍ້າຍອອກມາຈາກ, ຊົນເຜົ່າພື້ນເມືອງ, 49¶15

ການໄດ້ມາຂອງທີ່ດິນ
ນິຍາມ, 30n.2
ຫຼຸດຜ່ອນຜົນກະທົບຈາກ, 36¶ ວັດຖຸປະສົງ,
ການຍົກຍ້າຍຈັດສັນທາງກາຍະພາກ ແລະ
ເສດຖະກິດ ອັນເປັນຜົນມາຈາກ, 31¶5, 32¶5, 34¶18
ຂອບເຂດຂອງ 30.n2

ການນຳໃຊ້ທີ່ດິນ, ການຈຳກັດຕໍ່, 30¶1, 31¶5, 34¶18, 48.n8

ເຂດປ່າສະຫງວນຕາມກົດໝາຍ, 42¶20
ເຂດມໍລະດົກທາງວັດທະນະທຳ, 54¶15
ນິຍາມຂອງ IUCN, 42.n16

"ຫຼັກການຊົດເຊີຍໃຫ້ຄືເກົ່າ ຫຼື ດີກວ່າເກົ່າ"
ນິຍາມ, 40.n4

ການດຳລົງຊີວິດ / ການຫາລ້ຽງຊີບ
ນິຍາມ, 30.n1
ບົນພື້ນຖານການນຳໃຊ້ທີ່ດິນ, 32¶9, 35.n21, 36¶28
ນິຍາມ, 32.n12
ບົນພື້ນຖານການນຳໃຊ້ຊັບພະຍາກອນທຳມະຊາດ, 30.n1, 36¶28
ການຈັດຕັ້ງປະຕິບັດ, 31¶12-13, 33-34¶15,

ກອບການປົວແປງຊີວິດການເປັນຢູ່, 34¶16

ແຜນຟື້ນຟູຊີວິດການເປັນຢູ່, 33-34¶15
ການກວດສອບຜົນສຳເລັດ, 34.n18, 33-34¶15
ບົດແນະນຳ, 35¶25

ຊັບພະຍາກອນທຳມະຊາດທີ່ມີຊີວິດ
ມາດຕະຖານການຄຸ້ມຄອງແບບຍືນຍົງ
ທີ່ມີຄວາມໜ້າເຊື່ອຖື, 43¶26, 44¶27-29
ນິຍາມ, 38¶1
ການຜະລິດ, 39¶5, 43¶26
ການຄຸ້ມຄອງແບບຍືນຍົງ, 43¶26, 43-44¶27-29

ແຜນງານການຄຸ້ມຄອງ 9¶13-14, 9-10¶15-16
ອົງປະກອບຂອງ, 9¶14
ແຜນການດຳເນີນງານທາງດ້ານສິ່ງແວດລ້ອມ ແລະ ສັງຄົມ, 9¶16
ການຕິດຕາມກວດກາປະສິດທິຜົນຂອງ, 11¶22

ແຮງງານເຄື່ອນຍ້າຍ
ຫຼັກການທີ່ບໍ່ຈຳແນກ,
ຄວາມສາມາດໃນການນຳໃຊ້, 17¶15
ເງື່ອນໄຂການເຮັດວຽກ ແລະ ກຳນົດເວລາຂອງການຈ້າງງານ, 17¶11

ເດັກນ້ອຍ, ການຈ້າງແຮງງານ, 18¶21

ລຳດັບຂັ້ນຂອງການຫຼຸດຜ່ອນຄວາມສ່ຽງ, 3¶6, 6
ວັດຖຸປະສົງ, 9¶14, 50¶18
ການປົກປັກຮັກສາ ແລະ ການອະນຸລັກຊີວະນາໆພັນ, 39¶8, 40¶14,
ຊົດເຊີຍດ້ານຊີວະນາໆພັນທີ່ຖືກກະທົບ, 39-40¶10
ການຮື້ຖອນມໍລະດົກທາງວັດທະນະທຳທີ່ສາມາດສ້າງຄືນໃໝ່ໄດ້ຄືນໄດ້, 53¶11

ທີ່ຢູ່ອາໄສທີ່ຖືກດັດປັບ, 40¶11-12
ນິຍາມ, 40¶11

ການຕິດຕາມກວດກາ
ໂດຍເປັນອົງປະກອບໜຶ່ງຂອງລະບົບຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ, 6¶5
ການມີສ່ວນຮ່ວມໃນ, ໂດຍຊຸມຊົນທີ່ໄດ້ຮັບຜົນກະທົບ, 33¶10
ສິ່ງທີ່ປະກອບເອົາ, 11¶23

ກົດໝາຍຂອງປະເທດ,
ການອ້າງສິດຕໍ່ທີ່ດິນ, ຮັບຮູ້ ຫຼື ສາມາດຮັບຮູ້ໄດ້ພາຍໃຕ້,34¶17, 36¶27
ບົດແນະນຳ EHS ແຕກຕ່າງຈາກ, 3¶4-7
ພັນທະຂອງປະເທດເຈົ້າພາບພາຍໃຕ້ກົດໝາຍສາກົນ, 7¶6, 46.n1
ສິດທິຂອງຊົນເຜົ່າພື້ນເມືອງພາຍໃຕ້, 48¶14, 49¶17
ເງື່ອນໄຂໃນການປະຕິບັດຕາມ, 7¶6, 16¶8, 17¶16, 18¶21, 23¶10, 52¶6

ທີ່ຢູ່ອາໄສຕາມທຳມະຊາດ, 40¶13-14, 41¶15
ຂໍ້ຈຳກັດຕໍ່ກິດຈະກຳໃນ, 40¶14, 40¶14
ບໍ່ມີການສູນເສຍສຸດທິ, 43n.94
"ທີ່ຖືກແຍກອອກຈາກ," 41¶15
ນິຍາມ, 41n.9
ການປ່ຽນ ຫຼື ສ້າງຄວາມເຊື່ອມໂຊມໃນລະດັບສູງ, 40¶14, 40¶14

ຊັບພະຍາກອນທຳມະຊາດ
ນິຍາມ, 48n.9
ການບໍລິການດ້ານລະບົບນິເວດ ແລະ, 29¶8, 47.n5, 48.n6, 48.n9
ຄວາມຜູກພັນລວມໝູ່ຂອງຊົນເຜົ່າພື້ນເມືອງຕໍ່ກັບ, 46¶6
ທີ່ມີຊີວິດ, 39¶5, 43¶26, 43-44¶27-29
ການຈຳກັດການເຂົ້າເຖິງ, 31¶5, 36¶28, 48¶14

ການເຈລະຈາຍົກຍ້າຍ, 30¶1, 31¶3, 31¶5, 33¶12, 37¶31

ການບໍ່ຈຳແນກໃນການຈ້າງງານ, 17¶15
ແຮງງານເຄື່ອນຍ້າຍ, 17¶15
ກົດໝາຍແຫ່ງຊາດ, ເງື່ອນໄຂໃນການປະຕິບັດຕາມ, 17¶16
ແຜນການຫຼຸດຜ່ອນວຽກງານ, 18¶18

ມໍລະດົກທາງວັດທະນະທຳທີ່ບໍ່ສາມາດສ້າງຄືນໃໝ່ໄດ້,
ນິຍາມ, 53.n5
ການຖອນ, 53¶12

ສຸຂະພາບ ແລະ ຄວາມປອດໄພຂອງແຮງງານ, 19¶23
ຜູ້ສວຍໂອກາດມາຕັ້ງຖິ່ນຖານ, 33¶12, 36¶27
ຄວາມສາມາດ ແລະ ສັກກະຍະພາບຂອງອົງການຈັດຕັ້ງ, 10¶17-19
ຄຸນນະວຸດຂອງບຸກຄະລາກອນ, 10¶18

ມົນລະພິດທີ່ຕົກຄ້າງຍາວນານ, 25.n16
ຢາປາບສັດຕູພືດ
ສານເຄມີ, ການນຳໃຊ້, 24¶15
ຄວາມສ່ຽງຂອງຊຸມຊົນຕໍ່, 27¶7
ການນຳໃຊ້ ແລະ ການຄຸ້ມຄອງ, 24-25¶14-17
ລະບອບການນຳໃຊ້, 25¶16
ການຈັດປະເພດຂອງອົງການ WHO, ຕາມຄວາມອັນຕະລາຍ, 25¶17

ການຍົກຍ້າຍຈັດສັນທາງກາຍະພາກ, 34¶19-20, 35¶21-24
ນິຍາມ, 30¶1
ການຍົກຍ້າຍຈັດສັນ, 35¶20, 35¶22
ຂອງທີ່ດິນປ່ຽນແຜນ, ຄຸນລັກສະນະຂອງ, 35¶21
ແຜນດຳເນີການຍົກຍ້າຍຈັດສັນ, 34¶19

ນະໂຍບາຍ, ເຊິ່ງເປັນສ່ວນໜຶ່ງຂອງລະບົບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ, 7¶6

ມົນລະພິດ, ນິຍາມ, 21n.1

ການປ້ອງກັນມົນລະພິດ, 23¶10-11, 24¶12-14, 25¶15-17
ນິຍາມ, 21.n2

ການຜະລິດຂັ້ນຕົ້ນ
ການບໍລິການດ້ານລະບົບນິເວດ, 40n.1
ຂອງຊັບພະຍາກອນທຳມະຊາດທີ່ມີຊີວິດ, 43¶26
ໂຕ່ງໂສ້ງການສະໜອງ, 16¶4

ຜູ້ສະໜອງຫຼັກ/ຕົ້ນຕໍ
ຄວາມສາມາດໃນການນຳໃຊ້ແຜນງານການຄຸ້ມຄອງຕໍ່ກັບ, 9¶14,
ການຄວບຄຸມ ຫຼື ອິດທິພົນຂອງລູກຄ້າຕໍ່ກັບ, 9¶14, 20¶29, 44¶30

ນິຍາມ, 16.n4, 44.n21
ແຮງງານໃນຕ່ອງໂສ້ງການສະໜອງ, 16¶4

ຕ່ອງໂສ້ງການສະໜອງຫຼັກ/ຕົ້ນຕໍ
ແຮງງານເດັກ ຫຼື ແຮງງານທີ່ຖືກບັງຄັບໃນ, 19¶27
ການປ່ຽນທີ່ຢູ່ອາໄສຕາມທຳມະຊາດ ແລະ/ຫຼື ຈຳເປັນ, 44¶30
ການກຳນົດຄວາມສ່ຽງ ແລະ ຜົນກະທົບ, 8¶10

ການບໍລິການດ້ານລະບົບນິເວດທີ່ເປັນບູລິມະສິດ
ນິຍາມ, 43¶24
ຄວາມສ່ຽງທາງດ້ານສຸຂະພາບ ແລະ ຄວາມປອດໄພ ແລະ ຜົນກະທົບ ຕໍ່ຊຸມຊົນທີ່ໄດ້ຮັບຜົນກະທົບ ຈາກຜົນກະທົບຂອງໂຄງການຕໍ່, 27¶8, 43¶24-25
ການຄຸ້ມຄອງຜົນກະທົບຂອງໂຄງການຕໍ່ກັບ, 43¶25

ໂຄງການ
ນິຍາມ, 6¶4
ອອກແບບເພື່ອຫຼີກເວັ້ນການຍົກຍ້າຍຈັດສັນທາງກາຍະພາກ/ເສດຖະກິດ, 32¶8
ອອກແບບເພື່ອຫຼຸດຜ່ອນຜົນກະທົບຕໍ່ມໍລະດົກທາງວັດທະນະທຳ, 52¶8
ຂັ້ນຕອນການຄົ້ນພົບເຫັນໂດຍບັງເອີນ, 52¶8
ຮອບວຽນອາຍຸ, 6¶4

ຂົງເຂດທີ່ໂຄງການສົ່ງຜົນກະທົບ
ສິ່ງອຳນວຍຄວາມສະດວກທີ່ກ່ຽວຂ້ອງ, 8.n15, 8¶8
ຜົນກະທົບສະສົມ, 8.n16, 8¶8
ການກຳນົດຄວາມສ່ຽງ ແລະ ຜົນກະທົບ, 8¶8

ການຍົກຍ້າຍ, 31¶1, 35¶20
ການຊ່ວຍເຫຼືອ, 35¶20, 35¶22
ຊົນເຜົ່າພື້ນເມືອງ, 49¶15
ຜູ້ເຂົ້າມາຕັ້ງຖິ່ນຖານແບບບໍ່ຖືກຕ້ອງຕາມທາງການ, 35.n22
ເຂດຍົກຍ້າຍຈັດສັນ, 35¶20
ມູນຄ່າທົດແທນ, 32¶ ວັດຖຸປະສົງ, 35¶21-22, 36¶27
ການຊົດເຊີຍ ແລະ ຜົນປະໂຫຍດສຳລັບຜູ້ທີ່ຖືກຍົກຍ້າຍຈັດສັນ, 32¶9, 34¶19
ນິຍາມ, 31.n4

ການທົດແທນຊັບສິນ, 35¶21, 36¶27
ການຄ້ຳປະກັນກຳມະສິດສິດທີ່ດິນ, 31.n5, 35¶21-22
ມໍລະດົກທາງວັດທະນະທຳທີ່ສາມາດສ້າງແທນຄືນໄດ້
ນິຍາມ, 53.n3
ການຮື້ຖອນ, 53¶11

ການຍົກຍ້າຍຈັດສັນ
ບໍ່ສະໝັກໃຈ. *ເບິ່ງ* ການຍົກຍ້າຍຈັດສັນແບບບໍ່ສະໝັກໃຈ
ທຸລະກຳຊື້-ຂາຍທີ່ດິນແບບສະໝັກໃຈ, ທີ່ເປັນຜົນເນື່ອງມາຈາກ, 32¶6

ແຜນຍົກຍ້າຍຈັດສັນ, 33-34¶15
ການກວດສອບຜົນສຳເລັດ, 34.n18, 33-34¶15
ການຈັດຕັ້ງປະຕິບັດ, 33-34¶15
ການຍົກຍ້າຍຈັດສັນທາງກາຍະພາກ, 34¶19

ກອບການຍົກຍ້າຍຈັດສັນ, 34¶16

ເຂດຍົກຍ້າຍຈັດສັນ, 32¶9, 35¶20

ຜົນກະທົບຄົງຄ້າງ
ຊີວະນາໆພັນ ແລະ ການບໍລິການດ້ານລະບົບນິເວດ, 39¶6, 44ບໍລິການ19
ລຳດັບຂັ້ນຂອງການຫຼຸດຜ່ອນ, 9¶14

ປະສິດທິພາບຂອງຊັບພະຍາກອນ, 22¶6, 22-23¶7-9
ຄວາມປະຢັດຕົ້ນທຶນ, 22.n5, 22¶6

ການຫຼຸດຜ່ອນວຽກງານ, 18¶18-19

ແຜນການຫຼຸດຜ່ອນວຽກງານ, 18¶18

ການກຳນົດຂອງຄວາມສ່ຽງ ແລະ ຜົນກະທົບ. *ເບິ່ງ* ການກຳນົດຄວາມສ່ຽງ ແລະ ຜົນກະທົບ

ພະນັກງານ ປ້ອງກັນຄວາມສະຫງົບ, 28-29¶12-14
ສຸຂະພາບ ແລະ ຄວາມປອດໄພຂອງຊຸມຊົນ, ຄວາມສ່ຽງຕໍ່ 28-29¶12-14
ກົນໄກການຮ້ອງທຸກ 28¶12
ໂຄງການ ນຳໃຊ້ພະນັກງານປ້ອງກັນຄວາມສະຫງົບຂອງລັດ, 29¶13

ການຄ້ຳປະກັນກຳມະສິດທີ່ດິນ, 31¶3
ນິຍາມ, 31.n5
ດິນທີ່ຖືກຍົກຍ້າຍທາງກາຍະພາກ - 35¶22

ທີ່ແຍກຈາກການພັດທະນາ, 41¶15
ນິຍາມ, 41.n10

ການຊົດເຊີຍອອກການ, 18¶19

ການປ່ຽນແປງ ຫຼື ການເຊື່ອມໂຊມໃນລະດັບສູງຂອງທີ່ຢູ່ອາໄສຕາມທຳມະຊາດ, ນິຍາມ, 40.n7

ການມີສ່ວນຮ່ວມຂອງຜູ້ມີສ່ວນກ່ຽວຂ້ອງ, 12¶25
ການມີສ່ວນຮ່ວມຂອງຊຸມຊົນ, 33¶10
ຜູ້ຕາງໜ້າຂອງຊຸມຊົນ, 12¶27
ການປຶກສາຫາລື, 12¶25, 12¶27
ການເປີດເຜີຍຂໍ້ມູນ, 12¶29
ທີ່ລັດເປັນຜູ້ນຳພາ, 14¶33
ກົນໄກການຮ້ອງທຸກ, 6¶2, 12¶25, 12¶29, 14¶35, 280¶12, 33¶11

ກອບການມີສ່ວນຮ່ວມຂອງຜູ້ມີສ່ວນກ່ຽວຂ້ອງ, 12¶28

ແຜນການມີສ່ວນຮ່ວມຂອງຜູ້ມີສ່ວນກ່ຽວຂ້ອງ, 12¶27

Stakeholders. *ເບິ່ງຕື່ມ* ການມີສ່ວນຮ່ວມຂອງຜູ້ມີສ່ວນກ່ຽວຂ້ອງ
ການວາງແຜນການວິເຄາະ ແລະ ການມີສ່ວນຮ່ວມ, 12¶26-27
ຄຳອະທິບາຍຂອງ, 5.n1, 5¶1
ການສື່ສານຂໍ້ມູນຂ່າວສານພາຍນອກ, 14¶34

ແຜນການຍົກຍ້າຍຈັດສັນເພີ່ມເຕີມ, 37¶31-32
ຕ່ອງໂສ້ການສະໜອງ, 19-20¶27-29. *ເບິ່ງຕື່ມ* ຕ່ອງໂສ້ການສະໜອງຕົ້ນຕໍ
ການກຳນົດຄວາມສ່ຽງ ແລະ ຜົນກະທົບ,ຜູ້ອອກແຮງງານໃນຕ່ອງໂສ້ງການສະໜອງ, 16¶7
ນິຍາມ, 17¶4
ບັນຫາທາງດ້ານຄວາມປອດໄພ, ໜ້າທີ່ຮັບຜິດຊອບຂອງລູກຄ້າ ສຳລັບມາດຕະການໃນການຫຼຸດຜ່ອນ, 20¶28

ຄວາມເປັນໄປໄດ້ທາງດ້ານເຕັກນິກ, ນິຍາມ, 10.n20

ເງື່ອນໄຂໃນການເຮັດວຽກ, 16¶10, 18.n5

ຝ່າຍທີສາມ
ການກຳຈັດສິ່ງເສດເຫຼືອທີ່ເປັນອັນຕະລາຍໂດຍ, 24¶12
ການກຳນົດຄວາມສ່ຽງທີ່ມາຈາກ, 8¶9
ຜູ້ອອກແຮງງານທີ່ຈ້າງໂດຍ, 16¶4, 19¶24-26

ດິນທີ່ຕົກເປັນເຫຍື່ອການຄ້າມະນຸດ, ການວ່າຈ້າງ, 19¶22
ນິຍາມ, 19.n13

ຜົນກະທົບຂ້າມປະເທດຂອງກິດຈະການຂອງທຸລະກິດ, 8¶7, 24¶10
ການເຄື່ອນຍ້າຍວັດຖຸທີ່ເປັນອັນຕະລາຍ, 25.n15

ມົນລະພິດຂ້າມປະເທດ, 24.n10

ທຸລະກຳຊື້-ຂາຍທີ່ດິນແບບສະໝັກໃຈ, 32¶6
- ດິນທີ່ບໍ່ສາມາດປົກປ້ອງຕົນເອງໄດ້. *ເບິ່ງຕື່ມ*
ຜົນກະທົບຕໍ່ ກຸ່ມດ້ອຍໂອກາດ ແລະ ບໍ່ສາມາດປົກປ້ອງຕົນເອງໄດ້, 9¶12
ສຸຂະພາບ ແລະ ຄວາມປອດໄພຂອງຊຸມຊົນ, 26¶1, 28¶9
ການພິຈາລະນາການຍົກຍ້າຍ, 32¶8, 34¶19
ຊົນເຜົ່າພື້ນເມືອງ, 45¶1, 47¶11
ການວິເຄາະ ແລະ ການມີສ່ວນຮ່ວມຂອງຜູ້ມີສ່ວນກ່ຽວຂ້ອງ, 12¶27

ສິ່ງເສດເຫຼືອ, 24¶12
ເປັນອັນຕະລາຍ, ນິຍາມ, 24¶12

ການບໍລິໂພກ/ຊົມໃຊ້ນ້ຳ
ການບໍລິການດ້ານລະບົບນິເວດທີ່ເປັນບູລິມະສິດ, 43¶24
ຫຼຸດຜ່ອນ, ໃນກິດຈະກຳໂຄງການ, 23¶9

ແມ່ຍິງ
ການປະເມີນການນຳໃຊ້ທີ່ດິນ ແລະ ຊັບພະຍາກອນຂອງຊົນເຜົ່າພື້ນເມືອງ, 48¶14

ການປຶກສາຫາລື ແລະ ການມີສ່ວນຮ່ວມທີ່ມີຂໍ້ມູນຄົບຖ້ວນ (ICP), 13¶31, 33.n16
ບໍ່ມີການຈຳແນກ ແລະ ໂອກາດທີ່ເທົ່າທຽມກັນ, 17¶15
ສຸຂະພາບ ແລະ ຄວາມປອດໄພແຮງງານ, 19¶23

ຜູ້ອອກແຮງງານ. *ເບິ່ງ* ຄ່າຕອບແທນສຳລັບການເຮັດວຽກ (ແຮງງານ); ຜູ້ອອກແຮງງານສັນຍາຈ້າງ; ຜູ້ອອກແຮງງານໂດຍກົງ; ກົນໄກການຮ້ອງທຸກ; ຜູ້ອອກແຮງງານເຄື່ອນຍ້າຍ; ສຸຂະພາບ ແລະ ຄວາມປອດໄພຂອງແຮງງານ; ຜູ້ອອກແຮງງານໃນຕ່ອງໂສ້ມູນຄ່າ

ກຳມະບານຂອງຜູ້ອອກແຮງງານ, 17¶13–14

ສະພາບເງື່ອນໄຂໃນການເຮັດວຽກ ແລະ ເງື່ອນໄຂຂອງການຈ້າງງານ, 16¶10, 17¶11–12
ສິມເຫດສົມຜົນ, ການກຳນົດ, 16.n6
ນິຍາມ, 16n.5
ສຳລັບແຮງງານເຄື່ອນຍ້າຍ, 17¶11
ບໍ່ມີການຈຳແນກ ແລະ ໂອກາດທີ່ເທົ່າທຽມ, 17¶15

International Finance Corporation
2121 Pennsylvania Ave. NW
Washington, DC 20433
Tel. 1-202-473-1000
www.ifc.org/sustainability

ຂໍ້ມູນຢູ່ໃນສີ່ສິ່ງພິມເຫລັ້ມນີ້ ໄດ້ຮັບການສະຫງວນລິຂະສິດໃນການເຮັດສຳເນົາ. ອົງການການເງິນສາກົນ IFC ສົ່ງເສີມໃຫ້ເຜີຍແຜ່ເນື້ອໃນເພື່ອຈຸດປະສົງທາງດ້ານການສຶກສາ. ເນື້ອໃນຈາກສີ່ສິ່ງພິມເຫລັ້ມນີ້ ອາດສາມາດນຳໄປໃຊ້ໄດ້ຢ່າງບໍ່ເສຍຄ່າ ໂດຍບໍ່ຕ້ອງໄດ້ຮັບອະນຸຍາດລ່ວງໜ້າ, ບົນພື້ນຖານເງື່ອນໄຂທີ່ ມີການອ້າງອີງເຖິງ ອົງການການເງິນສາກົນ IFC ຢ່າງຈະແຈ້ງ ແລະ ເນື້ອໃນຈະບໍ່ຖືກນຳໃຊ້ເພື່ອຈຸດປະສົງທາງການຄ້າ.

ມາດຕະຖານ, ລະບຽບຂັ້ນຕອນ, ແລະ ນະໂຍບາຍ ທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງອົງການການເງິນສາກົນ IFC ສະບັບກ່ອນໜ້ານີ້ ໄດ້ຖືກສະໜອງໃຫ້ ເພື່ອເປັນຂໍ້ມູນອ້າງອີງເທົ່ານັ້ນ. ຂໍແຈ້ງວ່າ ໃນກໍລະນີທີ່ມີຄວາມບໍ່ສອດຄ່ອງກັນລະຫວ່າງເນື້ອໃນດັ້ງເດີມທີ່ເປັນພາສາອັງກິດ ແລະ ເອກະສານທີ່ແປເປັນພາສາລາວ, ໃຫ້ຖືເອົາເນື້ອໃນພາສາອັງກິດເປັນສິ່ງຖືກຕ້ອງ.

ມາດຕະຖານການດຳເນີນງານ ຂອງອົງການການເງິນສາກົນ IFC ສະບັບເປັນພາສາລາວ ໄດ້ຮັບການສະໜັບສະໜູນຈາກລັດຖະບານປະເທດອົດສຕຣາລີ.